# Supernatural

ສິ່ງທີ່ເໜືອທຳມະຊາດ
ສິ່ງທີ່ພຣະຄຳພີສອນກ່ຽວກັບໂລກທີ່ເບິ່ງບໍ່ເຫັນ
ແລະສາເຫດທີ່ເລື່ອງນີ້ສຳຄັນ

Michael S. Heiser ໄມເຄີ້ນ ເອສ. ຮີເຊີ

# Supernatural

## ສິ່ງທີ່ເໜືອທຳມະຊາດສິ່ງທີ່ພຣະຄຳພີສອນກ່ຽວກັບໂລກທີ່ເບິ່ງບໍ່ເຫັນ ແລະສາເຫດທີ່ເລື່ອງນີ້ສຳຄັນ


**Michael S. Heiser**

**ໄມເຄີ້ນ ເອສ. ຮີເຊີ**


ແປໂດຍ ປະເສີດ

*Supernatural ສິ່ງທີ່ເໜືອທຳມະຊາດ*

ສະຫງວນລິຂະສິດ© 2015 ໂດຍ Michael S. Heiser

*Supernatural ສິ່ງທີ່ເໜືອທຳມະຊາດສະບັບແປ ພາສາລາວ*

© 2017, Miqlat

ເນື້ອໃນທັງໝົດຂອງການແປນີ້ອາດຈະຖືກຄັດລອກ ແລະເຜີຍແຜ່ໃນທຸກຮູບແບບໂດຍການອະນຸຍາດຂອງ ຜູ້ຂຽນແລະຜູ້ຖືລິຂະສິດ. ການອະນຸຍາດນີ້ໃຊ້ໄດ້ກັບການແປທີ່ຖືກພິມໂດຍ Miqlat.org ເທົ່ານັ້ນ. Miqlat.org ແມ່ນ United States 501(c)(3) ບໍລິສັດທີ່ບໍ່ຫວັງຜົນກຳໄລ. ການອະນຸຍາດນີ້ບໍ່ໄດ້ແປ ເປັນພາສາດຽວກັນຫຼືພາສາອື່ນໆທີ່ຖືກເຜີຍແຜ່ໂດຍ Lexham Press.

ISBN:
ຜູ້ແປ

*ເຖິງແມ່ແລະພໍ່ຂອງຂ້າພະເຈົ້າຊື່,*

*ເອດ໌ Ed ແລະ ແຈນສະແປໂຣ Jan Speraw*

*ໃຜຈະໄດ້ເຫັນກາານມານີ້ ?*

*ຂ້າຄິດວ່າພວກເຮົາຮູ້.*

1 ຊາມູເອນ 1:1 – 28

# ຄຳຂອບໃຈ
# ສຳລັບວຽກງານຕົ້ນສະບັບພາສາອັງກິດ

ເນື່ອງຈາກຄຳວ່າເໜືອທຳມະຊາດ(Supernatural) ມີພື້ນຖານມາຈາກປຶ້ມຂອງຂ້າພະເຈົ້າຊື່ອານາຈັກທີ່ເບິ່ງບໍ່ເຫັນ (The Unseen Realm,) ຄວາມຄິດທີ່ສະແດງອອກໃນການຮັບຮູ້ຕໍ່ປຶ້ມເຫຼັ້ມນັ້ນແມ່ນເໝາະສົມໃນບ່ອນນີ້, ຍົກເວັ້ນໃນຮູບແບບຫຍໍ້.

ຂໍຂອບໃຈກຸ່ມສົນທະນາທາງອິນເຕີເນັດ ທີ່ໄດ້ຕັ້ງຂຶ້ນບໍ່ດົນມານີ້ຫຼັງຈາກທີ່ຂ້າພະເຈົ້າໄດ້ຕັດສິນໃຈວ່າສະພາຂອງພຣະເຈົ້າແລະໂລກທີ່ເບິ່ງບໍ່ເຫັນຂອງສາດສະໜາສາດໃນພຣະຄຳພີຈະເປັນຈຸດສຸມຂອງອາຊີບນັກວິຊາການຂອງຂ້າພະເຈົ້າ. ບໍ່ແປກທີ່ຂ້າພະເຈົ້າເອີ້ນມັນວ່າກຸ່ມການສຶກສາຂອງສະພາຂອງພຣະເຈົ້າ Divine Council Study Group. ກຸ່ມ DCSG ໄດ້ຖືກຍຸບໃນປີ 2004 ຫຼັງຈາກຂ້າພະເຈົ້າຮຽນຈົບປະລິນຍາເອກແລະເລີ່ມຕົ້ນເຮັດວຽກຢູ່ Logos Bible Software, ແຕ່ບົດເຝິກຫັດນີ້ໄດ້ຊ່ວຍກຽມຂ້າພະເຈົ້າໃຫ້ຂຽນປຶ້ມທັງສອງເຫຼັ້ມ.

*ອານາຈັກທີ່ເບິ່ງບໍ່ເຫັນ The Unseen Realm* ໄດ້ເລີ່ມຕົ້ນຈາກປຶ້ມຕົ້ນສະບັບທີ່ມີຊື່ວ່າ *The Myth That Is True* ທີ່ຂ້າພະເຈົ້າຂຽນຂຶ້ນສຳລັບຜູ້ຕິດຕາມທີ່ສົນໃຈກ່ຽວກັບເນື້ອຫາຂອງເວບໄຊທ໌ແລະງານຂຽນຂອງຂ້າພະເຈົ້າຊື່ *The Façade*. ເນື້ອຫາດັ່ງກ່າວສ່ວນຫຼາຍໄດ້ປະກົດເປັນຄັ້ງທຳອິດໃນຈົດໝາຍຂ່າວແລະຕໍ່ມາກໍເປັນກ່ອງຂໍ້ຄວາມສົນທະນາ,ແນວຄິດທີ່ຈະເຮັດໃຫ້ຕົວເອງມີຄວາມຮັບຜິດຊອບໃນການຜະລິດບາງສິ່ງບາງຢ່າງໃນແຕ່ລະເດືອນ. ໂຄງຮ່າງທຳອິດຂອງປຶ້ມ "the Myth book," ຕາມຊື່ເອີ້ນນັ້ນໄດ້ສຳເລັດໃນປີ 2012. ຕົ້ນສະບັບໄດ້ຮັບການປັບປຸງໂດຍໄດ້ຮັບຄວາມຊ່ວຍເຫຼືອຈາກຄຳຄິດເຫັນຂອງຜູ້ອ່ານ. ຜູ້ມີສ່ວນຮ່ວມສະເພາະຈະລະບຸໄວ້ໃນຄຳຂອບໃຈສຳລັບຂອງປຶ້ມ*ອານາຈັກທີ່ເບິ່ງບໍ່ເຫັນ The Unseen Realm.*

ກຳລັງສຳຄັນທີ່ຢູ່ເບື້ອງຫຼັງການພິມປຶ້ມ*ອານາຈັກທີ່ເບິ່ງບໍ່ເຫັນ The Unseen Realm* ແລະປຶ້ມ *ສິ່ງທີ່ເໜືອທຳມະຊາດSupernatural* - ແມ່ນຜູ້ບໍລິຫານສາມຄົນຂອງບໍລິສັດ Faithlife Corporation / Logos Bible Software ຊື່ວ່າ: Bob Pritchett, Dale Pritchett, ແລະ Bill Nienhuis. ພວກເຂົາເຈົ້າບໍ່ພຽງແຕ່ປະສົບຜົນສຳເລັດໃນການນຳເອົາປຶ້ມຕົ້ນສະບັບຂອງຂ້າພະເຈົ້າໄປສູ່ລະດັບທີ່ສູງຂຶ້ນເທົ່ານັ້ນ, ແຕ່ພວກເຂົາເຈົ້າກໍໄດ້ເຫັນເຖິງຄວາມຈຳເປັນຂອງເນື້ອໃນຂອງສະບັບທີ່ສັ້ນກວ່າ. ເພາະສະນັ້ນປຶ້ມສິ່ງເໜືອທຳມະຊາດ Supernatural ຈຶ່ງເປັນຜົນຜະລິດຈາກວິໄສທັດຂອງພວກເຂົາເຈົ້າ.

ທ່ານເດບຟ໌ ແລມເບີດ Dave Lambert, ບັນນາທິການຂອງຂ້າພະເຈົ້າສໍາລັບປຶ້ມ*ອານາຈັກທີ່ເບິ່ງບໍ່ເຫັນ The Unseen Realm,* ຍັງໄດ້ແກ້ໄຂໜັງສືໃນປຶ້ມ*ສິ່ງເໜືອທຳມະຊາດ Supernatural* ອີກດ້ວຍ. ຜົນດີຈາກຄວາມຊ່ຽວຊານ ແລະປະສົບການຂອງລາວສາມາດພົບໄດ້ໃນທຸກໆໜ້າ. ລາວໄດ້ໃຫ້ຂ້າພະເຈົ້າສຸມໃສ່ການຂຽນໃນລະດັບໜຶ່ງເພື່ອໃຫ້ຄຣິສຕຽນທຸກຄົນສາມາດເຂົ້າໃຈເນື້ອໃນໄດ້.

ສຸດທ້າຍນີ້, ຂ້າພະເຈົ້າຂໍຂອບໃຈເມຍຂອງຂ້ອຍຊື່ເດຣນນາ Drenna. ນາງເຮັດໃຫ້ທຸກຢ່າງທີ່ຂ້າພະເຈົ້າເຮັດປະສົບຜົນສໍາເລັດ.

## ຂໍຂອບໃຈ
## ສໍາລັບການແປພາສານີ້

ຂ້າພະເຈົ້າຂໍຂອບໃຈຜູ້ຖວາຍເງິນໃຫ້ກັບ Miqlat.org. ຖ້າບໍ່ມີຄວາມເອື້ອເຟື້ອເພື່ອແຜ່ຂອງທ່ານ, ໂຄງການແປພາສານີ້ຄົງຈະບໍ່ເປັນໄປໄດ້.

# ສາລະບານ


ບົດທີ 1: ການເຊື່ອພຣະຄຳພີ

ບົດທີ 2: ອານາຈັກທີ່ເບິ່ງບໍ່ເຫັນ: ພຣະເຈົ້າແລະບັນດາອຳນາດເໜືອທຳມະຊາດທີ່ຮ້າຍ

ບົດທີ 3: ກະສັດໃນອະດີດແລະກະສັດໃນອະນາຄົດ

ບົດທີ 4: ການກະບົດເທິງສະຫວັນ

ບົດທີ 5: ພູມສາດສິ່ງທີ່ເໜືອທຳມະຊາດ

ບົດທີ 6: ພຣະທຳ,ພຣະນາມແລະເທວະດາ

ບົດທີ 7: ກົດເກນຂອງສົງຄາມ

ບົດທີ 8: ພື້ນທີ່ບໍລິສຸດສັກສິດ

ບົດທີ 9: ສົງຄາມສັກສິດ

ບົດທີ 10: ປິດບັງໄວ້ຕໍ່ໜ້າຕໍ່ຕາ

ບົດທີ 11: ຈຸດປະສົງທີ່ເໜືອທຳມະຊາດ

ບົດທີ 12: ຜູ້ທີ່ມາເທິງກ້ອນເມກ

ບົດທີ 13: ການປ່ຽນແປງຄັ້ງຍິ່ງໃຫຍ່

ບົດທີ 14: ບໍ່ແມ່ນຂອງໂລກນີ້

ບົດທີ 15: ຜູ້ທີ່ໄດ້ຮັບສ່ວນໃນສະພາບຂອງພຣະເຈົ້າ

ບົດທີ 16: ການປົກຄອງເໜືອເທວະດາ

ບົດສະຫຼຸບ

ຄຳອະທິຖານແຫ່ງການໃຫ້ອະໄພ

ຄຳຂໍຈາກຜູ້ຂຽນ

# ບົດທີ 1
# ການເຊື່ອພຣະຄຳພີ

**ທ່**ານເຊື່ອສິ່ງທີ່ພຣະຄຳພີກ່າວແທ້ໆບໍ?

ນັ້ນອາດເບິ່ງຄືວ່າເປັນຄຳຖາມແປກໆໃນປຶ້ມທີ່ບັນດາຄຣິດສະຕຽນສ່ວນໃຫຍ່ອ່ານ. ແຕ່ຂ້າພະເຈົ້າບໍ່ຄິດວ່າມັນເປັນຄຳຖາມທີ່ແປກ. ພຣະຄຳພີມີບາງສິ່ງທີ່ແປກປະຫຼາດທີ່ສຸດໃນນັ້ນ. ມີຫຼາຍສິ່ງທີ່ຍາກທີ່ຈະເຊື່ອ, ໂດຍສະເພາະໃນຍຸກສະໄໝໃໝ່.

ຂ້າພະເຈົ້າບໍ່ໄດ້ອ້າງອີງເຖິງຄຳສອນທີ່ຍິ່ງໃຫຍ່ເໜືອທຳມະຊາດ, ເຊັ່ນວ່າພຣະເຈົ້າໄດ້ມາເປັນມະນຸດທີ່ຢູ່ເທິງໂລກແລະທີ່ຊື່ວ່າພຣະເຢຊູເຈົ້າ, ຜູ້ທີ່ໄດ້ຕາຍເທິງໄມ້ກາງແຂນແລະໄດ້ເປັນຄືນມາຈາກຕາຍ. ຂ້າພະເຈົ້າບໍ່ໄດ້ຄິດເຖິງເລື່ອງລາວທີ່ມະຫັດສະຈັນຄືກັບການອົບພະຍົບ, ເມື່ອພຣະເຈົ້າໄດ້ຊ່ວຍຄົນອິດສະຣາເອນອອກຈາກເອຢິບໂດຍການແຍກນ້ຳທະເລແດງອອກໃຫ້ພວກເຂົາຍ່າງເທິງດິນແຫ້ງ. ຄຣິດສະຕຽນສ່ວນຫຼາຍຈະເວົ້າວ່າພວກເຂົາເຈົ້າເຊື່ອສິ່ງເຫຼົ່ານັ້ນ. ຖ້າທ່ານບໍ່ເຊື່ອໃນພຣະເຈົ້າແລະພຣະເຢຊູເຈົ້າ, ຫຼືບໍ່ເຊື່ອວ່າພຣະອົງສາມາດເຮັດສິ່ງມະຫັດສະຈັນຕ່າງໆໄດ້,ທ່ານຈະເວົ້າໄດ້ແນວໃດວ່າທ່ານເປັນຄຣິສຕຽນ ? ແຕ່ຂ້າພະເຈົ້າກຳລັງອ້າງອີງເຖິງຄຳສອນທີ່ເໜືອທຳມະຊາດ ທີ່ບໍ່ຮູ້ຈັກກັນດີໃນພຣະຄຳພີ. ສິ່ງເຫຼົ່ານີ້ແມ່ນພາກສ່ວນໜຶ່ງຂອງພຣະຄຳພີທີ່ບໍ່ຄ່ອຍໄດ້ຖືກສອນໃນຄຣິສຕະຈັກ.

ນີ້ແມ່ນຕົວຢ່າງ ໃນພຣະທຳ 1ກະສັດບົດທີ 22 ມີເລື່ອງກ່ຽວກັບກະສັດອາຮາບຜູ້ຊົ່ວຮ້າຍແຫ່ງອິດສະຣາເອນ. ເພິ່ນຕ້ອງການໃຫ້ກອງທັບຂອງເພິ່ນເຂົ້າຮ່ວມກັບກອງທັບຂອງກະສັດແຫ່ງຢູດາແລະພວກເພິ່ນຈະພ້ອມກັນໂຈມຕີສັດຕູຢູ່ບ່ອນທີ່ເອີ້ນວ່າເມືອງຣາໂມດ-ກີເລອາດ. ກະສັດຢູດາຕ້ອງການຮູ້ອະນາຄົດ. ເພິ່ນຢາກຮູ້ວ່າຈະມີຫຍັງເກີດຂຶ້ນຖ້າພວກເພິ່ນໂຈມຕີເມືອງດັ່ງກ່າວ. ສະນັ້ນ, ກະສັດທັງສອງຂໍໃຫ້ພວກຜູ້ທຳນວາຍຂອງອາຮາບບອກໂຊກຊາຕາຂອງພວກເພິ່ນ. ພວກຜູ້ທຳນວາຍທັງໝົດກ່າວວ່າການສູ້ຮົບຈະປະສົບຜົນສຳເລັດໄຊຊະນະຈະເປັນຂອງກະສັດ. ແຕ່ຜູ້ທຳນວາຍເຫຼົ່ານັ້ນພຽງແຕ່ບອກກະສັດອາຮາບໃນສິ່ງທີ່ເພິ່ນຢາກຟັງແລະກະສັດທັງສອງກໍຮູ້ເລື່ອງນີ້. ສະນັ້ນ, ພວກເພິ່ນຈຶ່ງຕັດສິນໃຈຖາມຜູ້ທຳນວາຍຂອງພຣະເຈົ້າ, ຊາຍຄົນໜຶ່ງຊື່ວ່າມີກາອີຢາ. ສິ່ງທີ່ລາວເວົ້ານັ້ນບໍ່ແມ່ນຂ່າວດີສຳລັບອາຮາບຄື:

> "ສະນັ້ນ ຂໍຈົ່ງຟັງຖ້ອຍຄຳທີ່ພຣະເຈົ້າຢາເວກ່າວເຖີດ ຂ້ານ້ອຍໄດ້ເຫັນພຣະເຈົ້າຢາເວນັ່ງຢູ່ເທິງພຣະບັນລັງຂອງພຣະອົງໃນສະຫວັນ ແລະເທວະດາທັງໝົດກໍກຳລັງຢືນຢູ່ອ້ອມຂ້າງພຣະອົງ. ພຣະເຈົ້າຢາເວຖາມວ່າ, 'ຜູ້ໃດຈະຫລອກລວງອາຮາບໃຫ້ໄປຖືກຂ້າທີ່ເມືອງຣາໂມດ?' ເທວະດາບາງຕົນເວົ້າຢ່າງ

ໜຶ່ງ ແລະອີກບາງຕົນເວົ້າອີກຢ່າງໜຶ່ງ ຈົນກວ່າໄດ້ມີວິນຍານດວງໜຶ່ງກ້າວອອກໄປທາງໜ້າຫຍັບເຂົ້າໃກ້ພຣະເຈົ້າຢາເວ ແລະເວົ້າວ່າ, 'ຂ້ານ້ອຍຈະຫລອກລວງລາວເອງ.' ພຣະເຈົ້າຢາເວຖາມວ່າ, 'ດ້ວຍວິທີໃດ?' ວິນຍານດວງນັ້ນໄດ້ຕອບຄືນວ່າ, 'ຂ້ານ້ອຍຈະໄປເຮັດໃຫ້ພວກຜູ້ທຳນວາຍເວົ້າຕົວະ.' ພຣະເຈົ້າຢາເວຈຶ່ງກ່າວວ່າ, 'ຈົ່ງໄປຫຼອກລວງລາວສາ ເຈົ້າຈະສຳເລັດ.'"

ແລ້ວມີກາອີຢາກໍເວົ້າມ້ອນທ້າຍວ່າ, "ເຫດການກໍເປັນຢ່າງນີ້ແຫລະ ພຣະເຈົ້າຢາເວໄດ້ເຮັດໃຫ້ພວກຜູ້ທຳນວາຍເຫຼົ່ານັ້ນເວົ້າຕົວະຕໍ່ທ່ານ. ແຕ່ພຣະເຈົ້າຢາເວເອງໄດ້ປະກາດວ່າ, 'ທ່ານຈະປະສົບກັບໄພພິບັດ." (1ກສ.22:19–23)

ທ່ານໄດ້ເຂົ້າໃຈສິ່ງທີ່ພຣະຄຳພີກຳລັງບອກໃຫ້ທ່ານເຊື່ອບໍ? ພຣະເຈົ້າປະຊຸມກັບສິ່ງມີຊີວິດຝ່າຍວິນຍານກຸ່ມໜຶ່ງເພື່ອປຶກສາຫາລືແລະຕັດສິນໃຈວ່າຈະມີຫຍັງເກີດຂຶ້ນຢູ່ເທິງໂລກນີ້? ນັ້ນແມ່ນຄວາມໝາຍຂອງພຣະຄຳພີແທ້ໆບໍ? ແມ່ນແລ້ວ!

ນີ້ແມ່ນຕົວຢ່າງອີກຢ່າງໜຶ່ງ, ຈາກພຣະທຳຢູດາ:

ຈົ່ງຈົດຈຳບັນດາເທວະດາທີ່ບໍ່ຢູ່ໃນຂອບເຂດແຫ່ງສິດອຳນາດຂອງຕົນ,ແຕ່ໄດ້ປະຖິ້ມບ່ອນຢູ່ອາໄສຂອງຕົນເອງພວກເຂົາໄດ້ຖືກປະໄວ້ໃນຄວາມມືດເບື້ອງລຸ່ມ, ຖືກລ່າມໂສ້ໄວ້ຕະຫຼອດໄປສຳລັບວັນຍິ່ງໃຫຍ່ທີ່ຈະມີການຕັດສິນລົງໂທດ. (ຢດ1: 6)

ພຣະຄຳພີໝາຍຄວາມວ່າພຣະເຈົ້າໄດ້ສົ່ງເທວະດາທີ່ບໍ່ເຊື່ອຟັງກຸ່ມໜຶ່ງມາສູ່ຄຸກໃຕ້ດິນບໍ? ແມ່ນແລ້ວ!

ດັ່ງທີ່ຂ້າພະເຈົ້າໄດ້ເວົ້າແລ້ວ, ພຣະຄຣິສຕະທຳຄຳພີມີສິ່ງແປກໆຫຼາຍຢ່າງໃນນັ້ນ, ໂດຍສະເພາະກ່ຽວກັບໂລກຝ່າຍວິນຍານທີ່ເບິ່ງບໍ່ເຫັນ. ຂ້າພະເຈົ້າໄດ້ພົບກັບຄຣິສຕຽນຫຼາຍໆຄົນທີ່ບໍ່ມີບັນຫາໃນການເຊື່ອຟັງຄຳສອນໃນພຣະຄຳພີທີ່ຮູ້ຈັກກັນດີກ່ຽວກັບສິ່ງທີ່ເໜືອທຳມະຊາດ, ເຊັ່ນວ່າພຣະເຢຊູເຈົ້າເປັນພຣະເຈົ້າທີ່ມາເກີດເປັນມະນຸດແລະຕາຍ. ແຕ່ຂໍ້ຄວາມໃນພຣະຄຳພີຈາກພຣະທຳຢູດາຫຼືເລື່ອງກ່ຽວກັບກະສັດອາຮາບເຮັດໃຫ້ພວກເຂົາເຈົ້າບໍ່ສະບາຍໃຈແລະແລ້ວພວກເຂົາເຈົ້າຈຶ່ງບໍ່ສົນໃຈມັນ. ຂ້າພະເຈົ້າໄດ້ໄປຄຣິສຕະຈັກໃນວັນອາທິດເມື່ອເຫດການນີ້ເກີດຂຶ້ນ. ຄັ້ງໜຶ່ງຂ້າພະເຈົ້າກັບເມຍເຄີຍໄປຢ້ຽມຢາມຄຣິສຕະຈັກແຫ່ງໜຶ່ງຊຶ່ງທີ່ສິດຍາພິບານກຳລັງເທດສະໜາໃນພຣະທຳ 1 ເປໂຕ. ໃນເຊົ້າມື້ນັ້ນລາວຕ້ອງສັ່ງສອນໃນ 1ເປໂຕ3:18–22. ລາວໄດ້ຢືນຢູ່ທາງຫຼັງຂອງແທ່ນປາໄສແລະກ່າວວ່າ," ພວກເຮົາ ຈະຂ້າມຂໍ້ເຫຼົ່ານີ້ໄປ. ພວກມັນແປກປະຫຼາດເກີນໄປ." ສິ່ງທີ່ລາວບອກວ່າແປກແມ່ນຂໍ້ພຣະຄຳພີເຫຼົ່ານັ້ນມີລາຍລະອຽດເລື່ອງເໜືອທຳມະຊາດທີ່ບໍ່ເຂົ້າກັບສາດສະໜາສາດຂອງລາວເອງ. ນີ້ແມ່ນຕົວຢ່າງຈາກຂໍ້ຄວາມນັ້ນ:

ດ້ວຍວ່າ, ພຣະຄຣິດກໍເໝືອນກັນ ໄດ້ສິ້ນພຣະຊົນເທື່ອດຽວເປັນການສິ້ນສຸດ ເພື່ອແທນຄວາມຜິດບາບ ຄືພຣະອົງຜູ້ຊອບທຳ ແທນຜູ້ບໍ່ຊອບທຳ ເພື່ອຈະໄດ້ນຳເຮົາທັງຫລາຍໄປເຖິງພຣະເຈົ້າ ຝ່າຍ

ກາຍພຣະອົງຊົງຖືກປະຫານເສຍ ແຕ່ຝ່າຍວິນຍານ ພຣະອົງຖືກຊົງບັນດານໃຫ້ຄືນພຣະຊົນ. ແລະ ໂດຍທາງວິນຍານນັ້ນ ພຣະອົງໄດ້ສະເດັດໄປປະກາດແກ່ບັນດາວິນຍານທີ່ຖືກຄຸກຢູ່. ຊຶ່ງເມື່ອກ່ອນນັ້ນບໍ່ໄດ້ຍອມເຊື່ອຟັງພຣະເຈົ້າ ຄືເມື່ອພຣະເຈົ້າຊົງສຳແດງຄວາມອົດທົນດົນນານ. ໃນສະໄໝຂອງໂນອາ ຂະນະທີ່ເພິ່ນກຳລັງສ້າງເຮືອຢູ່ໃນເຮືອມີຄົນຈຳນວນໜ້ອຍ ຄືແປດຄົນທີ່ໄດ້ຜ່ານພົ້ນນໍ້າຖ້ວມນັ້ນ. (1ປຕ. 3:18–20)

ບັນດາວິນຍານເຫຼົ່ານີ້ແມ່ນໃຜ? ວິນຍານເຫຼົ່ານີ້ຖືກຄຸມຂັງຢູ່ໃສ? ສິດຍາພິບານຄົນນັ້ນບໍ່ຮູ້ຫຼືບໍ່ມັກຄຳຕອບ, ສະນັ້ນລາວພຽງແຕ່ເລືອກທີ່ຈະບໍ່ສົນໃຈຂໍ້ພຣະຄຳພີເຫຼົ່ານີ້.

ໃນຖານະນັກວິຊາການພຣະຄຳພີຄົນໜຶ່ງ, ຂ້າພະເຈົ້າໄດ້ຮຽນຮູ້ວ່າທີ່ຈິງແລ້ວບັນດາຂໍ້ຄວາມທີ່ແປກໆແມ່ນມີຄວາມສຳຄັນຫຼາຍ. ສິ່ງເຫຼົ່ານັ້ນສອນແນວຄວາມຄິດສະເພາະກ່ຽວກັບພຣະເຈົ້າ, ໂລກຝ່າຍວິນຍານ, ແລະກ່ຽວກັບຊີວິດຂອງພວກເຮົາ. ຖ້າພວກເຮົາຮູ້ກ່ຽວກັບຂໍ້ຄວາມທີ່ຫຍຸ້ງຍາກແລະສັບສົນເຫຼົ່ານີ້, ແລະສາມາດເຂົ້າໃຈຄວາມໝາຍຂອງມັນ, ມັນກໍ່ຈະປ່ຽນວິທີທີ່ພວກເຮົາຄິດກ່ຽວກັບພຣະເຈົ້າ, ຄົນອື່ນ, ຈຸດປະສົງຂອງພວກເຮົາໃນຊີວິດແລະຈຸດໝາຍປາຍທາງສຸດທ້າຍຂອງພວກເຮົາ.

ໃນຈົດໝາຍສະບັບທຳອິດທີ່ອັກຄະສາວົກໂປໂລຂຽນເຖິງຊາວໂກຣິນໂທ, ໂປໂລຮູ້ສຶກບໍ່ສະບາຍໃຈທີ່ບັນດາຜູ້ທີ່ເຊື່ອໃນຄຣິສຕະຈັກນັ້ນທີ່ພາກັນໄປສານເພື່ອແກ້ໄຂຂໍ້ຂັດແຍ່ງຂອງພວກເຂົາ. ມັນເປັນການເສຍເວລາແລະເສຍເຫື່ອແຮງຂອງພວກເຂົາ. ໂປໂລຍັງກ່າວອີກວ່າມັນແມ່ນການສະທ້ອນທາງລົບຕໍ່ຜູ້ທີ່ເຊື່ອທີ່ຕິດຕາມພຣະເຢຊູເຈົ້າ. ທ່ານກ່າວວ່າ, "ພວກເຈົ້າບໍ່ຮູ້ບໍວ່າ ໄພ່ພົນຂອງພຣະເຈົ້າຈະຕັດສິນໂລກ?ພວກເຈົ້າບໍ່ຮູ້ບໍວ່າ ພວກເຮົາຈະຕັດສິນບັນດາເທວະດາ? " (1 ກຣທ. 6:2-3).

## ຕັດສິນໂລກແມ່ນຫຍັງ? *ຕັດສິນບັນດາເທວະດາແມ່ນຫຍັງ?*

ສິ່ງທີ່ໂປໂລເວົ້າເຖິງໃນຂໍ້ທີ່ໜ້າແປກນັ້ນແມ່ນຍາກທີ່ຈະເຊື່ອ, ແຕ່ມັນຍັງສາມາດປ່ຽນແປງວິຖີຊີວິດຂອງທ່ານໄດ້. ພຣະຄຳພີເຊື່ອມໂຍງກິດຈະກຳຕ່າງໆຂອງສິ່ງມີຊີວິດເໜືອທຳມະຊາດທີ່ກ່ຽວຂ້ອງກັບຊີວິດແລະຈຸດໝາຍປາຍທາງຊີວິດຂອງເຮົາ. ມື້ໜຶ່ງພວກເຮົາຈະໄດ້ຕັດສິນໂລກ. ພວກເຮົາຈະປົກຄອງບັນດາເທວະດາຄືກັບທີ່ໂປໂລໄດ້ກ່າວ. ຂ້າພະເຈົ້າຈະເວົ້າກ່ຽວກັບເລື່ອງນີ້ອີກໃນພາຍຫຼັງ.

ເຫດຜົນທີ່ໂປໂລສາມາດເວົ້າສິ່ງເຫຼົ່ານີ້ຕໍ່ກັບຊາວໂກຣິນໂທແລະກັບພວກເຮົາກໍຄືວ່າເລື່ອງຂອງພຣະຄຳພີແມ່ນກ່ຽວກັບການທີ່ພຣະເຈົ້າໄດ້ສ້າງພວກເຮົາແລະປາດຖະໜາໃຫ້ພວກເຮົາຈະເປັນສ່ວນໜຶ່ງໃນຄອບຄົວໃນສະຫວັນຂອງພຣະອົງ. ພຣະຄຳພີຕັ້ງໃຈໃຊ້ຄຳສັບຕ່າງໆທີ່ພັນລະນາເຖິງຄວາມສຳພັນໃນຄອບຄົວ. ພຣະເຈົ້າ, ພຣະເຢຊູເຈົ້າ, ບັນດາວິນຍານທີ່ດີຂອງອານາຈັກທີ່ເບິ່ງບໍ່ເຫັນ, ແລະບັນດາຜູ້ທີ່ເຊື່ອ, ໄດ້ຮັບການອະທິບາຍວ່າທຸກຄົນຢູ່ຮ່ວມກັນແລະເຮັດວຽກນຳກັນ. ພຣະເຈົ້າຕ້ອງການໃຫ້ມະນຸດເປັນສ່ວນໜຶ່ງໃນ

ຄອບຄົວຂອງພຣະອົງແລະມີສ່ວນຮ່ວມໃນລາຊະອານາຈັກຂອງພຣະອົງເຊິ່ງປົກຄອງສິ່ງທີ່ເນລະມິດສ້າງທັງໝົດ.

ພຣະຄຳພີໄດ້ກ່າວວ່າ: ໃນສະຫວັນເປັນຢ່າງໃດ ຂໍໃຫ້ເປັນໄປຢ່າງນັ້ນທີ່ແຜ່ນດິນໂລກ. ຄຳເວົ້ານີ້ຖືກເອົາມາຈາກແນວຄວາມຄິດແລະປະໂຫຍກຕ່າງໆໃນຄຳອະທິຖານຂອງອົງພຣະຜູ້ເປັນເຈົ້າ (ມທ.6:10). ຕັ້ງແຕ່ຈຸດເລີ່ມຕົ້ນ, ພຣະເຈົ້າຕ້ອງການໃຫ້ຄອບຄົວມະນຸດຂອງພຣະອົງ ຢູ່ກັບພຣະອົງໃນໂລກທີ່ສົມບູນແບບ. ພຣະອົງຕ້ອງການໃຫ້ຜູ້ຄົນເຂົ້າຮ່ວມໃນຄອບຄົວຝ່າຍວິນຍານຂອງພຣະອົງທີ່ພຣະອົງໄດ້ສ້າງຢູ່ໃນໂລກທີ່ເບິ່ງບໍ່ເຫັນ. ວິນຍານທີ່ດີເຫຼົ່ານີ້ບາງຄັ້ງກໍ່ຖືກເອີ້ນວ່າກອງທັບສະຫວັນຂອງພຣະເຈົ້າ. ປື້ມຫົວນີ້ແມ່ນກ່ຽວກັບແຜນຂອງພຣະເຈົ້າ, ການຕໍ່ຕ້ານກັບແຜນການໂດຍພວກວິນຍານທີ່ກະບົດຕໍ່ພຣະເຈົ້າ, ຄວາມລົ້ມເຫຼວຂອງແຜນການໃນຕອນເລີ່ມຕົ້ນແລະຄວາມສຳເລັດອັນສົມບູນຂອງແຜນການພຣະເຈົ້າ. ນີ້ແມ່ນສິ່ງທີ່ພຣະຄຳພີກ່າວເຖິງ. ພວກເຮົາບໍ່ສາມາດເຮັດໄດ້ປະສົບກັບຄວາມສຸກຫຼືຄວາມເຈັບປວດຂອງເລື່ອງລາວໃນພຣະຄຳພີຖ້າພວກເຮົາບໍ່ລວມລາຍລະອຽດທັງໝົດຈາກເລື່ອງນີ້. ພວກເຮົາຕ້ອງລວມເອົາບັນດາສິ່ງທີ່ມີຊີວິດເໜືອທຳມະຊາດທີ່ເປັນພາກສ່ວນທີ່ສຳຄັນໃນປະຫວັດສາດຂອງພວກເຮົາແລະເລື່ອງລາວຂອງໂລກ. ເລື່ອງຍັງບໍ່ຄົບຖ້ວນສົມບູນ, ແລະພວກເຮົາຈະເຂົ້າໃຈຜິດ,ຖ້າຫາກບັນດາຄູສອນພຣະຄຳພີລະເລີຍລາຍລະອຽດເຫຼົ່ານີ້.

ສະມາຊິກກອງທັບແຫ່ງສະຫວັນຂອງພຣະເຈົ້າບໍ່ແມ່ນສິ່ງທີ່ຢູ່ພາຍນອກ, ຫຼືບໍ່ມີຄວາມສຳຄັນ, ຫຼືບໍ່ກ່ຽວຂ້ອງກັບເລື່ອງຂອງມະນຸດໃນພຣະຄຳພີ. ແຕ່ພວກເຂົາເຈົ້າມີບົດບາດສຳຄັນ. ແຕ່ຜູ້ອ່ານພຣະຄຳພີສະໄໝໃໝ່ກໍ່ມັກອ່ານລາຍລະອຽດເໜືອທຳມະຊາດເຫຼົ່ານີ້ໂດຍບໍ່ເຂົ້າໃຈເລີຍ. ອານາຈັກເໜືອທຳມະຊາດມີຢູ່ໃນຫຼາຍໆເລື່ອງລາວທີ່ຄຸ້ນເຄີຍຫຼາຍທີ່ສຸດໃນພຣະຄຳພີ, ແຕ່ວ່າຫຼາຍໆຄົນບໍ່ເຫັນມັນ. ຂ້າພະເຈົ້າກໍໄດ້ຮັບການສິດສອນກ່ຽວກັບພຣະຄຳພີເປັນເວລາຫຼາຍສິບປີກ່ອນທີ່ຂ້າພະເຈົ້າຈະຮຽນຮູ້ວ່າພຣະຄຳພີເວົ້າແນວໃດກ່ຽວກັບໂລກເໜືອທຳມະຊາດ. ຂ້າພະເຈົ້າຢາກແບ່ງປັນກັບທ່ານໃນສິ່ງທີ່ຂ້າພະເຈົ້າໄດ້ຮຽນຮູ້ກ່ຽວກັບຫົວຂໍ້ນີ້ຕອນນີ້.

ແຕ່ຢ່າລືມຄຳຖາມທີ່ຂ້າພະເຈົ້າຖາມໃນຕອນທຳອິດວ່າ. ທ່ານເຊື່ອສິ່ງທີ່ພຣະຄຳພີກ່າວແທ້ໆບໍ ? ການຮຽນຮູ້ສິ່ງທີ່ພຣະຄຳພີກ່າວເຖິງແທ້ໆ ກ່ຽວກັບໂລກທີ່ເບິ່ງບໍ່ເຫັນແລະຄວາມສຳພັນກັບຊີວິດຂອງທ່ານຈະເປັນແນວໃດຖ້າທ່ານບໍ່ເຊື່ອ.

ໃນພຣະທຳ 2 ກະສັດ 6:8–23, ຜູ້ທຳນວາຍເອລີຊາໄດ້ຕົກຢູ່ໃນຄວາມຫຍຸ້ງຍາກອີກຄັ້ງໜຶ່ງ. ກະສັດທີ່ໂກດແຄ້ນໄດ້ສົ່ງທະຫານໄປລ້ອມເຮືອນຂອງເອລີຊາ. ເມື່ອຜູ້ຮັບໃຊ້ຂອງເອລີຊາເຫັນທະຫານ, ລາວກໍຢ້ານຫຼາຍ. ເອລີຊາບອກລາວວ່າ,“ “ບໍ່ຕ້ອງຢ້ານ ຝ່າຍຂອງພວກເຮົາມີຫຼາຍກວ່າຝ່າຍຂອງພວກເຂົາ.” ກ່ອນທີ່ຄົນໃຊ້ຈະສົງໄສເອລີຊາກໍພາວັນນາອະທິຖານວ່າ, “ຂ້າແດ່ພຣະເຈົ້າຢາເວ ຂໍພຣະອົງເປີດຕາຄົນຮັບ

ໃຊ້ຂອງຂ້ານ້ອຍຄືນນີ້ ໃຫ້ເຫັນກໍາລັງຝ່າຍເຮົາແດ່ທ້ອນ.” ພຣະເຈົ້າຊົງຕອບຄໍາອະທິຖານຂອງເອລີຊາທັນທີ. ພຣະເຈົ້າໄດ້ເປີດຕາຄົນຮັບໃຊ້ຄົນນັ້ນ ເມື່ອລາວຫຼຽວຂຶ້ນໄປທີ່ເທິງພູ ລາວກໍເຫັນຝູງມ້າ ແລະລົດຮົບເປັນໄຟຢູ່ອ້ອມລ້ອມເອລີຊາ.

ຄໍາອະທິຖານຂອງເອລີຊາແມ່ນຄືກັບຄໍາອະທິຖານຂອງຂ້າພະເຈົ້າສໍາລັບທ່ານ. ຂໍໃຫ້ພຣະເຈົ້າຊົງເປີດຕາຂອງທ່ານເພື່ອເບິ່ງສິ່ງທີ່ຢູ່ໃນພຣະຄໍາພີ, ເພື່ອວ່າທ່ານຈະບໍ່ສາມາດຄິດກ່ຽວກັບພຣະຄໍາພີໃນແບບເກົ່າອີກຕໍ່ໄປ.

# ບົດທີ 2

## ອານາຈັກທີ່ເບິ່ງບໍ່ເຫັນ: ພຣະເຈົ້າແລະບັນດາອຳນາດເໜືອທຳມະຊາດທີ່ຊົ່ວຮ້າຍ.

**ຄົ**ນເຮົາມີຄວາມສົນໃຈກັບສິ່ງທີ່ເໜືອທຳມະຊາດແລະສຸດຍອດມະນຸດ ເມື່ອຄິດເຖິງວົງການບັນເທີງໃນຊຸມປີມໍ່ໆມານີ້. ມີໜັງສື, ລາຍການໂທລະພາບແລະໜັງຫຼາຍພັນເລື່ອງໃນທົດສະວັດທີ່ຜ່ານມາແມ່ນກ່ຽວກັບບັນດາເທວະດາ,ມະນຸດຕ່າງດາວ, ສັດປະຫຼາດ, ຜີປີສາດ, ຜີ, ແມ່ມົດ,ເວດມົນ,ຜີດິບ,ມະນຸດໝາປ່າແລະສຸດຍອດມະນຸດ. ຮູບເງົາທີ່ປະສົບຜົນສຳເລັດຫຼາຍທີ່ສຸດຂອງ ຮໍລີວູດHollywood ມີລັກສະນະພິເສດຄື: ເອັກເມນ X-Men, ແອັດແວນເຈີ Avengers, ແຮຣີ່ພອດເຕີ the Harry Potter, ຊຸບເປີແມນ Superman, ແລະຊຸດເລື່ອງຜີດິບ Twilight. ລາຍການໂທລະພາບຍັງມີໂປຣແກຼມທີ່ສຸມໃສ່ຫົວຂໍ້ນີ້ແລະປະສົບຜົນສຳເລັດຫຼາຍ. ແຕ່ຫົວຂໍ້ເຫຼົ່ານີ້ແມ່ນໄດ້ຮັບຄວາມນິຍົມຢູ່ແລ້ວກ່ອນທີ່ຈະມີໜັງແລະໂທລະພາບຕັ້ງແຕ່ຕອນທີ່ໄດ້ມີຂຽນເລື່ອງລາວທີ່ເໜືອທຳມະຊາດຫຼາຍເລື່ອງອອກເປັນປື້ມແລະຮູບແຕ້ມຕ່າງໆທີ່ເຮັດໃນສິນລະປະ.

*ເປັນຫຍັງຫົວຂໍ້ທີ່ເໜືອທຳມະຊາດນີ້ຈຶ່ງເປັນທີ່ນິຍົມ?*

ຄຳຕອບໜຶ່ງແມ່ນຄົນເຮົາມັກໃຊ້ເລື່ອງຕ່າງໆເພື່ອຫຼີກໜີຈາກຊີວິດທຳມະດາຂອງພວກເຂົາ. ເລື່ອງລາວທີ່ມະຫັດສະຈັນໄດ້ເຮັດໃຫ້ພວກເຮົາມີໂລກທີ່ໜ້າສົນໃຈແລະຕື່ນເຕັ້ນກວ່າຂອງພວກເຮົາ. ມັນເປັນສິ່ງທີ່ການຕໍ່ສູ້ກັນລະຫວ່າງຄວາມດີກັບຄວາມຊົ່ວໃນຈັກກະວານນີ້, ເຊິ່ງເຮັດໃຫ້ເຮົາຕື່ນເຕັ້ນ. ພວກເຮົາມີຄວາມກະຕືລືລົ້ນທີ່ຈະເບິ່ງການຕໍ່ສູ້ຄັ້ງຍິ່ງໃຫຍ່ໂດຍສຸດຍອດມະນຸດຕ້ານກັບຄົນຊົ່ວຮ້າຍ. ໃນຮູບເງົາທີ່ມີຊື່ສຽງຫຼາຍເລື່ອງເຊັ່ນ The Lord of the Rings, Gandalf, Frodo, ແລະສ່ວນທີ່ເຫຼືອຂອງກຸ່ມໄດ້ຕໍ່ສູ້ກັບເຊົາຣອນ Sauron ວິນຍານແຫ່ງຄວາມມືດ. ຖ້າຄົນຊົ່ວຮ້າຍມາຈາກນອກໂລກຂອງພວກເຮົາແລ້ວໄຊຊະນະຈະໜ້າຕື່ນເຕັ້ນຫຼາຍຍິ່ງຂຶ້ນ.

ຄຳຕອບທີສອງແມ່ນຄົນເຮົາຖືກດຶງດູດໃຫ້ສົນໃຈເລື່ອງຕ່າງໆທີ່ຢູ່ນອກໂລກຂອງພວກເຮົາ ເພາະວ່າໃນພຣະທຳປັນຍາຈານໄດ້ກ່າວໄວ້ວ່າ, ພຣະເຈົ້າໄດ້" ຊົງບັນຈຸໂລກນິຣັນດອນໄວ້ໃນຈິດໃຈຂອງເຮົາ" (ປຍຈ 3:11). ມີບາງສິ່ງບາງຢ່າງໃນຄົນເຮົາທີ່ເຮັດໃຫ້ພວກເຮົາປາຖະໜາສິ່ງທີ່ເໜືອທຳມະຊາດ. ອັກຄະສາວົກໂປໂລກໍໄດ້ຂຽນກ່ຽວກັບຄວາມປາຖະໜານີ້ເຊັ່ນກັນ. ເພິ່ນໄດ້ຂຽນວ່າຄວາມປາຖະໜາຂອງພວກເຮົາແມ່ນມາຈາກການມີຊີວິດຢູ່ໃນໂລກທີ່ພຣະເຈົ້າໄດ້ສ້າງຂຶ້ນ. ໂລກແລະທຸກໆສິ່ງໃນນັ້ນຊີ້ໃຫ້ເຫັນເຖິງທຸກສິ່ງທີ່ຖືກສ້າງຂຶ້ນໂດຍພຣະຜູ້ສ້າງ. ນີ້ໝາຍຄວາມວ່າມີອານາຈັກເໜືອທຳມະຊາດທີ່ຢູ່ນອກເໜືອຈາກໂລກຝ່າຍຮ່າງ

ກາຍຂອງພວກເຮົາ (ຣມ.1: 18-23). ໃນຄວາມເປັນຈິງ, ໂປໂລໄດ້ກ່າວວ່າຄວາມປາຖະໜາທີ່ຈະຮູ້ຈັກພຣະເຈົ້ານີ້ມີພະລັງຫຼາຍຈົນຖືກຄົນເຮົາຕັ້ງໃຈຈະຂັດຂວາງມັນ(ຣມ.1:18).

ແຕ່ພວກເຮົາບໍ່ຄິດເຖິງເລື່ອງລາວຕ່າງໆທີ່ຢູ່ໃນພຣະຄຳພີໃນແບບດຽວກັນກັບພວກເຮົາຄິດເຖິງເລື່ອງເລົ່າທີ່ເໜືອທຳມະຊາດໃນປຶ້ມ, ຮູບເງົາແລະນິທານຕ່າງໆ. ມີເຫດຜົນທີ່ດີໃນການຄິດແບບນີ້. ໃນບາງເລື່ອງລາວໃນພຣະຄຳພີຜູ້ຄົນເບິ່ງຄືວ່າທຳມະດາຫຼືບາງທີກໍ່ຄືກັບພໍ່ຕູ້ຂອງເຮົາ. ພວກເຂົາບໍ່ຮູ້ສຶກມີພະລັງຫຼືຄ້າຍຄືກັບສຸດຍອດມະນຸດ. ບາງເທື່ອທ່ານອາດເຄີຍໄດ້ຍິນເລື່ອງລາວເຫຼົ່ານີ້ໃນພຣະຄຳພີຕັ້ງແຕ່ທ່ານຍັງນ້ອຍແລະຕອນນີ້ພວກເຂົາບໍ່ໜ້າສົນໃຈເລີຍ. ອາດຈະເປັນເພາະວ່າເລື່ອງລາວທີ່ເກີດຂຶ້ນໃນວັດທະນະທຳອື່ນ,ມັນຈຶ່ງບໍ່ມີຄວາມໝາຍຫຍັງກັບທ່ານ. ມັນເປັນເລື່ອງຍາກສຳລັບພວກເຮົາທີ່ຈະຮູ້ວ່າຄົນເຫຼົ່ານັ້ນທີ່ຢູ່ໃນວັດທະນະ ທຳທີ່ຫ່າງໄກໃນເລື່ອງລາວໃນພຣະຄຳພີອາດຈະຍັງເປັນຄືກັບພວກເຮົາເຖິງແມ່ນວ່າພວກເຂົາເຈົ້າຈະແຕ່ງໂຕແລະມີຊີວິດທີ່ແຕກຕ່າງກັນຫຼາຍກໍ່ຕາມ.

ແຕ່ຂ້າພະເຈົ້າຄິດວ່າມີເຫດຜົນທີ່ຍິ່ງໃຫຍ່ກວ່ານັ້ນທີ່ວ່າ ເປັນຫຍັງເລື່ອງລາວທີ່ມະຫັດສະຈັນເໜືອທຳມະຊາດຈຶ່ງດຶງດູດຈິນຕະນາການຂອງພວກເຮົາໄດ້ ກໍ່ຍ້ອນວ່າພວກເຮົາໄດ້ຮັບການສອນມາບໍ່ດີວ່າພວກເຮົາຄວນຄິດແນວໃດກ່ຽວກັບໂລກທີ່ເໜືອທຳມະຊາດໃນພຣະຄຳພີ. ສິ່ງທີ່ຂ້າພະເຈົ້າໄດ້ຍິນໃນຄຳເທດສະໜາໃນຄຣິສຕະຈັກເປັນເວລາຫຼາຍປີເຮັດໃຫ້ເລື່ອງທີ່ເໜືອທຳມະຊາດຟັງແລ້ວໜ້າເບື່ອ. ແລະຮ້າຍໄປກວ່ານັ້ນ, ການສອນໃນຄຣິສຕະຈັກຈະຕັດພະລັງອຳນາດອອກຈາກໂລກເໜືອທຳມະຊາດ. ການສິດສອນເຮັດໃຫ້ໂລກເໜືອທຳມະຊາດເບິ່ງຄືວ່າບໍ່ມີອຳນາດ.

ຫຼາຍສິ່ງທີ່ຄຣິສຕຽນຄິດກ່ຽວກັບໂລກທີ່ເບິ່ງບໍ່ເຫັນແມ່ນບໍ່ຖືກຕ້ອງ. ຕົວຢ່າງໜຶ່ງກໍ່ແມ່ນ ເທວະດາໃນພຣະຄຳພີບໍ່ມີປີກ. ເຄຣຸບມີປີກ, ແຕ່ວ່າເຄຣຸບບໍ່ເຄີຍຖືກເອີ້ນວ່າເທວະດາ. ບັນດາເທວະດາປາກົດຢູ່ໃນຮູບແບບມະນຸດສະເໝີ. ຕົວຢ່າງອີກອັນໜຶ່ງແມ່ນຜີມານຮ້າຍບໍ່ມີເຂົາແລະຫາງ. ຕົວຢ່າງອື່ນກໍ່ຄືວ່າວິນຍານຊົ່ວຮ້າຍບໍ່ໄດ້ບັງຄັບເຮົາໃຫ້ເຮັດບາບ. ໃນຖານະມະນຸດພວກເຮົາສາມາດເຮັດບາບໄດ້ງ່າຍໂດຍບໍ່ຖືກພວກມັນບັງຄັບກໍ່ໄດ້. ພຣະຄຳພີໄດ້ອະທິບາຍເຖິງການຄອບຄອງຂອງຜີມານຮ້າຍເປັນສະຖານະການທີ່ຮ້າຍແຮງ, ແຕ່ສິ່ງມີຊີວິດເໜືອທຳມະຊາດ ທີ່ຊົ່ວຮ້າຍສາມາດສ້າງຄວາມເສຍຫາຍໄດ້ຫຼາຍວິທີທີ່ສະຫຼາດກວ່າພຽງແຕ່ໂຈມຕີຄົນເຮົາເທື່ອລະຄົນ. ນອກຈາກນີ້,ພຣະຄຳພີຍັງສອນວ່າເທວະດາແລະຜີມານຮ້າຍແມ່ນວິນຍານທີ່ມີອຳ ນາດໜ້ອຍກວ່າເມື່ອທຽບໃສ່ກັບສິ່ງມີຊີວິດເໜືອທຳມະຊາດອື່ນໆ. ໃນຄຣິສຕະຈັກຂ້າພະເຈົ້າບໍ່ເຄີຍໄດ້ຍິນການສອນກ່ຽວກັບບັນດາສິ່ງມີຊີວິດທີ່ມີອຳນາດຫຼາຍກວ່າ ແລະແຜນການຂອງພວກມັນທີ່ຈະທຳລາຍພວກເຮົາ.

# ເຈົ້າຜູ້ຄອບຄອງເໜືອທຳມະຊາດທີ່ຊົ່ວຮ້າຍແມ່ນມີຈິງ

ຂ້າພະເຈົ້າໄດ້ຖາມທ່ານແລ້ວໃນບົດທຳອິດວ່າທ່ານເຊື່ອໃນສິ່ງທີ່ພຣະຄຳພີກ່າວແທ້ບໍ. ຂ້າພະເຈົ້າຈະໃຫ້ທ່ານສອບເສັງສັ້ນໆຄືກັບວ່າທ່ານຢູ່ໃນໂຮງຮຽນ.

ພຣະຄຳພີກ່າວວ່າພຣະເຈົ້າມີບັນດາວິນຍານທີ່ດີເປັນທີມງານເພື່ອສຸມໃສ່ເຮັດໃນສິ່ງທີ່ພຣະອົງຕັດສິນໃຈໃຫ້ສຳເລັດບໍ ? ຄຳຕອບຂອງທ່ານແມ່ນຫຍັງ? ຄຳຕອບຄື "ແມ່ນແລ້ວ"! ວິນຍານທີ່ຈົງຮັກພັກດີນີ້ຖືກເອີ້ນວ່າຊຸມນຸມຊົນ,ຫຼືສະພາຂອງພຣະເຈົ້າ (ພສສ.89: 5-7; ດນອ 7:10). ຂໍ້ໜຶ່ງທີ່ຈະແຈ້ງທີ່ສຸດກ່ຽວກັບສະພາຂອງພຣະເຈົ້ານີ້ແມ່ນເພງສັນລະເສີນ 82:1. ພຣະຄຳພີກ່າວວ່າ" ພຣະເຈົ້າເປັນປະທານສະພາຢູ່ໃນສະຫວັນ; ພຣະອົງຊົງຕັດສິນໃນການຊຸມນຸມຂອງບັນດາເຈົ້າຜູ້ປົກຄອງທີ່ເໜືອທຳມະຊາດ(ເທບພະ"ເຈົ້າອື່ນໆ) "

ຖ້າທ່ານຄິດກ່ຽວກັບເລື່ອງນີ້, ນັ້ນແມ່ນຂໍ້ທີ່ໜ້າປະຫຼາດໃຈແທ້ ! ມັນເຮັດໃຫ້ຂ້າພະເຈົ້າບໍ່ສະບາຍໃຈໃນຄັ້ງທຳອິດທີ່ຂ້າພະເຈົ້າໄດ້ພິຈາລະນາສິ່ງທີ່ພຣະຄຳພີກ່າວແທ້ໆ. ຄວາມໝາຍຂອງຂໍ້ນີ້ແມ່ນແຈ່ມແຈ້ງແລະລຽບງ່າຍ. ເຊັ່ນດຽວກັບຂໍ້ອື່ນໆ, ຕ້ອງນຳເອົາພຣະທຳເພງສັນລະເສີນ 82: 1 ໄປປຽບທຽບກັບຂໍ້ອື່ນໆໃນພຣະຄຳພີເພື່ອຢືນຢັນຄວາມໝາຍ. ໃນຂໍ້ນີ້ພວກເຮົາຈຳເປັນຕ້ອງປຽບທຽບພຣະຄຳພີທີ່ເວົ້າກ່ຽວກັບ "ເຈົ້າຜູ້ປົກຄອງທີ່ເໜືອທຳມະຊາດ" ແລະຄວນກຳນົດຄຳສັບນັ້ນແນວໃດ.

ຄຳພາສາເຮັບເຣີເດີມທີ່ແປຄຳວ່າ " ເຈົ້າຜູ້ປົກຄອງທີ່ເໜືອທຳມະຊາດ" ແມ່ນ***ເອໂລຮີມ.*** ສິດຍາພິບານຫຼາຍຄົນໄດ້ສອນວ່າເອໂລຮີມແມ່ນໜຶ່ງໃນນາມຊື່ຂອງພຣະເຈົ້າພຣະບິດາ. ແຕ່ໃນພາສາເຮັບເຣີມັນມີຄວາມໝາຍທີ່ກວ້າງຂື້ນ. ຄຳນີ້ໝາຍເຖິງສິ່ງມີຊີວິດໃດໜຶ່ງທີ່ມາຈາກໂລກຝ່າຍວິນຍານ. ນັ້ນແມ່ນເຫດຜົນທີ່ບາງຄັ້ງທ່ານຈະໄດ້ພົບເຫັນທີ່***ເອໂລຮີມ***ໃຊ້ກັບພຣະເຈົ້າ (ປຖກ. 1:1), ແຕ່ຍັງມີພວກຜີມານຮ້າຍທີ່ເອີ້ນວ່າ ***ເອໂລຮີມ*** (ພບຍ. 32: 17), ແລະຍັງມີວິນຍານຂອງຄົນທີ່ຕາຍແລ້ວຖືກເອີ້ນວ່າເອໂລຮີມ(1 ຊມອ. 28 : 13). ໃນພຣະຄຳພີ, ສິ່ງມີຊີວິດວິນຍານໃດໆທີ່ຢູ່ໃນອານາຈັກທີ່ເໜືອທຳມະຊາດແມ່ນຖືກເອີ້ນວ່າ***ເອໂລຮີມ.***

ຄຳສັບພາສາເຮັບເຣີ***ເອໂລຮີມ*** ບໍ່ໄດ້ໝາຍເຖິງຄວາມສາມາດພິເສດສະເພາະ ຊຶ່ງພຽງແຕ່ພຣະເຈົ້າພຣະບິດາເທົ່ານັ້ນທີ່ມີ. ພຣະຄຳພີສອນຢ່າງຈະແຈ້ງວ່າພຣະເຈົ້າແຕກຕ່າງຈາກບັນດາເຈົ້າຜູ້ປົກຄອງແລະວິນຍານທີ່ເໜືອທຳມະຊາດອື່ນໆ. ແຕ່ວ່າວິນຍານທັງໝົດໃນໂລກເໜືອທຳມະຊາດສາມາດເອີ້ນວ່າ***ເອໂລຮີມ.*** ຍົກຕົວຢ່າງ, ພຣະຄຳພີສັ່ງໃຫ້ວິນຍານນະມັດສະການພຣະເຈົ້າຂອງພຣະຄຳພີ (ພສສ.29: 1). ພຣະອົງເປັນຜູ້ສ້າງແລະກະສັດຂອງພວກເຂົາ (ພສສ.95: 3;148:1-5). ພສສ. 89:6–7 ກ່າວວ່າ "ໃນສະຫວັນບໍ່ມີຜູ້ໃດເໝືອນພຣະເຈົ້າຢາເວບໍ່ມີຊາວສະຫວັນຄົນໃດຈະເທົ່າທຽມພຣະເຈົ້າຢາເວໄດ້. [1ກສ. 8:23;ພສສ. 97: 9 ພຣະເຈົ້າຊົງເປັນທີ່ຢ້ານກົວໃນຊຸມຊົນຂອງພວກບໍລິສຸດທັງຫຼາຍ" ຜູ້ຂຽນພຣະຄຳພີ

ເຫັນໄດ້ຈະແຈ້ງວ່າບໍ່ມີຜູ້ໃດເທົ່າທຽມກັບພຣະເຈົ້າແຫ່ງອິດສະຣາເອນ. ພຣະອົງເປັນ "ພຣະເຈົ້າແຫ່ງເທບພະເຈົ້າທັງຫຼາຍ" (ພບຍ.10:17; ພສສ.136: 2).

ບັນດາສິ່ງມີຊີວິດວິນຍານເຫຼົ່ານີ້ຢູ່ໃນ "ຊຸມຊົນຂອງພວກບໍຣິສຸດ" ແມ່ນມີຢູ່ຈິງ. ໃນບົດທຳອິດຂອງປຶ້ມຫົວນີ້, ຂ້າພະເຈົ້າໄດ້ກ່າວເຖິງບົດທີ່ພຣະເຈົ້າໄດ້ປະຊຸມທີມງານຊາວສະຫວັນຂອງພຣະອົງ. ພວກເຂົາໄດ້ເຕົ້າໂຮມກັນເພື່ອຕັດສິນໃຈວ່າກະສັດອາຮາບຈະຕາຍແນວໃດ. ໃນຂໍ້ຄວາມນັ້ນ, ສະມາຊິກຂອງກຸ່ມສະຫວັນນີ້ຖືກເອີ້ນວ່າວິນຍານ. ຖ້າພວກເຮົາເຊື່ອພຣະຄຳພີ, ພວກເຮົາຕ້ອງເຊື່ອວ່າໂລກວິນຍານແມ່ນມີຈິງ. ພວກເຮົາຕ້ອງເຊື່ອພຣະເຈົ້າແລະວິນຍານອື່ນໆທີ່ພຣະເຈົ້າໄດ້ສ້າງ ຍັງອາໄສຢູ່ໃນນັ້ນອີກດ້ວຍ. ພວກເຮົາຕ້ອງເຊື່ອວ່າສະພາທີ່ເໜືອທຳມະຊາດຂອງພຣະເຈົ້າກໍ່ມີຈິງ. ຖ້າພວກເຮົາບໍ່ເຊື່ອສິ່ງເຫຼົ່ານີ້, ພວກເຮົາກໍບໍ່ເອົາໃຈໃສ່ສິ່ງທີ່ພຣະຄຳພີທີ່ສອນກ່ຽວກັບໂລກເໜືອທຳມະຊາດແທ້ໆ.

ເນື່ອງຈາກພຣະຄຳພີລະບຸວ່າສະມາຊິກສະພາເຫຼົ່ານີ້ແມ່ນເປັນວິນຍານ, ພວກເຮົາຮູ້ວ່າພວກມັນບໍ່ພຽງແຕ່ເປັນຮູບປັ້ນຫີນຫຼືໄມ້ເທົ່ານັ້ນ. ບັນດາຮູບເຄົາລົບບໍ່ໄດ້ເຮັດວຽກເພື່ອພຣະເຈົ້າໃນສະພາສະຫວັນ. ມັນເປັນຄວາມຈິງທີ່ວ່າຄົນໃນສະໄໝບູຮານແລະຄົນໃນສະໄໝປະຈຸບັນນີ້ກໍເຮັດຮູບປັ້ນຮູບເຄົາລົບ. ແຕ່ຄົນເຮົາກໍຮູ້ວ່າຮູບປັ້ນຕ່າງໆທີ່ພວກເຂົາເຮັດດ້ວຍມືຂອງພວກເຂົາເອງນັ້ນບໍ່ແມ່ນຣິດອຳນາດທີ່ເໜືອທຳມະຊາດທີ່ແທ້ຈິງ. ບັນດາຮູບປັ້ນຮູບເຄົາລົບເຫຼົ່ານັ້ນເປັນພຽງແຕ່ບ່ອນອາໄສທີ່ເທບພະເຈົ້າຂອງພວກເຂົາສາມາດເຂົ້າມາຮັບເອົາເຄື່ອງຖວາຍບູຊາແລະໃຫ້ຄວາມຮູ້ແກ່ບັນດາຜູ້ທີ່ບູຊາພວກມັນ. ຄົນເຮົາຈະເຮັດພິທີກຳຕ່າງໆເພື່ອເຊື້ອເຊີນເຈົ້າຜູ້ປົກຄອງ(ເທບພະເຈົ້າ)ໃຫ້ມາແລະເຂົ້າໄປໃນຮູບປັ້ນຮູບເຄົາລົບ ດັ່ງນັ້ນພວກເຂົາຫວັງວ່າວິນຍານຈະຕອບຄຳອະທິຖານຂອງພວກເຂົາ.

## ໂຄງສ້າງແລະບົດບາດໜ້າທີ່ຂອງສະພາຊຸມນຸມແຫ່ງສະຫວັນ

ບັນດາສະມາຊິກສະພາຂອງເພງສັນລະເສີນ 82: 1 ຖືກເອີ້ນວ່າ"ບຸດຂອງພຣະເຈົ້າອົງສູງສຸດ" ໃນຂໍ້ທີ 6ກ່າວວ່າ"ພວກລູກຊາຍຂອງພຣະເຈົ້າ" ແລະຍັງປະກົດຢູ່ບ່ອນອື່ນໆໃນພຣະຄຳພີອີກດ້ວຍ. ພວກເຂົາມັກຈະຢູ່ໃນທີ່ປະທັບຂອງພຣະເຈົ້າ, ເຊັ່ນໃນພຣະທຳໂຢບ 1:6; 2:1, ໃນໂຢບ 38:7 ບອກພວກເຮົາວ່າບັນດາບຸດຂອງພຣະເຈົ້າມີຢູ່ແລ້ວເມື່ອພຣະເຈົ້າເລີ່ມຕົ້ນສ້າງໂລກແລະສ້າງມະນຸດ.

ນັ້ນແມ່ນສິ່ງທີ່ໜ້າສົນໃຈຫຼາຍ. ພຣະເຈົ້າຊົງເອີ້ນສິ່ງມີຊີວິດຝ່າຍວິນຍານເຫຼົ່ານີ້ວ່າບຸດຊາຍຂອງພຣະອົງ. ເນື່ອງຈາກວ່າພຣະເຈົ້າໄດ້ສ້າງເຂົາເຈົ້າ,ການໃຊ້ຄຳສັບວ່າ"ຄອບຄົວ" ສຳລັບພວກເຂົາກໍມີຄວາມໝາຍ. ມັນຄ້າຍຄືກັນກັບວິທີດຽວກັນທີ່ທ່ານກ່າວເຖິງລູກເຕົ້າຂອງທ່ານວ່າລູກຊາຍຫຼືລູກສາວຂອງທ່ານ. ທ່ານໄດ້ມີສ່ວນຮ່ວມໃນການສ້າງຂອງເຂົາເຈົ້າແລະທ່ານກໍ່ເປັນຄອບຄົວ. ແຕ່ນອກເໜືອຈາກການເປັນພຣະບິດາຂອງພວກເຂົາແລ້ວ, ພຣະເຈົ້າຍັງເປັນກະສັດຂອງພວກເຂົາອີກດ້ວຍ. ໃນສະໄໝບູຮານ, ກະສັດມັກ

ຈະປົກຄອງໂດຍໃຊ້ຍາດພີ່ນ້ອງຂອງຕົນໃນຕຳແໜ່ງການປົກຄອງ. ລູກຊາຍຂອງກະສັດຈະກາຍເປັນກະສັດຄົນຕໍ່ໄປຫຼັງຈາກພໍ່ໄດ້ເສຍຊີວິດ ດັ່ງນັ້ນການຄອບຄອງຂອງອານາຈັກແມ່ນທຸລະກິດຄອບຄົວ. ພຣະເຈົ້າຊົງເປັນກະສັດປົກຄອງເໜືອສະມາຊິກສະພາຂອງພຣະອົງ. ບັນດາບຸດຂອງພຣະອົງມີສິດອຳນາດຕ່ຳກວ່າພຣະເຈົ້າຍ້ອນຄວາມສຳພັນຄອບຄົວກັບພຣະອົງໃນຖານະເປັນລູກ. ແຕ່ໃນຂະນະທີ່ພວກເຮົາຈະສົນທະນາກັນຕະຫຼອດປຶ້ມຫົວນີ້, ມີບາງສິ່ງທີ່ຮ້າຍແຮງເກີດຂຶ້ນກໍຄືພວກລູກຊາຍບາງຄົນຂອງພຣະເຈົ້າບໍ່ສັດຊື່ຕໍ່ພຣະເຈົ້າພຣະບິດາ.

ພວກລູກຊາຍຂອງພຣະເຈົ້າເປັນຜູ້ມີອຳນາດຕັດສິນໃຈເຊັ່ນກັນ. ພວກເຮົາຮູ້ຈາກພຣະທຳ 1 ກະສັດ 22 (ແລະຂໍ້ຄວາມອື່ນໆຫຼາຍຂໍ້) ວ່າພຣະເຈົ້າມີສ່ວນກ່ຽວຂ້ອງກັບສິ່ງທີ່ເກີດຂຶ້ນກັບຄົນເທິງແຜ່ນດິນໂລກ. ເມື່ອພຣະເຈົ້າຕັດສິນໃຈວ່າມັນເຖິງເວລາແລ້ວທີ່ກະສັດອາຮາບຜູ້ຊົ່ວຮ້າຍຈະຕ້ອງຕາຍ, ພຣະເຈົ້າໄດ້ອະນຸຍາດໃຫ້ສະມາຊິກສະພາຂອງພຣະອົງຕັດສິນໃຈວ່າຈະເກີດຫຍັງຂຶ້ນ.

ການປະຊຸມສະພາຊຸມນຸມຂອງພຣະເຈົ້າໃນເພງສັນລະເສີນບົດທີ 82 ແລະ 1 ກະສັດ 22 ບໍ່ແມ່ນການປະຊຸມດຽວທີ່ຂຽນໄວ້ໃນພຣະຄຳພີ. ການປະຊຸມສະພາອີກຫຼາຍຄັ້ງໄດ້ກຳນົດວ່າຈະມີຫຍັງເກີດຂຶ້ນກັບບາງປະເທດທີ່ມີອຳນາດ.

ໃນດານີເອນບົດທີ 4, ກະສັດເນບູກາດເນັດຊາ, ກະສັດແຫ່ງບາບີໂລນ ໄດ້ຖືກລົງໂທດຈາກພຣະເຈົ້າທີ່ເຮັດໃຫ້ເພິ່ນເປັນບ້າເປັນເວລາຫຼາຍປີ. ການຕັດສິນໃຈນັ້ນໄດ້ຖືກເຮັດໂດຍ" ຄຳສັ່ງຂອງພຣະເຈົ້າອົງສູງສຸດ" (ດນອ.4:24) ແລະໂດຍ "ຄຳສັ່ງຂອງບັນດາຜູ້ອາລັກຂາ" (ດນອ. 4:17). "ຜູ້ອາລັກຂາ" ແມ່ນ ຄຳສັບທີ່ໃຊ້ສຳລັບສະມາຊິກທີ່ເໜືອທຳມະຊາດໃນສະພາຂອງພຣະເຈົ້າ. ມັນໄດ້ກ່າວເຖິງວິທີພວກເຂົາກຳລັງເຝົ້າເບິ່ງການປະພຶດຂອງມະນຸດແລະບໍ່ເຄີຍນອນຫຼັບເລີຍ.

ເລື່ອງລາວໃນພຣະຄຳພີກ່ຽວກັບກອງປະຊຸມສະພາຂອງພຣະເຈົ້າບອກພວກເຮົາວ່າສະມາຊິກສະພາເຂົ້າຮ່ວມໃນການປົກຄອງຂອງພຣະເຈົ້າ. ຢ່າງໜ້ອຍກໍໃນບາງກໍລະນີທີ່ພຣະເຈົ້າສັ່ງໃນສິ່ງທີ່ພຣະອົງຢາກເຮັດ, ແຕ່ພຣະອົງໃຫ້ສະມາຊິກສະພາຝ່າຍວິນຍານຂອງພຣະອົງມີສິດເສລີພາບໃນການຕັດສິນໃຈວ່າມັນຈະເກີດຂຶ້ນໄດ້ແນວໃດ.

ເທວະດາກໍ່ເຂົ້າຮ່ວມໃນສະພາຂອງພຣະເຈົ້າເຊັ່ນກັນ. ໃນພາສາດັ້ງເດີມຂອງພຣະຄຳພີ, ຄຳສັບທີ່ແປວ່າ"ເທວະດາ"ທີ່ຈິງແລ້ວມີຄວາມໝາຍວ່າ"ຜູ້ສົ່ງຂ່າວສານ". ຄຳວ່າເທວະດາແມ່ນຄຳອະທິບາຍກ່ຽວກັບວຽກແທ້ໆ. ເທວະດາສົ່ງຂໍ້ຄວາມໄປຫາມະນຸດ. ພວກເຮົາຈະຮຽນຮູ້ເພີ່ມເຕີມກ່ຽວກັບເທວະດາແລະໜ້າທີ່ຂອງພວກເພິ່ນແລະໜ້າທີ່ຂອງສະມາຊິກສະພາຄົນອື່ນໆ, ໃນປຶ້ມພາຍຫຼັງ.

# ສາເຫດທີ່ເລື່ອງນີ້ສຳຄັນ

ປະຕິກິລິຍາຂອງທ່ານຕໍ່ທຸກສິ່ງທີ່ທ່ານໄດ້ອ່ານມາເຖິງຕອນນີ້ອາດຈະເປັນຄື,“ ແມ່ນແລ້ວ, ໜ້າສົນໃຈຫຼາຍ ຂ້ອຍບໍ່ເຄີຍເຫັນເລື່ອງນັ້ນໃນພຣະຄຳພີມາກ່ອນເລີຍ. ແຕ່ຂໍ້ມູນທັງໝົດນີ້ມີຜົນແນວໃດຕໍ່ຊີວິດປະຈຳວັນຂອງຂ້ອຍ? ມັນຄວນຈະມີຜົນກະທົບແນວໃດຕໍ່ການເຮັດວຽກຂອງຄຣິສຕະຈັກຂອງຂ້ອຍ?” ຄຳຕອບກໍ່ຄືວ່າມັນແກ້ໄຂຄວາມເຂົ້າໃຈຂອງພວກເຮົາວ່າພຣະເຈົ້າແມ່ນໃຜ, ແລະພວກເຮົາຄວນພົວພັນກັບພຣະອົງແນວໃດ. ມັນຊ່ວຍໃຫ້ພວກເຮົາເຂົ້າໃຈວ່າຈຸດປະສົງຂອງພວກເຮົາຢູ່ເທິງໂລກນີ້ຄວນເປັນແນວໃດ. ເພື່ອອະທິບາຍໃຫ້ລະອຽດຫຼາຍຂຶ້ນ, ຂ້າພະເຈົ້າຈະສະຫຼຸບແຕ່ລະບົດດ້ວຍວັກແບບນີ້. ເປັນວັກໜຶ່ງທີ່ຈະຊີ້ໃຫ້ເຫັນຜົນທີ່ກ່ຽວຂ້ອງກັບພາກປະຕິບັດຂອງຄວາມຈິງທີ່ພວກເຮົາໄດ້ຮຽນໃນບົດນີ້.

ໃນບົດນີ້, ພວກເຮົາໄດ້ກ່າວເຖິງວິທີທີ່ພຣະຄຳພີອະທິບາຍເຖິງການບໍລິຫານທີ່ເໜືອທຳມະຊາດຂອງພຣະເຈົ້າ, ສະພາສະຫວັນຂອງພຣະອົງ, ທີມງານຝ່າຍວິນຍານຂອງພຣະອົງ. ສິ່ງນັ້ນຊ່ວຍໃຫ້ພວກເຮົາເຂົ້າໃຈພຣະເຈົ້າດີຂຶ້ນແລະພຣະເຈົ້າພົວພັນກັບພວກເຮົາແນວໃດ.

ສິ່ງທຳອິດພຣະເຈົ້າມີຄອບຄົວວິນຍານແຫ່ງສະຫວັນເຊິ່ງພຣະອົງເຮັດສິ່ງຕ່າງໆໃນອານາຈັກຝ່າຍວິນຍານ. ນັ້ນແມ່ນແບບຢ່າງສຳລັບວິທີທີ່ພຣະເຈົ້າຕ້ອງການມີຄວາມສຳພັນກັບຄອບຄົວມະນຸດທີ່ເປັນຝ່າຍໂລກຂອງພຣະອົງ. ພວກເຮົາຈະເວົ້າເຖິງເລື່ອງນີ້ຕື່ມໃນບົດຕໍ່ໄປ, ແຕ່ນີ້ແມ່ນຕົວຢ່າງ: ທ່ານອາດຈະສົງໄສວ່າເປັນຫຍັງພຣະເຈົ້າຈຶ່ງຕ້ອງການທີມງານ. ພຣະເຈົ້າບໍ່ຕ້ອງການຄວາມຊ່ວຍເຫຼືອໃນການເຮັດຫຍັງກໍ່ແລ້ວແຕ່, ແມ່ນແຕ່ໃນໂລກຝ່າຍວິນຍານ. ພຣະອົງເປັນພຣະເຈົ້າ! ແຕ່ພຣະຄຳພີກ່າວໄວ້ຈະແຈ້ງວ່າພຣະອົງໃຊ້ສິ່ງມີຊີວິດຝ່າຍວິນຍານທີ່ມີອຳນາດໜ້ອຍກວ່າເພື່ອເຮັດສິ່ງຕ່າງໆ.

ພຣະເຈົ້າບໍ່ຈຳເປັນຕ້ອງມີສະພາແຫ່ງສະຫວັນ, ແຕ່ພຣະອົງເລືອກທີ່ຈະໃຊ້ສະພາແຫ່ງສະຫວັນ. ພຣະເຈົ້າບໍ່ຕ້ອງການພວກເຮົາຄືກັນ. ຖ້າພຣະເຈົ້າເລືອກ, ພຣະອົງກໍສາມາດບອກມະນຸດທຸກໆຄົນໃນໂລກເລື່ອງຂ່າວປະເສີດໄດ້. ພຣະເຈົ້າສາມາດໃຫ້ທຸກຄົນໄດ້ຮັບຂ່າວສານທີ່ພວກເຂົາຄວນຫັນມາຫາພຣະອົງ. ພຣະເຈົ້າສາມາດສອນແຕ່ລະຄົນວ່າພວກເຂົາຄວນຮັກຄົນອື່ນໂດຍເອົາສຽງເວົ້າຂອງພຣະອົງໃສ່ໃນຫົວຂອງພວກເຂົາກໍໄດ້. ແຕ່ພຣະອົງບໍ່ເຮັດ. ກົງກັນຂ້າມ, ພຣະອົງໃຊ້ຄົນຄືກັນກັບທ່ານແລະຂ້າພະເຈົ້າເພື່ອເຮັດໜ້າທີ່ນັ້ນໃຫ້ສຳເລັດ.

ສິ່ງທີສອງ, ພຣະເຈົ້າສາມາດກຳນົດເຫດການຕ່າງໆລ່ວງໜ້າເພື່ອເຮັດໃຫ້ທຸກສິ່ງເປັນໄປຕາມທີ່ພຣະອົງຕ້ອງການ. ແຕ່ພຣະອົງບໍ່ເຮັດ. ໃນເລື່ອງລາວຂອງກະສັດອາຮາບ, ພຣະເຈົ້າຊົງປ່ອຍໃຫ້ສະມາຊິກສະພາແຫ່ງສະຫວັນຂອງພຣະອົງຕັດສິນໃຈວ່າຈະເຮັດຕາມສິ່ງທີ່ພຣະອົງຕ້ອງການແນວໃດ. ເວົ້າອີກຢ່າງໜຶ່ງກໍຄືພຣະອົງຍອມໃຫ້ພວກເຂົາໃຊ້ອິດສະຫຼະຂອງພວກເຂົາໃນການຕັດສິນໃຈ. ສິ່ງນັ້ນສອນພວກເຮົາວ່າບໍ່

ແມ່ນທຸກຢ່າງທີ່ເກີດຂຶ້ນແມ່ນຖືກກຳນົດໄວ້ກ່ອນ. ແລະນັ້ນແມ່ນຄວາມຈິງບໍ່ພຽງແຕ່ຢູ່ໃນໂລກຝ່າຍວິນຍານເທົ່ານັ້ນ, ມັນຍັງເປັນຄວາມຈິງຢູ່ໃນໂລກວັດຖຸຂອງເຮົານຳອີກ.

ໃນພຣະຄຳພີ, ອານາຈັກເໜືອທຳມະຊາດມີລຳດັບຊັ້ນການຈັດຕັ້ງ. ພຣະເຈົ້າຊົງເປັນກະສັດ. ຜູ້ທີ່ເຮັດວຽກໃຫ້ພຣະອົງແມ່ນຄອບຄົວຂອງພຣະອົງ. ພວກເຂົາມີສິດອຳນາດໃນການບໍລິຫານຂອງພຣະເຈົ້າ. ພວກເຂົາມີສ່ວນຮ່ວມໃນສິ່ງທີ່ເກີດຂຶ້ນໃນອານາຈັກຂອງພຣະເຈົ້າ.

ມັນເປັນເລື່ອງທີ່ໜ້າປະຫຼາດໃຈແທ້ໆທີ່ຄຳພີເວົ້າແບບດຽວກັນກັບຄົນເຮົາ. ຕັ້ງແຕ່ຈຸດເລີ່ມຕົ້ນໃນສວນເອເດນພຣະເຈົ້າໄດ້ສ້າງມະນຸດໃຫ້ປົກຄອງແຜ່ນດິນໂລກຮ່ວມກັບພຣະອົງ. ພຣະເຈົ້າໄດ້ບອກອາດາມແລະເອວາວ່າ"ຈົ່ງມີລູກຫຼານໃຫ້ແຜ່ຂະຫຍາຍທະວີຄູນຫຼາຍຂຶ້ນ ເພື່ອເຊື້ອສາຍຂອງເຈົ້າຈະມີຢູ່ທົ່ວທຸກແຫ່ງຫົນແລະປົກຄອງທຸກສິ່ງເທິງແຜ່ນດິນໂລກນີ້." (ປຖກ.1:28). ອາດາມແລະເອວາແມ່ນລູກຂອງພຣະເຈົ້າ, ເປັນຄອບຄົວຂອງພຣະເຈົ້າຢູ່ໃນໂລກນີ້. ພຣະເຈົ້າຕ້ອງການຢູ່ຮ່ວມກັບພວກເຂົາແລະປ່ອຍໃຫ້ພວກເຂົາມີສ່ວນຮ່ວມໃນການເຮັດໃຫ້ທັງໝົດໂລກນີ້ເປັນຄືກັບເອເດນ.

ນັ້ນແມ່ນແນວຄິດທີ່ຜູ້ອ່ານສ່ວນຫຼາຍລຶ້ງເຄີຍ. ສິ່ງທີ່ບໍ່ຈະແຈ້ງກໍຄືອາດາມແລະເອວາບໍ່ພຽງແຕ່ເປັນສະມາຊິກໃນຄອບຄົວຂອງພຣະເຈົ້າໃນສວນເອເດນເທົ່ານັ້ນ. ຄອບຄົວຝ່າຍວິນຍານຂອງພຣະເຈົ້າກໍ່ໄດ້ຢູ່ທີ່ນັ້ນອີກດ້ວຍ. ສວນເອເດນແມ່ນບ່ອນທີ່ພຣະເຈົ້າປະທັບຢູ່. ໃນບ່ອນທີ່ພຣະເຈົ້າປະທັບຢູ່ຄອບຄົວຂອງພຣະອົງກໍ່ອາໄສຢູ່ທີ່ນັ້ນເຊັ່ນກັນ. ພວກເຮົາຄິດວ່າສະຫວັນເປັນສະຖານທີ່ທີ່ພວກເຮົາຈະຢູ່ຮ່ວມກັບພຣະເຈົ້າແລະສິ່ງມີຊີວິດວິນຍານທີ່ສັດຊື່ຂອງພຣະອົງກໍຄືຄອບຄົວເໜືອທຳມະຊາດຂອງພຣະອົງ. ນັ້ນແມ່ນແນວທາງທີ່ຕັ້ງໃຈໄວ້ໃນເບື້ອງຕົ້ນ, ແລະແນວທາງທີ່ຈະເປັນໄປໃນອະນາຄົດ.ມັນເໝາະສົມກັບທີ່ ພຣະຄຳພີຈົບລົງດ້ວຍສະຫວັນກັບມາສູ່ແຜ່ນດິນໂລກໃໝ່ຄືໃນສວນເອເດນທົ່ວໂລກ(ພນມ. 21-22).

ເພື່ອຈະເຂົ້າໃຈຈຸດໝາຍປາຍທາງຂອງພວກເຮົາ, ພວກເຮົາຈຳເປັນຕ້ອງກັບໄປຫາຊ່ວງເວລາທີ່ສອງຄອບຄົວຂອງພຣະເຈົ້າທີ່ອາໄສຢູ່ໃນພື້ນທີ່ດຽວກັນ. ພວກເຮົາຕ້ອງກັບໄປສວນເອເດນແລະເບິ່ງລາຍລະອຽດໃນເລື່ອງອີກເທື່ອໜຶ່ງ.

# ບົດທີ 3

# ກະສັດໃນອະດີດແລະກະສັດໃນອະນາຄົດ

**ພ**ວກເຮົາໄດ້ມີການແນະນຳໂດຍຫຍໍ້ກ່ຽວກັບສະພາແຫ່ງສະຫວັນຂອງພຣະເຈົ້າ, ເຊິ່ງແມ່ນຄອບຄົວຝ່າຍວິນຍານຂອງພຣະອົງທີ່ເຮັດໃຫ້ການຕັດສິນໃຈຂອງພຣະອົງສຳເລັດ. ຍັງມີອີກຫຼາຍຢ່າງທີ່ຈະຂຽນກ່ຽວກັບເລື່ອງນີ້. ພວກເຮົາຕ້ອງພິຈາລະນາວ່າບຸກຄົນທີ່ສຳຄັນຄືກັບພຣະເຢຊູເຈົ້າແລະຊາຕານມີຄວາມເໝາະສົມກັບສິ່ງນີ້ແນວໃດ. ແຕ່ກ່ອນທີ່ພວກເຮົາຈະໂອ້ລົມກັນຕື່ມກ່ຽວກັບສິ່ງທີ່ກຳລັງເກີດຂຶ້ນໃນໂລກຝ່າຍວິນຍານທີ່ເບິ່ງບໍ່ເຫັນ, ພວກເຮົາຕ້ອງຄິດໃນແງ່ໃໝ່ກ່ຽວກັບຕົວເຮົາເອງ. ການປົກຄອງຂອງພຣະເຈົ້າໃນໂລກຝ່າຍວິນຍານ ໂດຍການນຳໃຊ້ທີມງານຂອງພຣະອົງເປັນແບບຢ່າງ ສຳລັບວິທີທີ່ພຣະອົງປົກຄອງຢູ່ເທິງໂລກນີ້. ການປົກຄອງຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກແມ່ນສິ່ງທີ່ນັກວິຊາການພຣະຄຳພີເອີ້ນວ່າລາຊະອານາຈັກຂອງພຣະເຈົ້າ.ລາຊະອານາຈັກຂອງພຣະເຈົ້າຢູ່ແຜ່ນດິນໂລກໄດ້ເລີ່ມຕົ້ນໃນປະຖົມມະການໃນສວນເອເດນ.

## ສວນເອເດນຄືສຳນັກງານໃຫຍ່ຂອງພຣະເຈົ້າ

ສິ່ງທຳອິດທີ່ທ່ານຄິດເຖິງເມື່ອທ່ານໄດ້ຍິນຄຳວ່າ"ສວນເອເດນ"ແມ່ນຫຍັງ? ຄົນສ່ວນຫຼາຍມັກຄິດເຖິງອາດາມແລະເອວາ. ສວນເອເດນແມ່ນບ້ານຂອງເຂົາເຈົ້າ. ນັ້ນແມ່ນບ່ອນທີ່ພຣະເຈົ້າໃຫ້ພວກເຂົາຢູ່ (ປຖກ.2:15-25).

ແຕ່ຄົນສ່ວນໃຫຍ່ບໍ່ຮູ້ວ່າສວນເອເດນກໍ່ເປັນບ້ານຂອງພຣະເຈົ້າເຊັ່ນກັນ. ເອເຊກຽນກ່າວເຖິງເອເດນວ່າ" ສວນຂອງພຣະເຈົ້າ" (ອຊກ.28:13; 31:8–9). ນີ້ບໍ່ຄວນແປກໃຈ. ສິ່ງທີ່ໜ້າແປກໃຈກໍ່ຄືຫຼັງຈາກເອີ້ນເອເດນວ່າ" ສວນຂອງພຣະເຈົ້າ" ເອເຊກຽນຮຽກວ່າ" ພູເຂົາສັກສິດຂອງພຣະເຈົ້າ" (ຂໍ້ 28: 14). ໃນຫຼາຍສາດສະໜາໃນສະໄໝບູຮານ, ສວນທີ່ຫຼູຫຼາ ຫຼືອຸດທະຍານແລະພູເຂົາທີ່ບໍ່ສາມາດເຂົ້າເຖິງໄດ້ຖືວ່າເປັນບ້ານຂອງບັນດາເຈົ້າຜູ້ປົກຄອງທີ່ເໜືອທຳມະຊາດ(ເທບພະເຈົ້າ). ພຣະຄຳພີໃຊ້ທັງສວນແລະພູເຂົາເພື່ອອະທິບາຍເຖິງເອເດນ. ເອເດນແມ່ນບ້ານຂອງພຣະເຈົ້າແລະນັ້ນໝາຍຄວາມວ່າມັນເປັນສຳນັກງານໃຫຍ່ຂອງພຣະອົງ. ບ່ອນທີ່ພຣະອົງດຳເນີນການປົກຄອງລາຊະອານາຈັກຂອງພຣະອົງ.

ແລະບ່ອນທີ່ພຣະເຈົ້າສະຖິດຢູ່, ສະພາທີມງານຂອງພຣະອົງກໍຈະຢູ່ທີ່ນັ້ນກັບພຣະອົງເຊັ່ນກັນ.

# ຜູ້ທີ່ເປັນຮູບແບບລັກສະນະຂອງພຣະເຈົ້າ

ຂໍ້ໜຶ່ງທີ່ສຳຄັນທີ່ສຸດໃນພຣະຄຳພີສອນພວກເຮົາວ່າທັງພຣະເຈົ້າ ແລະສະພາຂອງພຣະອົງແມ່ນຢູ່ໃນສວນເອເດນ. ໃນປະຖົມມະການ 1:26 ພຣະເຈົ້າກ່າວວ່າ, "ບັດນີ້ ເຮົາຈະສ້າງມະນຸດໃຫ້ມີຮູບລັກສະນະຄືເຮົາ,". ພຣະເຈົ້າຢູ່ທີ່ນີ້ກຳລັງປະກາດໃຫ້ກຸ່ມໜຶ່ງຮູ້ແຜນຂອງພຣະອົງສ້າງມະນຸດ. ພຣະອົງກຳລັງສົນທະນາຢູ່ໃນກຸ່ມໃດ? ແມ່ນຄອບຄົວຝ່າຍວິນຍານແຫ່ງສະຫວັນຂອງພຣະອົງນັ້ນກໍຄືສະພາຂອງພຣະອົງ. ພຣະອົງບໍ່ໄດ້ກຳລັງເວົ້າກັບພຣະເຈົ້າໃນຕຣີເອການຸພາບ. ພວກເຮົາຮູ້ສິ່ງນີ້ເພາະວ່າພຣະເຈົ້າພຣະບິດາເຈົ້າບໍ່ສາມາດຮູ້ບາງສິ່ງທີ່ພຣະບຸດ ແລະພຣະວິນຍານບໍ່ຮູ້! ທີມງານຂອງພຣະເຈົ້າກຳລັງຮຽນຮູ້ສິ່ງໃໝ່ທີ່ພຣະເຈົ້າຕັດສິນໃຈເຮັດ.

ການປະກາດຂອງພຣະເຈົ້ານັ້ນເຂົ້າໃຈງ່າຍ. ກໍເປັນຄືກັບຂ້າພະເຈົ້າເວົ້າກັບໝູ່ບາງຄົນວ່າ, "ໄປກິນພິຊຊ່າ ເທາະ!" ຂໍ້ນີ້ແມ່ນຈະແຈ້ງ. ແຕ່ມີສິ່ງອື່ນອີກທີ່ພວກເຮົາບໍ່ຢາກພາດ. ຂະນະທີ່ພຣະເຈົ້າສ້າງມະນຸດ, ສະພາ ວິນຍານຂອງພຣະອົງບໍ່ໄດ້ມີສ່ວນຮ່ວມໃນວຽກງານການຊົງສ້າງ.

ໃນກອງປະຊຸມສະພາສະຫວັນກ່ຽວກັບເລື່ອງຂອງອາຮາບ, ບັນດາວິນຍານໄດ້ເຂົ້າຮ່ວມໃນຂະບວນການຕັດສິນໃຈ, ແຕ່ວ່າໃນກອງປະຊຸມນີ້, ພວກເຂົາພຽງແຕ່ຟັງແລະບໍ່ເຂົ້າຮ່ວມ. ເມື່ອມະນຸດຖືກສ້າງຂຶ້ນໃນຂໍ້ຕໍ່ໄປ (ປຖກ. 1:27), ແມ່ນພຣະເຈົ້າພຽງຜູ້ດຽວທີ່ເປັນຜູ້ສ້າງ. ການສ້າງມະນຸດເປັນສິ່ງທີ່ພຣະເຈົ້າຊົງໄດ້ເຮັດຜູ້ດຽວ. ຍ້ອນກັບໄປເບິ່ງຕົວຢ່າງພິຊຊ່າຂອງຂ້າພະເຈົ້າ, ຖ້າຂ້າພະເຈົ້າເວົ້າວ່າ " ໄປກິນພິຊຊ່າ ເທາະ!" ຈາກນັ້ນຂ້າພະເຈົ້າກໍໃຫ້ທຸກຄົນຂຶ້ນລົດຂອງຂ້າພະເຈົ້າແລ້ວພາໄປທີ່ຮ້ານພິດຊາ ແລະຫຼັງຈາກນັ້ນກໍ່ຈ່າຍຄ່າທັງໝົດ, ຂ້າພະເຈົ້າຈະເປັນຜູ້ທີ່ເຮັດວຽກທັງໝົດ. ນັ້ນກໍຄ້າຍຄືກັບຕອນທີ່ພຣະເຈົ້າສ້າງມະນຸດ.

ນັ້ນໝາຍຄວາມວ່າພຣະເຈົ້າຜູ້ດຽວເປັນຜູ້ສ້າງມະນຸດ. ບັນດາສິ່ງທີ່ມີຊີວິດວິນຍານແຫ່ງສະພາຂອງພຣະອົງບໍ່ມີອຳນາດແບບນັ້ນ. ແຕ່ວ່າມັນກໍ່ໃຫ້ເກີດຜົນໄດ້ຮັບທີ່ຜິດປົກກະຕິອີກຢ່າງໜຶ່ງ. ໃນປະຖົມມະການ 1:27ກ່າວວ່າ, "ພຣະເຈົ້າຈຶ່ງໄດ້ເນຣະມິດສ້າງມະນຸດໃຫ້ມີຮູບລັກສະນະຂອງພຣະອົງ," ແຕ່ເປັນຫຍັງໃນເລື່ອງຈຶ່ງເວົ້າວ່າ "ຮູບລັກສະນະ***ຂອງພວກເຮົາ***" ໃນຂໍ້ທີ 26?

ນີ້ໝາຍຄວາມວ່າທັງພຣະເຈົ້າແລະສະມາຊິກສະພາຝ່າຍວິນຍານຮ່ວມກັນແບ່ງປັນເປັນ"ຮູບລັກສະນະ". ຂ້າພະເຈົ້າຈະອະທິບາຍຄຳວ່າ "ຮູບລັກສະນະ" ໝາຍຄວາມວ່າແນວໃດຕໍ່ໄປ, ພຽງແຕ່ເຂົ້າໃຈໃນຕອນນີ້ວ່າພຣະເຈົ້າຢາກໃຫ້ມະນຸດມີ "ຮູບລັກສະນະ" ນີ້ເຊັ່ນກັນ. ບໍ່ວ່າ"ຮູບລັກສະນະ" ໝາຍເຖິງຫຍັງ; ມະນຸດກໍ່ຈະແບ່ງປັນຮູບລັກສະນະຫຼັງຈາກພຣະເຈົ້າສ້າງ. ພວກເຮົາບໍ່ພຽງແຕ່ເປັນຄືກັບພຣະເຈົ້າໃນບາງດ້ານເທົ່ານັ້ນ, ແຕ່ພວກເຮົາຍັງເປັນເໝືອນກັບສິ່ງທີ່ມີຊີວິດວິນຍານແຫ່ງສະພາຂອງພຣະອົງອີກດ້ວຍ.

ສິ່ງທີ່ພວກເຮົາທຸກຄົນມີທີ່ຄ້າຍຄືກັນນີ້ຖືກສື່ສານໂດຍປະໂຫຍກທີ່ວ່າ"ພຣະລັກສະນະຂອງພຣະເຈົ້າ." ພຣະເຈົ້າໄດ້ສ້າງມະນຸດຄືຮູບແບບຂອງພຣະອົງ. ການເປັນມະນຸດຄືການເປັນຮູບແບບຂອງພຣະເຈົ້າ. ພວກເຮົາແມ່ນຕົວແທນຂອງພຣະເຈົ້າ. ການເປັນພຣະລັກສະນະຂອງພຣະເຈົ້າບໍ່ແມ່ນຄວາມສາມາດທີ່ພຣະເຈົ້າມອບໃຫ້ເຮົາ. ພຣະລັກສະນະຂອງພຣະເຈົ້າບໍ່ແມ່ນຄວາມສະຫຼາດ, ຄວາມຮູ້ສຶກ, ຫຼືຄວາມຄິດສ້າງສັນ. ສິ່ງຕ່າງໆເຫຼົ່ານີ້ອາດຈະເກີດຂຶ້ນກັບພວກເຮົາແລະພວກເຮົາອາດຈະສູນເສຍຄວາມສາມາດ, ແຕ່ພວກເຮົາບໍ່ສາມາດສູນເສຍ "ສະຖານະພາບ"ຂອງການເປັນພຣະລັກສະນະຂອງພຣະເຈົ້າໄດ້. ຖ້າພວກເຮົາສາມາດສູນເສຍຮູບລັກສະນະຂອງພຣະເຈົ້າ ພວກເຮົາກໍ່ຄວນຈະເຊົາເປັນຄົນ! ມະນຸດທຸກຄົນຕັ້ງແຕ່ເກີດມາຈົນເຖິງຄວາມຕາຍ, ຈະເປັນມະນຸດສະເໝີແລະຈະເປັນພຣະລັກສະນະຂອງພຣະເຈົ້າຕະຫຼອດໄປ. ນີ້ແມ່ນເຫດຜົນທີ່ວ່າຊີວິດຂອງມະນຸດແມ່ນພິເສດແລະແຕກຕ່າງຈາກຊີວິດຂອງສັດ.

ພຣະລັກສະນະໝາຍເຖິງການເປັນຕົວແທນຂອງພຣະເຈົ້າ. ພວກເຮົາເປັນຕົວແທນຂອງພຣະເຈົ້າແນວໃດ? ພວກເຮົາໄດ້ເຫັນໃນບົດກ່ອນໜ້ານີ້ວ່າພຣະເຈົ້າແບ່ງປັນສິດອຳນາດຂອງພຣະອົງກັບບັນດາສິ່ງມີຊີວິດວິນຍານຂອງສະພາແຫ່ງສະຫວັນຂອງພຣະອົງ. ພຣະເຈົ້າຍັງແບ່ງປັນສິດອຳນາດຂອງພຣະອົງກັບຜູ້ຄົນຢູ່ເທິງໂລກອີກດ້ວຍ. ພຣະເຈົ້າຊົງເປັນກະສັດອົງສູງສຸດຂອງທຸກສິ່ງທີ່ເບິ່ງເຫັນແລະເບິ່ງບໍ່ເຫັນ. ພຣະອົງຊົງປົກຄອງ. ພຣະອົງແບ່ງປັນການປົກຄອງນັ້ນກັບຄອບຄົວຝ່າຍວິນຍານຂອງພຣະອົງໃນໂລກຝ່າຍວິນຍານແລະພຣະອົງຍັງແບ່ງປັນການປົກຄອງກັບມະນຸດໃນໂລກຕົວຈິງອີກດ້ວຍ. ພວກເຮົາຢູ່ທີ່ນີ້ເພື່ອມີສ່ວນຮ່ວມກັບພຣະເຈົ້າໃນແຜນງານຂອງພຣະອົງ. ພຣະອົງຕ້ອງການທີ່ຈະເຮັດໃຫ້ໂລກກາຍເປັນສະຖານທີ່ທີ່ສົມບູນແບບເຊິ່ງພວກເຮົາສາມາດມີຄວາມສຸກກັບພຣະອົງ.

ຫຼັງຈາກຜ່ານໄປດົນນານຫຼາຍໆປີ, ພຣະເຈົ້າໄດ້ສະແດງໃຫ້ມະນຸດເຫັນວິທີທາງທີ່ສົມບູນແບບໃນການເປັນພຣະລັກສະນະຂອງພຣະອົງ. ພຣະເຢຊູເຈົ້າຊົງເປັນຕົວຢ່າງສູງສຸດຂອງການເປັນພຣະລັກສະນະພຣະເຈົ້າ. ພຣະອົງຖືກເອີ້ນວ່າເປັນພຣະລັກສະນະຂອງພຣະເຈົ້າທີ່ເບິ່ງບໍ່ເຫັນ (ກລຊ.1:15) ພຣະອົງຖືກເອີ້ນວ່າເປັນແບບພິມດຽວກັນກັບພຣະເຈົ້າແທ້ໆ (ຮຣ.1: 3). ພວກເຮົາໄດ້ຮັບຄຳສັ່ງໃຫ້ຮຽນແບບພຣະເຢຊູເຈົ້າເພື່ອໃຫ້ພວກເຮົາເປັນຕົວແທນຂອງພຣະເຈົ້າຢ່າງຖືກຕ້ອງ (ຣມ 8:29; 2 ກຣທ.3:18).

## ສອງສະພາ,ຈຸດໝາຍປາຍທາງດຽວ

ຂ້າພະເຈົ້າຫວັງວ່າທ່ານຈະເຫັນເສັ້ນທາງທີ່ພຣະຄຳພີກຳລັງຊີ້ໄປ. ຄົນເຮົາຕ້ອງມີສ່ວນຮ່ວມໃນການປົກຄອງອານາຈັກຂອງພຣະເຈົ້າ. ຄົນເຮົາຄວນຈະຢູ່ໃນສະພາຂອງພຣະເຈົ້າຢູ່ເທິງໂລກນີ້. ພຣະເຈົ້າຕ້ອງການໃຫ້ພວກເຮົາອາໄສຢູ່ໃນທີ່ປະທັບຂອງພຣະອົງ ພ້ອມດ້ວຍຄອບຄົວຝ່າຍວິນຍານຂອງພຣະອົງ. ພວກເຮົາຖືກສ້າງຂຶ້ນເພື່ອໃຫ້ມີຄວາມສຸກກັບພຣະເຈົ້າແລະຮັບໃຊ້ພຣະອົງຕະຫຼອດໄປ. ພຣະເຈົ້າຕ້ອງການໃຫ້ສິ່ງນີ້ເລີ່ມຕົ້ນເທິງແຜ່ນດິນໂລກໃນສວນເອເດນ ຕອນທີ່ພຣະອົງໄດ້ສ້າງມະນຸດຄັ້ງທຳອິດ. ເອເດນແມ່ນ

ບ່ອນທີ່ສະຫວັນແລະແຜ່ນດິນໂລກເຊື່ອມຕໍ່ກັນ. ພຣະເຈົ້າແລະສະມາຊິກສະພາຝ່າຍວິນຍານຂອງພຣະອົງຕ້ອງຄອບຄອງຢູ່ໃນສະຖານທີ່ດຽວກັນແລະມະນຸດກໍ່ເຊັ່ນກັນ.

ແຕ່ພຣະເຈົ້າຕ້ອງການໃຫ້ມະນຸດເຮັດວຽກເພື່ອຈຸດປະສົງຫຍັງ?

ພຣະເຈົ້າໄດ້ບອກອາດາມແລະເອວາວ່າ,“ ຈົ່ງມີລູກຫຼານໃຫ້ແຜ່ຂະຫຍາຍທະວີຄູນຫຼາຍຂຶ້ນ ເພື່ອເຊື້ອສາຍຂອງເຈົ້າຈະມີຢູ່ທົ່ວທຸກແຫ່ງຫົນ ແລະປົກຄອງທຸກສິ່ງເທິງແຜ່ນດິນໂລກນີ້. ເຮົາໃຫ້ເຈົ້າມີອຳນາດເໜືອປາ, ນົກ ແລະສັດປ່າທຸກຊະນິດ.” (ປຖກ.1:28). ນີ້ແມ່ນວຽກງານສຳລັບຜູ້ເປັນແບບລັກສະນະຂອງພຣະເຈົ້າ. ພວກເຂົາເຈົ້າຈະຮັບໃຊ້ພຣະເຈົ້າໃນຖານະເປັນກະສັດປົກຄອງເໜືອການຊົງສ້າງຂອງພຣະອົງ. ວຽກຂອງມະນຸດ ແມ່ນກະຈາຍໄປທົ່ວແຜ່ນດິນໂລກ ແລະເຮັດໃຫ້ແຜ່ນດິນໂລກທັງໝົດ ຄືກັນກັບສວນເອເດນ. ພຣະເຈົ້າຕ້ອງການໃຫ້ມະນຸດຂະຫຍາຍອານາຈັກຂອງພຣະອົງໄປທົ່ວແຜ່ນດິນໂລກ. ວຽກນັ້ນໃຫຍ່ເກີນໄປສຳລັບພຽງແຕ່ສອງຄົນ. ພຣະເຈົ້າຕ້ອງການໃຫ້ອາດາມແລະເອວາມີລູກເຕົ້າ.

ດັ່ງທີ່ພວກເຮົາຮູ້ແລ້ວ, ອາດາມແລະເອວາແລະລູກເຕົ້າຂອງເຂົາເຈົ້າລົ້ມເຫຼວໃນວຽກນີ້. ມະນຸດໄດ້ເຮັດບາບ. ຖ້າຫາກວ່າມະນຸດບໍ່ໄດ້ເຮັດບາບຕອນນັ້ນແຜ່ນດິນໂລກກໍ່ຈະຄ່ອຍໆປ່ຽນເປັນຄືກັບສວນເອເດນຢູ່ທົ່ວທຸກແຫ່ງ ພວກເຮົາກໍຈະມີຊີວິດຕະຫຼອດໄປໃນໂລກທີ່ສົມບູນແບບ. ມະນຸດຈະໄດ້ຢູ່ຮ່ວມກັບພຣະເຈົ້າແລະຄອບຄົວຝ່າຍວິນຍານຂອງພຣະອົງດ້ວຍຄວາມສັນຕິສຸກທີ່ສົມບູນແບບ.

ແຕ່ວ່າມະນຸດບໍ່ໄດ້ເຊື່ອຟັງພຣະເຈົ້າຫຼືເຮັດຕາມແຜນງານຂອງພຣະອົງ. ພຣະເຈົ້າຊົງຮັກມະນຸດ ສະນັ້ນພຣະອົງຈຶ່ງໃຫ້ອະໄພອາດາມແລະເອວາ. ແຕ່ວ່າລູກເຕົ້າຂອງເຂົາເຈົ້າທຸກຄົນນັບຕັ້ງແຕ່ເວລານັ້ນກໍຈະເປັນຄືກັບພໍ່ແມ່ຂອງພວກເຂົາ. ພວກເຂົາຈະບໍ່ຕິດຕາມພຣະເຈົ້າ. ພວກເຮົາທຸກຄົນເຮັດບາບແລະສົມຄວນໄດ້ຮັບຄວາມຕາຍ (ຣມ 6: 23). ຕອນນີ້ພວກເຮົາເປັນມະນຸດ, ແຕ່ຍ້ອນວ່າພວກເຮົາຖືກແຍກອອກຈາກພຣະເຈົ້າພວກເຮົາທຸກຄົນຈຶ່ງເປັນຄົນບາບ. ພວກເຮົາຕ້ອງການຄວາມພົ້ນຈາກການເຮັດບາບແລະພົ້ນຈາກຄວາມຕາຍ.

ແຜນການຂອງພຣະເຈົ້າທີ່ໃຫ້ພວກເຮົາເຂົ້າຮ່ວມກັບຄອບຄົວແຫ່ງສະຫວັນຂອງພຣະອົງ, ເຂົ້າຮ່ວມໃນສະພາຂອງພຣະອົງແລະອາໄສຢູ່ໃນທີ່ປະທັບຂອງພຣະອົງ, ຊ່ວຍໃຫ້ພວກເຮົາເຫັນສິ່ງທີ່ປະຫຼາດໃຈຫຼາຍທີ່ພຣະຄຳພີສອນ.

ພຣະຄຳພີເອີ້ນຄົນທີ່ເຊື່ອໃນພຣະເຢຊູເຈົ້າວ່າ“ບຸດຂອງພຣະເຈົ້າ”ຫຼື “ລູກຂອງພຣະເຈົ້າ” (ຢຮ. 1:12; 11:52; ຄລຕ 3: 26; 1 ຢຮ. 3:1–3). ນີ້ແມ່ນເຫດຜົນທີ່ອະທິບາຍວ່າຜູ້ເຊື່ອແມ່ນ“ໄດ້ຖານະເປັນບຸດ” ເຂົ້າໃນຄອບຄົວຂອງພຣະເຈົ້າ (ຄລຕ. 4: 5–6; ຣມ. 8:14-6). ນີ້ແມ່ນເຫດຜົນທີ່ພວກເຮົາຖືກບອກວ່າເປັນ"ຜູ້ຮັບມໍລະດົກ" ຂອງພຣະເຈົ້າແລະອານາຈັກຂອງພຣະອົງ (ຄລຕ. 4:7; ຕຕ 3: 7; ຢກບ 2: 5) ຍັງບອກອີກວ່າຜູ້ເຊື່ອເປັນຜູ “ຮັບສ່ວນໃນສະພາບຂອງພຣະອົງ” (1ປຕ1.4; ເບິ່ງອີກ 1ຢຮ.3:2). ນີ້ແມ່ນເຫດຜົນທີ່ພຣະເຢຊູເຈົ້າກ່າວວ່າພຣະອົງຈະຍອມໃຫ້ຜູ້ທີ່ເຊື່ອ“ ກິນໝາກໄມ້ແຫ່ງຊີວິດຊຶ່ງຢູ່ໃນອຸທິຍານ

ຂອງພຣະເຈົ້າ" (ພນມ. 2:7). ນີ້ແມ່ນເຫດຜົນທີ່ພຣະເຢຊູເຈົ້າສັນຍາວ່າຈະໃຫ້ພວກເຮົາມີອຳນາດປົກຄອງຂອງບັນດາປະຊາຊາດ (ພນມ. 2: 26–28). ພຣະອົງຍັງໄດ້ກ່າວວ່າພຣະອົງຈະໃຫ້ພວກເຮົານັ່ງເທິງບັນລັງຂອງພຣະອົງ (ພນມ.3:21). ພວກເຮົາດຳເນີນຊີວິດໄປຂ້າງໜ້າຕະຫຼອດຊີວິດຂອງເຮົາໃນໂລກນີ້, ແຕ່ໃນຖານະເປັນຜູ້ທີ່ເຊື່ອພວກເຮົາຈະກັບໄປຢູ່ທີ່ສວນເອເດນ. ມື້ໜຶ່ງສະຫວັນຈະກັບມາສ້າງໂລກໃຫ້ຄືກັບເອເດນອີກເທື່ອໜຶ່ງ.

ນັ້ນແມ່ນສິ່ງທີ່ພວກເຮົາຈະເຮັດໃນຊີວິດຫຼັງຄວາມຕາຍຄືຈະປົກຄອງໃນໂລກໃໝ່ຄືສວນເອເດນທົ່ວໂລກ .. ພວກເຮົາຈະມີຄວາມສຸກກັບສິ່ງທີ່ອາດາມແລະເອວາໄດ້ຕັ້ງໃຈໄວ້ເພື່ອຊ່ວຍໃຫ້ເກີດດອກອອກຜົນ. ຊີວິດອັນຕະຫຼອດໄປໃນສະຫວັນບໍ່ແມ່ນກ່ຽວກັບການນັ່ງເທິງກ້ອນເມກ ດີດພິນແລະຮ້ອງເພງຕະຫຼອດເວລາ. ສະຫວັນເປັນເລື່ອງຂອງການຄົ້ນພົບ ແລະມີຄວາມສຸກກັບສິ່ງສ້າງໃໝ່ທີ່ສົມບູນແບບ. ເປັນເລື່ອງກ່ຽວກັບຄວາມສຳພັນທີ່ສົມບູນແບບ ທີ່ບໍ່ອາດຈິນຕະນາການໄດ້ກັບພຣະເຈົ້າ, ພຣະເຢຊູເຈົ້າ, ແລະ "ບັນດາພຣະລັກສະນະ"ທັງໝົດ ຄົນທັງຫຼາຍທີ່ເປັນຜູ້ເຊື່ອແລະບັນດາວິນຍານທີ່ສັດຊື່.

# ສາເຫດທີ່ເລື່ອງນີ້ສຳຄັນ

ມີແນວຄວາມຄິດຫຼາຍຢ່າງທີ່ມາຈາກຂໍ້ມູນນີ້ທີ່ຄວນປ່ຽນແປງຊີວິດຂອງພວກເຮົາ. ພວກເຮົາຄວນດຳເນີນຊີວິດໂດຍຄິດຢູ່ສະເໝີວ່າຊີວິດຂອງພວກເຮົາຄວນເປັນຕົວແທນຂອງພຣະເຈົ້າແລະຊ່ວຍເຮັດໃຫ້ແຜນການຂອງພຣະອົງສຳເລັດ. ຫຼາຍຄັ້ງທີ່ພວກເຮົາມັກບໍ່ເຂົ້າໃຈແຜນຂອງພຣະອົງຢ່າງຄົບຖ້ວນ. ແຕ່ພວກເຮົາຈະມີຊີວິດທີ່ແຕກຕ່າງຖ້າແຕ່ລະມື້ພວກເຮົາຈື່ຈຳວ່າພວກເຮົາຄວນເປັນຕົວແທນຂອງພຣະເຈົ້າ.

ແຜນການດັ້ງເດີມຂອງພຣະເຈົ້າແມ່ນເພື່ອເຮັດໃຫ້ແຜ່ນດິນໂລກທັງໝົດເປັນເໝືອນດັ່ງສວນເອເດນ. ພຣະເຈົ້າຕ້ອງການໃຫ້ມະນຸດມີສ່ວນຮ່ວມ ໃນການຂະຫຍາຍການປົກຄອງທີ່ດີຂອງພຣະອົງທົ່ວແຜ່ນດິນໂລກ. ພຣະເຈົ້າໄດ້ບອກອາດາມແລະເອວາໃຫ້ມີລູກເຕົ້າແລະກາຍເປັນຜູ້ດູແລ / ຫຼືກະສັດເໜືອສິ່ງທີ່ພຣະເຈົ້າສ້າງ (ປຖກ.1:26-28). ຄຳສັ່ງນັ້ນບໍ່ໄດ້ຖືກລືມຫຼັງຈາກທີ່ອາດາມແລະເອວາໄດ້ເຮັດບາບ. ແຕ່ພຣະເຈົ້າໄດ້ແຈ້ງແຜນຂອງພຣະອົງຕໍ່ໂນອາອີກຄັ້ງຫຼັງຈາກນ້ຳຖ້ວມໂລກ (ປຖກ.8:17; 9:1). ສວນເອເດນຖືກທຳລາຍ, ແຕ່ພຣະເຈົ້າຕ້ອງການໃຫ້ມັນໄດ້ຮັບການຟື້ນຟູອີກຄັ້ງ. ໃນທີ່ສຸດການປົກຄອງຂອງພຣະເຈົ້າແລະອານາຈັກຂອງພຣະອົງຈະກັບມາຢ່າງສົມບູນແບບເມື່ອພຣະເຢຊູເຈົ້າກັບມາຄັ້ງທີສອງ. ພຣະເຈົ້າສັນຍາວ່າຈະສ້າງສະຫວັນໃໝ່ແລະແຜ່ນດິນໂລກໃໝ່ ໃນພຣະທຳພຣະນິມິດ 21 ແລະ 22 ອະທິບາຍເຖິງການສ້າງໃໝ່ແລະມັນມີລັກສະນະຄ້າຍຄືກັບສວນເອເດນຫຼາຍ. ໃນຂະນະທີ່ພວກເຮົາລໍຖ້າສວນເອເດນໃໝ່, ພວກເຮົາສາມາດເຜີຍແຜ່ຄວາມຈິງກ່ຽວກັບພຣະເຈົ້າ ແລະຂ່າວປະເສີດຂອງພຣະເຢຊູເຈົ້າຢູ່ທົ່ວທຸກແຫ່ງ. ພວກເຮົາຍັງສາມາດເປັນຕົວແທນຂອງພຣະເຈົ້າຕໍ່ທຸກໆຄົນ ທີ່ພວກເຮົາພົບກັນໃນທຸກບ່ອນທີ່ພວກເຮົາໄປ. ພວກເຮົາເປັນຕົວແທນຂອງພຣະເຈົ້າ ເພື່ອເຊື້ອເຊີນຜູ້ຄົນໃຫ້ມີຄວາມສຳພັນກັບພຣະເຈົ້າໃນເວລານີ້,ແລະລໍຄອຍມື້ທີ່ພຣະເຢຊູເຈົ້າເຮັດຈະສຳເລັດແຜນການຂອງພຣະເຈົ້າແລະສ້າງສວນເອເດນຄືນໃໝ່.

ການຄິດວ່າຕົວເອງເປັນຕົວແທນຂອງພຣະເຈົ້າຢ່າງມີສະຕິຄື ເປັນພຣະລັກສະນະຂອງພຣະອົງ ໝາຍຄວາມວ່າການຕັດສິນໃຈຂອງເຮົາແມ່ນສຳຄັນ. ຄຣິດສະຕຽນບໍ່ໄດ້ຕົກຢູ່ໃນຄວາມບາບອີກຕໍ່ໄປແລະສາມາດຊ່ວຍເຮັດໃຫ້ແຜນຂອງພຣະເຈົ້າສຳເລັດ. ພຣະເຈົ້າໄດ້ສົ່ງພຣະວິນຍານບໍລິສຸດເຈົ້າຂອງພຣະອົງລົງມາເພື່ອມອບອຳນາດໃຫ້ແກ່ພວກເຮົາເພື່ອເຮັດສິ່ງນີ້. ພວກເຮົາຕ້ອງເຜີຍແຜ່ຂ່າວດີທີ່ວ່າຊີວິດຈະດີຂຶ້ນໄດ້ໃນຄວາມສຳພັນກັບພຣະເຈົ້າ. ພວກເຮົາຕ້ອງບອກຄົນອື່ນວ່າພວກເຂົາເຈົ້າສາມາດມີຄວາມສຸກໄດ້ແນວໃດ. ຊີວິດຂອງພວກເຮົາເຊື່ອມຕໍ່ກັນກັບຫຼາຍໆຄົນ. ຄວາມຊົງຈຳຂອງພວກເຂົາໃນການພົບປະກັບພວກເຮົານັ້ນຈະສົ່ງຜົນກະທົບຕໍ່ຫຼາຍໆສິ່ງໃນຊີວິດຂອງພວກເຂົາ ແລະອາດແມ່ນແຕ່ກັບຄົນອື່ນທີ່ເຂົາເຈົ້າໄດ້ພົບນັ້ນ. ຈາກວິຖີຊີວິດຂອງຄົນເຮົາສະແດງໃຫ້ເຫັນວ່າຊີວິດມີຄວາມສຳພັນກັບພຣະເຈົ້າ ຫຼືຊີວິດທີ່ບໍ່ມີພຣະເຈົ້າ. ບໍ່ມີທາງເລືອກອື່ນສຳລັບຊີວິດ.

ຄວາມຮູ້ທີ່ວ່າມະນຸດທຸກຄົນເປັນພຣະລັກສະນະຂອງພຣະເຈົ້າກໍ່ຄວນສອນໃຫ້ພວກເຮົາເຫັນວ່າທຸກໆຄົນມີຄວາມສຳຄັນ. ສິ່ງນີ້ເປັນຍິ່ງກ່ວາການຕັດສິນໃນເລື່ອງທີ່ວ່າໃຜຈະເປັນແລະໃຜຈະຕາຍ. ສິ່ງທີ່ພວກເຮົາໄດ້ຮຽນຮູ້ຄວນປ່ຽນແປງວິທີທີ່ພວກເຮົາເບິ່ງເຊິ່ງກັນແລະກັນ ແລະວິທີທີ່ພວກເຮົາປະຕິບັດຕໍ່ກັນແລະກັນ. ການດູຖູກເຊື້ອຊາດຜິວພັນຈະບໍ່ມີອີກໃນອານາຈັກຂອງພຣະເຈົ້າ. ຄວາມບໍ່ຍຸຕິທຳກໍບໍ່ສອດຄ່ອງກັບການເປັນຕົວແທນຂອງພຣະເຈົ້າ. ການໃຊ້ອຳນາດໃນທາງທີ່ຜິດບໍ່ວ່າຈະຢູ່ເຮືອນ,ຢູ່ບ່ອນເຮັດວຽກ, ຫຼືໃນພະນັກງານລັດນັ້ນກໍ່ບໍ່ແມ່ນວິທີທາງຂອງພຣະເຈົ້າ. ອາດາມແລະເອວາໄດ້ເຮັດບາບແຕ່ພຣະເຈົ້າໄດ້ປະຕິບັດຕໍ່ພວກເຂົາຢ່າງຍຸດຕິທຳ. ສະນັ້ນ, ຄວາມບໍ່ຍຸດຕິທຳຈຶ່ງບໍ່ແມ່ນວິທີທີ່ພວກເຮົາຄວນປະຕິບັດກັບຄົນອື່ນໆ. ແລະມະນຸດທຸກຄົນແມ່ນພຣະລັກສະນະຂອງພຣະເຈົ້າ.

ການເປັນຕົວແທນຂອງພຣະເຈົ້າໝາຍເຖິງທຸກໆອາຊີບທີ່ໃຫ້ກຽດພຣະອົງແມ່ນຕຳແໜ່ງທາງຝ່າຍວິນຍານ. ທຸກໆວຽກງານທີ່ຖືກຕ້ອງເໝາະສົມກໍ່ສາມາດເປັນສ່ວນໜຶ່ງຂອງການຂັບເຄື່ອນໂລກຂອງພວກເຮົາໄປສູ່ສວນເອເດນໄດ້. ພວກເຮົາສາມາດອວຍພອນຄົນທີ່ເປັນແບບພຣະລັກສະນະຂອງພຣະເຈົ້າໄດ້ຫຼືບໍ່. ພຣະເຈົ້າບໍ່ໄດ້ພິຈາລະນາຄົນເຮົາໃນວຽກຮັບໃຊ້ວ່າບໍລິສຸດຫຼືພິເສດຍ້ອນວຽກງານຂອງເຂົາເຈົ້າ. ພຣະເຈົ້າສົນໃຈວ່າແຕ່ລະຄົນເປັນຕົວແທນຂອງພຣະອົງແນວໃດໃນທຸກບ່ອນທີ່ພວກເຂົາອາໄສຢູ່. ພວກເຮົາຢືນຕໍ່ສູ້ຄວາມມືດ, ແບ່ງປັນຊີວິດທີ່ພຣະເຈົ້າຕ້ອງການໃຫ້ທຸກຄົນໄດ້ສຳຜັດຫຼືບໍ່, ສິ່ງທີ່ພວກເຮັດບໍ່ຈຳເປັນຕ້ອງປະທັບໃຈກໍໄດ້; ຂໍພຽງແຕ່ໃຫ້ເຮົາເຮັດ.

ແຜນການຂອງພຣະເຈົ້າສຳລັບມະນຸດແລະສວນເອເດນ ແມ່ນໜ້າສວຍສົດງົດງາມຫຼາຍ. ແຕ່ເມື່ອມະນຸດໄດ້ເຮັດບາບ, ແຜນການດັ່ງກ່າວນັ້ນເບິ່ງຄືວ່າຈະດັບລົງທັນທີ. ມີພຽງແຕ່ພຣະເຈົ້າເທົ່ານັ້ນທີ່ສົມບູນແບບ. ພຣະເຈົ້າໄດ້ໃຫ້ມະນຸດແລະບັນດາສິ່ງມີຊີວິດວິນຍານມີອິດສະຫຼະພາບໃນການເລືອກ, ທັງທາງເລືອກທີ່ດີຫຼືທາງເລືອກທີ່ບໍ່ດີ. ແຕ່ຄົນແລະບັນດາສິ່ງມີຊີວິດເປັນວິນຍານບໍ່ສົມບູນແບບຄືກັບພຣະເຈົ້າ ສະນັ້ນອິດສະຫຼະພາບຂອງພວກເຂົາຈຶ່ງອາດມີຜົນເສຍຫຼວງຫຼາຍ.

# ບົດທີ 4
# ການກະບົດເທິງສະຫວັນ

ຂ້າພະເຈົ້າໄດ້ຈົບບົດທີ່ຜ່ານມາດ້ວຍຄວາມຄິດທີ່ວ່າ ອິດສະຫຼະພາບໃນການຕັດສິນໃຈຢູ່ໃນກຳມືຂອງສິ່ງມີຊີວິດທີ່ບໍ່ສົມບູນແບບ, ບໍ່ວ່າຈະເປັນບັນດາວິນຍານຫຼືມະນຸດ ຊຶ່ງອາດຈະສົ່ງຜົນຮ້າຍໄດ້. ການເອີ້ນມັນວ່າໄພພິບັດບໍ່ແມ່ນຄຳສັບທີ່ຮຸນແຮງພໍ. ຂ້າພະເຈົ້າຈະຍົກຕົວຢ່າງບາງສ່ວນຂອງຜົນຮ້າຍທີ່ໄດ້ບັນທຶກໄວ້ໃນບົດທຳອິດຂອງພຣະຄຳພີ. ທັງໝົດກ່ຽວຂ້ອງກັບທັງມະນຸດແລະພວກວິນຍານທີ່ເຮັດສິ່ງທີ່ຊົ່ວຮ້າຍ.

ຈົ່ງຈື່ໄວ້ວ່າພຣະເຈົ້າໄດ້ຕັດສິນໃຈທີ່ຈະແບ່ງປັນສິດອຳນາດຂອງພຣະອົງໃຫ້ກັບບັນດາວິນຍານທີ່ຢູ່ໃນໂລກທີ່ເບິ່ງບໍ່ເຫັນແລະໃຫ້ມະນຸດຢູ່ເທິງໂລກນີ້ພ້ອມ. ນີ້ໝາຍຄວາມວ່າທັງບັນດາວິນຍານແລະມະນຸດກໍ່ເປັນຕົວແທນຂອງພຣະເຈົ້າໂດຍການເຮັດໃຫ້ຈຸດປະສົງຂອງພຣະອົງສຳເລັດ. ນັ້ນແມ່ນຄວາມໝາຍຂອງແຜນຂອງພຣະເຈົ້າເມື່ອພຣະອົງກ່າວວ່າ, "ໃຫ້ພວກເຮົາສ້າງມະນຸດຊາດໃນຮູບລັກສະນະຂອງພວກເຮົາ" (ປຖກ.1:26). ຈາກນັ້ນພຣະເຈົ້າກໍໄດ້ສ້າງມະນຸດຕາມພຣະລັກສະນະຂອງພຣະອົງ. ບັນດາວິນຍານແລະມະນຸດເປັນພຣະລັກສະນະຂອງພຣະເຈົ້າ. ພວກເຮົາແບ່ງປັນສິດອຳນາດຂອງພຣະອົງແລະເປັນຕົວແທນຂອງພຣະອົງໃນຖານະຜູ້ປົກຄອງຮ່ວມກັນ.

ນັ້ນແມ່ນແຜນການທີ່ດີເລີດ. ອິດສະຫຼະພາບໃນການຕັດສິນໃຈແມ່ນສ່ວນໜຶ່ງຂອງການເປັນຄືກັບພຣະເຈົ້າ. ພວກເຮົາບໍ່ສາມາດເປັນຕົວແທນຂອງພຣະເຈົ້າໄດ້ ຖ້າຫາກພວກເຮົາບໍ່ມີອິດສະຫຼະພາບໃນການຕັດສິນໃຈ.ຖ້າປາດສະຈາກອິດສະຫຼະພາບໃນການຕັດສິນໃຈ, ຄວາມຮັກແລະການເສຍສະລະຕົນເອງກໍ່ບໍ່ມີ. ຖ້າທ່ານຖືກຕັ້ງໂປຣແກຣມໃຫ້ " ຮັກ," ໂດຍທ່ານບໍ່ໄດ້ຕັດສິນໃຈ. ມັນກໍບໍ່ແມ່ນຄວາມຮັກທີ່ແທ້ຈິງ. ຄຳເວົ້າທີ່ທ່ານຈຳເປັນຕ້ອງເວົ້າແລະການກະທຳທີ່ທ່ານຖືກບັງຄັບໃຫ້ເຮັດກໍ່ບໍ່ແມ່ນຂອງແທ້. ການຄິດເຖິງອິດສະຫຼະພາບໃນການຕັດສິນໃຈຫຼືການຖືກຕັ້ງໂປຣແກຣມນັ້ນເຮັດໃຫ້ຂ້າພະເຈົ້ານຶກເຖິງໜັງເລື່ອງ: Star Wars, The Return of the Jedi. ຕົວລະຄອນທີ່ມີຊື່ວ່າ Obiwan Kenobi ບອກ Luke ວ່າພໍ່ຂອງລາວກາຍເປັນ" ຫຸ່ນຍົນຫຼາຍກ່ວາເປັນຄົນ." ແຕ່ຕໍ່ມາໃນໜັງພວກເຮົາຈະເຫັນວ່ານັ້ນບໍ່ແມ່ນຄວາມຈິງ. ພໍ່ຂອງ Luke ໄດ້ເສຍຊີວິດເພື່ອລາວຈະໄດ້ຊ່ວຍ Luke ຈາກຈັກກະພັດຜູ້ຊົ່ວຮ້າຍ. ພໍ່ຂອງລາວບໍ່ພຽງແຕ່ເປັນຫຸ່ນຍົນທີ່ຖືກຕັ້ງໂປຣແກຣມໄວ້. ການຕັດສິນໃຈຂອງລາວແມ່ນມາຈາກໃຈຂອງລາວ. ລາວຍັງເປັນມະນຸດແລະມີອິດສະຫຼະພາບໃນການຕັດສິນໃຈ.

ແຕ່ການໃຫ້ຄົນເຮົາແລະບັນດາວິນຍານອິດສະຫຼະພາບໃນການຕັດສິນໃຈຈະເຮັດໃຫ້ບັນຫາໃຫຍ່ເກີດຂຶ້ນ. ການໃຫ້ອິດສະຫຼະພາບແກ່ບັນດາສິ່ງທີ່ມີຊີວິດທີ່ມີຄວາມສະຫຼາດໝາຍຄວາມວ່າພວກເຂົາສາມາດເລືອກຜິດຫຼືຕັ້ງໃຈກະບົດກໍ່ໄດ້. ຜົນໄດ້ຮັບນີ້ແມ່ນມີໂອກາດທີ່ຈະເກີດຂຶ້ນຫຼາຍ, ເນື່ອງຈາກວ່າຜູ້ທີ່ສົມບູນແບບແມ່ນພຣະເຈົ້າເທົ່ານັ້ນ. ພຣະອົງເປັນຜູ້ດຽວທີ່ບໍ່ເຮັດຜິດຫຍັງເລີຍເນື່ອງຈາກພຣະອົງສົມບູນແບບ. ອິດສະຫຼະພາບທີ່ມອບໃຫ້ກັບສິ່ງມີຊີວິດທີ່ບໍ່ສົມບູນແບບນີ້ ເປັນສາເຫດທີ່ວ່າຍ້ອນຫຍັງສິ່ງຕ່າງໆຈຶ່ງສາມາດເຮັດຜິດພາດໄດ້ໃນສວນເອເດນ.

## ບັນຫາໃນສະຫວັນ

ລອງຄິດເຖິງສະຖານະການໃນສວນເອເດນ. ມີພຽງແຕ່ອາດາມແລະເອວາເທົ່ານັ້ນທີ່ເປັນມະນຸດ. ພຣະເຈົ້າຊົງຢູ່ທີ່ນັ້ນແລະບັນດາສະມາຊິກສະພາວິນຍານຂອງພຣະເຈົ້າກໍ່ຢູ່ທີ່ນັ້ນ. ສວນເອເດນແມ່ນສໍານັກງານໃຫຍ່ສໍາລັບແຜນການຂອງພຣະເຈົ້າທີ່ຈະເຜີຍແຜ່ສວນເອເດນໄປທົ່ວແຜ່ນດິນໂລກ (ປຖກ. 1:26-28). ແຕ່ສະມາຊິກຄົນໜຶ່ງ ຂອງສະພາວິນຍານບໍ່ພໍໃຈກັບແຜນຂອງພຣະເຈົ້າ.

ນອກຈາກນີ້ຍັງມີລາຍລະອຽດບາງຢ່າງໃນປະຖົມມະການບົດທີ 3 ວ່າຄະນະຝ່າຍວິນຍານຂອງພຣະເຈົ້າອາໄສຢູ່ໃນສວນເອເດນ. ຫຼັງຈາກອາດາມແລະເອວາໄດ້ເຮັດບາບ, ພຣະເຈົ້າກ່າວໃນຂໍ້ 22:“ “ບັດນີ້ ມະນຸດໄດ້ກາຍເປັນເໝືອນຜູ້ໜຶ່ງຢູ່ໃນພວກເຮົາ ແລະທັງຮູ້ຈັກຄວາມດີ ແລະຮູ້ຈັກຄວາມຊົ່ວ” . ປະໂຫຍກນັ້ນແມ່ນຖ້ອຍຄໍາແບບດຽວກັນທີ່ພວກເຮົາໄດ້ເຫັນໃນປະຖົມມະການ 1:26 ເຊິ່ງຊີ້ໃຫ້ເຫັນເຖິງສະພາຝ່າຍວິນຍານ ("ຮູບລັກສະນະຂອງພວກເຮົາ").

ຕອນນີ້ພວກເຮົາຄວນຈະຮູ້ວ່າງູໃນເລື່ອງຂອງປະຖົມມະການບົດທີ 3 ບໍ່ແມ່ນງູແທ້ໆ. ແທ້ຈິງແລ້ວມັນບໍ່ແມ່ນສັດ. ມັນເປັນວິນຍານທີ່ມາຈາກສະພາຜູ້ທີ່ມາໃນຮູບຮ່າງຂອງງູແລະປະກົດຕົວຕໍ່ເອວາ. ໃນພຣະທໍາພຣະນິມິດ 12:9, ໂຢຮັນຜູ້ຂຽນກ່າວວ່າ“ ງູ” ນີ້ແມ່ນພະຍາມານ, ເຊິ່ງເອີ້ນວ່າຊາຕານ.

ຄຣິດສະຕຽນບາງຄົນຄິດວ່າໃນພຣະນິມິດ 12:7–12 ໝາຍຄວາມວ່າພະຍາມານແລະບັນດາວິນຍານອື່ນໆໄດ້ກໍ່ກະບົດບໍ່ດົນຫຼັງຈາກພຣະເຈົ້າໄດ້ສ້າງໂລກ:

> ຂະນະນັ້ນ ໄດ້ເກີດສົງຄາມຂຶ້ນໃນສະຫວັນ ມີຄາເອນແລະຝູງເທວະດາຝ່າຍຕົນ ໄດ້ຕໍ່ສູ້ກັບພະຍານາກ ຝ່າຍພະຍານາກແລະຝູງບໍລິວານຂອງມັນກໍໄດ້ຕໍ່ສູ້ຄືນ, ແຕ່ພະຍານາກໄດ້ປະລາໄຊ. ສະນັ້ນ ມັນກັບຝູງບໍລິວານຂອງມັນຈຶ່ງບໍ່ມີບ່ອນຢູ່ໃນສະຫວັນອີກຕໍ່ໄປ. ພະຍານາກໃຫຍ່ ຊຶ່ງເປັນງູແຕ່ດຶກດໍາບັນທີ່ເຂົາເອີ້ນວ່າ ມານຮ້າຍ ແລະມານຊາຕານ ຜູ້ຫລອກລວງມະນຸດທັງໂລກ ກໍຖືກຊັດຖິ້ມລົງເສຍ ມັນກັບບໍລິວານຂອງມັນ ກໍຖືກຊັດຖິ້ມລົງເທິງແຜ່ນດິນໂລກ.. (ພຣະນິມິດ 12: 7–9)

ແຕ່ສົງຄາມໃນສະຫວັນໄດ້ອະທິບາຍວ່າມີຄວາມກ່ຽວຂ້ອງກັບການເກີດຂອງພຣະເຢຊູເຈົ້າຜູ້ເປັນພຣະເມຊີອາ (ພນມ.12:4-5, 10):

ຫາງພະຍານາກ ໄດ້ຟາດດວງດາວໃນທ້ອງຟ້າ ໜຶ່ງສ່ວນສາມລົງໃສ່ແຜ່ນດິນໂລກ ແລະພະຍານາກໂຕນັ້ນ ຢືນຢູ່ຕໍ່ໜ້າຜູ້ທີ່ກຳລັງຈະເກີດລູກ ເພື່ອຈະກິນລູກນັ້ນເມື່ອເກີດແລ້ວ. ແມ່ຍິງນັ້ນ ໄດ້ເກີດລູກຊາຍ ຜູ້ຊຶ່ງຈະປົກຄອງປະຊາຊາດທັງປວງດ້ວຍຄ້ອນເຫລັກ ແລະລູກນັ້ນໄດ້ຖືກຊົງຍົກຂຶ້ນເມືອເຖິງພຣະເຈົ້າ ແລະເຖິງພຣະຣາຊບັນລັງຂອງພຣະອົງ.
ແລ້ວຂ້າພະເຈົ້າໄດ້ຍິນສຽງດັງມາຈາກສະຫວັນວ່າ,
"ບັດນີ້ຄວາມລອດພົ້ນ ຣິດເດດ
ແລະຣາຊອານາຈັກແຫ່ງພຣະເຈົ້າຂອງເຮົາທັງຫລາຍ ກັບທັງຣິດອຳນາດພຣະຄຣິດຂອງພຣະອົງໄດ້ມາເຖິງແລ້ວ ເພາະວ່າຜູ້ທີ່ກ່າວໂທດພວກພີ່ນ້ອງຂອງເຮົາ ຕໍ່ພຣະພັກພຣະເຈົ້າຂອງເຮົາ ທັງກາງເວັນແລະກາງຄືນນັ້ນ ກໍໄດ້ຖືກຖິ້ມລົງເສຍແລ້ວ.

ພຣະຄຳພີບໍ່ໄດ້ກ່າວວ່າບັນດາວິນຍານຈາກສະຫວັນໄດ້ກະບົດກ່ອນເລື່ອງລາວໃນສວນເອເດນ. ແຕ່ບອກວ່າສົງຄາມວິນຍານນີ້ໃນສະຫວັນນີ້ເກີດຂຶ້ນໃນຊ່ວງເວລາທີ່ພຣະເຢຊູເຈົ້າເກີດ. ແຕ່ສະຖານະການໃນສວນເອເດນສົ່ງຜົນຫຼາຍຢ່າງທີ່ປ່ຽນແປງສິ່ງຕ່າງໆໃນໂລກແລະໃນສະຫວັນດັ່ງທີ່ພວກເຮົາໄດ້ຮຽນຮູ້ຈາກເລື່ອງໃນປະຖົມມະການບົດທີ 3.

ຄວາມຜິດຂອງງູແມ່ນມັນເລືອກຢ່າງມີອິດສະຫຼະທີ່ຈະປະຕິເສດສິດອຳນາດຂອງພຣະເຈົ້າ. ພຣະເຈົ້າໄດ້ຕັດສິນໃຈໃຫ້ອາດາມແລະເອວາເຂົ້າເປັນສະມາຊິກສະພາອີກດ້ວຍ. ພວກເຂົາເຈົ້າຈະດຳເນີນແຜນການທີ່ຈະຂະຫຍາຍສວນເອເດນໄປທົ່ວໂລກ. ແຕ່ງູ / ມານບໍ່ຕ້ອງການໃຫ້ອາດາມແລະເອວາເຮັດສິ່ງນີ້. ຊາຕານວາງຕົວເອງແທນທີ່ພຣະເຈົ້າ. ມັນກ່າວໃນໃຈຂອງມັນວ່າ "ຂ້ອຍຈະຂຶ້ນໄປສະຫວັນ ແລະຕັ້ງບັນລັງຂອງຂ້ອຍໄວ້ໃນທີ່ສູງສຸດເໜືອດວງດາວຕ່າງໆ. ຂ້ອຍຈະຕ້ອງນັ່ງດັ່ງກະສັດເທິງພູທາງທິດເໜືອບ່ອນທີ່ພະທັງຫຼາຍຊຸມນຸມກັນຢູ່ນັ້ນ. (ອຊຢ. 14:13).

ຊາຕານໄດ້ເຂົ້າໃຈຜິດຫຼາຍໃນສິ່ງທີ່ມັນຄິດວ່າຈະເກີດຂຶ້ນ. ນັບຕັ້ງແຕ່ງູໄດ້ຫຼອກລວງເອວາແລະຫຼັງຈາກນັ້ນມັນນຳໄປສູ່ຄວາມບາບຂອງອາດາມ, ຊາຕານຖືກໄລ່ອອກຈາກບ້ານຂອງພຣະເຈົ້າ (ອຊກ.28: 14–16).ມັນໄດ້ຖືກເນລະເທດອອກຈາກສະຫວັນໃຫ້ມາຢູ່ໃນແຜ່ນດິນໂລກ (ອຊຢ. 14:12). ດ່ງວນີ້ແຜ່ນດິນໂລກໄດ້ກາຍເປັນສະຖານທີ່ທີ່ທຸກສິ່ງມີຊີວິດຈະຕາຍ. ແຜ່ນດິນໂລກເປັນບ່ອນທີ່ຊີວິດບໍ່ເປັນນິລັນດອນ. ແທນທີ່ຈະເປັນເຈົ້າແຫ່ງຊີວິດ ຊາຕານກໍໄດ້ກາຍເປັນເຈົ້າແຫ່ງຄວາມຕາຍ.

ນີ້ໝາຍຄວາມວ່າສັດຕູທີ່ຍິ່ງໃຫຍ່ທີ່ເອີ້ນວ່າງູ, ມານແລະຊາຕານ, ບັດນີ້ມີສິດອຳນາດເໜືອທຸກຄົນ. ເຫດການເຫຼົ່ານີ້ໃນສວນເອເດນໝາຍເຖິງການສູນເສຍຄວາມເປັນອຳມະຕະສຳລັບມະນຸດເຮົາ. ບັດນີ້ມະນຸດ

ຈຳເປັນຕ້ອງຖືກນຳກັບຄືນມາຫາພຣະເຈົ້າເພື່ອໃຫ້ເຂົາເຈົ້າມີຊີວິດນິລັນດອນແລະເພື່ອເຂົາເຈົ້າຈະສາມາດຢູ່ກັບພຣະເຈົ້າອີກໃນສວນເອເດນໃໝ່.

ຜົນຂອງສິ່ງທີ່ອາດາມແລະເອວາໄດ້ເຮັດແມ່ນຄຳສາບແຊ່ງຈາກພຣະເຈົ້າ. ຄຳສາບແຊ່ງຕໍ່ງູລວມມີຄຳພະຍາກອນ. ພຣະເຈົ້າກ່າວວ່າເຊື້ອສາຍລູກຫຼານຂອງເອວາຈະຕໍ່ສູ້ກັບເຊື້ອສາຍຂອງງູເລື້ອຍໆ:“ ແລ້ວພຣະເຈົ້າຢາເວພຣະເຈົ້າກໍໄດ້ກ່າວແກ່ງູນັ້ນວ່າ,...ກູຈະໃຫ້ມຶງກັບຍິງນັ້ນກຽດຊັງກັນ,ເຊື້ອສາຍຂອງມຶງ ແລະເຊື້ອສາຍຂອງຍິງຈະເປັນສັດຕູກັນ.” (ປຖກ. 3: 14– 15) ເຊື້ອສາຍຂອງເອວາແມ່ນໃຜ? ມະນຸດທຸກໆຄົນທີ່ມີຊີວິດຢູ່ແມ່ນມາຈາກເອວາ. ບັນດາເຊື້ອສາຍຂອງງູແມ່ນໃຜ? ນັ້ນແມ່ນແຕກຕ່າງຈາກເຊື້ອສາຍທາງຊີວະພາບທີ່ມາຈາກເອວາໜ້ອຍໜຶ່ງ. ອັກຄະສາວົກໂຢຮັນຍົກຕົວຢ່າງໃຫ້ພວກເຮົາເຫັນນັ້ນກໍຄືກັບພວກຜູ້ນຳຊາວຢິວທີ່ກຽດຊັງພຣະເຢຊູເຈົ້າ. ພຣະເຢຊູເຈົ້າບອກພວກເຂົາວ່າ“ເຈົ້າທັງຫຼາຍມາຈາກພໍ່ຂອງພວກເຈົ້າຄືມານຮ້າຍ” (ຢຮ. 8:44) ພຣະເຢຊູເຈົ້າໄດ້ເອີ້ນຢູດາຜູ້ທີ່ທໍລະຍົດພຣະອົງວ່າມານຮ້າຍ (ຢຮ.6:70). ເຊື້ອສາຍຂອງງູແມ່ນຜູ້ໃດທີ່ຕໍ່ຕ້ານແຜນຂອງພຣະເຈົ້າ, ຄືກັນກັບງູ(ມານຮ້າຍ)ໄດ້ເຮັດ.

# ເຊື້ອສາຍທີ່ບໍ່ດີ

ຫຼັງຈາກຄວາມລົ້ມເຫຼວຂອງອາດາມແລະເອວາໃນສວນເອເດນ, ໃນເວລາບໍ່ດົນບັນຫາກໍ່ເກີດຂຶ້ນຕື່ມ. ລູກຄົນໜຶ່ງຂອງອາດາມແລະເອວາກາຍເປັນຄົນທີ່ຄາດຕະກຳ. ກາອິນໄດ້ຂ້ານ້ອງຊາຍຂອງລາວຊື່ອາເບນ. ການກະທຳຂອງກາອິນນີ້ສະແດງໃຫ້ເຫັນວ່າລາວເປັນ“ ຄົນຊົ່ວຮ້າຍ” (1ຢຮ.3:12). ໃນຂະນະທີ່ປະຊາກອນມະນຸດເພີ່ມຂຶ້ນ, ຄວາມຊົ່ວຮ້າຍກໍ່ໄດ້ເກີດຂຶ້ນຄືກັນ (ປຖກ. 6: 5).

ຕໍ່ໄປ, ມີການກະບົດອີກໂດຍວິນຍານຈຳນວນໜຶ່ງຢູ່ໃນສະຫວັນ. ບາບທີ່ຍິ່ງໃຫຍ່ນີ້ບໍ່ໄດ້ຖືກສິດສອນໃນການເທດສະໜາໃນເຊົ້າວັນອາທິດຫຼາຍຄັ້ງ, ແຕ່ມັນມີຜົນກະທົບຫຼາຍຕໍ່ການຂະຫຍາຍຄວາມຊົ່ວຮ້າຍຢູ່ເທິງແຜ່ນດິນໂລກ. ຄັ້ງນີ້ມີພວກກະບົດຫຼາຍກວ່າໜຶ່ງຄົນ. ຄວາມຊົ່ວຮ້າຍທີ່ແຜ່ລາມຜ່ານມວນມະນຸດທີ່ກ່າວເຖິງໃນປະຖົມມະການ 6:5 ມີແຫຼ່ງທີ່ມາທີ່ອະທິບາຍໄວ້ໃນເລື່ອງໃນປະຖົມມະການ 6: 1-4. ເລື່ອງນີ້ບອກກ່ຽວກັບພວກລູກຊາຍຂອງພຣະເຈົ້າອອກຈາກສະຖານທີ່ທີ່ເໝາະສົມຂອງພວກເຂົາໃນສະຫວັນແລະມາສູ່ໂລກແລະການເປັນພໍ່ທີ່ຮູ້ຈັກກັນໃນນາມຊື່ຄົນເນຟິມ.

ພຣະຄຳພີໃນພຣະທຳປະຖົມມະການບໍ່ໄດ້ໃຫ້ລາຍລະອຽດຫຼາຍຢ່າງ, ແຕ່ລາຍລະອຽດຂອງເລື່ອງແມ່ນຖືກກ່າວເຖິງຢູ່ບ່ອນອື່ນໆໃນພຣະຄຳພີ ນອກຈາກນີ້, ຍັງມີໜັງສືຂອງຊາວຢິວຫຼາຍເລື່ອງກ່ຽວກັບເຫດການນີ້ທີ່ໄດ້ຖືກຂຽນຂຶ້ນ. ໜັງສືເຫຼົ່ານີ້ບໍ່ໄດ້ຖືກລວມເຂົ້າໃນພຣະຄຳພີ, ແຕ່ຜູ້ຂຽນພຣະຄຳພີໃໝ່ໄດ້ຮູ້ເລື່ອງເຫຼົ່ານີ້ແລະໄດ້ກ່າວເຖິງໃນບົດຂຽນຂອງພວກເພິ່ນທີ່ມີຢູ່ໃນພຣະຄຳພີໃໝ່.

ຍົກຕົວຢ່າງ, ເປໂຕແລະຢູດາຂຽນກ່ຽວກັບບັນດາເທວະດາທີ່ເຮັດຜິດກ່ອນນ້ຳຖ້ວມໂລກ (2ປຕ.2:4–6; ເບິ່ງ ຢດ. 5–6) ພວກເພິ່ນທັງສອງເວົ້າວ່າພວກລູກຊາຍຂອງພຣະເຈົ້າຜູ້ທີ່ກະທຳຄວາມຜິດນີ້ຖືກພຣະເຈົ້າກັກຂັງໄວ້ຢູ່ໃຕ້ແຜ່ນດິນໂລກ. ພວກເຂົາຖືກຄຸມຂັງຢູ່ທີ່ນັ້ນຈົນເຖິງວັນສຸດທ້າຍ. ພວກເຂົາຈະຖືກລວມເຂົ້າໃນການພິພາກສາຄັ້ງສຸດທ້າຍຂອງພຣະເຈົ້າ.ເວລານີ້ແມ່ນສິ່ງທີ່ພຣະຄຳພີເອີ້ນວ່າ"ວັນຂອງພຣະຜູ້ເປັນເຈົ້າ."

ແຫຼ່ງຂໍ້ມູນຂອງເປໂຕແລະຢູດາແມ່ນເປັນທີ່ຮູ້ຈັກກັນດີຂອງນັກຄົ້ນຄວ້າພຣະຄຳພີ. ແຫຼ່ງຂໍ້ມູນໜຶ່ງແມ່ນປຶ້ມທີ່ເອີ້ນວ່າ 1 ເອນົກ. ຊຶ່ງເປັນທີ່ນິຍົມຂອງຊາວຢິວໃນຊ່ວງທີ່ພຣະເຢຊູເຈົ້າມີຊີວິດຢູ່. ຄຣິສຕຽນກຸ່ມທຳອິດກໍ່ອ່ານຄືກັນ, ແຕ່ບໍ່ໄດ້ຖືກຖືວ່າເປັນສິ່ງສັກສິດແລະໄດ້ຮັບການດົນໃຈ. ແຕ່ເປໂຕແລະຢູດາຄິດວ່າບາງເນື້ອໃນແມ່ນຖືກຕ້ອງແລະມີຄວາມສຳຄັນພໍທີ່ຈະເອົາລົງໃນຈົດໝາຍທີ່ພວກເພິ່ນຂຽນ.

ບົດຂຽນເຫຼົ່ານີ້ຄາດຄະເນວ່າພວກລູກຊາຍຂອງພຣະເຈົ້າຢາກຊ່ວຍເຫຼືອມະນຸດໂດຍການໃຫ້ຄວາມຮູ້ອັນສູງສົ່ງແກ່ພວກເຂົາ, ຫຼືວ່າພວກເຂົາຢາກຮຽນແບບພຣະເຈົ້າໂດຍການສ້າງ"ຮູບລັກສະນະ" ຂອງພວກເຂົາເອງ. ບົດຂຽນຍັງປະກອບມີຄຳອະທິບາຍວ່າຜີປີສາດມາຈາກໃສ. ຜີປີສາດແມ່ນວິນຍານທີ່ມາຈາກເນຟີມທີ່ຕາຍແລ້ວເຊິ່ງເປັນລູກຫຼານຂອງພວກວິນຍານກະບົດແລະຜູ້ຍິງທີ່ເປັນມະນຸດ. ພວກເຂົາໄດ້ຖືກຂ້າຕາຍກ່ອນແລະໃນໄລຍະນ້ຳຖ້ວມໂລກ. ວິນຍານຂອງຄົນເນຟີມແມ່ນວິນຍານຜີປີສາດທີ່ພະເນຈອນໄປທົ່ວໂລກເພື່ອລົບກວນມະນຸດແລະສະແຫວງຫາທີ່ຈະມີຮ່າງກາຍອີກ.

ໃນພຣະຄຣິສຕະທຳຄຳພີ, ເຊື້ອສາຍຂອງຄົນນີຟີມໃນ (ປຖກ. 6: 1-4) ຖືກເອີ້ນວ່າຊາວອານາກິມແລະ ເຣຟາອີມ (ຈບຊ.13:32–33; ພບຍ. 2:10–11) ເຣຟາອີມບາງຄົນແມ່ນຢູ່ໃນແດນມໍຣະນາ (ອຊຢ.14:9-11). ນີ້ແມ່ນບ່ອນທີ່ງູໄດ້ຖືກໂຍນລົງມາຈາກສະຫວັນ. ຜູ້ຂຽນພຣະສັນຍາໃໝ່ ຕໍ່ມາຈະເອີ້ນສະຖານທີ່ນັ້ນວ່ານາລົກ.

ແນວຄວາມຄິດເຫຼົ່ານີ້ສະແດງໃຫ້ພວກເຮົາເຫັນວ່ານັກຂຽນຊາວຢິວໃນສະໄໝບູຮານໄດ້ເຂົ້າໃຈເຖິງຜົນໄດ້ຮັບທີ່ໜ້າຢ້ານກົວຂອງປະຖົມມະການ 6:1-4. ບັນດາລູກຊາຍຂອງພຣະເຈົ້າທີ່ກະບົດພະຍາຍາມສ້າງສວນເອເດນຂອງຕົນເອງ ພວກລູກຊາຍທີ່ກະບົດຂອງພຣະເຈົ້າພະຍາຍາມເຮັດສວນເອເດນຂອງພວກເຂົາເອງ, ພວກເຂົາພະຍາຍາມສ້າງສະຖານທີ່ທີ່ມີວິນຍານແລະຄົນຢູ່ຮ່ວມກັນ, ແຕ່ໃນທາງທີ່ແຕກຕ່າງຈາກແຜນຂອງພຣະເຈົ້າ. ພວກວິນຍານທີ່ກະບົດເຊື່ອວ່າພວກເຂົາຮູ້ດີກວ່າພຣະເຈົ້າວ່າແມ່ນຫຍັງຄວນຈະເກີດຂຶ້ນໃນໂລກນີ້. ພວກເຂົາກຳລັງເດີນຕາມເສັ້ນທາງດຽວກັນກັບງູໄດ້ເຮັດ. ພວກມັນໄດ້ປ່ຽນແປງແຜນການຂອງພຣະເຈົ້າສຳລັບແຜ່ນດິນໂລກແລະມັນກໍ່ຈະເຮັດໃຫ້ສະຖານະການທີ່ບໍ່ດີຮ້າຍແຮງກວ່າເກົ່າອີກ.

ບໍ່ພຽງແຕ່ເຫດການທີ່ໜ້າຢ້ານກົວໃນປະຖົມມະການ 6:1–4 ເທົ່ານັ້ນທີ່ຕັ້ງໃຈຕໍ່ຕ້ານພຣະເຈົ້າ, ຄືກັນກັບງູ, ມັນເປັນສັນຍານວ່າສິ່ງທີ່ຮ້າຍແຮງກວ່ານັ້ນກຳລັງຈະເກີດຂຶ້ນ. ໃນຊ່ວງເວລາຂອງໂມເຊແລະໂຢຊວຍ, ໃນເວລາທີ່ພວກເຂົາກຳລັງຕໍ່ສູ້ເພື່ອຍຶດເອົາດິນແດນແຫ່ງພຣະສັນຍາ, ພວກເຂົາຕ້ອງຕໍ່ສູ້ກັບຊົນເຜົ່າ

ຕ່າງໆທີ່ເປັນຄົນຍັກ (ພບຍ.2– 3). ຄົນຍັກເຫຼົ່ານີ້ຖືກເອີ້ນຕາມຊື່ຕ່າງໆ. ໃນຈົດບັນຊີ 13: 32– 33 ພວກເຂົາຖືກເອີ້ນວ່າຊາວອານາກິມ. ພວກເຂົາຖືກເອີ້ນເຈາະຈົງວ່າເປັນລູກຫຼານຂອງຄົນເນຟີມ. ຈົ່ງຈື່ໄວ້ວ່າຄົນເນຟີມແມ່ນເຊື້ອສາຍຂອງພວກລູກຊາຍຂອງພຣະເຈົ້າໃນເລື່ອງລາວຈາກປະຖົມມະການ 6:1– 4. ດາວິດໄດ້ຂ້າຍັກໃຫຍ່ຄົນໜຶ່ງຊື່ວ່າໂກລີອາດ (1ຊມອ.17). ຕໍ່ມາທະຫານຂອງດາວິດບາງຄົນໄດ້ຂ້າພວກອ້າຍນ້ອງຂອງໂກລີອາດ. ໃນທີ່ສຸດນີ້ແມ່ນຈຸດຈົບຂອງພວກຄົນຍັກ (2 ຊມອ. 21:15-22).

# ເປັນຫຍັງເລື່ອງນີ້ຈຶ່ງສຳຄັນ

ຄຳສາບແຊ່ງຂອງພຣະເຈົ້າໃນປະຖົມມະການບົດທີ່ 3 ກ່ຽວກັບງູແລະຈາກນັ້ນການກະບົດຂອງເທວະດາໃນປະຖົມມະການ 6: 1-4 ແມ່ນສິ່ງທີ່ນັກວິຊາການພຣະຄຳພີເອີ້ນວ່າການສູ້ຮົບຝ່າຍວິນຍານ. ນີ້ແມ່ນການຕໍ່ສູ້ລະຫວ່າງຄວາມດີແລະຄວາມຊົ່ວ. ມັນເປັນສົງຄາມຂອງພວກທີ່ຊົ່ວຮ້າຍທີ່ຕໍ່ຕ້ານພຣະເຈົ້າແລະປະຊາຊົນຂອງພຣະອົງ. ມັນແມ່ນສົງຄາມທີ່ເກີດຂຶ້ນໃນສະໜາມຮົບໃນສອງອານາຈັກຄື: ໂລກແລະໃນໂລກວິນຍານທີ່ເບິ່ງບໍ່ເຫັນ.

ເລື່ອງເຫຼົ່ານີ້ແມ່ນເລື່ອງແປກຫຼາຍ, ແຕ່ສອນບົດຮຽນທີ່ສຳຄັນໃຫ້ແກ່ເຮົາຄື: ພຣະເຈົ້າມີສັດຕູທາງວິນຍານກ່ຽວກັບແຜນການຂອງພຣະອົງສຳລັບມະນຸດ. ພຣະເຈົ້າຍັງມີສັດຕູເຫຼົ່ານັ້ນຢູ່ໃນປະຈຸບັນນີ້. ການຕໍ່ຕ້ານແຜນການຂອງພຣະເຈົ້າສຳລັບແຜ່ນດິນໂລກແລະມະນຸດຍັງດຳເນີນຢູ່ແລະຍັງຮຸນແຮງ, ທັງໃນໂລກວິນຍານແລະພາຍໃນມະນຸດ. ແຕ່ພຣະເຈົ້າຊົງມີແຜນສຳລັບວິທີທີ່ສະຫວັນແລະແຜ່ນດິນໂລກຈະກັບມາໂຮມເຂົ້າກັນອີກ. ພວກສັດຕູຈະຖືກລົງໂທດ. ມະນຸດມີຄຸນຄ່າຫຼາຍຕໍ່ພຣະເຈົ້າ. ແຜນການດັ້ງເດີມຂອງພຣະເຈົ້າ ສຳລັບຄອບຄົວມະນຸດຂອງພຣະອົງຈະບໍ່ຖືກປ່ຽນແປງຫຼືຢຸດຢັ້ງ.

ເລື່ອງລາວໃນພຣະຄຳພີເຫຼົ່ານີ້ສອນບົດຮຽນໃນທາງບວກໃຫ້ພວກເຮົາອີກດ້ວຍ. ສົງຄາມຕໍ່ຕ້ານພຣະເຈົ້າອັນຍາວນານສາມາດຕິດຕາມຍ້ອນກັບໄປໄດ້ເຖິງຊ່ວງເວລາທີ່ພຣະເຈົ້າຕັດສິນໃຈສ້າງບັນດາວິນຍານແລະມະນຸດທີ່ມີອິດສະຫຼະໃນການຕັດສິນໃຈເພື່ອເປັນພຣະລັກສະນະຂອງພຣະອົງ. ສິ່ງນີ້ສະແດງໃຫ້ເຮົາເຫັນວ່າພຣະເຈົ້າບໍ່ແມ່ນຕົ້ນເຫດຂອງຄວາມຊົ່ວ.

ບໍ່ມີຮ່ອງຮອຍຫຼັກຖານໃດໆໃນພຣະຄຳພີທີ່ວ່າພຣະເຈົ້າໄດ້ວາງແຜນ ຫຼືຊ່ວຍໃຫ້ບັນດາຜູ້ເປັນພຣະລັກສະນະຂອງພຣະອົງບໍ່ເຊື່ອຟັງ. ພຣະເຈົ້າບໍ່ໄດ້ກຳນົດໄວ້ລ່ວງໜ້າວ່າພວກເຂົາຈະບໍ່ເຊື່ອຟັງ. ຄວາມຈິງທີ່ວ່າພຣະເຈົ້າຮູ້ອະນາຄົດວ່າສິ່ງນີ້ຈະເກີດຂຶ້ນ, ແຕ່ມັນບໍ່ໄດ້ໝາຍຄວາມວ່າມີການກຳນົດໄວ້ລ່ວງໜ້າ. ພວກເຮົາຮູ້ຢ່າງຈະແຈ້ງຈາກເລື່ອງໃນ 1 ຊາມູເອນ 23:1–14. ເລື່ອງນີ້ບອກພວກເຮົາກ່ຽວກັບຕອນທີ່ດາວິດຊ່ວຍກູ້ເອົາເມືອງເກອີລາຈາກພວກຟີລິດສະຕິນ. ຫຼັງຈາກການສູ້ຮົບ, ກະສັດໂຊນຮູ້ວ່າດາວິດຢູ່ໃນເມືອງ. ໂຊນໄດ້ພະຍາຍາມຂ້າດາວິດເປັນເວລາດົນນານເພາະເພິ່ນຄິດວ່າດາວິດຈະເຂົ້າມາຢຶດຄອງອານາຈັກຂອງຕົນ.

ໂຊນໄດ້ສົ່ງກອງທັບໄປທີ່ເມືອງເກອີລາໂດຍຫວັງວ່າຈະດັກຈັບດາວິດຢູ່ໃນເມືອງ. ເມື່ອດາວິດໄດ້ຍິນກ່ຽວກັບແຜນການຂອງໂຊນ, ລາວໄດ້ຖາມພຣະເຈົ້າວ່າ:

> "ຊາວເມືອງເກອີລາຈະມອບຂ້ານ້ອຍໃຫ້ກະສັດໂຊນຫລືບໍ່? ເພິ່ນຈະມາແທ້ຕາມທີ່ຂ້ານ້ອຍໄດ້ຍິນນີ້ບໍ? ຂ້າແດ່ພຣະເຈົ້າຢາເວ ພຣະເຈົ້າຂອງຊາດອິດສະຣາເອນ ໂຜດຕອບຂ້ານ້ອຍດ້ວຍເຖີດ." ພຣະເຈົ້າຢາເວຕອບວ່າ, "ໂຊນຈະມາແທ້...ພວກເຂົາຈະທັກຫຼັງເຈົ້າ" (1 ຊມອ.23: 11–12)

ຈາກນັ້ນດາວິດໄດ້ເຮັດໃນສິ່ງທີ່ພວກເຮົາຈະເຮັດ. ລາວອອກຈາກເມືອງໃຫ້ໄວເທົ່າທີ່ຈະໄວໄດ້. ແລະນັ້ນບອກພວກເຮົາວ່າເປັນຫຍັງການຮູ້ລ່ວງໜ້າຂອງພຣະເຈົ້າກ່ຽວກັບເຫດການຕ່າງໆບໍ່ໄດ້ໝາຍຄວາມວ່າເຫດການເຫຼົ່ານັ້ນຖືກກຳນົດໄວ້ລ່ວງໜ້າ. 1 ຊາມູເອນ 23 ສະແດງໃຫ້ເຫັນວ່າພຣະເຈົ້າໄດ້ຮູ້ສອງເຫດການແຕ່ວ່າມັນບໍ່ເຄີຍເກີດຂຶ້ນແທ້ໆ. ວ່າພຣະເຈົ້າຮູ້ລ່ວງໜ້າວ່າຈະມີວິນຍານກະບົດແລະມີຄວາມລົ້ມເຫຼວຂອງມະນຸດ, ແຕ່ບໍ່ໄດ້ໝາຍຄວາມວ່າພຣະອົງໄດ້ເຮັດໃຫ້ສິ່ງເຫຼົ່ານັ້ນເກີດຂຶ້ນ. ການຮູ້ລ່ວງໜ້າບໍ່ຈຳເປັນຕ້ອງມີການກຳນົດໄວ້ລ່ວງໜ້າ.

ພວກເຮົາຈຳເປັນຕ້ອງໄດ້ເບິ່ງເຫດການທີ່ອາດາມແລະເອວາເຮັດບາບດ້ວຍຄວາມເຂົ້າໃຈນີ້. ພຣະເຈົ້າຮູ້ວ່າອາດາມແລະເອວາຈະລົ້ມເຫຼວ. ພຣະອົງບໍ່ແປກໃຈເລີຍ. ພຣະອົງຮູ້ທຸກຢ່າງ. ພຣະເຈົ້າສາມາດເບິ່ງເຫັນຫົນທາງເຂົ້າມາຂອງຄວາມຊົ່ວຮ້າຍແລະການກະບົດເຂົ້າມາໃນໂລກຂອງພຣະອົງ, ຈາກມະນຸດແລະຈາກວິນຍານກະບົດທີ່ເອີ້ນວ່າຊາຕານ. ແຕ່ນີ້ບໍ່ໄດ້ໝາຍຄວາມວ່າພຣະເຈົ້າເຮັດໃຫ້ມັນເກີດຂຶ້ນ.

ພວກເຮົາຈຳເປັນຕ້ອງເຂົ້າໃຈຄວາມຊົ່ວຮ້າຍທີ່ພວກເຮົາປະສົບໃນຊີວິດຂອງພວກເຮົາໃນແບບດຽວກັນ. ພຣະເຈົ້າເບິ່ງເຫັນພວກກະບົດແລະການກະທຳຂອງພວກເຂົາ, ແຕ່ພຣະອົງພ້ອມທີ່ຈະມີແຜນການແກ້ໄຂ. ພຣະອົງຍັງຮູ້ອີກວ່າພວກເຮົາຈະເກີດມາແລະກາຍເປັນຄົນບາບແລະລົ້ມເຫຼວຫຼາຍຄັ້ງ. ແຕ່ພຣະເຈົ້າບໍ່ໄດ້ເປັນຜູ້ກໍ່ໃຫ້ເກີດຄວາມລົ້ມເຫຼວເຫຼົ່ານັ້ນ. ເມື່ອພວກເຮົາເຮັດຜິດ, ພວກເຮົາຕ້ອງຮັບຜິດຊອບຕໍ່ການກະທຳຂອງພວກເຮົາ. ພວກເຮົາເຮັດບາບເພາະວ່າພວກເຮົາເລືອກທີ່ຈະເຮັດບາບ. ພວກເຮົາບໍ່ສາມາດເວົ້າວ່າພຣະເຈົ້າເປັນຕົ້ນເຫດຂອງມັນ. ພວກເຮົາບໍ່ສາມາດເວົ້າວ່າພວກເຮົາບໍ່ມີທາງເລືອກໃນຕອນທີ່ພວກເຮົາໄດ້ເຮັດບາບ.

ແຕ່ພຣະເຈົ້າຮັກພວກເຮົາ. " ໃນຂະນະທີ່ພວກເຮົາຍັງເປັນຄົນບາບຢູ່ນັ້ນ, ພຣະຄຣິດໄດ້ຕາຍແທນພວກເຮົາ" (ຣມ 5: 6-8). ພຣະອົງຮັກພວກເຮົາເຖິງແມ່ນຮູ້ວ່າພວກເຮົາຈະເຮັດຫຍັງ. ພຣະອົງບໍ່ພຽງແຕ່ໃຫ້ສິດເສລີພາບໃນການເຮັດບາບເທົ່ານັ້ນ, ພຣະອົງຍັງໃຫ້ພວກເຮົາມີອິດສະຫຼະໃນການເຊື່ອຖືຂ່າວປະເສີດແລະເລືອກທີ່ຈະດຳລົງຊີວິດຢູ່ເພື່ອພຣະເຢຊູເຈົ້າ.

ພຣະເຈົ້າຍັງຮູ້ອີກວ່າສິ່ງທີ່ບໍ່ດີເກີດຂຶ້ນກັບຄົນເຮົາແມ່ນແຕ່ກັບຄຣິດສະຕຽນ. ການທີ່ມີຄວາມຊົ່ວຮ້າຍຢູ່ໃນໂລກກໍຍ້ອນວ່າມະນຸດແລະບັນດາສິ່ງມີຊີວິດວິນຍານມີອິດສະຫຼະໃນການເຮັດຄວາມຊົ່ວໄດ້. ພຣະເຈົ້າຂອງພວກເຮົາບໍ່ແມ່ນພຣະເຈົ້າຊົ່ວຜູ້ທີ່ກໍ່ໃຫ້ເກີດເຫດການທີ່ເປັນຕາຢ້ານ. ພຣະອົງບໍ່ຈຳເປັນຕ້ອງມີອາຊະຍາກຳແລະບາບທີ່ໜ້າຢ້ານກົວເກີດຂຶ້ນເພື່ອໃຫ້ແຜນການຂອງພຣະອົງດຳເນີນໄປໄດ້ດີ. ພຣະເຈົ້າບໍ່ຕ້ອງການຄວາມຊົ່ວ, ແຜນການຂອງພຣະອົງຈະປະສົບຜົນສຳເລັດເຖິງວ່າຈະມີຄວາມຊົ່ວຮ້າຍ. ພຣະອົງຈະເອົາຊະນະຄວາມຊົ່ວຮ້າຍແລະໃນທີ່ສຸດຈະຕັດສິນແລະທຳລາຍມັນ.

ພວກເຮົາອາດຖາມວ່າເປັນຫຍັງພຣະເຈົ້າບໍ່ກຳຈັດຄວາມຊົ່ວຮ້າຍໃນເວລານີ້. ມີເຫດຜົນຄື: ສຳລັບພຣະເຈົ້າທີ່ຈະກຳຈັດຄວາມຊົ່ວຮ້າຍ, ພຣະອົງຈະຕ້ອງກຳຈັດບັນດາຜູ້ທີ່ເປັນພຣະລັກສະນະຂອງພຣະອົງຄືມະນຸດແລະວິນຍານເຊິ່ງເປັນຜູ້ທີ່ບໍ່ສົມບູນແບບຄືກັບພຣະອົງ. ນັ້ນຈະເປັນການແກ້ໄຂບັນຫາຂອງຄວາມຊົ່ວຮ້າຍ, ແຕ່ມັນຈະໝາຍຄວາມວ່າແຜນດັ້ງເດີມຂອງພຣະເຈົ້າສຳລັບວິນຍານແລະມະນຸດໃຫ້ມາຢູ່ໃນຄອບຄົວຂອງພຣະອົງແລະປົກຄອງຮ່ວມກັບພຣະອົງນັ້ນແມ່ນຄວາມຜິດພາດອັນໃຫຍ່ຫຼວງ. ພຣະເຈົ້າບໍ່ໄດ້ເຮັດຜິດພາດ.

ພວກເຮົາອາດຈະຄິດຄືກັນວ່າພຣະເຈົ້າບໍ່ເຄີຍໃຫ້ເສລີພາບແກ່ມະນຸດ. ແຕ່ວ່າມັນກໍ່ຈະບໍ່ດີຄືກັນ. ໂດຍການໃຫ້ເສລີພາບແກ່ພວກເຮົາ, ພຣະເຈົ້າຊົງເລືອກທີ່ຈະບໍ່ເຮັດໃຫ້ພວກເຮົາເປັນທາດຫຼືຫຸ່ນຍົນທີ່ບໍ່ມີຈິດໃຈ. ນັ້ນແມ່ນທາງເລືອກໃນການມີອິດສະຫຼະໃນການຕັດສິນໃຈ. ເນື່ອງຈາກວ່າເສລີພາບແມ່ນຄຸນລັກສະນະທີ່ພວກເຮົາແບ່ງປັນກັບພຣະເຈົ້າ, ພວກເຮົາບໍ່ສາມາດເປັນພຣະລັກສະນະຂອງພຣະເຈົ້າຫາກບໍ່ມີເສລີພາບ. ພຣະເຈົ້າບໍ່ແມ່ນຫຸ່ນຍົນ. ພຣະອົງໄດ້ເຮັດໃຫ້ພວກເຮົາຄືກັບພຣະອົງເອງ. ນັ້ນບໍ່ແມ່ນຄວາມຜິດພາດເຊັ່ນກັນ. ພຣະເຈົ້າຊົງຮັກຄວາມຄິດຂອງຄົນໃນຄອບຄົວຂອງພຣະອົງຫຼາຍເກີນກວ່າທີ່ຈະຕັດສິນໃຈອີກເທື່ອໜຶ່ງ. ພຣະເຈົ້າຊົງມີແຜນການກ່ອນທີ່ພຣະອົງໄດ້ສ້າງແຜ່ນດິນໂລກເພື່ອໄຖ່ມະນຸດ, ທຳລາຍຄວາມຊົ່ວຮ້າຍ, ຟື້ນຟູສວນເອເດນຂຶ້ນໃໝ່, ແລະເຊັດນ້ຳຕາທຸກໆຢົດ (ພນມ. 7:17; 21:4).

ການທົບທວນຄືນຂອງພວກເຮົາກ່ຽວກັບສົງຄາມອັນຍາວນານຕໍ່ພຣະເຈົ້າກຳລັງດຳເນີນຢູ່. ພຣະເຈົ້າມີຍຸດທະສາດການສູ້ຮົບ. ແຕ່ສະຖານະການແມ່ນກຳລັງຈະຮ້າຍແຮງກວ່າເກົ່າກ່ອນທີ່ພຣະເຈົ້າເລີ່ມເຄື່ອນໄຫວຄັ້ງທຳອິດ.

# ບົດທີ 5

# ພູມສາດສິ່ງທີ່ເໜືອທຳມະຊາດ

**ກ**ານກະບົດທາງວິນຍານທີ່ຂ້າພະເຈົ້າຂຽນໃນບົດກ່ອນໜ້ານີ້ມີບາງສິ່ງບາງຢ່າງທີ່ຄ້າຍຄືກັນ. ທັງສອງແມ່ນການກະບົດທີ່ເໜືອທຳມະຊາດໄດ້ສຸມໃສ່ການຍຶດຄອງແຜນການຂອງພຣະເຈົ້າສຳລັບມະນຸດແລະແຜນຂອງພຣະເຈົ້າໃນການຂະຫຍາຍອານາຈັກຂອງພຣະອົງ. ໃນບົດນີ້ພວກເຮົາຈະພິຈາລະນາເບິ່ງການກະບົດອີກຢ່າງໜຶ່ງ, ເຊິ່ງເລີ່ມຕົ້ນຈາກມະນຸດທີ່ບໍ່ແມ່ນຈາກພວກວິນຍານ.

ການກະບົດຕໍ່ໄປນີ້ໄດ້ສ້າງບັນຫາທີ່ຍັງມີຜົນກະທົບຕໍ່ພວກເຮົາທຸກມື້ນີ້. ການກະບົດໄດ້ເລີ່ມຕົ້ນຈາກມະນຸດ, ແຕ່ມັນລວມທັງວິນຍານນຳ. ການສູ້ຮົບກັນລະຫວ່າງພວກກະບົດແລະພຣະເຈົ້າຄັ້ງນີ້ໄດ້ສ້າງຄວາມເສຍຫາຍໃຫ້ແກ່ແຜນການຂອງພຣະເຈົ້າສຳລັບມະນຸດແລະແຜ່ນດິນໂລກ. ຈົນກວ່າພຣະເຢຊູເຈົ້າຈະກັບມາສ້ອມແປງຄວາມເສຍຫາຍນີ້ໄດ້.

## ວິຫານຫໍບາເບນ

ເລື່ອງລາວຂອງວິຫານຫໍຄອຍບາເບນ (ປຖກ.11:1–9) ແມ່ນໜຶ່ງໃນບັນດາເລື່ອງລາວທີ່ຮູ້ຈັກກັນດີທີ່ສຸດໃນພຣະຄຳພີແລະຍັງມີຄວາມເຂົ້າໃຈໜ້ອຍທີ່ສຸດ. ເດັກນ້ອຍຮຽນຮູ້ເລື່ອງນີ້ໃນຫ້ອງລະວິວັນອາທິດເປັນຊ່ວງເວລາທີ່ພຣະເຈົ້າເຮັດໃຫ້ພາສາຂອງມະນຸດສັບສົນ.

ຫຼັງຈາກນ້ຳຖ້ວມໂລກ, ພຣະເຈົ້າໄດ້ກ່າວຄຳສັ່ງ ທີ່ພຣະອົງມອບໃຫ້ແກ່ອາດາມແລະເອວາແຜ່ຂະຫຍາຍເຊື້ອສາຍໄປທົ່ວແຜ່ນດິນໂລກອີກ. ພຣະເຈົ້າຍັງຕ້ອງການໃຫ້ມະນຸດເປັນຕົວແທນຂອງພຣະອົງແລະເຜີຍແຜ່ອານາຈັກຂອງພຣະອົງອອກໄປ. ແຕ່, ອີກເທື່ອໜຶ່ງ, ມັນບໍ່ໄດ້ເກີດຂຶ້ນ. ມະນຸດບໍ່ຍອມກະແຈກກະຈາຍອອກໄປ. ດ້ວຍການກະບົດໃນໃຈຂອງພວກເຂົາ, ພວກເຂົາຄິດວ່າແນວຄິດຂອງພວກເຂົາທີ່ຈະຢູ່ນຳກັນດີກວ່າພວກເຂົາຈຶ່ງຕັດສິນໃຈສ້າງວິຫານເພື່ອຫລີກລ້ຽງການກະແຈກກະຈາຍ (ປຖກ.11:4). ແນວຄິດຂອງພວກເຂົາເບິ່ງຄືວ່າແປກໆ. ແມ່ນແລ້ວ, ວິຫານທີ່ໜ້າອັດສະຈັນຈະເຮັດໃຫ້ພວກເຂົາມີຊື່ສຽງ (ປຖກ. 11: 4), ແຕ່ມັນຈະປ້ອງກັນບໍ່ໃຫ້ພວກເຂົາກະແຈກກະຈາຍຢູ່ທົ່ວໂລກໄດ້ແນວໃດ?

ຄຳຕອບແມ່ນກ່ຽວຂ້ອງກັບວິຫານນັ້ນ. ນັກວິຊາການພຣະຄຳພີແລະນັກຄົ້ນຄວ້າບູຮານຄະດີຮູ້ກ່ຽວກັບວັດທະນະທຳທີ່ຄົນບູຮານເຫຼົ່ານັ້ນອາໄສຢູ່. ແຜ່ນດິນດັ່ງກ່າວຖືກເອີ້ນວ່າບາບີໂລນແລະປະຊາຊົນຢູ່ທີ່ນັ້ນໄດ້ສ້າງວິຫານທີ່ເອີ້ນວ່າຊິກກູແຣດສ໌ ziggurats ຈຸດປະສົງຂອງຊິກກູແຣດສ໌ແມ່ນເພື່ອສະຖານທີ່ທີ່ຄົນ

ສາມາດພົບກັບບັນດາວິນຍານ(ເທບພະເຈົ້າ)ໄດ້. ມະນຸດຕ້ອງການຢາກນຳວິນຍານທີ່ເບິ່ງບໍ່ເຫັນລົງມາສູ່ໂລກເຂົ້າໄປໃນວິຫານຂອງພວກເຂົາ. ມະນຸດບໍ່ຢາກເຮັດໃຫ້ໂລກຄືກັບເອເດນ. ພວກເຂົາບໍ່ຕ້ອງການເຜີຍແຜ່ຄວາມຮູ້ແລະອານາຈັກຂອງພຣະເຈົ້າ.

ສິ່ງນີ້ຂັດກັບແຜນຂອງພຣະເຈົ້າ. ພຣະເຈົ້າບໍ່ພໍໃຈ. ພຣະເຈົ້າໄດ້ບອກກັບສະມາຊິກສະພາວິນຍານຂອງສະພາພຣະອົງວ່າ," ພວກເຮົາຕ້ອງລົງໄປເຮັດໃຫ້ພາສາຂອງເຂົາສັບສົນແຕກຕ່າງກັນ ແລະພວກເຂົາຈະເວົ້າບໍ່ເຂົ້າໃຈກັນ." (ປຖກ.11:7). ພຣະເຈົ້າໄດ້ເຮັດດັ່ງນັ້ນ, ແລະໃນທັນໃດນັ້ນມະນຸດກໍ່ບໍ່ສາມາດເວົ້າຈາສື່ສານເຂົ້າໃຈກັນອີກຕໍ່ໄປ, ພວກເຂົາຈຶ່ງແຍກແລະກະແຈກກະຈາຍຢູ່ທົ່ວແຜ່ນດິນໂລກ. ເຫດການນີ້ອະທິບາຍວ່າປະເທດຕ່າງໆທີ່ມີລາຍຊື່ໃນປະຖົມມະການ 10 ເກີດຂຶ້ນໄດ້ແນວໃດ.

ນັ້ນແມ່ນເລື່ອງທີ່ຄຣິສຕຽນສ່ວນໃຫຍ່ຮູ້. ຕອນນີ້ໃຫ້ຂ້າພະເຈົ້າອະທິບາຍສ່ວນທີ່ເຂົາເຈົ້າບໍ່ຮູ້

ເທບພະເຈົ້າແລະບັນດາປະຊາຊາດຂອງພວກເຂົາ

ໃນປະຖົມມະການບົດທີ 11 ບໍ່ແມ່ນຂໍ້ຄວາມດຽວໃນພຣະຄຳພີທີ່ອະທິບາຍເຖິງເຫດການທີ່ໄດ້ເກີດຂຶ້ນທີ່ວິຫານບາເບນ. ໃນພຣະບັນຍັດສອງ 32: 8–9 ຍັງບອກກ່ຽວກັບເລື່ອງນີ້ອີກດ້ວຍ:

> ເມື່ອອົງພຣະຜູ້ສູງສຸດໄດ້ປະທານມໍລະດົກແກ່ບັນດາປະຊາຊາດ, ເມື່ອພຣະອົງແບ່ງແຍກມະນຸດຊາດ, ພຣະອົງໄດ້ກຳນົດເຂດແດນຂອງມະນຸດຕາມຈຳນວນລູກຊາຍຂອງພຣະເຈົ້າ. ແຕ່ສ່ວນຂອງພຣະຜູ້ເປັນເຈົ້າແມ່ນປະຊາຊົນຂອງພຣະອົງ, ຢາໂຄບເປັນມໍລະດົກຂອງພຣະອົງເອງ.

ພຣະຄຳພີສະບັບແປບາງສະບັບມີຄຳວ່າ "ລູກຫຼານຂອງອິດສະຣາເອນ" ແທນທີ່ຈະເປັນ "ລູກຂອງພຣະເຈົ້າ" ໃນປະໂຫຍກທຳອິດ. ແຕ່ຊົນຊາດອິດສະຣາເອນບໍ່ມີຢູ່ໃນຊ່ວງເວລາຂອງວິຫານທີ່ບາເບນ. ພຣະເຈົ້າໄດ້ເອີ້ນອັບຣາຮາມພາຍຫຼັງເລື່ອງວິຫານທີ່ບາເບນເທົ່ານັ້ນໃນ (ປຖກ.12). ຄຳວ່າ"ລູກຫຼານຂອງອິດສະຣາເອນ" ຈຶ່ງບໍ່ຖືກຕ້ອງ. ຄຳວ່າ"ລູກຂອງພຣະເຈົ້າ" ກໍ່ແມ່ນວິທີທີ່ຖືກຂຽນໄວ້ໃນປຶ້ມບູຮານທີ່ເອີ້ນວ່າໜັງສືມ້ວນທະເລຕາຍ Dead Sea Scrolls. ໜັງສືມ້ວນເຫຼົ່ານີ້ເປັນເອກະສານທີ່ເກົ່າແກ່ທີ່ສຸດທີ່ຮູ້ຈັກກັນໃນພຣະຄຳພີ. ພຣະຄຳພີພາສາອັງກິດສະບັບແປໃໝ່ (Newer English translation Bibles) ໄດ້ແກ້ໄຂປະໂຫຍກແລະດຽວນີ້ໃຊ້ຄຳວ່າ"ລູກຊາຍຂອງພຣະເຈົ້າ".

ຄຳເວົ້ານັ້ນເປັນສິ່ງສຳຄັນ. ເມື່ອພຣະເຈົ້າໄດ້ແບ່ງແຍກຊົນຊາດຕ່າງໆ, ພວກເຂົາໄດ້ຖືກແບ່ງແຍກໃຫ້ບັນດາລູກຊາຍຂອງພຣະເຈົ້າ. ພຣະເຈົ້າໄດ້ຈັດແບ່ງປະຊາຊາດໃຫ້ແກ່ສະມາຊິກໃນສະພາສະຫວັນຂອງພຣະອົງ. ນີ້ແມ່ນຄຳອະທິບາຍຂອງພຣະຄຳພີກ່ຽວກັບເຫດຜົນທີ່ວ່າເປັນຫຍັງປະຊາຊາດຕ່າງໆໄດ້ມານະມັດສະການບັນດາພະອື່ນ(ເທບພະເຈົ້າ). ຈົນເຖິງເຫດການທີ່ວິຫານບາເບນນີ້, ພຣະເຈົ້າຕ້ອງການ

ຄວາມສຳພັນໂດຍກົງກັບມະນຸດທຸກໆຄົນ. ແຕ່ໃນການກະບົດນີ້ພຣະເຈົ້າໄດ້ປ່ຽນແປງສິ່ງນັ້ນແລ້ວ. ພຣະເຈົ້າຕັດສິນໃຈໃຫ້ສະມາຊິກສະພາວິນຍານຂອງພຣະອົງປົກຄອງບັນດາປະຊາຊາດທີ່ກະບົດ.

ພຣະເຈົ້າໄດ້ຕັດສິນມະນຸດອີກເທື່ອໜຶ່ງ. ກ່ອນໜ້ານີ້, ພຣະເຈົ້າໄດ້ສົ່ງການພິພາກສາເລື່ອງນ້ຳຖ້ວມມາໃຫ້. ມະນຸດກໍໄດ້ປະຕິເສດອີກເທື່ອໜຶ່ງທີ່ຈະຕິດຕາມພຣະເຈົ້າ. ມະນຸດຈະບໍ່ປະຕິບັດຕາມແຜນການຂອງພຣະເຈົ້າທີ່ພຣະອົງໄດ້ເລີ່ມຕົ້ນໃນສວນເອເດນ. ສະນັ້ນບັດນີ້ພຣະເຈົ້າຈຶ່ງຕັດສິນໃຈສ້າງກຸ່ມຄົນໃໝ່ຂຶ້ນ. ກຸ່ມຄົນໃໝ່ນີ້ຈະເປັນປະຊາກອນຂອງພຣະອົງ. <u>ພຣະບັນຍັດສອງ 32: 9</u> ກ່າວວ່າຄົນເຫຼົ່ານີ້ແມ່ນຄົນອິດສະຣາເອນ. ພຣະເຈົ້າໄດ້ເລີ່ມຕົ້ນກຸ່ມຄົນໃໝ່ນີ້ເມື່ອພຣະອົງຊົງເອີ້ນອັບຣາຮາມ. ການຊົງເອີ້ນອັບຣາຮາມ <u>(ປຖກ.12)</u> ແມ່ນເລື່ອງຕໍ່ໄປໃນພຣະຄຳພີ.

ການແບ່ງບັນດາປະເທດໃຫ້ແກ່ສະມາຊິກສະພາວິນຍານຂອງພຣະອົງຊ່ວຍໃຫ້ພວກເຮົາເຂົ້າໃຈພຣະຄຳພີເດີມທັງໝົດ. ມັນຊ່ວຍໄດ້ແນວໃດ? ພຣະຄຳພີເດີມສ່ວນທີ່ເຫຼືອຢູ່ນັ້ນແມ່ນກ່ຽວກັບພຣະເຈົ້າຂອງອິດສະຣາເອນແລະປະຊາຊົນພຣະອົງກໍຄືຄົນອິດສະຣາເອນ, ແລະພວກເຂົາເຈົ້າມັກຈະຂັດແຍ່ງກັບບັນດາ ພະຂອງປະເທດອື່ນໆແລະປະຊາຊົນທີ່ນັບຖືພະເຫຼົ່ານັ້ນ.

ຂໍ້ຂັດແຍ່ງນີ້ບໍ່ແມ່ນແຜນດັ້ງເດີມຂອງພຣະເຈົ້າ. ແມ່ນແລ້ວ, ສິ່ງທີ່ພຣະອົງໄດ້ເຮັດຢູ່ບາບີໂລນ(ວິຫານບາເບນ)ຕໍ່ປະເທດຊາດແມ່ນການພິພາກສາສຳລັບການກະບົດຂອງພວກເຂົາ. ແຕ່ພຣະເຈົ້າບໍ່ເຄີຍຕັ້ງໃຈທີ່ຈະໃຫ້ປະຊາຊາດຕ່າງໆປົກຄອງໂດຍພວກວິນຍານຊົ່ວຮ້າຍທີ່ກະບົດ. ພຣະເຈົ້າບໍ່ໄດ້ວາງແຜນທີ່ຈະປະຖິ້ມປະຊາຊາດຕ່າງໆຕະຫຼອດໄປ. ເມື່ອພຣະເຈົ້າຊົງເຮັດພັນທະສັນຍາກັບອັບຣາຮາມ, ພຣະອົງໄດ້ກ່າວຢ່າງຈະແຈ້ງໃນແຜນຂອງພຣະອົງວ່າ: " ເຮົາຈະອວຍພອນຊົນຊາດທັງປວງ". ພອນນີ້ຈະມາໂດຍຜ່ານອັບຣາຮາມແລະເຊື້ອສາຍຂອງເພິ່ນ <u>(ປຖກ.12: 3).</u> ພຣະເຈົ້າໄດ້ວາງແຜນທີ່ຈະນຳປະເທດຕ່າງໆກັບເຂົ້າມາໃນຄອບຄົວຂອງພຣະອົງ.

ໂປໂລຮູ້ເລື່ອງທັງໝົດນີ້. ໃນຄຳເທດສະໜາຂອງເພິ່ນຕໍ່ນັກປັດຊະຍາຊາວກຣີດຢູ່ທີ່ກຸງອາແຖນ, ທ່ານກ່າວວ່າ: ພຣະອົງໄດ້ສ້າງມະນຸດທຸກຊາດ ໃຫ້ເກີດມາຈາກມະນຸດຄົນດຽວ ແລະໃຫ້ພວກເຂົາຢູ່ທົ່ວພິພົບໂລກ ພຣະອົງໄດ້ຊົງກຳນົດເວລາ ແລະກຳນົດເຂດທີ່ພວກເຂົາຢູ່ນັ້ນ.

ແຜນການຂອງພຣະເຈົ້າແມ່ນເພື່ອໃຫ້ປະຊາຊາດສະແຫວງຫາພຣະເຈົ້າ ຫວັງວ່າພວກເຂົາຈະຊອກຫາຈົນພົບພຣະອົງ, ແຕ່ທີ່ຈິງ ພຣະອົງບໍ່ຊົງຢູ່ໄກຈາກເຮົາທຸກຄົນ <u>(ກຈ.17: 26–27)</u>

ຜ່ານທາງໂມເຊ,ພຣະເຈົ້າໄດ້ເຕືອນປະຊາຊົນຂອງພຣະອົງເອງຄືຄົນອິດສະຣາເອນ,ບໍ່ໃຫ້ນະມັດສະການ "ວິນຍານເທິງສະຫວັນ" <u>(ພບຍ. 4: 19-20).</u> ໃນ <u>ກຈ.17: 26-27</u> ເຮັດໃຫ້ແຈ່ມແຈ້ງວ່າແຜນການຂອງພຣະເຈົ້າແມ່ນປະເທດຕ່າງໆຍັງຄົງຊອກຫາພຣະອົງແລະບໍ່ນະມັດສະການວິນຍານຊົ່ວຮ້າຍທີ່ກະບົດ

ແຕ່ສະມາຊິກສະພາວິນຍານທີ່ໄດ້ຮັບອຳນາດເໜືອປະເທດຕ່າງໆໄດ້ກະບົດແລະຫຼັງຈາກນັ້ນກໍ່ເລີ່ມແຊກແຊງແຜນການຂອງພຣະອົງໃນສອງທາງ.

ພວກເຮົາໄດ້ເຫັນກ່ອນໜ້ານີ້ໃນເພງສັນລະເສີນ 82: 1 ວ່າພຣະເຈົ້າໄດ້ເຕົ້າໂຮມສະມາຊິກສະພາຂອງພຣະອົງ. ເລື່ອງເຕັມບອກພວກເຮົາວ່າເປັນຫຍັງ. ພວກລູກຊາຍຂອງພຣະເຈົ້າຜູ້ທີ່ໄດ້ຮັບສິດອຳນາດເໜືອປະເທດຊາດຕ່າງໆໄດ້ປົກຄອງປະເທດເຫຼົ່ານັ້ນຢ່າງບໍ່ເປັນທຳ. ພວກເຂົາໄດ້ກະບົດແລະເຮັດໃນທາງທີ່ຂັດກັບແຜນການຂອງພຣະເຈົ້າ. ພຣະເຈົ້າຫ່ວງທຳແລະຕ້ອງການຄວາມຍຸດຕິທຳຢູ່ທົ່ວທຸກແຫ່ງ.ພຣະເຈົ້າໄດ້ຕັດສິນພວກເຂົາທັນທີທີ່ກອງປະຊຸມໄດ້ເລີ່ມຂຶ້ນຄື: "ພວກທ່ານຕ້ອງຢຸດຕິການຕັດສິນອັນບໍ່ຍຸດຕິທຳແລະຕ້ອງເຊົາເປັນພັກພວກຂອງຄົນຊົ່ວຮ້າຍ?" (ພສສ. 82: 2). ຫຼັງຈາກກ່າວໂທດພວກເຂົາຢ່າງແຮງກ່ຽວກັບຄວາມບໍ່ຍຸດຕິທຳຂອງພວກເຂົາ, ພຣະເຈົ້າໄດ້ອະທິບາຍວ່າພວກເຂົາລົ້ມເຫຼວໃນການຊ່ວຍເຫຼືອປະຊາຊາດຕ່າງໆແນວໃດ. ພວກເຂົາໄດ້ຊຸກຍູ້ມະນຸດໃຫ້ເດີນໄປໃນເສັ້ນທາງທີ່ມືດມົນແລະພວກເຂົາບໍ່ໄດ້ຊ່ວຍໃຫ້ຊອກຫາທາງກັບໄປຫາພຣະເຈົ້າທີ່ແທ້ຈິງ : "ພວກເຈົ້າໂງ່ຈ້າ ແລະບໍ່ຮູ້ຈັກຫຍັງທັງຢ່າງໄປມາໃນຄວາມມືດແລະຄວາມຍຸດຕິທຳໄດ້ສູນເສຍໄປຈາກໂລກນີ້." (ພສສ. 82: 5).

ແມ່ນແຕ່ປະຊາກອນຂອງພຣະເຈົ້າຄືຄົນອິດສະຣາເອນມັກຈະຫັນໄປຂາບໄຫວ້ບູຊາວິນຍານກະບົດເຫຼົ່ານີ້ທີ່“ ຫ້າມບໍ່ໃຫ້ພວກເຂົາຂາບໄຫວ້” (ພບຍ. 29:26; ເບິ່ງ 32:17). ສະມາຊິກຂອງສະພາບໍ່ໄດ້ຈິງຮັກພັກດີຕໍ່ພຣະເຈົ້າ. ປະຕິກິລິຍາຂອງພຣະເຈົ້າແມ່ນວ່ອງໄວແລະຮຸນແຮງ (ພສສ. 82: 6–7):“ ເຮົາກ່າວວ່າ , ‘ພວກເຈົ້າຄືບັນດາພະທັງຫຼາຍເປັນພວກລູກຊາຍອົງສູງສຸດທັງໝົດ.’ແຕ່ພວກເຈົ້າພັດເປັນດັ່ງມະນຸດທຳມະດາແລະຈະສິ້ນຊີວາລົງດັ່ງເຈົ້າຊາຍຄົນໜຶ່ງ.”

ພວກວິນຍານຂອງສະມາຊິກສະພາ (ເທບພະເຈົ້າ)ຈະສູນເສຍຄວາມເປັນອຳມະຕະຂອງພວກເຂົາ (ພສສ.82: 7) ແລະຕາຍຄືກັບມະນຸດ. ພວກເຮົາຮູ້ຈາກພຣະທຳຕອນອື່ນໆວ່າການພິພາກສານີ້ກ່ຽວຂ້ອງກັບຍຸກສຸດທ້າຍ (ອຊຢ.34: 1–4). ໃນຕອນທ້າຍຂອງເພງສັນລະເສີນບົດທີ 82, ຜູ້ຂຽນຫວັງວ່າມື້ທີ່ພຣະເຈົ້າຈະຍຶດເອົາທຸກຊາດຄືນມາເປັນມໍລະດົກຂອງພຣະອົງໃນທີ່ສຸດ. ດັ່ງທີ່ພວກເຮົາຈະເຫັນໃນພາຍຫຼັງ, ພຣະເຈົ້າຈະເຮັດໃຫ້ແຜນການນີ້ສຳເລັດແລະມີການອະທິບາຍໄວ້ໃນພຣະສັນຍາໃໝ່.

# ພາບລວມຂອງພຣະບັນຍັດສອງບົດທີ 32

ສິ່ງທີ່ພວກເຮົາໄດ້ຮຽນຮູ້ໃນພຣະບັນຍັດສອງ 32: 8-9 ກ່ຽວກັບວິນຍານທີ່ໄດ້ຮັບສິດອຳນາດເໜືອປະເທດຕ່າງໆທີ່ພວກເຮົາຈະເອີ້ນວ່າ “ພາບລວມຂອງພຣະບັນຍັດສອງບົດທີ 32 ”. ທັດສະນະນີ້ເຂົ້າໃຈວ່າແຜ່ນດິນໂລກໄດ້ແບ່ງອອກເປັນພາກສ່ວນທີ່ປົກຄອງໂດຍວິນຍານທີ່ມີອຳນາດແຕກຕ່າງກັນທີ່ໄດ້ກະບົດຕໍ່ພຣະເຈົ້າແລະແຜນການຂອງພຣະອົງ. ບາງສ່ວນຂອງແຜ່ນດິນໂລກໄດ້ອຸທິດໃຫ້ພຣະເຈົ້າ. ພວກເຮົາເວົ້າວ່າພື້ນທີ່ນີ້ແມ່ນ "ບໍລິສຸດສັກສິດ". ສ່ວນອື່ນໆຂອງແຜ່ນດິນໂລກແມ່ນອຸທິດແກ່ວິນຍານກະບົດ.ພາບລວມ

ຂອງພຣະບັນຍັດສອງບົດທີ 32  ນີ້ສະທ້ອນໃຫ້ເຫັນຢູ່ໃນຫຼາຍບ່ອນໃນພຣະຄຳພີຍົກຕົວຢ່າງ, ໃນພຣະທຳຂອງດານີເອນບອກວ່າປະເທດຕ່າງຊາດກຳລັງປົກຄອງໂດຍວິນຍານ "ຜູ້ປົກຄອງ " (ດານີເອນ 10:13, 20–21). ອີກຕົວຢ່າງໜຶ່ງ: ເມື່ອດາວິດພວມໜີຈາກກະສັດໂຊນ, ລາວຖືກບັງຄັບໃຫ້ອອກຈາກອິດສະຣາເອນເຂົ້າໄປໃນດິນແດນຂອງຊາວຟີລິດສະຕິນ. ໃນ 1 ຊມອ. 26:19, ດາວິດໄດ້ຮ້ອງວ່າ, "  ເພາະພວກເຂົາເອງເປັນຜູ້ຕາມລ່າຂ້ານ້ອຍໃຫ້ອອກຈາກດິນແດນຂອງພຣະເຈົ້າຢາເວ ແລະໃຫ້ຂ້ານ້ອຍໄປອາໄສຢູ່ໃນປະເທດທີ່ຂ້ານ້ອຍຈຳເປັນຕ້ອງຂາບໄຫວ້ພະອື່ນ". ດາວິດບໍ່ໄດ້ປ່ຽນໄປນະມັດສະການພະເຈົ້າອົງອື່ນ. ດາວິດບໍ່ໄດ້ເວົ້າວ່າພຣະເຈົ້າຢູ່ໃນແຜ່ນດິນອິດສະຣາເອນເທົ່ານັ້ນ. ແຕ່ດາວິດໝາຍຄວາມວ່າດິນແດນອິດສະຣາເອນໄດ້ອຸທິດຖວາຍແດ່ພຣະເຈົ້າແລະເປັນສາເຫດທີ່ເອີ້ນວ່າດິນແດນສັກສິດ. ສະຖານທີ່ເໝາະສົມໃນການນະມັດສະການພຣະເຈົ້າແມ່ນແຜ່ນດິນທີ່ໄດ້ອຸທິດແດ່ພຣະອົງ. ດາວິດເປັນຜູ້ລີ້ໄພທີ່ຢູ່ໃນດິນແດນທີ່ໄດ້ອຸທິດໃຫ້ວິນຍານອື່ນ.

ເລື່ອງລາວໃນພຣະຄຳພີເດີມທີ່ຂ້າພະເຈົ້າມັກທີ່ສຸດສະແດງໃຫ້ເຫັນພາບລວມຂອງ ພຣະບັນຍັດສອງບົດທີ32, ແມ່ນ 2 ກະສັດ 5. ນາອາມານເປັນນາຍທະຫານໃນກອງທັບຊີເຣຍ.ເພິ່ນເປັນພະຍາດຂີ້ທູດ. ຫຼັງຈາກນາອາມານໄດ້ເຮັດຕາມຄຳແນະນຳຂອງເອລີຊາ ໃຫ້ລ້າງຕົນເອງເຈັດເທື່ອໃນແມ່ນ້ຳຈໍແດນ, ນາອາມານກໍໄດ້ຫາຍດີຢ່າງມະຫັດສະຈັນ. ນາອາມານໄດ້ກັບຄືນໄປບອກເອລີຊາວ່າ, "ດຽວນີ້ຂ້າພະເຈົ້າຮູ້ແລ້ວວ່າບໍ່ມີພຣະເຈົ້າອົງອື່ນ ນອກຈາກພຣະເຈົ້າຂອງຊາດອິດສະຣາເອນ" (5:15). ຜູ້ທຳນວາຍຈະບໍ່ຮັບເງິນຄ່າການປິ່ນປົວຮັກສາເລີຍ, ດັ່ງນັ້ນນາອາມານໄດ້ຖາມວ່າເພິ່ນສາມາດເອົາຂີ້ດິນຈາກປະເທດອິດສະຣາເອນເພື່ອເອົາໄປເຮືອນທີ່ປະເທດຊີເຣຍໄດ້ບໍ. ດິນບໍ? ເປັນຫຍັງຕ້ອງຖາມຫາດິນ? ເພາະວ່າດິນນັ້ນເປັນຂອງພຣະເຈົ້າຂອງອິດສະຣາເອນ. ມັນໄດ້ຖືກອຸທິດໃຫ້ແກ່ພຣະເຈົ້າ. ມັນຈຶ່ງບໍລິສຸດ.

ພວກເຮົາເຫັນແນວຄິດດຽວກັນໃນພຣະສັນຍາໃໝ່. ໂປໂລໃຊ້ຫຼາຍຄຳສັບສຳລັບພວກວິນຍານທີ່ກະບົດ (ອຟຊ. 1: 20–21; 3:10; 6:12; ກລຊ.1:16; 2:15): ບັນດາຜູ້ປົກຄອງ, ຜູ້ມີອຳນາດ, ຜູ້ມີຣິດເດດ, ພຣະທີ່ນັ່ງ. ຄຳສັບເຫຼົ່ານີ້ມີຄວາມໝາຍຄືກັນແນວໃດ? ຄຳສັບເຫຼົ່ານີ້ຖືກນຳໃຊ້ເພື່ອອະທິບາຍເຖິງສິດອຳນາດເໜືອດິນແດນໃດໜຶ່ງ.

ອັກຄະສາວົກໂປໂລຂຽນຈົດໝາຍສອງສະບັບໃຫ້ຜູ້ທີ່ເຊື່ອທີ່ເມືອງໂກຣິນໂທເພື່ອແກ້ໄຂບາງບັນຫາທີ່ເພິ່ນໄດ້ຍິນ. ໃນຈົດໝາຍສະບັບທຳອິດ, ໂປໂລໄດ້ບອກຜູ້ນຳຄຣິສຕະຈັກໃຫ້ຂັບໄລ່ຊາຍຄຣິສຕຽນຄົນໜຶ່ງທີ່ ກຳລັງດຳເນີນຊີວິດຢູ່ໃນຄວາມຜິດບາບທາງເພດທີ່ບໍ່ກັບໃຈ (1ກຣທ.5: 1–13). ໂປໂລໄດ້ຂຽນວ່າພວກເຂົາຕ້ອງ“ຈົ່ງມອບຊາຍຄົນນີ້ໄວ້ໃຫ້ມານຊາຕານ” (1 ກຣທ. 5:5). ມັນມີຄວາມໝາຍແນວໃດ?

ຄຳແນະນຳຂອງໂປໂລມີຄວາມເໝາະສົມກໍ່ຕໍ່ເມື່ອພວກເຮົາມີແນວຄວາມຄິດພາບລວມຂອງພຣະບັນຍັດສອງບົດ 32. ແນວຄວາມຄິດນີ້ສອນວ່າ ອິດສະຣາເອນເປັນປະຊາຊົນຂອງພຣະເຈົ້າແລະແຜ່ນດິນຂອງພວກເຂົາໄດ້ຖືກອຸທິດໃຫ້ແກ່ພຣະອົງ. ທີ່ປະທັບຂອງພຣະເຈົ້າໃນແຜ່ນດິນນັ້ນເຮັດໃຫ້ບ່ອນນັ້ນບໍລິສຸດ.

ເມື່ອອິດສະຣາເອນໄດ້ເດີນທາງອອກຈາກປະເທດເອຢິບໃນຖິ່ນແຫ້ງແລ້ງກັນດານທີ່ປະທັບຂອງພຣະເຈົ້າໄດ້ອາໄສຢູ່ໃນຫໍເຕັນ. ເມື່ອຄົນອິດສະຣາເອນຢຸດພັກຜ່ອນແລະຕັ້ງຄ້າຍ, ຫີບແຫ່ງພຣະສັນຍາໄດ້ວາງໄວ້ໃນເຕັນທີ່ໃຈກາງຂອງຄ້າຍ. ນີ້ໄດ້ເປັນເຄື່ອງໝາຍຄ້າຍຂອງອິດສະຣາເອນວ່າເປັນພື້ນທີ່ບໍລິສຸດທີ່ອຸທິດໃຫ້ແກ່ພຣະເຈົ້າ. ຕໍ່ມາຫຼັງຈາກອິດສະຣາເອນໄດ້ອາໄສຢູ່ໃນດິນແດນໃໝ່ຂອງພວກເຂົາພຣະເຈົ້າໄດ້ສະຖິດຢູ່ໃນວິຫານໃນນະຄອນເຢຣູຊາເລັມ. ທີ່ປະທັບຂອງພຣະເຈົ້າໄດ້ເຮັດໃຫ້ດິນແດນບໍລິສຸດສັກສິດອຸທິດໃຫ້ແກ່ພຣະເຈົ້າ. ພຣະເຈົ້າແລະຄົນອິດສະຣາເອນປະຊາຊົນຂອງຂອງພຣະອົງໄດ້ຢູ່ທີ່ບ້ານແລ້ວ. ແຕ່ປະຈຸບັນນີ້, ພຣະເຈົ້າມາແລະສະຖິດຢູ່ໃນຄົນທີ່ເຊື່ອໃນພຣະອົງ. ປະຈຸບັນຜູ້ທີ່ເຊື່ອແມ່ນພຣະວິຫານຂອງພຣະເຈົ້າ <u>(1 ກຣທ. 6:19; 2 ກຣທ.6:16; ຣມ. 8: 9).</u> ນັ້ນໝາຍຄວາມວ່າຜູ້ທີ່ເຊື່ອໄດ້ອຸທິດຕົວໃຫ້ແກ່ພຣະເຈົ້າ. ພວກເຂົາເຈົ້າຖືກເອີ້ນວ່າຮ່າງກາຍຂອງພຣະຄຣິດ. ຜູ້ທີ່ເຊື່ອແມ່ນປະຊາກອນໃໝ່ຂອງພຣະເຈົ້າ. ພວກເຂົາເຈົ້າຖືກເອີ້ນວ່າອິດສະຣາເອນໃໝ່. ໂປໂລໄດ້ກ່າວຢ່າງຈະແຈ້ງໃນ<u>ຄາລາເຕຍບົດທີ 3:</u>

> ສະນັ້ນ ພວກເຈົ້າຈົ່ງຮັບຮູ້ໄວ້ວ່າ ແມ່ນຜູ້ທີ່ມີຄວາມເຊື່ອນັ້ນແຫຼະ ເປັນເຊື້ອສາຍແທ້ຂອງອັບຣາຮາມ…ເພາະວ່າເຈົ້າທັງຫຼາຍກໍເປັນບຸດຂອງພຣະເຈົ້າ ຮ່ວມໃນພຣະຄຣິດເຈົ້າເຢຊູໂດຍທາງຄວາມເຊື່ອ. ເພາະວ່າ ຄົນໃດໃນພວກເຈົ້າໄດ້ຮັບບັບຕິສະມາໃນພຣະຄຣິດແລ້ວ ຄົນນັ້ນກໍໄດ້ສວມຊີວິດຂອງພຣະອົງ. ດັ່ງນັ້ນ ຈຶ່ງບໍ່ມີຄວາມແຕກຕ່າງອັນໃດ ລະຫວ່າງຄົນຢິວແລະຄົນຕ່າງຊາດ ລະຫວ່າງທາດແລະອິດສະຫຼະ ລະ ຫວ່າງຊາຍແລະຍິງ ເພາະພວກເຈົ້າທຸກຄົນເປັນອັນໜຶ່ງອັນດຽວກັນໃນພຣະຄຣິດເຈົ້າເຢຊູ. ຖ້າພວກເຈົ້າເປັນຄົນຂອງພຣະຄຣິດແລ້ວ ພວກເຈົ້າກໍເປັນເຊື້ອສາຍຂອງອັບຣາຮາມ ຄືເປັນຜູ້ໄດ້ຮັບມໍຣະດົກຕາມພຣະສັນຍາ. <u>(ຄລຕ. 3: 7, 26– 29)</u>

ເນື່ອງຈາກບັນດາຜູ້ທີ່ເຊື່ອແລະສະຖານທີ່ທີ່ພວກເຂົາມາເຕົ້າໂຮມກັນເປັນພື້ນທີ່ສັກສິດ, ບາບຈຶ່ງຕ້ອງຖືກຂັບໄລ່ອອກໄປ. ໂປໂລຕ້ອງການໃຫ້ຜູ້ຊາຍໃນຄຣິສຕະຈັກຜູ້ທີ່ປະຕິເສດທີ່ຈະຢຸດການເຮັດຜິດທາງເພດຂອງຕົນໃຫ້ຖືກໄລ່ອອກຈາກກຸ່ມຜູ້ທີ່ເຊື່ອ. ຊາຍຄົນນີ້ຈະຖືກບັງຄັບໃຫ້ອອກຈາກກຸ່ມທີ່ອຸທິດຕົນຕໍ່ພຣະເຈົ້າ. ລາວຈະກັບໄປຢູ່ໃນທ່າມກາງຜູ້ທີ່ບໍ່ເຊື່ອທີ່ອຸທິດຕົວໃຫ້ກັບວິນຍານຊົ່ວຮ້າຍ. ນີ້ແມ່ນຂອບເຂດຂອງຊາຕານ. ການຖືກໄລ່ອອກຈາກກຸ່ມຄຣິສຕະຈັກແມ່ນຈະຖືກນໍາກັບເຂົ້າໄປໃນດິນແດນທີ່ບໍ່ບໍລິສຸດ. ນັ້ນແມ່ນທີ່ມາຂອງຄວາມບາບ

# ສາເຫດທີ່ເລື່ອງນີ້ສໍາຄັນ

ການພິພາກສາຂອງພຣະເຈົ້າກ່ຽວກັບປະເທດຕ່າງໆທີ່ວິຫານບາເບນ ຊ່ວຍໃຫ້ພວກເຮົາເຂົ້າໃຈເຫດຜົນທີ່ປະຫວັດສາດຂອງອິດສະຣາເອນແມ່ນກ່ຽວກັບການຕໍ່ສູ້ທີ່ຈະບໍ່ເຮັດຕາມວິນຍານອື່ນໆ. ມັນຍັງຊ່ວຍໃຫ້ພວກເຮົາເຂົ້າໃຈຂ່າວປະເສີດທີ່ພຣະເຢຊູເຈົ້າໄດ້ສອນ. ຂ່າວປະເສີດຂອງພຣະເຢຊູເຈົ້າແລະສິ່ງທີ່ພຣະອົງໄດ້ເຮັດຢູ່ເທິງໄມ້ກາງແຂນແມ່ນຜູ້ໃດກໍຕາມທີ່ເຊື່ອໃນພຣະເຢຊູເຈົ້າສາມາດກາຍເປັນປະຊາຊົນຂອງພຣະ

ເຈົ້າໄດ້ (ຄຕ. 3). ໃນຂະນະທີ່ພວກສາວົກອອກໄປທົ່ວທຸກບ່ອນ,ສິດອຳນາດຂອງຊາຕານຈະຖືກຍ້າຍອອກໄປຈາກຜູ້ຄົນເມື່ອພວກເຂົາເຊື່ອແລະພວກເຂົາກາຍເປັນພຣະວິຫານຂອງພຣະເຈົ້າບໍ່ວ່າພວກເຂົາຈະຢູ່ບ່ອນໃດກໍ່ຕາມ. ອານາຈັກຂອງພຣະເຈົ້າແຜ່ຂະຫຍາຍອອກໄປເມື່ອຜູ້ຄົນເຊື່ອຂ່າວປະເສີດວ່າພວກເຂົາສາມາດປະຖິ້ມອຳນາດຂອງພວກວິນຍານຊົ່ວຮ້າຍທີ່ກະບົດແລະກາຍມາເປັນລູກຂອງພຣະເຈົ້າໄດ້.

ບົດຮຽນກໍຄືວ່າໂລກນີ້ບໍ່ແມ່ນບ້ານທີ່ແທ້ຈິງຂອງພວກເຮົາ. ວິນຍານຊົ່ວຮ້າຍໄດ້ຄວບຄຸມທົ່ວໂລກເປັນເວລາຫຼາຍສັດຕະວັດ. ຄົນທີ່ບໍ່ເຊື່ອກໍເປັນຂ້າທາດຂອງກອງທັບວິນຍານເຫຼົ່ານີ້. ຜູ້ຄົນຕ້ອງການຂ່າວປະເສີດຂອງພຣະເຢຊູເຈົ້າເພື່ອໃຫ້ເຂົາເຈົ້າສາມາດເລືອກທີ່ຈະຖືກປົດປ່ອຍໃຫ້ເປັນອິດສະຫຼະ. ແລະຢ່າລືມວ່າ: ເປັນຂ່າວປະເສີດທີ່ເປັນອາວຸດຂອງພວກເຮົາ. ພວກເຮົາບໍ່ໄດ້ຮັບອະນຸຍາດຈາກພຣະເຈົ້າທີ່ຈະປະເຊີນໜ້າກັບບັນດາວິນຍານປົກຄອງອານາເຂດແລະວິນຍານມີອຳນາດໂດຍກົງ. ບໍ່ມີຂອງປະທານຝ່າຍວິນຍານທີ່ມອບໃຫ້ແກ່ມະນຸດເພື່ອຈຸດປະສົງນັ້ນ. ແຕ່ການບອກເລົ່າຂ່າວປະເສີດສາມາດປົດປ່ອຍຄົນເຮົາອອກຈາກການເປັນຂ້າທາດຂອງວິນຍານຊົ່ວຮ້າຍທີ່ປົກຄອງພວກເຂົາໄດ້. ພຣະເຢຊູເຈົ້າໄດ້ມອບໝາຍໃຫ້ພວກສາວົກຂອງພຣະອົງປະຕິບັດຕາມແລະນີ້ໝາຍເຖິງແຜນການສູ້ຮົບທາງວິນຍານຂອງພວກເຮົາ. ພວກເຮົາຈະຮຽນຮູ້ເພີ່ມເຕີມກ່ຽວກັບເລື່ອງນັ້ນໃນບົດຕໍ່ໆໄປ.

ອີກສິ່ງໜຶ່ງທີ່ພວກເຮົາໄດ້ຮຽນຮູ້ຄື: ພວກເຮົາຕ້ອງເຂົ້າໃຈວ່າກຸ່ມຂອງຜູ້ທີ່ເຊື່ອໃນພຣະເຈົ້າທຸກໆກຸ່ມກາຍເປັນພື້ນທີ່ອັນສັກສິດ. ສິ່ງປຸກສ້າງທີ່ເປັນວັດຖຸ, ວິຫານທີ່ສວຍງາມ, ແລະການເປັນສະມາຊິກໃນຄຣິສຕະຈັກບໍ່ໄດ້ສຳຄັນຕໍ່ພຣະເຈົ້າ. ສິ່ງທີ່ສຳຄັນຕໍ່ພຣະເຈົ້າແມ່ນບ່ອນທີ່ຜູ້ທີ່ເຊື່ອສອງຫຼືສາມຄົນມາຮ່ວມປະຊຸມກັນ ພຣະເຢຊູເຈົ້າຊົງຢູ່ທ່າມກາງພວກເຂົາ (ມທ. 18:20). ຄົນເຫຼົ່ານັ້ນແລະສະຖານທີ່ປະຊຸມຂອງພວກເຂົາເຈົ້າເປັນທີ່ສັກສິດ. ທຸກໆກຸ່ມຂອງຜູ້ທີ່ເຊື່ອ, ບໍ່ວ່າຈະເປັນກຸ່ມນ້ອຍຫຼືຫ່າງໄກສອກຫຼີກແມ່ນຢູ່ໃນແນວໜ້າຂອງສົງຄາມຝ່າຍວິນຍານ. ຜູ້ທີ່ເຊື່ອທຸກຄົນມີໜ້າທີ່ດຽວກັນໃນການເຜີຍແຜ່ຂ່າວປະເສີດໃຫ້ແກ່ຄົນອີກຈຳນວນຫຼວງຫຼາຍ. ບັນດາພະລັງອຳນາດແຫ່ງຄວາມມືດຈະບໍ່ມີໄຊຊະນະ.

ພວກເຮົາຈະທົບທວນຄືນແນວຄວາມຄິດຂອງພາບລວມຂອງພຣະບັນຍັດສອງບົດທີ 32 ໃນເວລາທີ່ພວກເຮົາໄປຮັບໃຊ້ພຣະເຢຊູເຈົ້າ. ສຳລັບດຽວນີ້,ເສັ້ນທາງການສູ້ຮົບແມ່ນຈະແຈ້ງແລ້ວປະເທດຕ່າງໆແລະຜູ້ປົກຄອງວິນຍານທີ່ກະບົດຂອງພວກເຂົາໄດ້ຮັບການພິພາກສາຈາກພຣະເຈົ້າແລະສິດອຳນາດທີ່ຖືກຕ້ອງໃນການປົກຄອງຂອງພວກເຂົາໄດ້ຖືກກຳຈັດອອກໄປ. ພຣະເຈົ້າກຳລັງເອີ້ນປະຊາຊົນອອກຈາກການເປັນຂ້າທາດຂອງພວກເຂົາເພື່ອເຂົ້າຮ່ວມໃນຄອບຄົວຂອງພຣະອົງແລະເຂົ້າໄປໃນອານາຈັກຂອງພຣະອົງ.

# ບົດທີ 6

# ພຣະຄໍາ,ພຣະນາມແລະເທວະດາ

ໃນບົດທີ່ຜ່ານມາພວກເຮົາໄດ້ຮຽນຮູ້ກ່ຽວກັບພາບລວມຂອງ ພຣະບັນຍັດສອງບົດທີ 32. ເພື່ອການຕອບສະໜອງຕໍ່ການກະບົດຂອງມະນຸດທີ່ວິຫານບາເບນ, ພຣະເຈົ້າໄດ້ຢຸດການເຊື່ອມຕໍ່ໂດຍກົງກັບປະເທດຕ່າງໆ. ພຣະອົງໄດ້ມອບແຕ່ລະປະເທດໃຫ້ແກ່ສະມາຊິກໃນສະພາແຫ່ງສະຫວັນຄືພວກລູກຊາຍຂອງພຣະເຈົ້າ (ພບຍ. 32: 8–9). ຫຼັງຈາກນັ້ນ, ພຣະເຈົ້າໄດ້ເລີ່ມຕົ້ນກຸ່ມຄົນໃໝ່ໃຫ້ເປັນຊົນຊາດຂອງພຣະອົງ. ຄົນອິດສະຣາເອນຈະເປັນຕົວແທນຂອງພຣະອົງ(ພຣະລັກສະນະ) ເພື່ອເຜີຍແຜ່ອານາຈັກຂອງພຣະອົງຢູ່ເທິງໂລກ. ແຕ່ແຜນການດັ່ງກ່າວໄດ້ກາຍເປັນການສູ້ຮົບທີ່ໂຫດຮ້າຍຍ້ອນວ່າພະອື່ນໆແລະປະຊາຊົນຂອງພວກເຂົາຈາກປະເທດອື່ນໆເປັນສັດຕູທີ່ໂຫດຮ້າຍຂອງອິດສະຣາເອນແລະພຣະເຈົ້າ.

ຊົນຊາດໃໝ່ຂອງພຣະເຈົ້າຈະເລີ່ມຕົ້ນດ້ວຍຊາຍຄົນໜຶ່ງທີ່ຊື່ວ່າອັບຣາມ. ຕໍ່ມາພຣະເຈົ້າໄດ້ປ່ຽນຊື່ຂອງຊາຍຄົນນີ້ມາເປັນອັບຣາຮາມ. ບໍ່ດົນຫຼັງຈາກການພິພາກສາຢູ່ບາບີໂລນ, ພຣະເຈົ້າໄດ້ມາຢ້ຽມຢາມອັບຣາຮາມ.

## ອັບຣາຮາມໄດ້ພົບກັບພຣະຄໍາ

ຄຣິສຕຽນສ່ວນຫຼາຍຄຸ້ນເຄີຍກັບການທີ່ພຣະເຈົ້າມາຢ້ຽມຢາມອັບຣາຮາມ ໃນພຣະທໍາປະຖົມມະການບົດທີ12. ພຣະເຈົ້າບອກໃຫ້ອັບຣາຮາມອອກຈາກບ້ານເກີດເມືອງນອນແລະໄປບ່ອນທີ່ເພິ່ນບໍ່ເຄີຍເຫັນ. ພຣະເຈົ້າສັນຍາວ່າຈະນໍາພາເພິ່ນ. ພຣະເຈົ້າບອກອັບຣາຮາມວ່າພຣະອົງຈະເປັນພຣະເຈົ້າຂອງເພິ່ນແລະໃຫ້ຄໍາໝັ້ນສັນສັນຍາພິເສດແກ່ເພິ່ນ. ພຣະອົງຈະຊ່ວຍໃຫ້ອັບຣາຮາມແລະຊາຣາມີລູກຊາຍເຖິງວ່າທັງສອງຈະເຖົ້າແກ່ແລ້ວກໍຕາມ. ຈາກລູກຊາຍຄົນນັ້ນຈະເກີດມີຄົນຈໍານວນຫຼວງຫຼາຍ ເຊື້ອສາຍເຫຼົ່ານີ້ຈະເປັນຄອບຄົວໃໝ່ ຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກ. ຜ່ານຄອບຄົວນີ້ບັນດາປະຊາຊາດຕ່າງໆທີ່ກະບົດຈະໄດ້ຮັບພອນ.

ພວກເຮົາອາດຄິດວ່າການພົບປະຂອງອັບຣາຮາມກັບພຣະເຈົ້າແມ່ນສຽງຈາກສະຫວັນຫຼືສຽງທີ່ຢູ່ພາຍໃນຫົວຄິດຂອງອັບຣາຮາມ. ຫຼືບາງທີພວກເຮົາຄິດວ່າພຣະເຈົ້າໄດ້ມາທາງຄວາມຝັນອັບຣາຮາມ. ພຣະຄໍາພີບອກຢ່າງຈະແຈ້ງວ່າພຣະເຈົ້າໄດ້ໃຊ້ວິທີເຫຼົ່ານັ້ນກັບພວກຜູ້ທໍານວາຍແລະປະຊາຊົນບາງຄົນ. ແຕ່ນັ້ນບໍ່ແມ່ນສິ່ງທີ່ເກີດຂຶ້ນກັບອັບຣາຮາມ. ພຣະເຈົ້າໄດ້ເຮັດສິ່ງທີ່ໜ້າງຶດງໍ້ຫຼາຍກວ່ານັ້ນ. ພຣະເຈົ້າໄດ້ມາເປັນຜູ້ຊາຍຄົນໜຶ່ງ. ພຣະເຈົ້າແລະອັບຣາຮາມໄດ້ເວົ້າລົມກັນຕໍ່ໜ້າ.

ພວກເຮົາເຂົ້າໃຈສິ່ງນີ້ຈາກປະຖົມມະການ 12: 6-7. ພຣະຄຳພີກ່າວວ່າພຣະເຈົ້າຊົງປະກົດຕົວຕໍ່ອັບຣາຮາມ. ໃນເວລາອື່ນພຣະເຈົ້າປະກົດຕົວອີກ (ປຖກ. 15: 1-6). ເວລານີ້ພຣະເຈົ້າມາຫາອັບຣາຮາມເປັນ" ພຣະຄຳຂອງພຣະຜູ້ເປັນເຈົ້າ". ນີ້ບໍ່ແມ່ນພຽງແຕ່ສຽງໃນຫົວຂອງອັບຣາຮາມ. ພວກເຮົາຮູ້ເລື່ອງນີ້ເພາະວ່າ"ພຣະຄຳ" ໄດ້ນຳອັບຣາຮາມມາຢູ່ທາງນອກແລະໄດ້ສະແດງໃຫ້ເພິ່ນເຫັນດວງດາວແລະບອກອັບຣາຮາມວ່າລູກຫຼານຂອງເພິ່ນຈະມີຫຼາຍຄົນນັບບໍ່ຖ້ວນ (ປຖກ.15: 5).

ພຣະເຈົ້າໄດ້ປະກົດຕົວຕໍ່ອັບຣາຮາມເປັນມະນຸດຜູ້ຊາຍໃນຊ່ວງເວລາອື່ນໆອີກ (ປຖກ.18). ພຣະເຈົ້າໄດ້ປະກົດຕົວແບບດຽວກັນກັບອີຊາກ (ປຖກ.26: 1-5). ອີຊາກເປັນລູກຊາຍທີ່ພຣະເຈົ້າໄດ້ສັນຍາໄວ້ກັບອັບຣາຮາມແລະຊາຣາ. ຢາໂຄບເປັນລູກຊາຍຂອງອີຊາກແລະພຣະເຈົ້າກໍ່ໄດ້ມາປະກົດຕົວໃນຖານະເປັນມະນຸດຕໍ່ລາວ. (ປຖກ. 28: 10–22; 31: 11–12; 32: 24–30).

ຄຳວ່າ "ພຣະຄຳ"ຂອງພຣະເຈົ້າແມ່ນວິທີທີ່ພຣະຄຳພີສື່ສານວ່າພຣະເຈົ້າປະກົດຕົວໃນຮູບແບບມະນຸດ. ເລື່ອງນີ້ເກີດຂຶ້ນໃນຫຼາຍເລື່ອງໃນພຣະຄຳພີ. ຕົວຢ່າງໜຶ່ງທີ່ຂ້າພະເຈົ້າມັກທີ່ສຸດແມ່ນພົບເຫັນຢູ່ໃນ 1 ຊາມູເອນ 3. ເດັກຊາຍຊາມູເອນຍັງໄດ້ຍິນສຽງເອີ້ນໃນຂະນະທີ່ລາວກຳລັງນອນຫຼັບຢູ່. ຊາມູເອນອາໄສຢູ່ກັບປະໂຣຫິດຄົນໜຶ່ງຊື່ວ່າເອລີແລະຊາມູເອນຄິດວ່າເອລີກຳລັງເອີ້ນລາວ. ແຕ່ວ່າເອລີບອກຊາມູເອນວ່າແມ່ນພຣະເຈົ້າ. ໃນຂໍ້ທີ 10 ພຣະເຈົ້າຢາເວໄດ້ມາຢືນຢູ່ໃນບ່ອນນັ້ນ ແລະເອີ້ນເໝືອນດັ່ງແຕ່ກ່ອນວ່າ, "ຊາມູເອນ ຊາມູເອນເອີຍ!" ພວກເຮົາຮູ້ວ່ານີ້ແມ່ນພຣະເຈົ້າໃນຮູບແບບຂອງມະນຸດເພາະວ່າເລື່ອງກ່າວວ່າພຣະອົງກຳລັງຢືນຢູ່. ເລື່ອງຍັງບອກພວກເຮົາອີກໃນ (1ຊມອ.3:19) "ພຣະຄຳຂອງພຣະຜູ້ເປັນເຈົ້າ" ໄດ້ມາເຖິງຊາມູເອນເລື້ອຍໆ.

ຄຳວ່າ "ພຣະຄຳຂອງພຣະຜູ້ເປັນເຈົ້າ" ຍັງມາໃນຮູບແບບມະນຸດມາເຖິງຜູ້ທຳນວາຍອີກຄົນໜຶ່ງທີ່ຊື່ວ່າເຢເຣມີຢາ. ໃນເຢເຣມີຢາບົດທີ 1, ເລື່ອງກ່າວວ່າ "ພຣະຄຳ" ໄດ້ມາເຖິງລາວ. ເຢເຣມີຢາໄດ້ລະບຸວ່າ "ພຣະຄຳ" ແມ່ນພຣະເຈົ້າ. ເຢເຣມີຢາໄດ້ກ່າວວ່າພຣະເຈົ້າໄດ້ຈັບມືລາວ (ຢມຢ.1: 1-9).

# ພຣະເຈົ້າໃນຮູບແບບຂອງມະນຸດ

ພຣະເຈົ້າທີ່ປະກົດເປັນມະນຸດທີ່ຈິງແລ້ວມີຢູ່ທົ່ວໄປໃນເລື່ອງພຣະສັນຍາເດີມ. ເຫດການເຫຼົ່ານີ້ໄດ້ເກີດຂຶ້ນດົນນານກ່ອນທີ່ພຣະເຈົ້າຈະມາເປັນມະນຸດຄືພຣະເຢຊູເຈົ້າໄທນາຊາເຣັດ. ເມື່ອທ່ານຄິດກ່ຽວກັບວິທີທີ່ດີທີ່ສຸດສຳລັບພຣະເຈົ້າທີ່ຈະສື່ສານກັບບຸກຄົນ, ວິທີການຂອງພຣະອົງນັ້ນມີຄວາມໝາຍ. ພຣະເຈົ້າແມ່ນແຕກຕ່າງກວ່າພວກເຮົາ. ພຣະຄຳພີບອກວ່າບໍ່ມີມະນຸດຄົນໃດສາມາດເຫັນແກ່ນແທ້ຂອງພຣະເຈົ້າໄດ້. ພຣະສະຫງ່າຣາສີອັນສົມບູນຂອງພຣະເຈົ້າຈະທຳລາຍຄົນນັ້ນ. ເມື່ອຜູ້ຄົນໃນພຣະຄຳພີປະເຊີນກັບພຣະເຈົ້າ, ພວກເຂົາກໍຄາດວ່າຈະຕາຍ(ປຖກ. 32:30; ພບຍ 5:24; ຜປ.6: 22-24). ແຕ່ພວກເຂົາບໍ່ໄດ້ຕາຍ,

ເພາະວ່າພຣະເຈົ້າຊົງຈຳກັດການຊົງສະຖິດຢູ່ຂອງພຣະອົງໃນບາງສິ່ງທີ່ຈິດໃຈຂອງມະນຸດຍອມຮັບໄດ້. ບາງຄັ້ງພຣະເຈົ້າປະກົດ ເປັນໄຟ, ກ້ອນເມກ, ແຕ່ສ່ວນຫຼາຍແລ້ວແມ່ນເປັນມະນຸດ.

ໃນຫຼາຍເລື່ອງ, ການປະກົດຂອງພຣະເຈົ້າໃນຖານະມະນຸດຖືກອະທິບາຍວ່າເປັນການປະເຊີນໜ້າກັບ" ເທວະດາແຫ່ງພຣະຜູ້ເປັນເຈົ້າ" ຍົກຕົວຢ່າງ, ພຣະເຈົ້າໄດ້ປະກົດຕົວແກ່ໂມເຊໃນພຸ່ມໄມ້ທີ່ລຸກໄໝ້ (ອພຍ. 3: 1–3). ເທວະດາຂອງພຣະເຈົ້າໄດ້ກ່າວຈາກພຸ່ມໄມ້ແລະສັນຍາວ່າຈະໃຊ້ໂມເຊນຳພາປະຊາຊົນຂອງພຣະອົງອອກຈາກປະເທດເອຢິບ. ພຣະເຈົ້າໄດ້ປະກົດຕົວຕໍ່ຢາໂຄບທີ່ເຫັນໄດ້ໃນຄວາມຝັນທີ່ເບັດເອນ (ປຖກ. 28:10-22). ພຣະເຈົ້າໄດ້ຖືກລະບຸວ່າເປັນພຣະຜູ້ເປັນພຣະເຈົ້າຢາເວ (Yahweh). ຕໍ່ມາເທວະດາຂອງພຣະເຈົ້າໄດ້ມາຫາຢາໂຄບໃນຄວາມຝັນອີກເທື່ອໜຶ່ງແລະບອກຢາໂຄບວ່າພຣະອົງເປັນພຣະເຈົ້າອົງດຽວກັນທີ່ໄດ້ພົບລາວຢູ່ເບັດເອນກ່ອນໜ້ານີ້ (ປຖກ. 31: 11-12).

ຄູສອນພຣະຄຳພີຫຼາຍຄົນບໍ່ໝັ້ນໃຈທີ່ຈະລະບຸວ່າທູດສະຫວັນອົງນີ້ແມ່ນພຣະເຈົ້າ. ແຕ່ມີຫຼາຍເຫດຜົນທີ່ໜັກແໜ້ນວ່າທູດສະຫວັນອົງນີ້ເປັນພຣະເຈົ້າ. ບາງທີຕົວຢ່າງທີ່ສຳຄັນທີ່ສຸດຈະເກີດຂຶ້ນຫຼັງຈາກພຣະເຈົ້າປະທານພຣະບັນຍັດແກ່ໂມເຊ. ເມື່ອຄົນອິດສະຣາເອນກຽມເດີນທາງໄປສູ່ແຜ່ນດິນແຫ່ງພຣະສັນຍາ, ພຣະເຈົ້າບອກໂມເຊວ່າ:

> ເຮົາຈະໃຊ້ເທວະດານຳໜ້າໄປເພື່ອປົກປັກຮັກສາພວກເຈົ້າໃນການເດີນທາງທັງຈະນຳພວກເຈົ້າໄປບ່ອນທີ່ເຮົາໄດ້ຈັດແຈງໄວ້.ຈົ່ງເອົາໃຈໃສ່ ແລະເຊື່ອຟັງເທວະດາ. ຢ່າຂັດຂືນ ເພາະແມ່ນເຮົາເອງທີ່ເປັນຜູ້ສັ່ງເທວະດານັ້ນ ແລະເພິ່ນຈະບໍ່ຍົກໂທດໃຫ້ແກ່ການຂັດຂືນໃດໆທັງສິ້ນ ເພາະນາມຊື່ຂອງເຮົາຢູ່ໃນເພິ່ນ. ແຕ່ຖ້າພວກເຈົ້າເຊື່ອຟັງເທວະດານັ້ນ ແລະເຮັດຕາມທຸກໆສິ່ງທີ່ເຮົາໄດ້ສັ່ງໄວ້ ເຮົາຈະຕໍ່ສູ້ສັດຕູທັງຫຼາຍຂອງພວກເຈົ້າ. (ອພຍ. 23: 20–22)

ນີ້ບໍ່ແມ່ນເທວະດາທຳມະດາ. ເທວະດາອົງນີ້ສາມາດຕັດສິນໃຈວ່າຈະໃຫ້ອະໄພບາບຫຼືບໍ່. ເທວະດາອົງນີ້ມີນາມຊື່ຂອງພຣະເຈົ້າໃນເພິ່ນ. ການສະແດງອອກນັ້ນແມ່ນແປກ, ແຕ່ມີຄວາມໝາຍສຳຄັນຫຼາຍ. ຄຳວ່າ "ພຣະນາມ" ແມ່ນວິທີການກ່າວເຖິງພຣະເຈົ້າເອງໃນພຣະສັນຍາເດີມ. ເປັນການຊົງສະຖິດຫຼືແກ່ນແທ້ຂອງພຣະເຈົ້າ. ຍົກຕົວຢ່າງ, ອຊຢ.30:27–28 ອະທິບາຍພຣະນາມຂອງພຣະຜູ້ເປັນເຈົ້າວ່າ:

> ພຣະນາມຂອງພຣະເຈົ້າຢາເວເບິ່ງເຫັນໄດ້ແຕ່ໄກ. ໄຟແລະຄວັນຈະສະແດງໃຫ້ເຫັນເຖິງຄວາມໂກດຮ້າຍຂອງພຣະອົງ. ພຣະອົງກ່າວຈາແລະຖ້ອຍຄຳນັ້ນກໍລຸກໄໝ້ຂຶ້ນເປັນໄຟ.ພຣະອົງເຮັດໃຫ້ລົມພັດຢູ່ເບື້ອງໜ້າຂອງພຣະອົງ ດັ່ງກະແສນ້ຳຖ້ວມພັດເອົາທຸກໆສິ່ງໄປ. ມັນກວາດເອົາຊົນຊາດທັງຫລາຍໄປສູ່ຄວາມຈິບຫາຍ ແລະເຮັດໃຫ້ແຜນການອັນຊົ່ວຮ້າຍຂອງພວກເຂົາສິ້ນສຸດລົງ.

ແມ່ນແຕ່ຊາວຢິວທີ່ເຄັ່ງຄັດສາດສະໜາໃນທຸກມື້ນີ້ກໍອ້າງເຖິງພຣະເຈົ້າ ໂດຍການເວົ້າວ່າຮາເຊມ ha-shem (ມັນໝາຍຄວາມວ່າ"ຊື່") ອີກວິທີໜຶ່ງທີ່ຈະຮູ້ວ່າເທວະດາອົງນີ້ແມ່ນພຣະເຈົ້າໃນຮູບແບບຂອງມະນຸດຄືການປຽບທຽບອົບພະຍົບ 23:20-22 ກັບຂໍ້ຄວາມອື່ນໆ. ເທວະດາທີ່ໄດ້ພົບກັບໂມເຊໃນພຸ່ມໄມ້ທີ່ລຸກໄໝ້ນັ້ນແມ່ນເທວະດາທີ່ມີນາມຊື່ຂອງພຣະເຈົ້າຢູ່ພາຍໃນເພິ່ນແລະພຣະອົງໄດ້ນຳຊົນອິດສະຣາເອນອອກຈາກປະເທດເອຢິບແລະເຂົ້າໄປໃນແຜ່ນດິນແຫ່ງພຣະສັນຍາ (ຜປ. 2: 1-3). ແຕ່ວ່າຢູ່ບ່ອນອື່ນບອກວ່າເປັນພຣະເຈົ້າຢາເວຜູ້ທີ່ເຮັດສິ່ງນີ້ (ຢຊ. 24: 17-18). ບ່ອນອື່ນບອກວ່າເປັນການຊົງສະຖິດຢູ່ຂອງພຣະເຈົ້າ (ພບຍ.4: 37-38).

ສະນັ້ນຄຳວ່າ, ພຣະເຈົ້າຢາເວ,ການຊົງສະຖິດຢູ່,ແລະເທວະດາຂອງພຣະຜູ້ເປັນເຈົ້າແມ່ນວິທີການທີ່ແຕກຕ່າງກັນໃນການອະທິບາຍເຖິງບຸກຄົນຜູ້ດຽວກັນນັ້ນຄື: ພຣະເຈົ້າ. ແຕ່ວ່າເທວະດາທີ່ຄົນເຮົາສາມາດເຫັນໄດ້ແມ່ນພຣະເຈົ້າມາໃນຮູບຮ່າງຂອງມະນຸດ.

ເລື່ອງໜຶ່ງໃນພຣະຄຳພີທີ່ເຮັດໃຫ້ຈຸດນີ້ມີນ້ຳໜັກທີ່ສຸດກໍ່ຍັງບໍ່ທັນເປັນທີ່ຮູ້ຈັກຂອງຄົນສ່ວນຫຼາຍ. ມີໜ້ອຍ ຄົນທີ່ເຄີຍສັງເກດເຫັນ . ເປັນເລື່ອງກ່ຽວກັບຢາໂຄບກ່ອນທີ່ລາວຈະຕາຍ. ຢາໂຄບຢາກອວຍພອນລູກຂອງໂຢເຊັບ. ໃນພອນຂອງລາວນັ້ນລາວຈື່ຈຳເຫດການທີ່ແຕກຕ່າງກັນໃນຊີວິດຂອງຕົນເມື່ອລາວໄດ້ພົບກັບພຣະເຈົ້າ. ລາວເລີ່ມຕົ້ນອວຍພອນດ້ວຍວິທີນີ້ (ປຖກ.48: 15-16):

> “ຂໍພຣະເຈົ້າອົງທີ່ພໍ່ຂອງຂ້ານ້ອຍຄືອີຊາກແລະອັບຣາຮາມ ຜູ້ທີ່ບາກບັ່ນຮັບໃຊ້ພຣະອົງ ອວຍພອນເດັກນ້ອຍເຫຼົ່ານີ້
> ຂໍພຣະເຈົ້າອົງທີ່ນຳພາຂ້ານ້ອຍທຸກມື້ນີ້ແລະທຸກເວລາ; ຈົ່ງອວຍພອນເຂົາເຫຼົ່ານີ້ເທີ້ນ
> ຂໍໃຫ້ເທວະດາຕົນທີ່ໄດ້ຊ່ວຍກູ້ເອົາຂ້ານ້ອຍ...

ຫຼັງຈາກນັ້ນ, ຢ່າງບໍ່ໜ້າເຊື່ອ, ໃນຂໍ້ທີ 16 ລາວອະທິຖານວ່າ, "ຈົ່ງອວຍພອນເຂົາເຫຼົ່ານີ້ດ້ວຍ". ລາວບໍ່ໄດ້ເວົ້າວ່າ, "ຂໍໃຫ້ພຣະອົງທັງຫຼາຍອວຍພອນເດັກຊາຍເຫຼົ່ານີ້," ຄືກັບວ່າລາວເວົ້າເຖິງສອງບຸກຄົນທີ່ແຕກຕ່າງກັນຄືພຣະເຈົ້າແລະເທວະດາ. ກົງກັນຂ້າມ, ແຕ່ຢາໂຄບປະສົມປະສານເຂົ້າກັນໃນຄຳອະທິຖານເມື່ອຢາໂຄບເວົ້າວ່າ: ຂໍໃຫ້ພຣະອົງອວຍພອນເດັກຊາຍເຫຼົ່ານີ້.

ສິ່ງທີ່ໜ້າງຶດງໍ້ຍິ່ງກວ່ານັ້ນອີກແມ່ນໃນພຣະທຳພວກຜູ້ປົກຄອງບົດທີ 6, ເປັນເລື່ອງຂອງການຊົງເອີ້ນກີເດໂອນ. ຢູ່ທີ່ນັ້ນມີທັງພຣະຜູ້ເປັນເຈົ້າແລະເທວະດາຂອງພຣະຜູ້ເປັນເຈົ້າໄດ້ພົບກັນໃນເວລາດຽວກັນ (ຜປ. 6: 22-23). ເຖິງແມ່ນວ່າຢູ່ໃນພຣະຄຳພີເດີມ, ພຣະເຈົ້າຊົງມີຫຼາຍກວ່າໜຶ່ງບຸກຄົນ, ແລະໜຶ່ງໃນນັ້ນມັກຈະປະກົດຕົວເປັນຄົນ.

# ພຣະເຢຊູເຈົ້າ: ພຣະຄໍາ, ພຣະນາມແລະເທວະດາ

ຄໍາອະທິບາຍເລື່ອງພຣະເຈົ້າທີ່ຂ້າພະເຈົ້າໄດ້ຂຽນມາເຖິງຕອນນັ້ນໜ້າຈະຟັງແລ້ວຄຸ້ນເຄີຍດີ. ທັງໝົດແມ່ນມາຈາກພຣະສັນຍາເດີມ, ແຕ່ມັນກໍ່ແມ່ນວິທີດຽວກັນທີ່ພຣະສັນຍາໃໝ່ຂຽນກ່ຽວກັບພຣະເຢຊູເຈົ້າ.

ອັບຣາຮາມໄດ້ພົບກັບ"ພຣະຄໍາ", ເຊິ່ງເປັນພຣະເຈົ້າໃນຮູບແບບຂອງມະນຸດ. ໃນໂຢຮັນ 1: 1, ບອກວ່າ: "ເມື່ອຕົ້ນເດີມນັ້ນ ພຣະທໍາຊົງເປັນຢູ່ແລ້ວ ພຣະທໍານັ້ນຊົງສະຖິດຢູ່ກັບພຣະເຈົ້າ ແລະພຣະທໍານັ້ນແຫຼະ ຊົງເປັນພຣະເຈົ້າ. " ໃນຂໍ້ທີ 14, ໂຢຮັນກ່າວວ່າຖ້ອຍຄໍານີ້ "ພຣະທໍາໄດ້ຊົງບັງເກີດເປັນມະນຸດ ແລະອາໄສຢູ່ທ່າມກາງເຮົາ" ເມື່ອຊາວຢິວທີ່ມີຊີວິດຢູ່ໃນສະໄໝທີ່ໂຢຮັນອ່ານເລື່ອງນີ້, ພວກເຂົາຈະຄິດເຖິງເລື່ອງການປະກົດຂອງພຣະເຈົ້າໄດ້ຮັບການອະທິບາຍໄວ້ແນວໃດໃນເລື່ອງຕ່າງໆໃນພຣະສັນຍາເດີມ. ພຣະເຢຊູເຈົ້າຍັງກ່າວວ່າອັບຣາຮາມ "ໄດ້ເຫັນພຣະອົງໃນສະໄໝຂອງເພິ່ນ" ແລະວ່າພຣະອົງມີຊີວິດຢູ່ຕໍ່ໜ້າອັບຣາຮາມ (ຢຮ. 8: 56-58).

ໂມເຊໄດ້ພົບກັບເທວະດາຂອງພຣະຜູ້ເປັນເຈົ້າຄືພຣະເຈົ້າໃນຮູບແບບຂອງມະນຸດ, ໃນພຸ່ມໄມ້ທີ່ລຸກໄໝ້ ແລະໃນເວລາຕໍ່ມາ. ເທວະດາໄດ້ນໍາຄົນອິດສະຣາເອນອອກຈາກເອຢິບເຂົ້າໄປໃນແຜ່ນດິນແຫ່ງພຣະສັນຍາ. ແຕ່ຢູດາໄດ້ຂຽນໃນຈົດໝາຍໃນພຣະສັນຍາໃໝ່ວ່າ "ເຖິງແມ່ນວ່າ ພວກເຈົ້າຮູ້ຂໍ້ຄວາມເຫຼົ່ານີ້ດີແລ້ວກໍຕາມ ເຮົາຢາກໃຫ້ພວກເຈົ້າລະນຶກເຖິງອົງພຣະເຢຊູເຈົ້າ ທີ່ໄດ້ຊ່ວຍກູ້ເອົາຄົນອິດສະຣາເອນໃຫ້ພົ້ນຈາກປະເທດເອຢິບຢ່າງໃດ, ແຕ່ຫລັງຈາກນັ້ນມາໄດ້ທໍາລາຍຄົນເຫຼົ່ານີ້ ທີ່ບໍ່ເຊື່ອໃນພຣະອົງເສຍ." (1: 5) ເທວະດາຕົນນັ້ນແມ່ນພຣະເຈົ້າໃນຮູບຮ່າງຂອງມະນຸດ. ເທວະດາຕົນນັ້ນແມ່ນບຸກຄົນທີສອງຂອງພຣະເຈົ້າສາມພຣະພາກ. ພຣະພາກທີສອງຂອງພຣະເຈົ້າສາມພຣະພາກຕໍ່ມາຈະເກີດມາເປັນມະນຸດຜ່ານທາງນາງມາຣີຍິງພົມມະຈັນ.

ບາງຄັ້ງ, ໃນພຣະສັນຍາໃໝ່, ພຣະເຢຊູເຈົ້າກ່າວກ່ຽວກັບພຣະເຈົ້າພຣະບິດາວ່າເປັນ"ພຣະນາມ". ໃນຄໍາ ອະທິຖານຂອງພຣະອົງຢູ່ສວນເຄັດເຊມາເນ, ກ່ອນທີ່ຈະຖືກຈັບກຸມ, ພຣະເຢຊູເຈົ້າໄດ້ອະທິຖານວ່າ:" ບັດນີ້ ພຣະບິດາເຈົ້າເອີຍ ຂໍໂຜດໃຫ້ຂ້ານ້ອຍມີສະຫງ່າຣາສີຢູ່ຊ້ອງໜ້າພຣະອົງເຖີດ ຄືສະຫງ່າຣາສີທີ່ຂ້ານ້ອຍໄດ້ມີກັບພຣະອົງກ່ອນສ້າງໂລກນັ້ນ.ຂ້ານ້ອຍໄດ້ເຮັດໃຫ້ພຣະນາມຂອງພຣະອົງ ເປັນທີ່ຮູ້ຈັກແກ່ພວກທີ່ຖືກດຶງອອກມາຈາກໂລກ ……ຂ້ານ້ອຍໄດ້ເຮັດໃຫ້ນາມຊື່ຂອງພຣະອົງ ເປັນທີ່ຮູ້ຈັກແກ່ພວກເຂົາ" (ຢຮ.17: 5–6, 26). ພຣະອົງໝາຍຄວາມວ່າແນວໃດໃນຄໍາກ່າວສຸດທ້າຍນັ້ນ? ພຣະເຢຊູເຈົ້າບໍ່ໄດ້ກ່າວວ່າພຣະອົງບອກໃຫ້ປະຊາຊົນຮູ້ນາມຊື່ຂອງພຣະເຈົ້າແມ່ນຫຍັງ. ພວກເຂົາເຈົ້າເປັນຊາວຢິວ. ພວກເຂົາຮູ້ວ່າຊື່ຂອງພຣະເຈົ້າແມ່ນຫຍັງຄືພຣະເຈົ້າຢາເວ. ພວກເຂົາມີພຣະສັນຍາເດີມ. ພວກເຂົາສາມາດເຫັນຊື່ຂອງພຣະເຈົ້າໃນຫຼາຍໆພັນຂໍ້. ເມື່ອພຣະເຢຊູເຈົ້າກ່າວວ່າພຣະອົງສະແດງພຣະນາມຂອງພຣະເຈົ້າແກ່

ປະຊາຊົນ, ພຣະອົງໝາຍຄວາມວ່າພຣະອົງໄດ້ສະແດງພຣະເຈົ້າໃຫ້ແກ່ປະຊາຊົນ. ພຣະເຢຊູເຈົ້າເປັນພຣະເຈົ້າມາເປັນມະນຸດ. ພຣະອົງແມ່ນພຣະນາມຊື່ທີ່ຖືກແຕ່ງຕັ້ງເປັນເນື້ອກາຍ.

## ເຫດຜົນທີ່ເລື່ອງນີ້ສຳຄັນ

ພວກເຮົາໄດ້ມາໄກພໍແລ້ວໃນການສຶກສາຂອງພວກເຮົາທີ່ຈະເຫັນເລື່ອງລາວຂອງພຣະຄຳພີຫຼວງຫຼາຍ. ທຸກໆເລື່ອງໃນພຣະຄຳພີແມ່ນເກີດຂຶ້ນພາຍໃນສົງຄາມຝ່າຍວິນຍານໃນອານາຈັກທີ່ເບິ່ງບໍ່ເຫັນ. ມັນເປັນສົງຄາມໃນຮູບແບບທີ່ຜູ້ມີໄຊຊະນະຈະໄດ້ທຸກສິ່ງລະຫວ່າງບັນດາຜູ້ທີ່ເໜືອທຳມະຊາດ.

ໃນທັດສະນະຂອງພຣະຄຳພີກ່ຽວກັບໂລກທີ່ເບິ່ງບໍ່ເຫັນ, ພຣະເຈົ້າມີສັດຕູທີ່ມີອຳນາດ. ນີ້ແມ່ນວິນຍານທີ່ພຣະເຈົ້າໄດ້ສ້າງຂຶ້ນແລະເຄີຍມີຄວາມພັກດີຕໍ່ພຣະອົງມາກ່ອນ. ແຕ່ວິນຍານເຫຼົ່ານີ້ໄດ້ກະບົດ, ຢາກເຮັດໃນສິ່ງທີ່ຕົນເອງມັກ. ວິນຍານທີ່ກະບົດເຫຼົ່ານີ້ໄດ້ຖືກອະທິບາຍໂດຍໂປໂລວ່າເປັນຜູ້ຄອບຄອງ, ບັນດາຜູ້ມີອຳນາດ ແລະບັນດາເຫຼົ່າວິນຍານຜີຊົ່ວຮ້າຍທັງຫລາຍ ທີ່ຄອບຄອງຢູ່ໃນຍຸກມືດນີ້ໃນໂລກທີ່ເບິ່ງບໍ່ເຫັນ (ອຟຊ. 6:11; ກລຊ.1:16). ພວກເຂົາຍັງຢູ່. ບໍ່ມີບ່ອນໃດໃນພຣະສັນຍາໃໝ່ທີ່ບອກພວກເຮົາວ່າພວກເຂົາໄດ້ຈາກໄປແລ້ວ. ພວກເຂົາຍັງມີຊີວິດຢູ່ແລະຕໍ່ສູ້ເພື່ອຕໍ່ຕ້ານການປົກຄອງຂອງພຣະເຈົ້າ. ພວກເຂົາຕ້ອງການທຳລາຍແຜນການຂອງພຣະເຈົ້າທີ່ຈະຮວມເອົາມະນຸດເຂົ້າໃນຄອບຄົວຂອງພຣະອົງ. ພວກເຂົາພະຍາຍາມສະກັດກັ້ນແລະທຳລາຍຂ່າວປະເສີດບໍ່ໃຫ້ເຜີຍແຜ່ອອກໄປ.

ໜຶ່ງໃນອຳນາດທີ່ມືດນີ້ແມ່ນເຈົ້າແຫ່ງຄວາມຕາຍຄືຊາຕານ. ມັນມີສິດໃນມະນຸດທຸກຄົນ. ນີ້ແມ່ນຍ້ອນວ່າມັນໄດ້ຫຼອກລວງອາດາມແລະເອວາເຊິ່ງເປັນເຫດໃຫ້ພວກເຂົາສູນເສຍຄວາມເປັນອຳມະຕະ. ນັ້ນແມ່ນເປົ້າໝາຍຂອງມັນ. ມັນຕ້ອງການທີ່ຈະກຳຈັດມະນຸດທຸກຄົນທີ່ພຣະເຈົ້າຊົງສ້າງ. ນີ້ແມ່ນສິ່ງທີ່ພວກເຊື້ອສາຍຂອງບັນດາລູກຂອງພຣະເຈົ້າທີ່ກະບົດໄດ້ຄິດໃນຕອນທີ່ຊົນຊາດອິດຣາເອນເຂົ້າໄປໃນດິນແດນການາອານ. ພວກເຂົາຈະຂ້າຄົນອິດສະຣາເອນຫຼືຕໍ່ສູ້ຈົນຕາຍໃນສົງຄາມ. ພວກເຂົາພະຍາຍາມປ້ອງກັນບໍ່ໃຫ້ປະຊາຊົນຂອງພຣະເຈົ້າຄອບຄອງດິນແດນການາອານ. ເມື່ອຄົນອິດສະຣາເອນໄດ້ຮັບໄຊຊະນະໃນການສູ້ຮົບແລະສາມາດເຂົ້າສູ່ດິນແດນໄດ້, ເປົ້າໝາຍຂອງອຳນາດມືດຍັງຄົງແນໃສ່ການທຳລາຍຄົນອິດສະຣາເອນ, ແຕ່ພວກເຂົາເຫັນວ່າພວກເຂົາຕ້ອງປ່ຽນຍຸດທະສາດ. ດຽວນີ້ພວກເຂົາພະຍາຍາມລໍ້ລວງຄົນອິດສະຣາເອນໃຫ້ໄປນະມັດສະການພະອື່ນ. ພວກວິນຍານກະບົດຫວັງວ່າພຣະເຈົ້າຈະຕັດສິນໃຈລົງໂທດອິດສະຣາເອນແລະ ທຳລາຍພວກເຂົາ. ຄົນອິດສະຣາເອນໄດ້ເລີ່ມຕົ້ນໄປຂາບໄຫວ້ນະມັດສະການພະອື່ນໆ. ພຣະເຈົ້າໄດ້ຕັດສິນໃຈທີ່ຈະລົງໂທດຄົນອິດສະຣາເອນ, ແຕ່ພຣະອົງບໍ່ໄດ້ທຳລາຍພວກເຂົາ. ແຕ່ພຣະອົງໄດ້ສົ່ງປະຊາກອນຂອງພຣະອົງອອກຈາກດິນແດນຂອງພວກເຂົາໃຫ້ໄປເປັນຊະເລີຍ.

ອຳນາດແຫ່ງຄວາມມືດຮູ້ບາງຢ່າງອີກ. ພຣະເຈົ້າຈະບໍ່ປະຖິ້ມແຜນການຂອງພຣະອົງ. ຄຳສາບແຊ່ງກ່ຽວກັບຜູ້ກະບົດດັ້ງເດີມຄື ງູ(ຊາຕານ)ໄດ້ບອກລ່ວງໜ້າວ່າມື້ໜຶ່ງເຊື້ອສາຍຂອງເອວາຈະປາກົດຕົວ. ເຊື້ອສາຍຄົນນີ້ຈະແກ້ໄຂຜົນຂອງຄວາມລົ້ມເຫຼວຂອງອາດາມໃນສວນເອເດນ. ພວກວິນຍານກະບົດຮູ້ວ່າມື້ໜຶ່ງຜູ້ທີ່ໄດ້ສັນຍາໄວ້ນັ້ນຈະມາປະກົດຕົວ. ແຕ່ຄືກັບທີ່ໂປໂລໄດ້ບອກພວກເຮົາ, ພວກເຂົາບໍ່ຮູ້ຢ່າງຊັດເຈນວ່າພຣະເຈົ້າກຳລັງວາງແຜນຫຍັງ (1 ກຣທ. 2: 6;8; ອຟຊ. 3:10; 6:12). ພຣະເຈົ້າຊົງມີແຜນການແຕ່ພຣະອົງໄດ້ເຊື່ອງລາຍລະອຽດໄວ້ຈຶ່ງບໍ່ມີໃຜຮູ້ວ່າຈະເກີດຫຍັງຂຶ້ນ.

# ບົດທີ 7

# ກົດເກນຂອງສົງຄາມ

**ເຖິງ**ຕອນນີ້ພວກເຮົາໄດ້ຮຽນຮູ້ຫຍັງແດ່? ຢູ່ທີ່ວິຫານບາເບນ, ພຣະເຈົ້າຢຸດການເຊື່ອມຕໍ່ໂດຍກົງກັບປະຊາຊົນຂອງປະເທດຕ່າງໆທີ່ຕ້ອງການສ້າງວິຫານຂອງຕົນເອງ. ສະມາຊິກຂອງສະພາວິນຍານຂອງພຣະເຈົ້າໄດ້ຖືກມອບໝາຍໃຫ້ປົກຄອງປະຊາຊາດຕ່າງໆແລະໄດ້ຮັບສິດອຳນາດເໜືອພວກເຂົາ, ແຕ່ຕໍ່ມາວິນຍານເຫຼົ່ານີ້ໄດ້ກະບົດຈາກແຜນຂອງພຣະເຈົ້າ (ພບຍ.32: 8–9). ພຣະເຈົ້າໄດ້ເລີ່ມຕົ້ນຊົນຊາດໃໝ່ຂອງພຣະອົງເອງຄືອິດສະຣາເອນໂດຍມີອັບຣາຮາມເປັນພໍ່. ພຣະເຈົ້າໄດ້ກ່າວຢ່າງຈະແຈ້ງວ່າພຣະອົງໄດ້ວາງແຜນທີ່ຈະຍຶດເອົາບັນດາປະຊາຊາດທີ່ກະບົດຄືນມາໂດຍໃຊ້ອິດທິພົນຂອງອິດສະຣາເອນ (ປຖກ.12: 3). ແຕ່ພວກວິນຍານທີ່ກະບົດຜູ້ປົກຄອງປະເທດຕ່າງໆຈະຕ້ອງຖືກບັງຄັບໃຫ້ຍອມຈຳນົນອຳນາດແລະສິດອຳນາດຂອງພວກເຂົາ (ພສສ. 82: 6–8). ນັ້ນໝາຍຄວາມວ່າຈະມີສົງຄາມທັງໃນອານາຈັກທາງກາຍແລະອານາຈັກວິນຍານ. ທັນທີທີ່ມີປະຊາຊົນເອີ້ນວ່າຄົນອິດສະຣາເອນ, ພວກເຂົາເຈົ້າໄດ້ກາຍເປັນເປົ້າໝາຍທີ່ຈະຖືກທຳລາຍໂດຍພວກຜູ້ປົກຄອງທີ່ເໜືອທຳມະຊາດ.

## ພຣະເຈົ້າຢາເວແມ່ນໃຜ?

ໃນໄລຍະຕົ້ນໆໃນປະຫວັດສາດຂອງອິດສະຣາເອນ, ປະຊາຊົນຕົກຢູ່ໃນສະພາບທີ່ອັນຕະລາຍ. ເລື່ອງຂອງໂຢເຊັບ (ປຖກ. 37–50) ອະທິບາຍວ່າເປັນຫຍັງຄົນອິດສະຣາເອນຈຶ່ງໄປປະເທດເອຢິບ. ການເບິ່ງແຍງຂອງພຣະເຈົ້າຕໍ່ໂຈເຊັບໄດ້ປ່ຽນການທຳຮ້າຍທີ່ເຈດຕະນາໂດຍອ້າຍນ້ອງຂອງລາວໃຫ້ເປັນການຊ່ວຍຊີວິດຄົນອິດສະຣາເອນໃຫ້ພົ້ນຈາກຄວາມອຶດຢາກ (ປຖກ. 46: 3–4; 50:20). ພຣະເຈົ້າບໍ່ໄດ້ບອກຄົນອິດສະຣາເອນອອກຈາກປະເທດເອຢິບທັນທີດັ່ງນັ້ນເຂົາເຈົ້າຈຶ່ງຢູ່ຕໍ່. ພຣະເຈົ້າຮູ້ດີວ່າກະສັດຟາໂຣທີ່ແຕ່ງຕັ້ງໂຢເຊັບເຂົ້າຮັບຕຳແໜ່ງການປົກຄອງລະດັບສູງຈະຕ້ອງຕາຍ ແລະຖືກແທນໂດຍສັດຕູຂອງຄົນອິດສະຣາເອນ (ອພຍ. 1). ພຣະເຈົ້າຮູ້ວ່າກະສັດຟາໂຣຄົນໃໝ່ຈະເຮັດໃຫ້ຄົນອິດສະຣາເອນຖືກບັງຄັບໃຫ້ເຮັດວຽກໜັກ (ປຖກ. 15:13–16). ພຣະເຈົ້າໄດ້ວາງແຜນທີ່ຈະຊ່ວຍເຫຼືອອິດສະຣາເອນໃນເວລາທີ່ເໝາະສົມ(ປຖກ. 46: 4).

ແຕ່ເປັນຫຍັງພຣະເຈົ້າຈຶ່ງລໍຖ້າດົນນານແທ້ ? ພຣະເຈົ້າມີເຫດຜົນທີ່ດີສະເໝີໃນການປ່ອຍໃຫ້ມີຄວາມທຸກທໍລະມານເກີດຂຶ້ນ. ພວກເຮົາບໍ່ສາມາດຮູ້ເຫດຜົນໄດ້ສະເໝີໄປ. ໃນກໍລະນີນີ້, ພຣະຄຳພີບອກພວກເຮົາວ່າເປັນຫຍັງອິດສະຣາເອນຕ້ອງທົນທຸກທໍລະມານເປັນຂ້າທາດ.

ຫຼັງຈາກໂມເຊໄດ້ໜີຈາກປະເທດເອຢິບແລະຫຼັງຈາກນັ້ນໄດ້ອາໄສຢູ່ໃນຖິ່ນແຫ້ງແລ້ງກັນດານເປັນເວລາ 40 ປີ, ພຣະເຈົ້າໄດ້ເອີ້ນລາວຈາກພຸ່ມໄມ້ທີ່ມີໄຟລຸກ (ອພຍ. 3: 1–14). ພຣະເຈົ້າບອກໂມເຊວ່າລາວກຳລັງຖືກສົ່ງກັບໄປອີຢິບ. ຄຳແນະນຳຂອງພຣະເຈົ້າແມ່ນງ່າຍດາຍຄື: ບອກກະສັດຟາໂຣໃຫ້“ ປ່ອຍປະຊາຊົນຂອງເຮົາໄປ” (ອພຍ. 5: 1). ກະສັດຟາໂຣບໍ່ເຫັນດີແລະບໍ່ໄດ້ເຮັດເຊັ່ນນັ້ນ. ກະສັດຟາໂຣແລະຊາວອີຢິບເຊື່ອວ່າກະສັດຟາໂຣແມ່ນເທບພະເຈົ້າໃນຮ່າງຂອງມະນຸດ. ກະສັດຟາໂຣແມ່ນສັນຍາລັກຂອງຄວາມຮຸ່ງເຮືອງແລະອຳນາດຂອງເອຢິບ. ປະເທດເອຢິບແມ່ນປະເທດທີ່ມີອຳນາດຫຼາຍທີ່ສຸດໃນໂລກໃນເວລານີ້. ກະສັດຟາໂຣຈະບໍ່ປ່ອຍໃຫ້ພຣະເຈົ້າທີ່ເບິ່ງບໍ່ເຫັນຂອງທາດຊາວເຮັບເຣີມາບອກເພິ່ນວ່າຕ້ອງເຮັດຫຍັງ. ກະສັດຟາໂຣບໍ່ຮູ້ວ່າພຣະເຈົ້າຂອງໂມເຊມີຈິງຫຼືບໍ່. ເພິ່ນຈຶ່ງເວົ້າເຍາະເຍີ້ຍໂມເຊແລະເວົ້າວ່າ, “ພຣະເຈົ້າຢາເວແມ່ນໃຜ? ເປັນຫຍັງເຮົາຈະຕ້ອງຟັງ ແລະປ່ອຍປະຊາຊົນພວກນີ້ໄປ?”(ອພຍ. 5: 2).

ອີກບໍ່ດົນກະສັດຟາໂຣກໍຈະຮັບບົດຮຽນທີ່ເຈັບປວດຫຼາຍ. ພຣະເຈົ້າຮູ້ວ່າທ່າທີຂອງກະສັດຟາໂຣຈະເປັນແນວໃດ. ພຣະເຈົ້າໄດ້ບອກໂມເຊວ່າ, "ເຮົາຈະເຮັດໃຫ້ໃຈຂອງກະສັດຟາໂຣແຂງກະດ້າງດື້ດຶງ ແລະບໍ່ຍອມປ່ອຍໃຫ້ປະຊາຊົນໄປ" (ອພຍ. 4:21). ພຣະເຈົ້າຕ້ອງການຢາກໃຊ້ການຕໍ່ສູ້ນີ້ເພື່ອຈຸດປະສົງຂອງພຣະອົງ. ປະເທດເອຢິບໄດ້ກົດຂີ່ຂົ່ມເຫັງຄົນອິດສະຣາເອນເປັນຂ້າທາດເປັນເວລາສີ່ສັດຕະວັດ. ພຣະເຈົ້າຕັດສິນໃຈວ່າມັນເຖິງເວລາແລ້ວທີ່ປະເທດເອຢິບແລະເທບພະເຈົ້າຂອງເຂົາຈະຖືກລົງໂທດ. ຫົວໃຈທີ່ແຂງກະດ້າງຂອງຟາໂຣແມ່ນສ່ວນໜຶ່ງຂອງແຜນການພຣະເຈົ້າ. ພຣະຄຳພີກ່າວວ່າພຣະເຈົ້າໄດ້ສົ່ງໄພພິບັດຕ່າງໆມາຕໍ່ສູ້ກັບບັນດາພະຂອງເອຢິບ. ໄພພິບັດສຸດທ້າຍແມ່ນການຕາຍຂອງລູກກົກ (ກຈ.12: 12; ຈບຊ. 33: 4). ເມື່ອລູກຊາຍຂອງກະສັດຟາໂຣຕາຍ, ມັນສະແດງໃຫ້ເຫັນວ່າເທບພະເຈົ້າຂອງເອຢິບບໍ່ມີອຳນາດຄືກັບພຣະເຈົ້າຂອງອິດສະຣາເອນ. “ແລ້ວໃນຕອນທ່ຽງຄືນ ພຣະເຈົ້າຢາເວກໍໄດ້ຂ້າລູກຊາຍກົກທັງໝົດໃນປະເທດເອຢິບ ຕັ້ງແຕ່ລູກຊາຍກົກຂອງກະສັດຟາໂຣຜູ້ທີ່ຈະສືບບັນລັງ ເຖິງລູກຊາຍກົກຂອງນັກໂທດຜູ້ທີ່ຖືກຄຸມຂັງຢູ່ໃນຄຸກມືດ; ລູກສັດໂຕເຖິກຫົວປີກໍໄດ້ຖືກຂ້າຄືກັນ. ” (ອພຍ. 12: 29).

ກະສັດຟາໂຣໄດ້ເຍາະເຍີ້ຍພຣະເຈົ້າ. ບັດນີ້ກະສັດຟາໂຣເຂົ້າໃຈແລ້ວວ່າໃຜມີອຳນາດແທ້ໆ. ດັ່ງທີ່ໂປໂລຊຽນວ່າ,“ ຢ່າເຂົ້າໃຈຜິດ ພວກເຈົ້າຈະຫຼອກລວງພຣະເຈົ້າບໍ່ໄດ້ ເພາະວ່າຜູ້ໃດຫວ່ານສິ່ງໃດລົງ ກໍຈະເກັບກ່ຽວສິ່ງນັ້ນ. (ຄລຕ. 6: 7). ການຕີສອນທີ່ປະເທດເອຢິບໄດ້ຮັບ, ຈົນໃນທີ່ສຸດພວກເຂົາກໍຍອມທີ່ຈະປ່ອຍອິດສະຣາເອນແລະເຮັດໃຫ້ປະເທດອື່ນໆເຄົາລົບຢຳເກງພຣະເຈົ້າຂອງອິດສະຣາເອນ.

ປະຊາຊົນທີ່ຢູ່ໄກເຊັ່ນຊາວການາອານກໍໄດ້ຍິນກ່ຽວກັບການທຸບຕີອັນເປັນຕາຢ້ານທີ່ພຣະເຈົ້າຂອງອິດສະຣາເອນໄດ້ສັ່ງສອນປະເທດອີຢິບແລະເທບພະເຈົ້າຂອງພວກເຂົາ (ຢຊ. 2: 8-10;ທຽບກັບ ອພຍ. 15:16-18;ຢຊ.9:9 ) ເຢທະໂຣ, ພໍ່ເຖົ້າຂອງໂມເຊຜູ້ທີ່ມາຈາກມີດີອານ, ໄດ້ອະທິບາຍເຖິງສິ່ງທີ່ທຸກຄົນເຂົ້າໃຈໃນຕອນນີ້ວ່າ: "ບັດນີ້ ຂ້ອຍຮູ້ແລ້ວວ່າ ພຣະເຈົ້າຢາເວຍິ່ງໃຫຍ່ກວ່າພະທັງຫຼາຍ " (ອພຍ.18:11).

ຕໍ່ມາຫຼັງຈາກກອງທັບທີ່ມີອຳນາດຂອງເອຢິບໄລ່ຕາມອິດສະຣາເອນ, ແຕ່ຖືກທຳລາຍໃນທະເລແດງ. ໂມເຊຖາມຄຳຖາມທີ່ເຍາະເຍີ້ຍກະສັດຟາໂຣແລະກອງທັບທີ່ຕາຍຂອງເພິ່ນວ່າ: ຂ້າແດ່ພຣະເຈົ້າຢາເວ ໃນບັນດາພະທັງຫຼາຍນັ້ນໃຜແດ່ຄືພຣະອົງ? (ອພຍ.15:11).

ຫຼັງຈາກໜີອອກຈາກປະເທດເອຢິບແລະຂ້າມທະເລແດງແລ້ວ, ຄົນອິດສະຣາເອນຮູ້ວ່າພວກເຂົາກຳລັງມຸ້ງ ໜ້າໄປບ່ອນໃດ. ພວກເຂົາໄດ້ໄປພົບພຣະເຈົ້າຂອງພວກເຂົາທີ່ບ້ານແລະສຳນັກງານໃຫຍ່ຂອງພຣະອົງຄືພູເຂົາຊີນາຍ.

ເຖິງແມ່ນວ່າຄົນອິດສະຣາເອນບໍ່ຮູ້ຫຼາຍກ່ຽວກັບພຣະເຈົ້າ. ໃນສະໄໝນັ້ນບໍ່ມີພຣະຄຳພີ, ຄວາມຮູ້ດຽວທີ່ຄົນອິດສະຣາເອນມີກ່ຽວກັບພຣະເຈົ້າແມ່ນເລື່ອງຕ່າງໆທີ່ໄດ້ຖືກຖ່າຍທອດຈາກບັນພະບຸລຸດຂອງພວກເຂົາ. ມັນເປັນເວລາ 400 ປີແລ້ວທີ່ພຣະເຈົ້າໄດ້ພົບກັບອັບຣາຮາມ, ອີຊາກແລະຢາໂຄບ. ການອ່ານເລື່ອງໃນພຣະຄຳພີປະຈຸບັນນີ້, ພວກເຮົາກໍສາມາດເຫັນແຜນການຂອງພຣະເຈົ້າ. ຄົນອິດສະຣາເອນມີຫຼາຍຢ່າງທີ່ຕ້ອງຮຽນຮູ້ກ່ຽວກັບພຣະເຈົ້າ. ພູເຂົາຊີນາຍກຳລັງຈະເປັນຫ້ອງຮຽນຂອງພວກເຂົາ.

## ຊົນຊາດອິດສະຣາເອນເປັນຄອບຄົວຂອງພຣະເຈົ້າແລະເປັນຕົວແທນຂອງພຣະເຈົ້າຢູ່ໃນໂລກ

ກ່ອນທີ່ອິດສະຣາເອນອອກຈາກເອຢິບ, ໂມເຊຢືນຢູ່ຕໍ່ກະສັດຟາໂຣແລະໄດ້ບອກເພິ່ນວ່າພຣະເຈົ້າຢາເວກ່າວດັ່ງນີ້: 'ຊາດອິດສະຣາເອນເປັນລູກຊາຍກົກຂອງເຮົາ....ໃຫ້ປ່ອຍພວກເຂົາໄປນະມັດສະການເຮົາ' (ອພຍ.4:22–23). ຄວາມຄິດທີ່ວ່າພຣະເຈົ້າທີ່ມີລູກຊາຍເປັນສິ່ງສຳຄັນ. ໃນກໍລະນີນີ້ໝາຍເຖິງເຊື້ອສາຍຂອງອັບຣາຮາມທັງໝົດ.ຈົ່ງຈື່ໄວ້ວ່າອາດາມກໍ່ແມ່ນລູກຂອງພຣະເຈົ້າເພາະວ່າພຣະເຈົ້າໄດ້ສ້າງລາວ.

ພຣະເຈົ້າຕ້ອງການຄອບຄົວມະນຸດ. ພຣະເຈົ້າວາງແຜນທີ່ຈະຢູ່ເທິງແຜ່ນດິນໂລກຮ່ວມກັບມະນຸດທີ່ພຣະອົງສ້າງ. ພຣະເຈົ້າຕ້ອງການໃຫ້ຄອບຄົວວິນຍານທີ່ເບິ່ງບໍ່ເຫັນຂອງພຣະອົງແລະຄອບຄົວມະນຸດຢູ່ຮ່ວມກັບພຣະອົງແລະຮັບໃຊ້ພຣະອົງ. ພຣະເຈົ້າຕ້ອງການໃຫ້ມະນຸດເພີ່ມທະວີຈຳນວນແລະໃຫ້ແຜ່ນດິນໂລກທັງໝົດ ກາຍເປັນຄືກັບສວນເອເດນ. ແຕ່ວ່າຕອນທີ່ມະນຸດໄດ້ກະບົດຕໍ່ແຜນການນີ້ທີ່ວິຫານບາເບນ, ພຣະເຈົ້າກໍໄດ້ປະຖິ້ມມະນຸດ. ຕອນນີ້ພຣະເຈົ້າບໍ່ມີລູກເຫຼືອຢູ່. ແຕ່ຫຼັງຈາກນັ້ນພຣະອົງໄດ້ເອີ້ນອັບຣາຮາມ. ເຊື້ອສາຍຂອງອັບຣາຮາມຈະກາຍເປັນຊົນຊາດໃໝ່ນັ້ນຄືອິດສະຣາເອນແລະພວກເຂົາເຈົ້າຈະເປັນຄອບຄົວໃໝ່ຂອງພຣະເຈົ້າ. ເຖິງເວລາທີ່ແຜນການດັ້ງເດີມທີ່ກ້າວໄປຂ້າງໜ້າອີກຄັ້ງ. ອາດາມແລະເອວາເຄີຍເປັນພຣະລັກສະນະ ຂອງພຣະເຈົ້າຢູ່ໃນໂລກແຕ່ວ່າພວກເຂົາລົ້ມເຫຼວ, ສະນັ້ນອິດສະຣາເອນຈະມາຮັບຕຳແໜ່ງດັ່ງກ່າວ.

ການກັບໄປທີ່ພູເຂົາຊີນາຍແມ່ນການກັບບ້ານ. ແມ່ນແຕ່ສະມາຊິກສະພາຢູ່ເທິງສະຫວັນກໍຢູ່ທີ່ນັ້ນແລະກໍາ ລັງເຝົ້າເບິ່ງຕາມແຜນການຂອງພຣະເຈົ້າທີ່ຖືກນໍາກັບມາໃຊ້ໃໝ່. ພວກເຂົາເຈົ້າເປັນພະຍານໃນສັນຍາສະບັບໃໝ່ລະຫວ່າງພຣະເຈົ້າແລະປະຊາຊົນຂອງພຣະອົງ. ຂໍ້ຕົກລົງດັ່ງກ່າວເອີ້ນວ່າພຣະບັນຍັດ

# ພຣະບັນຍັດຂອງພຣະເຈົ້າຄືໄດ້ຖືກສົ່ງມອບໂດຍສະພາຂອງພຣະເຈົ້າ

ທ່ານປະຫຼາດໃຈບໍເມື່ອຂ້າພະເຈົ້າໄດ້ກ່າວວ່າສະມາຊິກສະພາສະຫວັນກໍຢູ່ທີ່ພູເຂົາຊີນາຍ. ເມື່ອພຣະເຈົ້າປະທານພຣະບັນຍັດສິບປະການ? ຖ້າທ່ານເຄີຍເບິ່ງຮູບເງົາກ່ຽວກັບການອົບພະຍົບແລະພູເຂົາຊີນາຍ, ທ່ານຈະບໍ່ໄດ້ເຫັນສະມາຊິກສະພາວິນຍານຂອງພຣະເຈົ້າ. ແຕ່ພຣະຄໍາພີບອກວ່າພວກເຂົາຢູ່ທີ່ນັ້ນ. ແລະຍັງບອກວ່າພວກເຂົາໄດ້ສົ່ງມອບກົດບັນຍັດຂອງພຣະເຈົ້າ (ກຈ.7: 52– 53; ຮຣ. 2: 1–2).

ພຣະຄໍາພີຍັງກ່າວອີກວ່າກົດບັນຍັດຖືກຂຽນໄວ້"ດ້ວຍພຣະຫັດຂອງພຣະເຈົ້າ" (ພບຍ. 9:9–10). ຄໍາເວົ້າແບບນັ້ນຄວນຈະຄຸ້ນເຄີຍກັນ. ພຣະເຈົ້າປະກົດກາຍໃນຮູບແບບຂອງມະນຸດແລະມີນິ້ວມື. ພຣະເຈົ້າຢູ່ເທິງພູຊີນາຍ, ປາກົດຕົວເປັນມະນຸດ. ເລື່ອງນີ້ຄ້າຍຄືກັບເລື່ອງລາວໃນປະຖົມມະການກ່ຽວກັບເທວະດາຂອງອົງພຣະຜູ້ເປັນເຈົ້າ. ພຣະອົງແລະສະພາສະຫວັນຂອງພຣະອົງໄດ້ມອບພຣະບັນຍັດແກ່ໂມເຊແລະອິດສະຣາເອນ

ຫຼັງຈາກໄດ້ໃຫ້ພຣະບັນຍັດແລ້ວ, ໂມເຊ, ອາໂຣນ, ລູກຊາຍຂອງອາໂຣນ, ແລະຜູ້ເຖົ້າແກ່ຂອງຄົນອິດສະຣາເອນເຈັດສິບຄົນໄດ້ຖືກເຊື້ອເຊີນໃຫ້ເຂົ້າໄປພົບພຣະເຈົ້າຂອງອິດສະຣາເອນໃນຮູບແບບມະນຸດອີກເທື່ອນີ້ພວກເຂົາໄດ້ມາປະຊຸມຮ່ວມກັນເພື່ອຮັບປະທານອາຫານ (ອພຍ.24: 9-11). ຄືກັນກັບອາຫານແລງຄັ້ງສຸດທ້າຍ, ເມື່ອພຣະເຢຊູເຈົ້າເລີ່ມຕັ້ງພຣະສັນຍາໃໝ່ທີ່ຖືກຈາລຶກໄວ້ໂດຍເລືອດຂອງພຣະອົງ, ອາຫານຄາບນີ້ຢູ່ທີ່ພູເຂົາຊີນາຍໄດ້ສະຫຼອງພັນທະສັນຍາໃໝ່ຂອງພຣະເຈົ້າກັບອິດສະຣາເອນ. ຂໍ້ຕົກລົງສະບັບໃໝ່ນີ້ເລີ່ມຕົ້ນຢູ່ເທິງພູເຂົາຊີນາຍແລະຖືກເອີ້ນວ່າພຣະບັນຍັດ.

ພຣະເຈົ້າໄດ້ໃຫ້ພຣະບັນຍັດແກ່ຄົນອິດສະຣາເອນເພື່ອວ່າພວກເຂົາຈະ" ບໍລິສຸດ" (ລລວ.19: 2). ບໍລິສຸດໝາຍເຖິງຖືກແຍກອອກມາຈາກຄົນອື່ນ. ໃຫ້ແຕກຕ່າງ. ໃຫ້ເປັນທີ່ພິເສດ. ພຣະເຈົ້າແມ່ນແຕກຕ່າງໂດຍສິ້ນເຊີງຈາກວິນຍານອື່ນໆແລະແຕກຕ່າງຈາກທຸກຢ່າງໃນໂລກ. ສະນັ້ນ, ປະຊາຊົນຂອງພຣະເຈົ້າກໍ່ຈໍາເປັນຕ້ອງແຕກຕ່າງຈາກປະຊາຊາດອື່ນໆອີກດ້ວຍ.

ການເປັນຄົນບໍລິສຸດໝາຍຄວາມວ່າແນວໃດ? ແນວຄິດທີ່ຢູ່ເບື້ອງຫຼັງແມ່ນຫຍັງ? ຄວາມບໍລິສຸດບໍ່ໄດ້ໝາຍ ຄວາມວ່າເປັນເລື່ອງແປກ. ບໍລິສຸດໝາຍເຖິງຖືກກໍານົດໂດຍພຣະເຈົ້າ. ໝາຍເຖິງການອຸທິດໃຫ້ແກ່ພຣະເຈົ້າ. ໝາຍເຖິງການໄດ້ຮັບສິ່ງທີ່ດີໆທັງໝົດໃນຊີວິດເຊິ່ງມາຈາກພຣະເຈົ້າໃນທາງທີ່ເໝາະສົມ.

ພຣະເຈົ້າຕ້ອງການໃຫ້ອິດສະຣາເອນດຶງດູດເອົາຊົນຊາດອື່ນໆມາຫາພຣະອົງ (ພບຍ. 4: 6–8; 28: 9–10). ນີ້ແມ່ນເຫດຜົນທີ່ວ່າພຣະຄໍາພີກ່າວວ່າອິດສະຣາເອນຈະຕ້ອງເປັນ "ອານາຈັກແຫ່ງປະໂຣຫິດ" (ອພຍ.19: 6) ແລະ "ແສງສະຫວ່າງສໍາລັບປະຊາຊາດ" (ອຊຢ. 42: 6; 49: 6; 3). ອິດສະຣາເອນທັງໝົດສືບທອດຕໍາແໜ່ງຂອງອັບຣາຮາມ. ພວກເຂົາຕ້ອງເປັນພອນໃຫ້ແກ່ທຸກໆປະຊາຊາດ (ປຖກ.12: 3).

# ຄວາມເຊື່ອທີ່ສັດຊື່

ການມີຄວາມສໍາພັນທີ່ຖືກຕ້ອງກັບພຣະເຈົ້າແມ່ນອີກວິທີໜຶ່ງຂອງການອະທິບາຍຄວາມໝາຍຂອງການມີຄວາມລອດພົ້ນ. ພວກເຮົາອາດຈະໄດ້ຮັບການສິດສອນວ່າອິດສະຣາເອນໄດ້ຮັບຄວາມພົ້ນໂດຍການເຊື່ອຟັງພຣະບັນຍັດ, ແຕ່ນີ້ບໍ່ຖືກຕ້ອງ. ໃນພຣະສັນຍາເດີມແລະໃນພຣະສັນຍາໃໝ່ບໍ່ເຄີຍສອນວ່າຄວາມພົ້ນສາມາດໄດ້ຮັບຜ່ານທາງພຣະບັນຍັດ. ພວກເຮົາບໍ່ສົມຄວນໄດ້ຮັບຄວາມພົ້ນ. ຄວາມພົ້ນແມ່ນໄດ້ຮັບໂດຍບໍ່ເສຍຄ່າໂດຍພຣະຄຸນຂອງພຣະເຈົ້າເມື່ອພວກເຮົາເຊື່ອ.

ຄົນອິດສະຣາເອນກໍຄືກັນກັບພວກເຮົາໃນປະຈຸບັນນີ້, ຕ້ອງມີຄວາມເຊື່ອ. ພວກເຂົາເຈົ້າຕ້ອງເຊື່ອວ່າພຣະເຈົ້າຂອງພວກເຂົາແມ່ນພຣະເຈົ້າເໜືອບັນດາພະອື່ນໆ. ພວກເຂົາຕ້ອງໄວ້ວາງໃຈວ່າພຣະເຈົ້າໄດ້ເຮັດໃຫ້ຊົນຊາດຂອງພວກເຂົາເປັນຄົນພິເສດຂອງພຣະອົງ. ຄົນອິດສະຣາເອນຊາດດຽວເທົ່ານັ້ນທີ່ສາມາດເຂົ້າເຖິງພຣະເຈົ້າແຫ່ງເທບພະເຈົ້າທັງປວງໄດ້. ພຣະບັນຍັດບໍ່ແມ່ນວິທີທີ່ຄົນອິດສະຣາເອນສາມາດໄດ້ຮັບຄວາມພົ້ນໄດ້.

ໂດຍການເຊື່ອຟັງພຣະບັນຍັດ, ພວກເຂົາສະແດງຄວາມຈົງຮັກພັກດີຕໍ່ພຣະເຈົ້າທີ່ພວກເຂົາເຊື່ອຢູ່ແລ້ວ. ຄວາມພົ້ນສໍາລັບຄົນອິດສະຣາເອນນັ້ນກ່ຽວກັບຄວາມເຊື່ອໃນພຣະສັນຍາແລະເຊື່ອໃນພຣະລັກສະນະຂອງພຣະເຈົ້າເໜືອເທບພະເຈົ້າທັງປວງ. ນັ້ນໝາຍຄວາມວ່າພວກເຂົາປະຕິເສດທີ່ຈະນະມັດສະການພະອື່ນໆ. ການໄດ້ຮັບຄວາມພົ້ນແມ່ນກ່ຽວກັບຄວາມເຊື່ອແລະຄວາມສັດຊື່ທີ່ມາຈາກໃຈຂອງພວກເຂົາ. ມັນບໍ່ມີຫຍັງກ່ຽວຂ້ອງກັບການໄດ້ເຮັດຄຸນງາມຄວາມດີຕໍ່ພຣະເຈົ້າ.

ຕໍ່ມາກະສັດດາວິດໄດ້ເຮັດສິ່ງທີ່ເປັນຕາຢ້ານຫຼາຍຢ່າງເຊັ່ນ: ການຫລິ້ນຊູ້ແລະວາງແຜນຄາດຕະກໍາແລະເພິ່ນຖືກລົງໂທດຈາກພຣະເຈົ້າສໍາລັບການກະທໍາເຫຼົ່ານີ້ (2 ຊມອ.11). ອີງຕາມພຣະບັນຍັດ, ດາວິດເປັນຜູ້ກະທໍາຜິດແລະສົມຄວນໄດ້ຮັບຄວາມຕາຍຍ້ອນອາຊະຍາກໍາຂອງເພິ່ນ. ແຕ່ດາວິດບໍ່ເຄີຍຄອນແຄນໃນຄວາມເຊື່ອຂອງເພິ່ນໃນພຣະເຈົ້າຢາເວໃນຖານະເປັນພຣະເຈົ້າຜູ້ສູງສຸດ. ເພິ່ນບໍ່ເຄີຍປ່ຽນຄວາມສັດຊື່ໄປຫາພະອົງອື່ນ. ແລະພຣະເຈົ້າມີຄວາມເມດຕາຕໍ່ດາວິດເມື່ອເພິ່ນສາລະພາບບາບຂອງເພິ່ນ.

ເຊັ່ນດຽວກັບໃນພຣະສັນຍາໃໝ່. ຄວາມເຊື່ອໃນຂ່າວປະເສີດໝາຍເຖິງການເຊື່ອວ່າພຣະເຈົ້າແຫ່ງອິດສະຣາເອນໄດ້ສະເດັດມາເປັນມະນຸດ. ເປັນຜູ້ຊາຍທີ່ຊື່ພຣະເຢຊູເຈົ້າ, ໄດ້ຍອມຕາຍເທິງໄມ້ກາງແຂນເພື່ອເປັນເຄື່ອງບູຊາເພື່ອບາບຂອງເຮົາ. ຫຼັງຈາກນັ້ນ,ພຣະອົງໄດ້ເປັນຄືນຈາກຕາຍໃນມື້ສາມຖ້ອນ. ພວກເຮົາຕ້ອງເຊື່ອສິ່ງນີ້ຈຶ່ງຈະໄດ້ຮັບຄວາມພົ້ນແລະຫຼັງຈາກນັ້ນພວກເຮົາກໍສະແດງຄວາມສັດຊື່ຕໍ່ພຣະເຢຊູເຈົ້າໂດຍການຫັນໜີຈາກພະອື່ນໆ. ບໍ່ວ່າພະເຈົ້າອົງອື່ນໃດຈະເວົ້າກ່ຽວກັບຄວາມພົ້ນແນວໃດ ພຣະຄໍາພີບອກພວກເຮົາວ່າບໍ່ມີຄວາມພົ້ນໃນນາມອື່ນໃດນອກເໜືອຈາກພຣະເຢຊູເຈົ້າ (ກຈ.4:12). ພວກເຮົາຕ້ອງມີຄວາມເຊື່ອໃນພຣະເຢຊູເຈົ້າ (ຣມ 11:17–24; ຮຣ. 3:19; 10:22, 38–39). ຄວາມລົ້ມເຫຼວສ່ວນຕົວແລະຄວາມບາບບໍ່ຄືກັນກັບການຫັນໜີຈາກພຣະເຢຊູເຈົ້າໄປຕິດຕາມພະອື່ນ. ບາງຄັ້ງພວກເຮົາກໍ່ຍັງເຮັດບາບຢູ່, ແຕ່ພຣະເຈົ້າຮູ້ວ່າພວກເຮົາເຊື່ອວາງໃຈໃຜ.

# ສາເຫດທີ່ເລື່ອງນີ້ສຳຄັນ

ມີສັນຍາລັກທີ່ໜ້າສົນໃຈຫຼາຍໃນການອົບພະຍົບຈາກປະເທດເອຢິບແລະສິ່ງທີ່ເກີດຂຶ້ນຢູ່ທີ່ພູເຂົາຊີນາຍເຫດການໃນເວລາທີ່ໂມເຊແລະຄົນອື່ນໆໄດ້ກິນເຂົ້າກັບພຣະເຈົ້າໃນຮູບແບບມະນຸດຢູ່ທີ່ພູເຂົາຊີນາຍດຶງດູດຄວາມສົນໃຈຂອງພວກເຮົາ. ມີຜູ້ເຖົ້າແກ່ເຈັດສິບຄົນຢູ່ກັບໂມເຊ. ຍັງມີລາຍຊື່ເຈັດສິບປະເທດໃນປະຖົມມະການບົດທີ 10. ປະເທດເຫຼົ່ານີ້ໄດ້ຖືກມອບໃຫ້ຢູ່ພາຍໃຕ້ພວກລູກຊາຍຂອງພຣະເຈົ້າ,ເຊິ່ງຕໍ່ມາກໍ່ໄດ້ກະບົດ (ພບຍ. 4: 19-20; 32: 8-9). ເປັນຫຍັງຈຶ່ງມີຜູ້ເຖົ້າແກ່ຂອງປະເທດອິດສະຣາເອນເຈັດສິບຄົນໃນງານກິນລ້ຽງ. ເປັນຫຍັງຈຶ່ງມີພວກລູກຊາຍເຈັດສິບຄົນຂອງພຣະເຈົ້າ ແລະມີເຈັດສິບປະເທດທີ່ຖືກຕັດອອກໄປ?

ການຕິດຕໍ່ສື່ສານເປັນໄປໂດຍຄວາມຕັ້ງໃຈ. ເມື່ອພຣະເຢຊູເຈົ້າເລີ່ມຕົ້ນເຮັດວຽກງານຮັບໃຊ້ຂອງພຣະອົງ, ພຣະອົງຍັງໄດ້ສົ່ງສາວົກເຈັດສິບຄົນອອກໄປ (ລກ.10: 1). ຈຳນວນດັ່ງກ່າວແມ່ນສັນຍາລັກວ່າພຣະເຢຊູຈະຍຶດເອົາຊົນຊາດຕ່າງໆເຂົ້າສູ່ອານາຈັກຂອງພຣະເຈົ້າຄືນ. ອານາຈັກນັ້ນຈະສຳເລັດສົມບູນໃນຕອນສິ້ນຍຸກໃນສວນເອເດນໃໝ່ໂລກໃໝ່ (ພນມ. 21–22). ການກ່າວຊ້ຳຂອງເລກເຈັດສິບແມ່ນຂໍ້ຄວາມທີ່ວ່າ. ຄອບຄົວໃໝ່ຂອງພຣະເຈົ້າເທິງແຜ່ນດິນໂລກຄືອິດສະຣາເອນ, ເຊິ່ງເປັນລູກຫຼານຂອງອັບຣາຮາມ,ຈະເປັນແຜນການທີ່ກອບກູ້ເອົາປະເທດຕ່າງໆທີ່ສູນເສຍໄປ.

ແຕ່ແຜນການບໍ່ຢຸດຢູ່ທີ່ນັ້ນ. ອັກຄະສາວົກໂປໂລຂຽນໃນພຣະທຳຄາລາເຕຍບົດທີ 3 ວ່າຜູ້ທີ່ເຊື່ອໃນພຣະເຢຊູເຈົ້າໄດ້ສືບທອດຄຳສັນຍາທີ່ໃຫ້ກັບອັບຣາຮາມ. ທຸກໆຄົນທີ່ເຊື່ອໃນພຣະເຢຊູເຈົ້າກໍເປັນລູກຂອງອັບຣາຮາມໂດຍຜ່ານຄວາມເຊື່ອ(ຄລຕ.:26-29). ນັ້ນໝາຍຄວາມວ່າທ່ານແລະຂ້າພະເຈົ້າໄດ້ຮັບໜ້າທີ່ໃນການນຳເອົາຂ່າວປະເສີດໄປສູ່ປະຊາຊາດຕ່າງໆທີ່ຢູ່ພາຍໃຕ້ອຳນາດຂອງຜູ້ປົກຄອງຝ່າຍວິນຍານທີ່ກະບົດ. ເປັນໜ້າທີ່ຂອງພວກເຮົາທີ່ຈະສະແດງໃຫ້ຜູ້ຄົນທີ່ຢູ່ພາຍໃຕ້ການຄອບງຳທາງວິນຍານຂອງບັນດາຜູ້ປົກຄອງເໜືອທຳມະຊາດທີ່ຊົ່ວຮ້າຍຈະໄດ້ເຫັນຄວາມເຊື່ອຂອງພວກເຮົາໃນພຣະເຢຊູເຈົ້າ. ດຽວນີ້ພວກເຮົາ

ເປັນສະມາຊິກຂອງສະພາມະນຸດຄົນໃໝ່ຂອງພຣະເຈົ້າຢູ່ເທິງໂລກ. ມື້ໜຶ່ງໃນອະນາຄົດ,ແຜນການຂອງພຣະເຈົ້າແມ່ນການຮວມຄອບຄົວມະນຸດຂອງພຣະອົງກັບຄອບຄົວວິນຍານຂອງພຣະອົງແລະເພື່ອທຸກຄົນຈະຢູ່ຮ່ວມກັນໃນສວນເອເດນໃໝ່.

ພຣະຄຳພີສອນແນວຄວາມຄິດເຫຼົ່ານີ້ໃນຫຼາຍບ່ອນ. ພຣະທຳພຣະນິມິດໄດ້ອະທິບາຍເຖິງຜູ້ທີ່ເຊື່ອສືບທອດການປົກຄອງຂອງປະຊາຊາດຮ່ວມກັບພຣະເຢຊູເຈົ້າໃນຕອນສິ້ນຍຸກ (ພນມ.3: 21). ນັ້ນໝາຍຄວາມວ່າພວກເຮົາຈະແທນທີ່ພວກລູກຊາຍຂອງພຣະເຈົ້າຜູ້ທີ່ຄອບງຳປະເທດເຫຼົ່ານັ້ນນັບຕັ້ງແຕ່ການກະບົດທີ່ວິຫານບາເບນ. ນີ້ກໍ່ແມ່ນເຫດຜົນທີ່ໂຢຮັນກ່າວວ່າ ຜູ້ທີ່ເຊື່ອມີສິດອຳນາດທີ່ຈະເປັນລູກຂອງພຣະເຈົ້າ (ຢຮ. 1:12; ປຽບທຽບກັບ 1ຢຮ.3: 1–3). ມື້ໜຶ່ງພວກເຮົາຈະເຂົ້າຮັບຕຳແໜ່ງຂອງຜູ້ປົກຄອງວິນຍານ, ພວກເຂົາເຫຼົ່ານັ້ນເລີ່ມຕົ້ນໃນຖານະລູກຂອງພຣະເຈົ້າ ແຕ່ເປັນຜູ້ທີ່ໄດ້ກະບົດແລະຫຼັງຈາກນັ້ນໄດ້ສູນເສຍສິດອຳນາດຂອງພວກເຂົາ.

ນີ້ກໍ່ແມ່ນເຫດຜົນທີ່ໂປໂລບອກຜູ້ທີ່ເຊື່ອໃຫ້ຢຸດເຊົາການປ່ອຍໃຫ້ສານຂອງລັດຖະບານແກ້ໄຂຂໍ້ຂັດແຍ່ງຂອງພວກເຂົາ. ເພິ່ນກ່າວວ່າ, "ພວກເຈົ້າບໍ່ຮູ້ບໍວ່າພວກເຮົາຄວນຕັດສິນເທວະດາ?" (1ກຣ.6: 3). ເມື່ອພວກເຮົາຖືກສ້າງຂຶ້ນໃຫ້ຄືກັບພຣະເຢຊູເຈົ້າໃນແຜ່ນດິນໂລກໃໝ່, ພວກເຮົາຈະໄດ້ຮັບສິດອຳນາດຫຼາຍກວ່າບັນດາສິ່ງທີ່ມີຊີວິດເໜືອທຳມະຊາດ. (1ຢຮ.3: 1–3; 1 ກຣທ. 15: 35– 49) ພວກເຮົາຈະປົກຄອງປະຊາຊາດຕ່າງໆຮ່ວມກັບພຣະເຢຊູເຈົ້າ (ພນມ. 2:26) ຊຶ່ງດຽວນີ້ຖືກຄວບຄຸມໂດຍວິນຍານທີ່ເປັນສັດຕູ. ຜູ້ທີ່ເຊື່ອທີ່ເປັນເຊື້ອສາຍຝ່າຍວິນຍານຂອງອັບຣາຮາມ, ຈະຊ່ວຍນຳເອົາບັນດາປະເທດທີ່ຖືກຕັດອອກໄປນັ້ນກັບຄືນມາ. ໃນເວລານີ້ຄຳສາບແຊ່ງແຫ່ງຄວາມຕາຍທີ່ເປັນຜົນມາຈາກຄວາມລົ້ມເຫຼວໃນສວນເອເດນກໍ່ຈະຖືກກຳຈັດອອກໄປເຊັ່ນກັນ.

ພວກເຮົາຄວນດຳເນີນຊີວິດຄືກັບທີ່ເຊື່ອວ່ານີ້ຈະເປັນຈຸດໝາຍປາຍທາງຂອງພວກເຮົາ. ທຸກຢ່າງໃນແຜນພຣະສັນຍາເດີມຂອງພຣະເຈົ້ານຳມາສູ່ພວກເຮົາ. ລອງຄິດຍ້ອນກັບໄປເຖິງແຜນການຂອງພຣະເຈົ້າສຳລັບສວນເອເດນ. ພຣະເຈົ້າຕ້ອງການສອງຄອບຄົວຄື:ຄອບຄົວວິນຍານແລະຄອບຄົວມະນຸດ. ທັງສອງຄອບຄົວຕ້ອງອາໄສຢູ່ແລະປົກຄອງຮ່ວມກັນໃນສວນເອເດນ. ແຜນການເລີ່ມຕົ້ນດ້ວຍການກະບົດ, ແຕ່ພຣະເຈົ້າໄດ້ຟື້ນຟູແຜນຂອງພຣະອົງເມື່ອພຣະອົງໄດ້ຊ່ວຍຄົນອິດສະຣາເອນອອກຈາກເອຢິບ. ຜ່ານທາງເຊື້ອສາຍຂອງອັບຣາຮາມພຣະເມຊີອາຜູ້ທີ່ສັນຍາໄວ້ຈະສະເດັດມາ. ພຣະເມຊີອາຈະແກ້ໄຂຄວາມລົ້ມເຫຼວໃນສວນເອເດນ (ປຖກ.3:15). ຖ້າບໍ່ມີຄົນອິດສະຣາເອນ, ກໍຈະບໍ່ມີພຣະເມຊີອາ. ຖ້າບໍ່ມີພຣະເມຊີອາຈະບໍ່ມີຄວາມພົ້ນ. ຖ້າບໍ່ມີຄວາມພົ້ນພວກເຮົາບໍ່ມີອະນາຄົດທີ່ຈະຢູ່ກັບພຣະເຈົ້າ.

ແລະນັ້ນແມ່ນເຫດຜົນທີ່ແນ່ນອນວ່າເປັນຫຍັງຜູ້ປົກຄອງວິນຍານທີ່ກະບົດແລະຜູ້ຕິດຕາມຂອງພວກເຂົາຈຶ່ງພະຍາຍາມທຳລາຍອິດສະຣາເອນອີກຄັ້ງ.

# ບົດທີ 8

# ພື້ນທີ່ບໍລິສຸດສັກສິດ

ຄົນອິດສະຣາເອນໄດ້ໃຊ້ເວລາ 1 ປີຢູ່ທີ່ພູເຂົາຊີນາຍ. ພວກເຂົາໄດ້ເຮັດສັນຍາກັບພຣະເຈົ້າແລະພວກເຂົາໄດ້ຮັບພຣະບັນຍັດສິບປະການຈາກພຣະເຈົ້າ. ແຕ່ພວກເຂົາຍັງມີອີກຫຼາຍສິ່ງທີ່ຈະຮຽນຮູ້ກ່ຽວກັບພຣະບັນຍັດຂອງພຣະເຈົ້າ. ເປັນສິ່ງໜຶ່ງທີ່ປະຊາຊົນສັນຍາວ່າຈະເຊື່ອແລະຈົງຮັກພັກດີຕໍ່ພຣະເຈົ້າຂອງບັນພະບຸລຸດຂອງພວກເຂົາຄື: ອັບຣາຮາມ, ອີຊາກ, ແລະຢາໂຄບ. ແຕ່ວ່າກໍເປັນອີກສິ່ງໜຶ່ງທີ່ຈະຮູ້ວ່າພຣະເຈົ້າຄາດຫວັງຫຍັງຈາກພວກເຂົາແລະພຣະອົງເປັນພຣະເຈົ້າແບບໃດ.

## ແນວຄິດເລື່ອງຄວາມບໍລິສຸດ

ຂໍ້ກຳນົດແລະການປະຕິບັດທີ່ແປກໆຫຼາຍຂໍ້ໃນພຣະສັນຍາເດີມແມ່ນຍ້ອນວ່າປະຊາຊົນຕ້ອງຮັບການສອນວ່າພຣະເຈົ້າບໍ່ເໜືອສິ່ງອື່ນໃດ. ພຣະລັກສະນະແລະອຸປະນິດໄສຂອງພຣະເຈົ້າແມ່ນເປັນເອກະລັກສະເພາະບໍ່ຄືໃຜ. ພຣະອົງແມ່ນແຕກຕ່າງກັນທັງໝົດກັບລັກສະນະແລະທຳມະຊາດຂອງມະນຸດ. ສຳລັບຄົນອິດສະຣາເອນນັ້ນແມ່ນຄວາມຈິງທີ່ຕ້ອງໄດ້ຮັບການສິດສອນຄືນໃໝ່ໃນຫຼາຍດ້ານ. ຖ້າບໍ່ດັ່ງນັ້ນ, ພຣະເຈົ້າອາດຈະຖືກຄິດວ່າເລື່ອງທຳມະດາ.

ຄຳສັບໃນພຣະຄຳພີເຊິ່ງໝາຍຄວາມວ່າພຣະເຈົ້າແຕກຕ່າງກັນທັງໝົດຄື: ບໍລິສຸດ. ຄວາມບໍລິສຸດໝາຍເຖິງວ່າ“ ຖືກແຍກອອກມາ” ຫຼື“ແຕກຕ່າງກັນ.” ແນວຄິດບໍ່ແມ່ນກ່ຽວກັບການກະທຳທີ່ມີສິນທຳຫຼືຜິດສິນທຳ. ບໍລິສຸດບໍ່ແມ່ນລາຍການສິ່ງທີ່ເຮົາຄວນເຮັດແລະບໍ່ຄວນເຮັດ. ການດຳລົງຊີວິດໃນທາງສິນທຳລວມຢູ່ໃນການເປັນຄົນ “ບໍລິສຸດ”, ແຕ່ມັນບໍ່ແມ່ນພາກສ່ວນຕົ້ນຕໍ (ລລວ. 19: 2).

ພຣະເຈົ້າຕ້ອງການບາງສິ່ງບາງຢ່າງ ຫຼາຍກ່ວາທີ່ຈະໃຫ້ຄຳນິຍາມທີ່ດີຂອງຄວາມບໍລິສຸດແກ່ຄົນອິດສະຣາເອນ. ພຣະເຈົ້າຕ້ອງການໃຫ້ທຸກພາກສ່ວນຂອງວັດທະນະທຳໃນອິດສະຣາເອນບູຮານໄດ້ຮັບຜົນກະທົບເພາະວ່າພຣະອົງມີເອກະລັກບໍ່ຄືໃຜ. ພຣະຄຳພີບອກພວກເຮົາວ່າສິ່ງນີ້ສຳເລັດໂດຍຜ່ານພິທີກຳຕ່າງໆ. ພິທີກຳແມ່ນການກະທຳທີ່ເປັນສັນຍາລັກ. ພິທີກຳຕ່າງໆແມ່ນກົດລະບຽບສຳລັບການເຂົ້າໄປໃນສະຖານທີ່ສັກສິດຢ່າງຖືກຕ້ອງ.

# ພຣະເຈົ້າ“ມີເອກະລັກສະເພາະ” ແນວໃດ?

ຄຳຕອບສັ້ນໆຂອງຄຳຖາມນີ້ແມ່ນວ່າພຣະເຈົ້າມີເອກະລັກສະເພາະ “ໃນທຸກໆດ້ານ”. ແຕ່ຂ້າພະເຈົ້າຄວນອະທິບາຍຕື່ມອີກ. ພຣະຄຳພີແມ່ນຂໍ້ຄວາມທີ່ໃຊ້ໄດ້ແທ້ຈິງກ່ຽວກັບວິທີການດຳເນີນຊີວິດ. ມັນບໍ່ແມ່ນແນວຄິດຂອງປັດຊະຍາທີ່ຫຍຸ້ງຍາກກ່ຽວກັບຊີວິດ. ພິທີກຳຕ່າງໆແລະກົດລະບຽບສຳລັບຊຸມນຸມຊົນອິດສະຣາເອນສະແດງໃຫ້ເຫັນວ່າເປັນແບບນີ້.

ຍົກຕົວຢ່າງ, ພຣະຄຳພີສອນພວກເຮົາວ່າພຣະເຈົ້າບໍ່ພຽງແຕ່ເປັນແຫຼ່ງຊີວິດຂອງຄົນອິດສະຣາເອນແຕ່ພຣະອົງຊົງເປັນຊີວິດສຳລັບທຸກສິ່ງ. ພຣະເຈົ້າບໍ່ໄດ້ມາຈາກແຜ່ນດິນໂລກ. ແຜ່ນດິນໂລກເປັນສະຖານທີ່ທີ່ມີຄວາມຕາຍ,ໂລກໄພໄຂ້ເຈັບແລະຄວາມບໍ່ສົມບູນແບບ. ໂລກຂອງພຣະເຈົ້າແມ່ນສິ່ງທີ່ເໜືອທຳມະຊາດ. ໂລກຂອງພວກເຮົາແມ່ນຮ່າງກາຍ. ເມື່ອພຣະເຈົ້າມາຢູ່ໃນໂລກໃນຮູບແບບຂອງມະນຸດ, ພື້ນທີ່ເທິງແຜ່ນດິນໂລກຈະກາຍເປັນບ່ອນສັກສິດແລະເປັນເອກະລັກສະເພາະ. ບັນດາສະຖານທີ່ທີ່ພວກເຮົາອາໄສຢູ່ແມ່ນທຳມະດາ. ພຣະເຈົ້າແມ່ນກົງກັນຂ້າມກັບສິ່ງທີ່ທຳມະດາສາມັນ..

ໃນປະເທດອິດສະຣາເອນບູຮານ, ແນວຄວາມຄິດເຫຼົ່ານີ້ໄດ້ຖືກສອນໂດຍການສອນຄົນທີ່ພວກເຂົາຕ້ອງໄດ້ຮັບການເຊື້ອເຊີນແລະຫຼັງຈາກນັ້ນກໍຮັບການຊຳລະໃຫ້ບໍລິສຸດເພື່ອໃຫ້ເຂົ້າສະຖານທີ່ດຽວກັບພຣະເຈົ້າຢ່າງຖືກຕ້ອງ. ກົດໝາຍຫຼາຍສະບັບໃນພຣະສັນຍາເດີມໄດ້ຄວບຄຸມວິທີການເຮັດໃຫ້ບໍລິສຸດ.

ຄົນອິດສະຣາເອນອາດຈະຖືກເຮັດໃຫ້ “ເປັນມົນທິນ” ຈາກສະຖານທີ່ບໍລິສຸດສັກສິດໂດຍກິດຈະກຳແລະເງື່ອນໄຂຕ່າງໆເຊັ່ນ: ການມີເພດສຳພັນ, ການເສຍເລືອດ, ຄວາມພິການທາງຮ່າງກາຍ, ຫຼືການສຳຜັດກັບຮ່າງກາຍທີ່ຕາຍແລ້ວ(ຄົນຫຼືສັດ)ເປັນຊ່ອງທາງທີ່ເຮັດໃຫ້ຄົນອິດສະຣາເອນເປັນມົນທິນ. ຄົນອິດສະຣາເອນຍັງຖືກຫ້າມບໍ່ໃຫ້ກິນນົກບາງຊະນິດ (ລລວ. 11: 13–19). ພວກເຂົາບໍ່ສາມາດກິນສັດບົກຫຼືສັດນ້ຳບາງຊະນິດອີກດ້ວຍ. (ລລວ. 11: 24–40).

ເຫັນໄດ້ຈະແຈ້ງວ່າການເປັນມົນທິນໂດຍການກິນສິ່ງໃດສິ່ງໜຶ່ງບໍ່ແມ່ນກ່ຽວກັບການກະທຳທີ່ຜິດສິນທຳ. ແຕ່ ກົດລະບຽບແມ່ນກ່ຽວຂ້ອງກັບການສູນເສຍຊີວິດແລະບໍ່ເໝາະສົມກັບຄວາມສົມບູນແບບຂອງພຣະເຈົ້າ. ການສູນເສຍເລືອດຫຼືທາດແຫຼວທາງເພດສຳພັນແມ່ນກ່ຽວຂ້ອງກັບການສູນເສຍນ້ຳທີ່ໃຫ້ຊີວິດ. ພວກເຂົາເຈົ້າຄິດວ່າທາດແຫຼວເຫຼົ່ານີ້ເປັນສິ່ງທີ່ຄ້ຳຊູຊີວິດ. ພຣະເຈົ້າບໍ່ໄດ້ກ່ຽວຂ້ອງກັບການສູນເສຍຊີວິດ, ເພາະວ່າພຣະອົງເປັນຜູ້ໃຫ້ຊີວິດຫຼາຍກວ່າ. ການຮຽກຮ້ອງໃຫ້ບຸກຄົນໃດໜຶ່ງໄດ້ຮັບການຊຳລະໃຫ້ບໍລິສຸດຫຼັງຈາກການສູນເສຍທາດແຫຼວດັ່ງກ່າວເປັນການເຕືອນເຖິງພຣະລັກສະນະຂອງພຣະເຈົ້າໃນການໃຫ້ຊີວິດ. ນອກຈາກນີ້ຍັງຈຳເປັນຕ້ອງມີພິທີຊຳລະໃຫ້ບໍລິສຸດຫຼັງຈາກສຳຜັດກັບບາງສິ່ງບາງຢ່າງທີ່ຕາຍແລ້ວ. ບຸກຄົນ

ໜຶ່ງກໍ່ຈະຖືກໄລ່ອອກຈາກເຂດທີ່ສັກສິດຖ້າວ່າພວກເຂົາມີຄວາມບໍ່ສົມບູນທາງຮ່າງກາຍຫຼືໄດ້ຮັບບາດເຈັບ. ນີ້ແມ່ນການສອນຄວາມບໍ່ສົມບູນແບບບໍ່ເຂົ້າກັບຄວາມສົມບູນແບບຂອງພຣະເຈົ້າ.

ກົດໝາຍທັງໝົດນີ້ມີຈຸດປະສົງເພື່ອສອນພາບລວມທີ່ເໜືອທຳມະຊາດ.

# ການແກ້ໄຂບັນຫາຄວາມບໍ່ບໍລິສຸດ

ການທີ່ເປັນມົນທິນແລະບໍ່ເໝາະສົມທີ່ຈະເຂົ້າໄປໃນບ່ອນບໍລິສຸດສັກສິດແມ່ນເປັນເລື່ອງທີ່ຮ້າຍແຮງສຳລັບຄົນອິດສະຣາເອນບູຮານ. ພວກເຂົາບໍ່ສາມາດນຳເຄື່ອງຖວາຍແລະເຄື່ອງບູຊາມາໄດ້ຖ້າວ່າພວກເຂົາບໍ່ບໍລິສຸດ. ວິທີແກ້ໄຂແມ່ນການປະຕິບັດພິທີກຳສະເພາະເພື່ອໃຫ້ກາຍເປັນຄົນບໍລິສຸດອີກຄັ້ງ. ພິທີກຳດັ່ງກ່າວອາດຈຳເປັນຕ້ອງລໍຖ້າໄລຍະໜຶ່ງແລະຫຼັງຈາກນັ້ນຈຶ່ງມີການຖວາຍບູຊາໂດຍສະເພາະ.

ຈຸດປະສົງໃນການສອນການຖວາຍບູຊາດ້ວຍເລືອດອາດເບິ່ງຄືວ່າແປກສຳລັບພວກເຮົາ. ພິທີກຳດັ່ງກ່າວຮຽກຮ້ອງໃຫ້ມີການຊິດເລືອດໃສ່ຄົນຫຼືວັດຖຸໃດໜຶ່ງ ເພື່ອເຮັດໃຫ້ພວກເຂົາມີຄວາມບໍລິສຸດອີກຄັ້ງແລະຫຼັງຈາກນັ້ນພວກເຂົາສາມາດເຂົ້າໄປໃນບ່ອນສັກສິດໄດ້ຢ່າງຖືກຕ້ອງ. ແຕ່ການຖວາຍເຄື່ອງບູຊາດ້ວຍເລືອດຍັງມີຈຸດປະສົງທາງສາດສະໜາສາດອີກດ້ວຍ. ພວກເຂົາໄດ້ສອນແນວຄວາມຄິດຂອງການປ່ຽນແທນ. ເນື່ອງຈາກເລືອດແມ່ນຊີວິດຂອງຮ່າງກາຍ (ລລວ. 17:11), ການຂ້າສັດໄດ້ສອນບົດຮຽນທີ່ວ່າການເຂົ້າໃກ້ພຣະເຈົ້າອາດໝາຍເຖິງຄວາມຕາຍ.ມະນຸດບໍ່ສາມາດເຂົ້າຫາພຣະເຈົ້າໃນເງື່ອນໄຂໃດໜຶ່ງນອກເໜືອຈາກວິທີທີ່ພຣະເຈົ້າໄດ້ກ່າວໄວ້ ບໍ່ດັ່ງນັ້ນຄົນຜູ້ນັ້ນຈະຕາຍ. ເລືອດຂອງສັດແມ່ນການປ່ຽນແທນ ແທນທີ່ຈະໃຊ້ເລືອດຂອງຄົນ. ການຕາຍຂອງສັດແມ່ນວິທີການຊຳລະລ້າງມົນທິນຂອງຄົນອິດສະຣາເອນ.

ຫົວຂໍ້ທີ່ສອນກໍຄືວ່າພຣະເຈົ້າໄດ້ຮັກສາຊີວິດຂອງຄົນອິດສະຣາເອນໂດຍການໃຊ້ສັດເປັນເຄື່ອງບູຊາແທນ. ຊີວິດມະນຸດມີຄວາມສັກສິດຫຼາຍກ່ວາຊີວິດຂອງສັດເພາະວ່າມະນຸດຖືກສ້າງຂຶ້ນຕາມພຣະລັກສະນະຂອງພຣະເຈົ້າ (ປຖກ.1: 26; 9: 6). ສັດບໍ່ໄດ້ຖືກສ້າງຂຶ້ນຕາມພຣະລັກສະນະຂອງພຣະເຈົ້າ. ການມີຊົນຊາດອິດສະຣາເອນເກີດຂຶ້ນຍ້ອນການແຊກແຊງທີ່ມະຫັດສະຈັນເໜືອທຳມະຊາດໂດຍພຣະເຈົ້າທີ່ຊ່ວຍໃຫ້ອັບຣາຮາມແລະຊາຣາມີລູກ (ປຖກ. 12: 1–3). ແຕ່ວ່າຊີວິດຂອງມະນຸດຈະຕົກຢູ່ໃນອັນຕະລາຍຖ້າຫາກຢູ່ຕໍ່ໜ້າພຣະເຈົ້າ. ການຖວາຍບູຊາໄດ້ເຕືອນພວກເຂົາວ່າພຣະເຈົ້າມີອຳນາດເໜືອ ຊີວິດແລະຄວາມຕາຍ. ແຕ່ພຣະເຈົ້າຕ້ອງການສະແດງຄວາມເມດຕາແລະບໍ່ຢາກຂ້າພວກເຂົາ.

# ສະຫວັນ(ແລະນາລົກ)ເທິງແຜ່ນດິນໂລກ

ການເອົາໃຈໃສ່ກັບຄວາມເປັນເອກະລັກຂອງພຣະເຈົ້າເປັນການສື່ສານເຖິງແນວຄວາມຄິດສະເພາະ, ບໍ່ພຽງແຕ່ສະເພາະກ່ຽວກັບພຣະເຈົ້າເທົ່ານັ້ນ, ແຕ່ຍັງກ່ຽວກັບເຂດແດນທີ່ເໜືອທຳມະຊາດນຳອີກ. ຄວາມຄິດທີ່ວ່າມີຄວາມແຕກຕ່າງກັນລະຫວ່າງບັນດາໂລກວິນຍານແລະໂລກທາງວັດຖຸ ແມ່ນມີຄວາມສຳຄັນຫຼາຍສຳລັບຄົນອິດສະຣາເອນທີ່ຈະເຂົ້າໃຈ. ຖ້າພື້ນທີ່ທີ່ພຣະເຈົ້າຄອບຄອງຢູ່ນັ້ນບໍລິສຸດສັກສິດ ແລ້ວພື້ນດິນໃນສະຖານທີ່ອື່ນໆກໍບໍ່ໄດ້ບໍລິສຸດ. ສ່ວນສະຖານທີ່ອື່ນໆນັ້ນກໍທຳມະດາຫຼືຍິ່ງກວ່ານັ້ນກໍອາດຈະເປັນສັດຕູແລະມີຄວາມຊົ່ວຮ້າຍອີກດ້ວຍ.

ພຣະເຈົ້າຈະຕິດຕໍ່ພົວພັນກັບຄົນອິດສະຣາເອນຢູ່ທີ່ຫໍເຕັນຂອງພຣະອົງແລະຕໍ່ມາທີ່ພຣະວິຫານຂອງພຣະອົງ. ສະຖານທີ່ທັງສອງແຫ່ງນີ້ມີສັນຍາລັກເຄື່ອງປະດັບຕົກແຕ່ງຫຼາຍຢ່າງເພື່ອຕັກເຕືອນໃຫ້ມະນຸດຄຶດເຖິງສວນເອເດນ. ສວນເອເດນແມ່ນບ່ອນທີ່ສະຫວັນແລະແຜ່ນດິນໂລກເຊື່ອມຕໍ່ກັນ. ສັນຍາລັກໜຶ່ງໃນຫໍເຕັນແມ່ນຕີນຮອງຕະກຽງຄຳ. ມັນຖືກອອກແບບຄືກັບຕົ້ນໄມ້ <u>(ອພຍ. 25: 31– 40),</u> ນີ້ເປັນສິ່ງເຕືອນໃຈກັບໄປສູ່ຕົ້ນໄມ້ແຫ່ງຊີວິດໃນສວນເອເດນ. ຕີນຮອງຕະກຽງຄຳໄດ້ຕັ້ງຢູ່ຕໍ່ໜ້າຜ້າກັ້ງທີ່ຂັ້ນທາງໄປສູ່ສະຖານທີ່ບໍລິສຸດທີ່ສຸດ. ພາຍໃນຜ້າກັ້ງແມ່ນຫ້ອງທີ່ວາງຫີບພຣະສັນຍາ. ຝາຫີບຖືກອອກແບບມາເພື່ອໃຊ້ເປັນບັນລັງຂອງພຣະເຈົ້າ <u>(ອພຍ. 25: 10–22).</u>

ເຄຣຸບຢູ່ຝາຫີບແມ່ນຍັງເປັນສັນຍາລັກທີ່ຊັດເຈນໃນສວນເອເດນ. ໃນສວນເອເດນມີເຄຣຸບຕົນໜຶ່ງໄດ້ຖືກວາງໄວ້ເປັນຜູ້ເຝົ້າຍາມ <u>(ປຖກ.3:24).</u> ເຄຣຸບທີ່ຢູ່ໃນສະຖານທີ່ບໍລິສຸດທີ່ສຸດໄດ້ປົກປ້ອງຝາຫີບແຫ່ງພຣະສັນຍາ <u>(ອພຍ. 25: 18-20).</u> ຕໍ່ມາກະສັດໂຊໂລໂມນສ້າງວິຫານແລະໄດ້ສ້າງເຄຣຸບຄຳໃຫຍ່ສອງຕົນຢືນຢູ່ເໜືອຫີບພຣະສັນຍາ. ເຊິ່ງເປັນສັນຍາລັກແທນບັນລັງຂອງພຣະເຈົ້າດ້ວຍຫີບພຣະສັນຍາທີ່ຮອງຕີນຂອງພຣະອົງ <u>(1 ຂຄ.28: 2).</u>

ພຣະວິຫານຍັງໄດ້ຮັບການຕົກແຕ່ງຄືກັບສວນເອເດນ. ຝາຜະໜັງເຕັມໄປດ້ວຍຮູບຂອງຕົ້ນໄມ້ພືດພັນລະປູກແລະສັດຕ່າງໆ <u>(1 ກສ. 6-7)</u>ເຊັ່ນ: ດອກໄມ້, ຕົ້ນຕານ, ສິງແລະຕົ້ນໝາກພິລາໄດ້ຖືກນຳໃຊ້ໃນການຕົກແຕ່ງ. ເປັນພາບເຕືອນໃຈເຖິງສວນເອເດນບ່ອນທີ່ພຣະເຈົ້າມາແຜ່ນດິນໂລກເປັນຄັ້ງທຳອິດເພື່ອຢູ່ກັບຄອບຄົວມະນຸດຂອງພຣະອົງ.

ຄົນອິດສະຣາເອນຈຳເປັນຕ້ອງໄດ້ຮັບການເຕືອນກ່ຽວກັບຜູ້ປົກຄອງວິນຍານທີ່ກະບົດເຊິ່ງມີສິດອຳນາດເໜືອດິນແດນອື່ນໆ. ຖ້າແຜ່ນດິນຂອງຄົນອິດສະຣາເອນເປັນດິນທີ່ສັກສິດເພາະວ່າມັນເປັນທີ່ປະທັບຂອງພຣະເຈົ້າຮ່ວມກັບປະຊາຊົນຂອງພຣະອົງ ແລ້ວດິນແດນທາງນອກຂອງອິດສະຣາເອນເປັນພື້ນທີ່ບໍ່ບໍລິສຸດ. ຈົ່ງຈຳໄວ້ວ່າພຣະເຈົ້າໄດ້ມອບປະເທດອື່ນຢູ່ພາຍໃຕ້ສິດອຳນາດຂອງພວກລູກຊາຍຂອງພຣະເຈົ້າ,

ແຕ່ຕໍ່ມາພວກເຂົາກໍ່ໄດ້ກະບົດແລະກາຍເປັນຄວາມຊົ່ວ (ພບຍ 4: 19-20; 32: 8 :9). ພຣະເຈົ້າໄດ້ສັນຍາວ່າມື້ໜຶ່ງພຣະອົງຈະຍຶດເອົາປະເທດເຫຼົ່ານັ້ນຄືນມາ, ແຕ່ໃນຊ່ວງເວລາຂອງພຣະສັນຍາເດີມ, ດິນແດນແລະປະເທດທີ່ຢູ່ພາຍໃຕ້ຜູ້ປົກຄອງວິນຍານກະບົດເຫຼົ່ານັ້ນແມ່ນອານາຈັກແຫ່ງຄວາມຊົ່ວຮ້າຍ.

ວັນສະເຫຼີມສະຫຼອງໜຶ່ງທີ່ພຣະເຈົ້າບອກໃຫ້ຄົນອິດສະຣາເອນສະເຫຼີມສະຫຼອງໄດ້ສອນພວກເຂົາຢ່າງຈະແຈ້ງກ່ຽວກັບສະພາບການນີ້. ມື້ດັ່ງກ່າວໄດ້ຖືກເອີ້ນວ່າວັນລຶບລ້າງບາບ (ໃນພາສາຢິວເອີ້ນວ່າຢອມກິບເປີ Yom Kippur). ມັນຖືກຈັດຂຶ້ນປີລະຄັ້ງ (ລະບຽບພວກເລວີ 16). ມື້ດັ່ງກ່າວປະກອບມີພິທີກໍາເພື່ອເຕືອນປະຊາຊົນກ່ຽວກັບດິນແດນບໍລິສຸດແລະບໍ່ບໍລິສຸດ.

ແບ້ສອງໂຕມີສ່ວນກ່ຽວຂ້ອງ. ແບ້ໂຕໜຶ່ງຖືກຂ້າຖວາຍເປັນເຄື່ອງບູຊາແລະເລືອດຂອງມັນທີ່ຖືກເອົາຊິດໃສ່ຢູ່ໃນຫໍເຕັນເພື່ອຊໍາລະລ້າງໃຫ້ບໍລິສຸດຈາກມົນທິນຂອງມະນຸດອີກປີໜຶ່ງ. ແບ້ທີ່ໄດ້ຖວາຍເປັນເຄື່ອງບູຊານັ້ນຖືກເອີ້ນວ່າ "ສໍາລັບພຣະຜູ້ເປັນເຈົ້າ." ແບ້ຜູ້ໂຕທີສອງບໍ່ໄດ້ຖືກຂ້າ. ຫຼັງຈາກທີ່ປະໂຣຫິດໃຫຍ່ໄດ້ເຮັດສັນຍາລັກໂອນບາບຂອງປະຊາຊົນໃສ່ແບ້ໂຕທີສອງແລ້ວ, ມັນກໍຖືກສົ່ງອອກຈາກແຜ່ນດິນອິດສະຣາເອນເຂົ້າໄປໃນຖິ່ນແຫ້ງແລ້ງກັນດານ. ແບ້ໂຕນີ້ຖືກກ່າວວ່າເປັນ "ສໍາລັບອາຊາເຊນ"

"ອາຊາເຊນ"ແມ່ນໃຜ? ພຣະຄໍາພີສະບັບແປບາງສະບັບໄດ້ແປຄໍາພາສາເຮັບເຣີເປັນຄວາມໝາຍແທນທີ່ຈະບໍ່ເອົາຊື່ນັ້ນອອກມາ. ຄໍາສັບພາສາເຮັບເຣີນີ້ແມ່ນຊື່ທີ່ຖືກຕ້ອງ. ມັນແມ່ນຊື່ຂອງຜູ້ປົກຄອງວິນຍານທີ່ກະບົດ. ໃນລະຫວ່າງການເດີນທາງຈາກປະເທດເອຢິບໄປສູ່ແຜ່ນດິນແຫ່ງພຣະສັນຍາ, ຄົນອິດສະຣາເອນຕ້ອງໄດ້ເດີນທາງຜ່ານຖິ່ນແຫ້ງແລ້ງກັນດານ. ໃນລະຫວ່າງການເດີນທາງນີ້, ຄົນອິດສະຣາເອນບາງຄົນໄດ້ຂ້າສັດຖວາຍບູຊາແກ່ວິນຍານອື່ນໆ (ລລວ.17: 7). ພວກເຂົາໄດ້ເຮັດສິ່ງນີ້ເພາະວ່າພວກເຂົາຢ້ານວ່າວິນຍານຊົ່ວຈະໂຈມຕີຄ້າຍພັກຂອງພວກເຂົາ. ຖິ່ນແຫ້ງແລ້ງກັນດານແມ່ນສະຖານທີ່ຂອງວິນຍານຊົ່ວຮ້າຍແລະບ່ອນນັ້ນຢູ່ພາຍໃຕ້ສິດອໍານາດຂອງພວກມັນ. ການຖວາຍບູຊາເຫຼົ່ານີ້ເປັນການກະທໍາຜິດຕໍ່ພຣະເຈົ້າແລະພວກເຂົາຕ້ອງຢຸດ. ແບ້ສໍາລັບອາຊາເຊນບໍ່ແມ່ນການຖວາຍບູຊາໃຫ້ກັບວິນຍານຊົ່ວເຫຼົ່ານີ້. ແບ້ບໍ່ເຄີຍຖືກຖວາຍເປັນເຄື່ອງບູຊາ. ກົງກັນຂ້າມ,ພວກເຂົາເຮັດເປັນສັນຍາລັກວ່າແບ້ແບກບາບຂອງພວກເຂົາອອກຈາກສະຖານທີ່ທີ່ພຣະເຈົ້າຄອບຄອງແລະເຂົ້າໄປໃນດິນແດນທີ່ບໍ່ບໍລິສຸດທີ່ຄອບຄອງໂດຍອາຊາເຊນ.

# ສາເຫດທີ່ເລື່ອງນີ້ສໍາຄັນ

ມີຫຼາຍສິ່ງຫຼາຍຢ່າງໄດ້ປ່ຽນໄປຫຼັງຈາກທີ່ພຣະເຢຊູເຈົ້າໄດ້ເຂົ້າມາໃນພຣະສັນຍາໃໝ່, ແຕ່ບາງສິ່ງກໍ່ຍັງຄືເກົ່າ. ພຣະເຈົ້າແມ່ນຍັງເປັນເອກະລັກ. ຄວາມບໍລິສຸດຂອງພຣະອົງຍັງຮຽກຮ້ອງໃຫ້ພວກເຮົາບໍລິສຸດກ່ອນທີ່ພວກເຮົາຈະເຂົ້າໄປໃນທີ່ປະທັບຂອງພຣະອົງ. ສໍາລັບພວກເຮົາດຽວນີ້, ການເຮັດໃຫ້ບໍລິສຸດແມ່ນສໍາເລັດໂດຍການເຊື່ອໃນສິ່ງທີ່ພຣະເຢຊູເຈົ້າໄດ້ເຮັດຢູ່ເທິງໄມ້ກາງແຂນ.

ທຸກສິ່ງທີ່ພຣະເຢຊູເຈົ້າໄດ້ເຮັດເພື່ອພວກເຮົາກໍ່ມີຄວາມໝາຍທີ່ເໜືອທຳມະຊາດເຊັ່ນກັນ. ຫຼັງຈາກຮັບບັບຕິສະມາແລ້ວພຣະເຢຊູເຈົ້າໄດ້ອອກໄປໃນຖິ່ນແຫ້ງແລ້ງກັນດານ. ຖິ່ນແຫ້ງແລ້ງກັນດານແມ່ນສະຖານທີ່ທີ່ຢູ່ພາຍໃຕ້ອຳນາດຂອງກຳລັງແຫ່ງຄວາມຊົ່ວຮ້າຍ. ຢູ່ທີ່ນັ້ນທີ່ຊາຕານໄດ້ມາຫາພຣະເຢຊູເຈົ້າແລະພະຍາຍາມທຳລາຍແຜນຂອງພຣະອົງທີ່ຈະຍຶດເອົາຊົນຊາດຕ່າງໆຄືນມາ. ຫຼັງຈາກຊາຕານພ່າຍແພ້, ພຣະເຢຊູໄດ້ກັບຄືນໄປບ່ອນດິນແດນທີ່ສັກສິດຂອງອິດສະຣາເອນແລະເລີ່ມຕົ້ນການຮັບໃຊ້ຂອງພຣະອົງ. ການຮັບໃຊ້ຂອງພຣະອົງໄດ້ເອົາຊະນະພະຍາມານແລະໄດ້ທຳລາຍ" ອຳນາດແຫ່ງຄວາມຕາຍ" ທີ່ພະຍາມານຄວບຄຸມຢູ່ (ຮຣ. 2:14). ເພື່ອເຮັດສິ່ງນີ້ພຣະເຢຊູເຈົ້າໄດ້ຍອມໃຫ້ພຣະອົງເອງຖືກຄຶງຢູ່ນອກນະຄອນເຢຣູຊາເລັມທີ່ສັກສິດ (ຮຣ.13:12). ພຣະເຢຊູເຈົ້າກາຍເປັນຄົນບໍ່ສະອາດມີມົນທິນເພາະວ່າພຣະອົງໄດ້ຮັບເອົາບາບຂອງພວກເຮົາໄວ້ກັບພຣະອົງເອງ. ພຣະອົງໄດ້ແບກບາບຂອງພວກເຮົາຢູ່ນອກນະຄອນເຢຣູຊາເລັມເຊິ່ງເປັນພື້ນທີ່ສັກສິດ ໄປສູ່ສະຖານທີ່ແຫ່ງຄວາມຕາຍທີ່ບໍ່ບໍລິສຸດທີ່ໄມ້ກາງແຂນ.

ການຕາຍຂອງພຣະເຢຊູເຈົ້າ ແລະການເປັນຄືນຈາກຄວາມຕາຍຂອງພຣະອົງເຮັດໃຫ້ເຮົາບໍລິສຸດເມື່ອເຮົາເຊື່ອ. ພຣະເຢຊູເຈົ້າເຮັດໃຫ້ພວກເຮົາບໍລິສຸດສະນັ້ນພວກເຮົາສາມາດເຂົ້າໄປໃນທີ່ປະທັບຂອງພຣະເຈົ້າ. ບາບຂອງພວກເຮົາຖືກ"ເອົາໄປແລ້ວ" (ຣມ. 11:27; ເບິ່ງ 1ຢຮ.3: 5). ເຖິງແມ່ນວ່າພວກເຮົາເປັນຄົນບາບທີ່ບໍ່ສະອາດ, ພວກເຮົາຈະກາຍເປັນຄົນບໍລິສຸດເມື່ອພວກເຮົາຢູ່ໃນພຣະຄຣິດ. ເຖິງແມ່ນວ່າພວກເຮົາບໍ່ສົມບູນແບບ, ແຕ່ບາບຂອງພວກເຮົາກໍ່ຖືກຍົກເລີກເພາະສິ່ງທີ່ພຣະເຢຊູເຈົ້າໄດ້ກະທຳ. ມັນເປັນເລື່ອງງ່າຍດາຍແຕ່ມັນມີຄວາມເລິກເຊິ່ງຫຼາຍ.

ພວກເຮົາອາດຄິດວ່າຄົນອິດສະຣາເອນມີສິດທິພິເສດທາງຝ່າຍວິນຍານຫຼາຍກວ່າທີ່ພວກເຮົາມີ. ພວກເຂົາມີທີ່ປະທັບຂອງພຣະເຈົ້າຢູ່ໃນຄ້າຍແລະດິນແດນຂອງພວກເຂົາ. ພວກເຂົາດຳເນີນຊີວິດຢູ່ໃນໂລກທີ່ເຂົາເຈົ້າທຸກຄົນຮູ້ວ່າບັນດາຜູ້ປົກຄອງວິນຍານທີ່ເໜືອທຳມະຊາດມີຢູ່ແທ້. ພວກເຮົາອາດຄິດວ່າມັນຈະງ່າຍກວ່າທີ່ຈະມີຈິດວິນຍານເຂັ້ມແຂງແລະມີຄວາມຈົງຮັກພັກດີຕໍ່ພຣະເຈົ້າຫຼາຍຂຶ້ນຖ້າຫາກພວກເຮົາມີຊີວິດຢູ່ໃນສະພາບການນັ້ນ. ພວກເຮົາອາດຕ້ອງການສິ່ງທີ່ຄົນອິດສະຣາເອນມີຢູ່ເພື່ອວ່າພວກເຮົາຈະໄດ້ຮັບການຕັກເຕືອນທຸກໆມື້ກ່ຽວກັບພຣະເຈົ້າ. ພວກເຮົາຫວັງວ່າພວກເຮົາຈະມີຄຳເຕືອນໃຈເລື່ອງພຣະເຈົ້າຢ່າງຕໍ່ເນື່ອງ.

ແຕ່ວ່າພຣະສັນຍາໃໝ່ກ່າວວ່າພວກເຮົາມີສິດທິພິເສດທີ່ມະຫັດສະຈັນຫຼາຍກວ່າຄົນອິດສະຣາເອນມີຫຼາຍຢ່າງ.

ພວກເຮົາບໍ່ຈຳເປັນຕ້ອງມີຫໍເຕັນ ຫຼືພຣະວິຫານເພື່ອເຂົ້າໄປໃນສະຖານທີ່ບໍລິສຸດສັກສິດ. ແຕ່ປະຈຸບັນນີ້ຮ່າງກາຍຂອງພວກເຮົາແມ່ນສະຖານທີ່ສັກສິດ. ໂປໂລເອີ້ນຮ່າງກາຍຂອງພວກເຮົາວ່າເປັນ "ເຕັນ" (2 ກຣທ. 5: 4). ເພິ່ນກ່າວວ່າພຣະເຈົ້າອົງດຽວກັນທີ່ສະຖິດຢູ່ໃນສະຖານທີ່ບໍລິສຸດທີ່ສຸດໃນຫໍເຕັນ ບັດນີ້

ຊົງສະຖິດຢູ່ໃນພວກເຮົາ( ຣມ 8:9–11). ບັດນີ້ຜູ້ທີ່ເຊື່ອແຕ່ລະຄົນເປັນພຣະວິຫານຂອງພຣະເຈົ້າ. ໃນທີ່ສຸດຮ່າງກາຍຂອງພວກເຮົາຈະຕາຍ, ແຕ່ພຣະເຈົ້າຈະທົດແທນມັນດ້ວຍ“ເຮືອນທີ່ບໍ່ໄດ້ສ້າງດ້ວຍມື” (2ກຣທ 5: 1–3). ພວກເຮົາຈະໄດ້ຮັບຮ່າງກາຍຝ່າຍສະຫວັນ. ພວກເຮົາຈະອາໄສຢູ່ໃນສວນເອເດນໃໝ່. ພຣະເຈົ້າຈະນຳສະຫວັນມາສູ່ໂລກໃໝ່ທີ່ສົມບູນແບບ (ພນມ. 22: 1–3).

ນັບຕັ້ງແຕ່ມື້ນີ້ພຣະເຈົ້າໄດ້ເຕີມເຕັມຜູ້ທີ່ເຊື່ອດ້ວຍພຣະວິນຍານຂອງພຣະອົງ, ການເຕົ້າໂຮມກັນຂອງຜູ້ເຊື່ອ ແຕ່ລະຄົນຈຶ່ງສ້າງພື້ນທີ່ອັນສັກສິດ. ນີ້ແມ່ນເຫດຜົນທີ່ໂປໂລບອກຊາວໂກຣິນໂທໃຫ້ໄລ່ຜູ້ຊາຍຄຣິສຕຽນທີ່ບໍ່ກັບໃຈອອກຈາກກຸ່ມຂອງພວກເຂົາເຊິ່ງເປັນຜູ້ທີ່ສືບຕໍ່ດຳເນີນຊີວິດໃນທາງຊົ່ວຮ້າຍ. ໂປໂລໄດ້ແນະນຳ ພວກເຂົາໃຫ້ “ປ່ອຍຊາຍຄົນນີ້ໃຫ້ຊາຕານ” (1ກຣທ.5: 5). ກຸ່ມຄຣິສຕະຈັກແມ່ນພື້ນທີ່ສັກສິດ. ນອກກຸ່ມສາມັກຄີທຳຂອງຜູ້ທີ່ເຊື່ອແມ່ນເຂດຂອງຊາຕານ ນັ້ນແມ່ນບ່ອນທີ່ເຮັດບາບແລະການທຳລາຍຕົນເອງ.

ເຖິງເວລາແລ້ວທີ່ພວກເຮົາຕ້ອງເບິ່ງຕົວເອງໂດຍຜ່ານຕາຝ່າຍວິນຍານ. ທ່ານເປັນລູກຂອງພຣະເຈົ້າ. ພຣະເຈົ້າໄດ້ເຮັດໃຫ້ທ່ານບໍລິສຸດແລະເປັນບ່ອນທີ່ສັກສິດ. ທ່ານບໍ່ສາມາດສ້າງບຸນກຸສົນໂດຍສິ່ງທີ່ທ່ານເຮັດໄດ້. ທ່ານກາຍເປັນຄົນບໍລິສຸດເພາະວ່າເມື່ອທ່ານເຊື່ອວ່າທ່ານຖືກນຳໄປສູ່ພຣະຄຣິດ. ທ່ານໄດ້ຮັບການຍອມຮັບຈາກພຣະເຈົ້າເຂົ້າໃນຄອບຄົວຂອງພຣະອົງ (ຣມ 8: 15; ຄລຕ. 4: 5). ທ່ານໄດ້ຮັບການປົດປ່ອຍຈາກໂລກແຫ່ງຄວາມມືດແລະ “ໄດ້ນຳພາພວກເຮົາເຂົ້າໄປຕັ້ງໄວ້ໃນອານາຈັກແຫ່ງພຣະບຸດທີ່ຮັກຂອງພຣະອົງ, (ກລຊ.1:13).

ພວກເຮົາຕ້ອງຢ່າລືມ,ຢ່າລືມວ່າພວກເຮົາເປັນໃຜໃນພຣະຄຣິດ. ພວກເຮົາຍັງຕ້ອງຈື່ໄວ້ອີກວ່າມັນໝາຍຄວາມວ່າແນວໃດຕໍ່ໂລກພາຍໃຕ້ອຳນາດຂອງບັນດາຜູ້ປົກຄອງທີ່ເໜືອທຳມະຊາດ.

# ບົດທີ 9

# ສົງຄາມສັກສິດ

**ພຣະ**ຄຳພີແມ່ນປຶ້ມທີ່ມີການໂຕ້ຖຽງກັນ. ຄົນທີ່ບໍ່ເຫັນວ່າເປັນພຣະຄຳຂອງພຣະເຈົ້າມັກຈະຄັດຄ້ານສິ່ງທີ່ພຣະຄຳພີກ່າວ. ແຕ່ບາງສ່ວນຂອງພຣະຄຳພີເຮັດໃຫ້ແມ່ນແຕ່ຄຣິດສະຕຽນກໍບໍ່ສະບາຍໃຈ. ສົງຄາມອິດສະຣາເອນທີ່ເອົາຊະນະດິນແດນແຫ່ງພຣະສັນຍາຈຸດນີ້ກໍເປັນບັນຫາໜຶ່ງ.

ຍ້ອນຫຍັງເລື່ອງນີ້ຈຶ່ງເຮັດໃຫ້ຄົນບໍ່ສະບາຍໃຈ ? ສ່ວນໃຫຍ່ແມ່ນຍ້ອນການຂ້າ. ມັນເບິ່ງຄືວ່າບໍ່ມີການຈຳແນກແລະລະອຽດຖີ່ຖ້ວນເກີນໄປ. ເປັນຫຍັງຈຶ່ງຈຳເປັນຕ້ອງຂ້າປະຊາຊົນທັງໝົດໃນບາງເມືອງບໍ່ວ່າຈະເປັນຜູ້ຊາຍ, ແມ່ຍິງ, ເດັກນ້ອຍ, ແລະແມ່ນແຕ່ສັດລ້ຽງບໍ? ເປັນຫຍັງບໍ່ປ່ອຍໃຫ້ຊາວເມືອງຍອມແພ້ ? ເປັນຫຍັງບໍ່ຂັບໄລ່ພວກເຂົາອອກແລະເປັນຄົນຖືກເນລະເທດ ?

ມີຄຳຕອບທີ່ດີຕໍ່ການຄັດຄ້ານເຫຼົ່ານັ້ນ. ແຕ່ປະສົບການຂອງຂ້າພະເຈົ້າກໍຄືວ່າແມ່ນແຕ່ຄຳຕອບກໍ່ເຮັດໃຫ້ຄຣິສຕຽນບໍ່ສະບາຍໃຈຄືກັນ. ເຫດຜົນທີ່ຢູ່ເບື້ອງຫຼັງຄຳສັ່ງໃຫ້ຂ້ານັ້ນແມ່ນຍ້ອນສົງຄາມເໜືອທຳມະຊາດທີ່ຂ້າພະເຈົ້າໄດ້ເລົ່າໃຫ້ທ່ານຟັງແລ້ວ. ສິ່ງທີ່ກອງທັບຂອງອິດສະຣາເອນໄດ້ຖືກສັ່ງໃຫ້ເຮັດນັ້ນແມ່ນເໝາະສົມສຳລັບພວກເຂົາ. ຖ້າທ່ານສາມາດເບິ່ງສະຖານະການຜ່ານສາຍຕາບູຮານຂອງພວກເຂົາແລ້ວທ່ານກໍ່ອາດຈະເຂົ້າໃຈໄດ້ເຊັ່ນກັນ.

## ເຫດຜົນຂອງຄົນອິດສະຣາເອນກ່ຽວກັບເລື່ອງເໜືອທຳມະຊາດ

ມີສອງເຫດຜົນທີ່ມີຜົນກະທົບຕໍ່ວິທີທີ່ຄົນອິດສະຣາເອນໃນສະໄໝກ່ອນຄິດກ່ຽວກັບການສູ້ຮົບເພື່ອຍຶດຄອງແຜ່ນດິນແຫ່ງພຣະສັນຍາ. ເຫດຜົນທັງສອງເປັນພື້ນຖານໃຫ້ແກ່ອິດສະຣາເອນເຂົ້າໃຈໂລກຂອງພວກເຂົາ. ພວກເຂົາເຊື່ອວ່າໂລກຂອງພວກເຂົາແມ່ນບ່ອນທີ່ມະນຸດນອາໄສຢູ່, ແຕ່ພວກເຂົາຍັງເຊື່ອວ່າໂລກຂອງພວກເຂົາແມ່ນສະຖານທີ່ສູ້ຮົບຂອງສົງຄາມເໜືອທຳມະຊາດນ. ຜູ້ຊະນະສົງຄາມຈະໄດ້ຮັບການຄວບຄຸມທົ່ວໂລກ.

ຂ້າພະເຈົ້າຂໍອະທິບາຍຕື່ມ. ເຫດຜົນໜຶ່ງແມ່ນຜົນຈາກເຫດການຕ່າງໆທີ່ວິຫານບາເບນ. ນີ້ແມ່ນຊ່ວງເວລາທີ່ມະນຸດທັງໝົດໄດ້ກະບົດຕໍ່ພຣະເຈົ້າ. ພຣະເຈົ້າບໍ່ຕ້ອງການຄວາມສຳພັນໂດຍກົງກັບມະນຸດອີກຕໍ່ໄປ. ແຕ່ພຣະອົງໄດ້ແຕ່ງຕັ້ງສະມາຊິກຂອງສະພາວິນຍານຂອງພຣະອົງໃຫ້ເປັນຜູ້ປົກຄອງເໜືອທຳມະຊາດໃນແຕ່ລະປະເທດ <u>(ພບຍ. 4: 19-20; 32: 8–9).</u> ຫຼັງຈາກນັ້ນພຣະເຈົ້າໄດ້ເອີ້ນອັບຣາຮາມແລະເຮັດໃຫ້

ເພິ່ນແລະນາງຊາຣາທີ່ມີອາຍຸຫຼາຍປີມີລູກຊາຍ. ເຊື້ອສາຍຈາກອັບຣາຮາມຈະກາຍເປັນຊົນຊາດອິດສະຣາເອນແລະພຣະເຈົ້າຈະເຊື່ອມຕໍ່ໂດຍກົງກັບພວກເຂົາເທົ່ານັ້ນ.

ພວກເຮົາໄດ້ຮຽນຮູ້ໃນ<u>ເພງສັນລະເສີນບົດທີ 82</u> ວ່າຜູ້ປົກຄອງວິນຍານທີ່ມາຈາກສະພາຂອງພຣະເຈົ້າໄດ້ເສື່ອມເສຍ. ພວກເຂົາບໍ່ໄດ້ເຊື່ອຟັງພຣະເຈົ້າ. ພວກເຂົາຍອມໃຫ້ມີຄວາມບໍ່ຍຸຕິທຳ. ມະນຸດເລີ່ມຂາບໄຫວ້ບູຊາພວກເຂົາແທນພຣະເຈົ້າອົງສູງສຸດ. ພວກເຂົາກາຍເປັນສັດຕູຂອງພຣະເຈົ້າແລະຊົນຊາດອິດສະຣາເອນປະຊາກອນຂອງພຣະອົງ. ເນື່ອງຈາກວ່າບາງປະເທດເຫຼົ່ານັ້ນອາໄສຢູ່ໃນແຜ່ນດິນການາອານ ແລະພຣະເຈົ້າໄດ້ສັນຍາວ່າຈະມອບການາອານໃຫ້ອິດສະຣາເອນ. ມີບັນຫາໃຫຍ່ຄືປະເທດເຫຼົ່ານັ້ນແລະຜູ້ປົກຄອງວິນຍານຂອງພວກເຂົາເປັນສັດຕູຂອງພຣະເຈົ້າແລະຂອງຊົນຊາດຂອງພຣະອົງ. ພວກເຂົາປະຕິເສດທີ່ຈະເຊື່ອຟັງພຣະເຈົ້າແລະປ່ອຍໃຫ້ຄົນອິດສະຣາເອນຄອບຄອງແຜ່ນດິນ. ແຕ່ພວກເຂົາພັດເລີ່ມຕໍ່ສູ້ເພື່ອທຳລາຍອິດສະຣາເອນແລະແຜນການຂອງພຣະເຈົ້າ. ນັ້ນແມ່ນເຫດຜົນທຳອິດທີ່ຕ້ອງຈື່ເມື່ອທ່ານພະຍາຍາມເຂົ້າໃຈສົງຄາມແລະການຂ້າທຸກຢ່າງທີ່ມີຢູ່.

ເຫດຜົນທີສອງແມ່ນຍິ່ງເຮັດໃຫ້ຄົນອິດສະຣາເອນມີຄວາມຢ້ານກົວຫຼາຍຂຶ້ນ. ເປັນການອະທິບາຍທີ່ດີທີ່ສຸດໂດຍເຫດການທີ່ເກີດຂຶ້ນເມື່ອຄົນອິດສະຣາເອນໄປຮອດຊາຍແດນການາອານແຜ່ນດິນແຫ່ງພຣະສັນຍາ. ໂມເຊສົ່ງຄົນສອດແນມສິບສອງຄົນໄປໃນການາອານເພື່ອລາຍງານຂ່າວກ່ຽວກັບແຜ່ນດິນແລະກ່ຽວກັບຜູ້ຄົນຢູ່ທີ່ນັ້ນ. ນັກສອດແນມໄດ້ກັບຄືນມາດ້ວຍຫຼັກຖານທີ່ສະແດງວ່າດິນແດນແຫ່ງນີ້ສວຍງາມແລະມີຜົນຜະລິດຫຼາຍ. ພວກເຂົາເວົ້າວ່າມັນເຕັມໄປດ້ວຍ "ນົມແລະນໍ້າເຜິ້ງ. ມັນເປັນສະຖານທີ່ທີ່ດີ, ຄືກັບທີ່ພຣະເຈົ້າໄດ້ບອກພວກເຂົາເຈົ້າ <u>(ຈບຊ. 13: 27).</u> ແຕ່ຫຼັງຈາກນັ້ນເຂົາເຈົ້າໄດ້ລາຍງານບັນຫາໃຫຍ່:" "ດິນແດນທີ່ພວກເຮົາໄປສອດແນມນັ້ນມັນເປັນດິນແດນກິນຄົນ. ພວກເຮົາໄດ້ເຫັນແຕ່ຄົນຮູບຮ່າງໃຫຍ່ສູງ ແລະຄົນຮູບຮ່າງໃຫຍ່ສູງທີ່ເປັນເຊື້ອສາຍຂອງຊາວອານາກິມ(ຄົນເນຟີມ)ກໍອາໄສຢູ່ໃນບ່ອນນັ້ນ. ພວກເຮົາເລີຍເບິ່ງເປັນດັ່ງຕັກແຕນໃນສາຍຕາຂອງຄົນເຫຼົ່ານັ້ນ." <u>(ຈບຊ. 13: 32–33).</u>

ພວກເຮົາໄດ້ເວົ້າກ່ຽວກັບຄົນເນຟີມມາກ່ອນແລ້ວ. ພວກເຂົາເປັນເຊື້ອສາຍທີ່ຊົ່ວຮ້າຍຂອງພວກລູກຊາຍຂອງພຣະເຈົ້າທີ່ກະບົດທີ່ແຕ່ງງານກັບລູກສາວຂອງມະນຸດ (<u>ປຖກ. 6: 1–4).</u> ພວກຄົນຍັກອານາກິມແມ່ນເຊື້ອສາຍຂອງຄົນເນຟີມດັ້ງເດີມ. ພວກເຂົາມີຈຳນວນຫຼາຍຄົນອາໄສຢູ່ໃນທົ່ວແຜ່ນດິນການາອານ. ພວກເຂົາປະປົນກັນໃນບັນດາປະເທດອື່ນໆແລະເມືອງຕ່າງໆຢູ່ທີ່ນັ້ນ. ຄົນອິດສະຣາເອນຕ້ອງເອົາຊະນະພວກເຂົາທັງໝົດເພື່ອຍຶດຄອງດິນແດນ <u>(ຈບຊ.13: 28-29).</u> ເປົ້າໝາຍທີ່ຈະເອົາຊະນະດິນແດນທີ່ຄວບຄຸມໂດຍຜູ້ປົກຄອງວິນຍານຊົ່ວຮ້າຍເບິ່ງຄືວ່າມັນຍາກຢູ່ແລ້ວກ່ອນໜ້ານີ້. ດຽວນີ້ເບິ່ງຄືວ່າມັນເປັນໄປບໍ່ໄດ້ທີ່ຈະເອົາຊະນະພວກຍັກໃຫຍ່ທີ່ຊົ່ວຮ້າຍເຫຼົ່ານີ້. ເພື່ອທີ່ຈະຊະນະສົງຄາມຊົນຊາດອິດສະຣາເອນ ຊຶ່ງຫາກໍ່ຫຼຸດພົ້ນຈາກການເປັນຂ້າທາດນີ້ໂດຍບໍ່ມີການຝຶກອົບຮົມໃດໆດ້ານການທະຫານ, ຈະຕ້ອງໄດ້ຕໍ່ສູ້ກັບນັກຮົບທີ່ແຂງແຮງມີຂະໜາດໃຫຍ່ທີ່ເປັນຄົນຍັກ

ມີພຽງແຕ່ສອງຄົນໃນຈຳນວນສິບສອງຄົນທີ່ເປັນຄົນສອດແນມ (ໂຢຊວຍ ແລະກາເລັບ) ເທົ່ານັ້ນທີ່ເຊື່ອວ່າພຣະເຈົ້າຈະຊ່ວຍຄົນອິດສະຣາເອນຕີຊະນະພວກຄົນຍັກອານາກີມໄດ້. ຄົນສອດແນມອີກສິບຄົນໄດ້ຊັກຊວນປະຊາຊົນທຸກຄົນວ່າພວກເຂົາຈະພ່າຍແພ້ແນ່ນອນ. ແທນທີ່ຈະລະນຶກເຖິງພຣະເຈົ້າໄດ້ທຳລາຍກະສັດຟາໂຣແລະຊາວເອຢິບເຊິ່ງເປັນປະເທດທີ່ມີອຳນາດຫຼາຍທີ່ສຸດໃນໂລກ,ແຕ່ປະຊາຊົນກໍ່ຕົກໃຈ. ພວກເຂົາຮ້ອງຂຶ້ນວ່າ, "ບໍ່ແມ່ນ ພວກເຮົາບໍ່ເຂັ້ມແຂງພໍເພື່ອຈະໂຈມຕີພວກເຂົາໄດ້; ຄົນຢູ່ໃນທີ່ນັ້ນມີກຳລັງເຂັ້ມແຂງຫຼາຍກວ່າພວກເຮົາ." (ຈບຊ. 13:31).

ພຣະເຈົ້າຊົງຕອບວ່າ"ປະຊາຊົນເຫຼົ່ານີ້ຍັງຈະໝິ່ນປະໝາດເຮົາອີກດົນນານປານໃດ? ເຖິງແມ່ນວ່າ ເຮົາໄດ້ເຮັດການອັດສະຈັນຫຼາຍຢ່າງໃນທ່າມກາງພວກເຂົາແລ້ວ ພວກເຂົາກໍຍັງປະຕິເສດທີ່ຈະໄວ້ວາງໃຈໃນເຮົາຕະຫຼອດໄປບໍ? (ຈບຊ.14:11). ໃນຄວາມເປັນຈິງ, ພຣະເຈົ້າໂກດຮ້າຍຫຼາຍຈົນພຣະອົງຂູ່ວ່າຈະທຳລາຍອິດສະຣາເອນຄືກັບທີ່ພຣະອົງໄດ້ເຮັດກັບປະເທດຕ່າງໆຍ້ອນກັບມາທີ່ວິຫານບາເບນ. ພຣະເຈົ້າກ່າວວ່າພຣະອົງສາມາດເລີ່ມຕົ້ນກັບປະເທດໃໝ່ຕອນນີ້ຈາກໂມເຊໄດ້. ພຣະເຈົ້າໄດ້ບອກໂມເຊວ່າ:" ເຮົາຈະສົ່ງໂຣກລະບາດຮ້າຍແຮງທຳລາຍພວກເຂົາ ແຕ່ເຮົາຈະເຮັດໃຫ້ເຈົ້າເປັນພໍ່ຂອງຊົນຊາດໃຫຍ່ຊາດໜຶ່ງແລະມີອຳນາດຫຼາຍກວ່າພວກເຂົາ." (ຈບຊ. 14:12)

ໂມເຊໄດ້ທູນຂໍໃຫ້ພຣະເຈົ້າດຳເນີນຕາມແຜນດັ້ງເດີມຂອງພຣະອົງ (ຈບຊ.14: 13–19). ພຣະເຈົ້າໄດ້ຕົກລົງ, ແຕ່ພຣະອົງບໍ່ສາມາດເບິ່ງຂ້າມຄວາມບໍ່ເຊື່ອຂອງປະຊາຊົນໄດ້. ປະຊາຊົນຕ້ອງໄດ້ຮັບການສອນບົດຮຽນຈາກເລື່ອງນີ້. ມັນຈະຮຸນແຮງ. ພຣະເຈົ້າບອກໂມເຊວ່າ:

> "ເຮົາຈະຍົກໂທດບາບໃຫ້ພວກເຂົາ ຕາມທີ່ເຈົ້າໄດ້ຂໍຮ້ອງມາ, ແຕ່ເຮົາມີຊີວິດຢູ່ຢ່າງແນ່ແທ້ສັນໃດ ທົ່ວແຜ່ນດິນໂລກຈະເຕັມໄປດ້ວຍສະຫງ່າຣາສີຂອງພຣະເຈົ້າຢາເວສັນນັ້ນ, ບໍ່ມີໃຜຈັກຄົນໃນຈຳນວນຄົນເຫຼົ່ານີ້ ທີ່ໄດ້ເຫັນສະຫງ່າຣາສີຂອງເຮົາ ແລະການອັດສະຈັນແລະໝາຍສຳຄັນຕ່າງໆທີ່ເຮົາໄດ້ກະທຳຢູ່ໃນປະເທດເອຢິບແລະໃນຖິ່ນແຫ້ງແລ້ງກັນດານ ແລະໄດ້ທົດລອງເຮົາເຖິງສິບເທື່ອແລ້ວ ແຕ່ຍັງໄດ້ປະຕິເສດທີ່ຈະເຊື່ອຟັງເຮົາ. ພວກເຂົາຈະບໍ່ໄດ້ເຂົ້າໄປໃນດິນແດນຊຶ່ງເຮົາໄດ້ສັນຍາໄວ້ກັບບັນພະບຸລຸດຂອງພວກເຂົານັ້ນຈັກເທື່ອ. ພວກທີ່ໝິ່ນປະໝາດເຮົານັ້ນ ຈະບໍ່ມີຈັກຄົນໜຶ່ງຄົນດຽວທີ່ໄດ້ເຂົ້າໄປໃນທີ່ນັ້ນ...
>
> ພວກເຈົ້າຈະຕາຍແລະຊາກສົບຂອງພວກເຈົ້າຈະກະຈັດກະຈາຍ ທົ່ວຖິ່ນແຫ້ງແລ້ງກັນດານ. ຍ້ອນພວກເຈົ້າຈົ່ມຮ້າຍໃສ່ເຮົາ ຄົນທີ່ມີອາຍຸຊາວປີຂຶ້ນໄປໃນພວກເຈົ້າ ຈະບໍ່ໄດ້ເຂົ້າໄປໃນດິນແດນນັ້ນເດັດຂາດ. ເຮົາໄດ້ສັນຍາວ່າຈະໃຫ້ພວກເຈົ້າຢູ່ທີ່ນັ້ນ ແຕ່ໃນພວກເຈົ້າຈະບໍ່ມີໃຜໄດ້ຢູ່ ນອກຈາກກາເລັບລູກຊາຍຂອງເຢຟຸນເນແລະໂຢຊວຍລູກຊາຍຂອງນູນ. ພວກເຈົ້າໄດ້ເວົ້າວ່າ, ລູກຫລານຂອງ

ພວກເຈົ້າຈະຖືກຈັບໄປ ແຕ່ເຮົາຈະນຳພວກເຂົາເຂົ້າໄປໃນດິນແດນທີ່ພວກເຈົ້າບໍ່ຍອມຮັບເອົາ ແລະທີ່ນັ້ນຈະເປັນບ້ານເຮືອນຂອງພວກເຂົາ.(ຈບຊ.14: 20-31)

"ສິບເທື່ອ" ແມ່ນຈຳນວນຂອງຄຳເວົ້າໃນສະໄໝນັ້ນໝາຍຄວາມວ່າ "ຫຼາຍຄັ້ງຫຼາຍໜົນ" (ປຖກ. 31: 7; ໂຢບ 19: 3). ຈົນເຖິງຕອນນີ້ພຣະເຈົ້າໄດ້ອົດທົນຕໍ່ການຈົ່ມທຸກຂອງປະຊາຊົນ. ແທນທີ່ຈະຂອບໃຈທີ່ພວກເຂົາບໍ່ໄດ້ເປັນຂ້າທາດໃນເອຢິບ, ພວກເຂົາໄດ້ຈົ່ມຢ່າງໜັກ. ພວກເຂົາພາກັນຈົ່ມກ່ຽວກັບອາຫານທີ່ພວກເຂົາຕ້ອງກິນ (ຈບຊ.11:1–14;31–35). ພວກເຂົາຈົ່ມກ່ຽວກັບຜູ້ນຳທີ່ພຣະເຈົ້າໄດ້ເລືອກ, ຄືໂມເຊ (ຈບຊ.12:1–16).

ແຕ່ບັດນີ້ຄວາມອົດທົນຂອງພຣະເຈົ້າໄດ້ສິ້ນສຸດລົງແລ້ວ. ດຽວນີ້ຄວາມບໍ່ເຊື່ອຂອງພວກເຂົາຈະໄດ້ຮັບການລົງໂທດທີ່ຮ້າຍແຮງ. ອິດສະຣາເອນຈະເດີນທາງພະເນຈອນໄປໃນຖິ່ນແຫ້ງແລ້ງກັນດານເປັນເວລາສີ່ສິບປີ. ໄລຍະເວລາຖືກກຳນົດໄວ້ເພື່ອໃຫ້ຜູ້ໃຫຍ່ທຸກຄົນທີ່ບໍ່ເຊື່ອແລະຈົ່ມວ່ານັ້ນເຖົ້າແກ່ລົງແລະຕາຍໄປ.

# ໂອກາດຄັ້ງທີສອງ

ພຣະເຈົ້າຈະໃຫ້ໂອກາດອິດສະຣາເອນເປັນຄັ້ງທີສອງທີ່ຈະໄວ້ວາງໃຈພຣະອົງແລະເຂົ້າຍຶດຄອງດິນແດນແຫ່ງພຣະສັນຍາພາຍຫຼັງ 40 ປີ. ພຣະບັນຍັດສອງບົດທີ 2-3 ບອກກ່ຽວກັບການເດີນທາງຂອງພວກເຂົາໃນໄລຍະເວລາສີ່ສິບປີທີ່ໄດ້ພະເນຈອນໄປ. ໃນຊ່ວງເວລາ 40 ປີຂອງຄົນອິດສະຣາເອນຢູ່ທາງຕາເວັນອອກຂອງແມ່ນ້ຳຈໍແດນໃນແຜ່ນດິນທີ່ເອີ້ນວ່າຈໍແດນຝັ່ງຕາເວັນອອກ. ດິນແດນແຫ່ງພຣະສັນຍາແມ່ນທິດຕາເວັນຕົກ. ທີ່ດິນແດນຈໍແດນທາງທິດຕາເວັນອອກມີສາມປະເທດອາໄສຢູ່ທີ່ນັ້ນຄື: ເອໂດມ, ໂມອາບ, ແລະອາໂມ ປະເທດເຫຼົ່ານີ້ເປັນເຊື້ອສາຍຂອງໂລດ, ຫຼານຊາຍຂອງອັບຣາຮາມ. ພຣະເຈົ້າໄດ້ມອບດິນແດນນີ້ໃຫ້ແກ່ຊົນຊາດເຫຼົ່ານີ້. ຄົນສ່ວນໃຫຍ່ທີ່ອາໄສຢູ່ທີ່ນັ້ນແມ່ນຍາດພີ່ນ້ອງຂອງຄົນອິດສະຣາເອນ, ແຕ່ວ່າບໍ່ແມ່ນທັງໝົດ.

ພຣະເຈົ້າໄດ້ນຳໂມເຊໄປທີ່ແຜ່ນດິນນີ້ເພື່ອຈຸດປະສົງສະເພາະ. ມັນບໍ່ແມ່ນໄປຢາມພີ່ນ້ອງຂອງອິດສະຣາເອນ. ຄົນອິດສະຣາເອນເດີນທາງໄປທາງເໜືອຜ່ານເມືອງອາໂມນເຂົ້າໄປໃນເຂດທີ່ເອີ້ນວ່າບາຊານ. ສະຖານທີ່ດັ່ງກ່າວມີຊື່ສຽງທີ່ໜ້າຢ້ານກົວ. ໃນສະໄໝບູຮານບາຊານຖືກເອີ້ນວ່າ “ບ່ອນຢູ່ຂອງງູ.” ບ່ອນນັ້ນມີສອງເມືອງທີ່ໃຫຍ່ທີ່ສຸດແມ່ນຊື່ເມືອງອັດຊະຕາໂຣດແລະເມືອງເອັດເຣອີ. . ພຣະເຈົ້າໄດ້ນຳພາຄົນອິດສະຣາເອນໄປສູ່ສິ່ງທີ່ຜູ້ຄົນເຊື່ອວ່າເປັນປະຕູນະລົກ.

ແຕ່ຍັງມີອີກຫຼາຍສິ່ງທີ່ຈະເຮັດໃຫ້ພວກເຂົາຢ້ານກົວ.

ພຣະເຈົ້າໄດ້ນໍາຊົນຊາດອິດສະຣາເອນມາຢູ່ທີ່ນີ້ເພື່ອສູ້ຮົບກັບກອງທັບຂອງກະສັດສອງກະສັດຄືເຈົ້າສີໂຫນແລະເຈົ້າໂອກ. ກະສັດທັງສອງອົງນີ້ເປັນຜູ້ປົກຄອງກຸ່ມຄົນທີ່ເອີ້ນວ່າຄົນອາໂມໄຣ (ພບຍ. 3: 2–3; 31: 4). ພຣະຄໍາພີຍັງເອີ້ນພວກເຂົາວ່າເຣຟາອິມ. ໃນພຣະບັນຍັດສອງ 2:11, ບອກວ່າຄົນອານາກິມໄດ້ຖືກນັບວ່າເປັນຄົນ "ເຣຟາອິມ" ພຣະເຈົ້າໄດ້ນໍາພາອິດສະຣາເອນໄປສູ່ພື້ນທີ່ຂອງພວກຄົນຍັກ ທີ່ຊົ່ວຮ້າຍ. ນີ້ແມ່ນພວກຍັກໃຫຍ່ປະເພດດຽວກັນທີ່ເຮັດໃຫ້ຜູ້ສອດແນມຄົນອິດສະຣາເອນສິບຄົນຢ້ານກົວຫຼາຍເຊິ່ງພວກເຂົາປະຕິເສດທີ່ຈະເຊື່ອວາງໃຈໃນພຣະເຈົ້າ (ຈບຊ.13: 32-33). ຫຼັງຈາກນັ້ນ, ຄົນອື່ນໆທີ່ຍັງເຫຼືອໄດ້ຕິດຕາມສິບຄົນທີ່ສອດແນມແລະນັ້ນເຮັດໃຫ້ມີການລົງໂທດສີ່ສິບປີໃນຖິ່ນແຫ້ງແລ້ງກັນດານ.

ເປັນຫຍັງພຣະເຈົ້າຈຶ່ງນໍາພວກເຂົາມາທີ່ນີ້ເພື່ອປະເຊີນກັບສັດຕູທີ່ແຂງແຮງແບບດຽວກັນນີ້? ຄົນອິດສະຣາເອນຕ້ອງປະເຊີນໜ້າກັບສັດຕູຍັກໃຫຍ່ນີ້ຫຼາຍເທື່ອໃນການສູ້ຮົບຖ້າພວກເຂົາຕ້ອງການຈະຍຶດຄອງດິນແດນ. ຄົນອິດສະຣາເອນຈະຕ້ອງໄປທາງທິດຕາເວັນຕົກຂ້າມແມ່ນໍ້າຈໍແດນແລະຕໍ່ສູ້ເພື່ອຍຶດເອົາດິນແດນທີ່ພຣະເຈົ້າໄດ້ມອບໃຫ້ແກ່ພວກເຂົາ. ພຣະເຈົ້າໄດ້ທົດສອບປະຊາຊົນຂອງພຣະອົງ. ພວກເຂົາຈະເຊື່ອໃນພຣະອົງແລະຕໍ່ສູ້ໃນຄັ້ງນີ້ບໍ? ໄຊຊະນະເໜືອເຈົ້າໂອກແລະເຈົ້າສີໂຫນຈະເຮັດໃຫ້ພວກເຂົາມີຄວາມໝັ້ນໃຈແລະຄວາມເຊື່ອໃນພຣະເຈົ້າສໍາລັບສົງຄາມທີ່ພວກເຂົາກໍາລັງເລີ່ມຕົ້ນ.

ຄົນອິດສະຣາເອນໄດ້ປົບໜີໄປຫຼາຍປີກ່ອນ. ແຕ່ເທື່ອນີ້ການຕັດສິນໃຈຂອງພວກເຂົາເຈົ້າແມ່ນແຕກຕ່າງກັນ. ພວກເຂົາໄວ້ວາງໃຈພຣະເຈົ້າທີ່ຈະຊ່ວຍພວກເຂົາຕໍ່ສູ້. ດັ່ງທີ່ໂມເຊໄດ້ກ່າວວ່າ,“ ແຕ່ພຣະເຈົ້າຢາເວ ພຣະເຈົ້າຂອງພວກເຮົາໄດ້ມອບເພິ່ນ(ເຈົ້າສີໂຫນ)ໄວ້ຢູ່ໃນອໍານາດຂອງພວກເຮົາ ແລະພວກເຮົາໄດ້ຊະນະເຈົ້າສີໂຫນແລະພວກລູກຊາຍແລະທະຫານທັງໝົດຂອງເພິ່ນ...ພຣະເຈົ້າຢາເວ ພຣະເຈົ້າຂອງພວກເຮົາຈຶ່ງມອບເຈົ້າໂອກ ແລະປະຊາຊົນຂອງເພິ່ນ ໃຫ້ຢູ່ໃຕ້ອໍານາດຂອງພວກເຮົາ ແລະພວກເຮົາໄດ້ຂ້າພວກເຂົາຖິ້ມຈົນໝົດ” (ພບຍ. 2: 33; 3: 3). ຜູ້ທໍານວາຍຊື່ອາໂມດ, ໄດ້ຂຽນກ່ຽວກັບການສູ້ຮົບນີ້ອີກໃນຫຼາຍປີຕໍ່ມາ. ອາໂມດໄດ້ອະທິບາຍເຖິງຜົນຂອງການສູ້ຮົບດ້ວຍວິທີນີ້:“ [ພຣະຜູ້ເປັນເຈົ້າ] ເຮົາໄດ້ທໍາລາຍຊາວອາໂມຈົນກ້ຽງ ຄືຄົນສູງດັ່ງຕົ້ນແປກແລະແຂງແຮງດັ່ງຕົ້ນໂອກ.” (ອມ.2: 9)

ມັນແມ່ນການທົດສອບທີ່ຍາກຫາກໍ່ເລີ່ມຕົ້ນໂອກາດທີ່ສອງຂອງພວກເຂົາ. ພຣະເຈົ້າໄດ້ຮຽກຮ້ອງໃຫ້ພວກເຂົາປະເຊີນກັບຄວາມຢ້ານກົວຂອງພວກເຂົາ. ພໍ່ແມ່ຂອງພວກເຂົາບໍ່ຜ່ານການທົດສອບ. ດຽວນີ້ລູກເຕົ້າທີ່ໃຫຍ່ແລ້ວຂອງເຂົາເຈົ້າຕ້ອງປະເຊີນກັບຄວາມຢ້ານກົວອັນດຽວກັນທີ່ໄດ້ເຮັດໃຫ້ພໍ່ແມ່ຂອງພວກເຂົາເສຍຊີວິດໃນລະຫວ່າງສີ່ສິບປີທີ່ເດີນທາງພະເນຈອນໃນຖິ່ນແຫ້ງແລ້ງກັນດານ. ພຣະເຈົ້າຂອງອິດສະຣາເອນໄດ້ແຍກທະເລແດງເພື່ອໃຫ້ພວກເຂົາໜີລອດຊີວິດແລະຈາກນັ້ນໄດ້ທໍາລາຍກອງທັບຂອງເອຢິບເມື່ອພວກເຂົາພະຍາຍາມໄລ່ຂ້າມມາ. ຄົນອິດສະຣາເອນຈໍາເປັນຕ້ອງຈື່ແລະໄວ້ວາງໃຈພຣະເຈົ້າຂອງພວກເຂົາ.

# “ຄຳປະຕິຍານວ່າຈະທຳລາຍ”

ຄົນອິດສະຣາເອນໄດ້ຮັບໄຊຊະນະໃນການຕໍ່ສູ້ກັບເຈົ້າສີໂຫນແລະເຈົ້າໂອກ. ແລະດຽວນີ້ພວກເຮົາເລີ່ມເຂົ້າໃຈແລ້ວວ່າເປັນຫຍັງສົງຄາມຈຶ່ງລວມເຖິງບາງເມືອງທີ່ອິດສະຣາເອນຂ້າຄົນທຸກຄົນໂດຍບໍ່ສົນເລື່ອງອາຍຸ. ບາງເມືອງເປັນບ່ອນຢູ່ຂອງຄົນຍັກທີ່ເອີ້ນວ່າຄົນເຣຟາອີມ. ເມືອງເຫຼົ່ານີ້ຖືກ “ປະຕິຍານວ່າຈະທຳລາຍ” (ພບຍ.3: 6). ເຫດຜົນບໍ່ແມ່ນການແກ້ແຄ້ນ. ເປົ້າໝາຍແມ່ນເພື່ອກຳຈັດບັນດາລູກຫຼານຂອງຄົນເນຟີມທັງໝົດ. ຄົນອິດສະຣາເອນເຂົ້າໃຈວ່າພວກຄົນຍັກແມ່ນສືບເຊື້ອສາຍທີ່ມາຈາກພວກວິນຍານຊົ່ວ. ພວກມັນຖືກກຳເນີດໂດຍພວກລູກຂອງພຣະເຈົ້າທີ່ເປັນວິນຍານທີ່ກະບົດ(ປຖກ. 6:1-4). ອິດສະຣາເອນບໍ່ສາມາດອາໄສຢູ່ໃນດິນແດນຮ່ວມກັບຄົນຍັກທີ່ມີນິລະດົກແມ່ນຄວາມຊົ່ວຮ້າຍທີ່ເໜືອທຳມະຊາດ.

ຫຼັງຈາກການສູ້ຮົບ, ອິດສະຣາເອນບໍ່ໄດ້ຂ້າມແມ່ນ້ຳຈໍແດນທັນທີ. ຫຼັງຈາກນັ້ນ,ໂມເຊໄດ້ເສຍຊີວິດແລະການນຳພາຂອງອິດສະຣາເອນໄດ້ຖືກສົ່ງຕໍ່ໄປຫາໂຢຊວຍ. ໂຢຊວຍແມ່ນແມ່ທັບຜູ້ທີ່ຈະນຳພາສູ້ຮົບ ເພື່ອຍຶດຄອງດິນແດນແຫ່ງພຣະສັນຍາ. ການຕໍ່ສູ້ໄດ້ຖືກນຳພາໂດຍສອງເຫດຜົນທີ່ຂ້າພະເຈົ້າຂຽນໄວ້ໃນບົດນີ້: ຂໍ້ທຳອິດຈຶ່ງຂັບໄລ່ຊົນຊາດສັດຕູແລະບັນດາເທບພະເຈົ້າທີ່ກະບົດຂອງພວກເຂົາອອກຈາກແຜ່ນດິນແລະຂໍ້ທີສອງຂ້າພວກຄົນຍັກຊົ່ວຮ້າຍແລະລູກຫຼານຂອງພວກເຂົາທັງໝົດ.

ຖ້າພວກເຮົາເຂົ້າໃຈເຫດຜົນທີ່ເປັນແນວທາງໃນການຕໍ່ສູ້ເພື່ອຍຶດເອົາດິນແດນແຫ່ງພຣະສັນຍາແລ້ວ, ພວກເຮົາເຫັນຈະວ່ານີ້ແມ່ນສົງຄາມສັກສິດ. ສົງຄາມຕໍ່ຕ້ານວິນຍານແຫ່ງຄວາມມືດແລະສັດຕູທີ່ເປັນຄົນ. ມີບັນດາວິນຍານແລະຜູ້ຄົນທີ່ຢູ່ພາຍໃຕ້ການຄອບຄອງຂອງຜູ້ປົກຄອງວິນຍານທີ່ກະບົດ. ພຣະຄຳພີບອກວ່າມີສິ່ງມີຊີວິດຝ່າຍວິນຍານທີ່ແທ້ຈິງທີ່ຊົ່ວຮ້າຍແລະເປັນຜູ້ທີ່ຕໍ່ສູ້ກັບແຜນຂອງພຣະເຈົ້າ.

ເຫດຜົນເຫຼົ່ານີ້ສຳລັບສົງຄາມແມ່ນໄດ້ຖືກສະຫຼຸບເປັນຢ່າງດີໃນ ໂຢຊວຍ11:21-22:

> ໃນເທື່ອນີ້ ໂຢຊວຍໄດ້ຍົກທັບອອກໄປທຳລາຍຄົນຮ່າງໃຫຍ່ພວກໜຶ່ງ ຊື່ວ່າ ອານາກິມ. ຄົນພວກນີ້ໄດ້ອາໄສຢູ່ຕາມເນີນພູຕ່າງໆ ດັ່ງນີ້: ເຮັບໂຣນ, ເດບີ, ອານາບ, ແລະຕາມເນີນພູທັງໝົດຂອງຢູດາແລະເນີນພູທັງໝົດຂອງອິດສະຣາເອນ. ໂຢຊວຍໄດ້ທຳລາຍພວກເຂົາແລະເມືອງຂອງພວກເຂົາຈົນກ້ຽງ. ບໍ່ມີພວກອານາກິມຈັກຄົນທີ່ເຫຼືອຢູ່ໃນດິນແດນອິດສະຣາເອນ ແຕ່ຍັງມີບາງຄົນທີ່ໄດ້ເຫຼືອຢູ່ໃນເມືອງກາຊາ, ເມືອງກາດ ແລະເມືອງອາຊະໂດດ

## ສາເຫດທີ່ເລື່ອງນີ້ສຳຄັນ

ສົງຄາມຂອງໂຢຊວຍສ່ວນໃຫຍ່ແມ່ນປະສົບຜົນສຳເລັດ, ແຕ່ວ່າມັນຍັງບໍ່ທັນສົມບູນເທື່ອ. ຄົນຍັກຈຳນວນ ໜຶ່ງໄດ້ປົບໜີແລະໜີອອກຈາກດິນແດນນັ້ນ. ນັ້ນອາດເບິ່ງຄືວ່າບໍ່ມີຄວາມສຳຄັນຫຼາຍ, ແຕ່ມັນຊີ້ໃຫ້ເຫັນວ່າມັນຈະມີບັນຫາກັບຄົນຍັກອີກໃນພາຍຫຼັງ. ພວກຄົນຍັກບາງຄົນໄດ້ໜີໄປເມືອງກາດ. ເມືອງກາດເປັນເມືອງຂອງຊາວຟີລິດສະຕິນ (ຢຊ.13: 3). ເມືອງກາດແມ່ນບ້ານເກີດຂອງໂກລີອາດຜູ້ທີ່ດາວິດໄດ້ຕໍ່ສູ້ຕັ້ງແຕ່ຕອນຍັງໜຸ່ມ (1ຊມອ.17: 4). ໂກລີອາດບໍ່ແມ່ນຄົນຍັກຕົນດຽວທີ່ອາໄສຢູ່ໃນເມືອງກາດ (1 ຂຄ.20: 5-8). ພຣະເຈົ້າຕ້ອງການໃຫ້ພວກຄົນຍັກທັງໝົດຖືກທຳລາຍໃນໄລຍະສົງຄາມເພື່ອດິນແດນແຫ່ງພຣະສັນຍາ. ເນື່ອງຈາກວ່າຄົນອິດສະຣາເອນບໍ່ໄດ້ເຮັດສິ່ງນີ້ຢ່າງສົມບູນຈຶ່ງມີຜົນສະທ້ອນທີ່ບໍ່ດີຕາມມາຕໍ່ກັບຄົນອິດສະລາແອນໃນພາຍຫຼັງ.

ໃນພຣະທຳພວກຜູ້ປົກຄອງບອກພວກເຮົາວ່າໃນທີ່ສຸດເມື່ອໂຢຊວຍເສຍຊີວິດ, ສົງຄາມເພື່ອຍຶດຄອງດິນແດນກໍ່ຍັງບໍ່ສົມບູນແບບໃນຮູບແບບອື່ນເຊັ່ນກັນ. ທຸກໆເປົ້າໝາຍບໍ່ເຄີຍປະສົບຜົນສຳເລັດຢ່າງເຕັມທີ່. ຄົນອິດສະຣາເອນພຽງແຕ່ຕັດສິນໃຈວ່າພວກເຂົາເຮັດໄດ້ດີພໍແລ້ວແລະພວກເຂົາກໍ່ບໍ່ເຊື່ອຟັງຄຳສັ່ງຂອງພຣະເຈົ້າທີ່ໃຫ້ຂັບໄລ່ປະເທດອື່ນໆອອກໄປ. ການເຊື່ອຟັງແຕ່ບາງສ່ວນກໍເປັນການບໍ່ເຊື່ອຟັງຢ່າງແທ້ຈິງ.

ຄົນອິດສະຣາເອນຕ້ອງໃຊ້ເວລາຫຼາຍສັດຕະວັດໃນການປະສົບກັບຜົນທີ່ບໍ່ດີຈາກການຕັດສິນໃຈຄັ້ງນີ້ເພື່ອຢຸດການເຮັດຕາມຄຳສັ່ງຂອງພຣະເຈົ້າ. ໃນພຣະທຳພວກຜູ້ປົກຄອງບອກກ່ຽວກັບວົງຈອນອັນເປັນຕາຢ້ານ.ປະຊາຊົນອິດສະຣາເອນຈະເລີ່ມຂາບໄຫວ້ບູຊາພະຂອງປະເທດອື່ນທີ່ຍັງອາໄສຢູ່ທ່າມກາງພວກເຂົາ. ຫຼັງຈາກນັ້ນ, ອິດສະຣາເອນຈະຖືກຮຸກຮານໂດຍປະເທດທີ່ເປັນສັດຕູ. ມີບາງຊ່ວງເວລາປະຊາຊົນອິດສະຣາເອນເກືອບໝົດທຸກຄົນໄດ້ເຊົາເຊື່ອແລະຈົງຮັກພັກດີຕໍ່ພຣະເຈົ້າ. ຄວາມເຊື່ອແລະຄວາມຈົງຮັກພັກດີຂອງພວກເຂົາເຈົ້າໄດ້ຮັບການປັບປຸງດີຂຶ້ນໃນສະໄໝຂອງກະສັດດາວິດແລະລູກຊາຍຂອງເພິ່ນທີ່ຊື່ໄຊໂລໂມນ, ແຕ່ຫຼັງຈາກໄຊໂລໂມນຕາຍ, ອິດສະຣາເອນໄດ້ແຕກແຍກໄປສູ່ສົງຄາມກາງເມືອງແລະຫຼາຍຄົນກໍ່ເລີ່ມຂາບໄຫວ້ບູຊາຜູ້ວິນຍານປົກຄອງອື່ນໆທີ່ຊົ່ວຮ້າຍ.

ຜົນສຳເລັດຂອງສົງຄາມໄດ້ຫຼຸດລົງຍ້ອນຄວາມລົ້ມເຫຼວທີ່ສຳຄັນເຫຼົ່ານີ້. ຄວາມພ່າຍແພ້ແມ່ນຜົນສຸດທ້າຍແທນທີ່ຈະເປັນໄຊຊະນະ. ແຜນຂອງພຣະເຈົ້າທີ່ຈະຟື້ນຟູເອເດນກັບອິດສະຣາເອນຊົນຊາດໃໝ່ປະສົບຄວາມລົ້ມເຫຼວ. ທ່ານຈື່ພາບລວມຂອງພຣະບັນຍັດບົດທີ 32 ໄດ້ບໍ? ມີຄຳກ່າວວ່າປະເທດທັງໝົດແມ່ນຢູ່ພາຍໃຕ້ການຄອບຄອງຂອງພວກລູກຊາຍທີ່ກະບົດຂອງພຣະເຈົ້າ. ແຜນການຂອງພຣະເຈົ້າສຳລັບອິດສະຣາເອນຈະເປັນຕົວແທນຂອງພຣະອົງຕໍ່ປະເທດອື່ນໆລົ້ມເຫຼວ. ປະເທດອື່ນໆຍັງຄົງຢູ່ພາຍໃຕ້ສິດອຳນາດຂອງຜູ້ປົກຄອງເໜືອທຳມະຊາດທີ່ກະບົດ. ອິດສະຣາເອນໄດ້ຖືກພ່າຍແພ້ແລະຖືກບັງຄັບໃຫ້ອາໄສຢູ່ນອກດິນແດນຂອງພວກເຂົາໄປອາໄສໃນປະເທດອື່ນ. ແຜ່ນດິນແຫ່ງພຣະສັນຍາສຳລັບອິດສະຣາເອນໄດ້

ຕົກຢູ່ພາຍໃຕ້ການປົກຄອງຂອງປະເທດອື່ນແລະຢູ່ພາຍໃຕ້ອຳນາດຂອງເທບພະເຈົ້າຂອງພວກເຂົາ. ຄວາມເຂົ້າໃຈແບບດຽວກັນນີ້ກ່ຽວກັບໂລກກໍ່ຜ່ານພຣະສັນຍາໃໝ່ຄືກັນ. ໂປໂລໃຊ້ຄຳສັບຕ່າງໆເຊັ່ນອານາເຂດ, ອຳນາດປົກຄອງ, ຣິດອຳນາດ, ບັນລັງແລະອຳນາດເພື່ອອະທິບາຍເຖິງກຳລັງຂອງກະບົດແຫ່ງຄວາມມືດເຫຼົ່ານີ້ກຳລັງປົກຄອງປະເທດຕ່າງໆໃນໂລກ. ແຕ່ລະຄຳສັບນົດເຫຼົ່ານັ້ນແມ່ນຄຳສັບທີ່ອ້າງເຖິງອຳນາດເໜືອພື້ນທີ່ດິນໃດພື້ນທີ່ໜຶ່ງ.

ສາເຫດຂອງຄວາມລົ້ມເຫຼວຂອງຄົນອິດສະຣາເອນແມ່ນການບໍ່ເຊື່ອຟັງແລະຄວາມບໍ່ສັດຊື່ຕໍ່ພຣະເຈົ້າຂອງພວກເຂົາ. ມະນຸດນັ້ນອ່ອນແອ. ພວກເຮົາອາດຈະສົງໄສວ່າເປັນຫຍັງພຣະເຈົ້າຈຶ່ງລວມເອົາພວກເຮົາເຂົ້າໃນແຜນຂອງພຣະອົງ. ແຕ່ຖ້າພວກເຮົາເບິ່ງຍ້ອນກັບໄປທີ່ສວນເອເດນ, ພວກເຮົາຈະຮູ້ວ່າຍ້ອນຫຍັງ. ພຣະເຈົ້າໄດ້ສັນຍາວ່າຈະມີຄອບຄົວມະນຸດ. ພວກເຮົາເປັນພຣະລັກສະນະຂອງພຣະອົງ. ພວກເຮົາຄວນຈະເປັນຄອບຄົວທາງຝ່າຍໂລກຂອງພຣະອົງ. ແຜນຂອງພຣະອົງສຳລັບການປົກຄອງແຜ່ນດິນໂລກລວມທັງພວກເຮົາ. ຖ້າພຣະເຈົ້າຈະຢຸດການໃຊ້ຄົນກໍ່ໝາຍຄວາມວ່າພຣະອົງບໍ່ສາມາດເຮັດໃຫ້ແຜນການຂອງພຣະອົງສຳເລັດໄດ້. ຖ້າພຣະອົງຢຸດແຜນຂອງພຣະອົງມັນຈະໝາຍຄວາມວ່າແຜນການນີ້ແມ່ນຄວາມຄິດທີ່ບໍ່ດີທີ່ຈະເລີ່ມຕົ້ນ. ພຣະເຈົ້າສາມາດເຮັດ ສຳ ເລັດແຜນການຂອງພຣະອົງ. ພຣະເຈົ້າບໍ່ສາມາດມີຄວາມຄິດທີ່ບໍ່ດີ. ພຣະເຈົ້າບໍ່ໄດ້ເຮັດຜິດພາດແຜນການຂອງພຣະອົງຍັງບໍ່ຢຸດ.

ແຕ່ພຣະເຈົ້າຮູ້ດີວ່າດຽວນີ້ເຖິງເວລາແລ້ວທີ່ຈະເລີ່ມຕົ້ນພາກສ່ວນອື່ນຂອງແຜນຂອງພຣະອົງທີ່ຈະຈັດການກັບບັນຫາເກົ່າຂອງຄວາມບາບແລະຄວາມລົ້ມເຫຼວຂອງຄົນເຮົາ. ມະນຸດບໍ່ສາມາດໄວ້ໃຈໄດ້ໃນການເລີ່ມຕົ້ນສວນເອເດນຄືນໃໝ່ໃນອານາຈັກຂອງພຣະເຈົ້າ. ມີພຽງແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດເຮັດສິ່ງທີ່ຕ້ອງເຮັດໃຫ້ສຳເລັດ. ມີພຽງແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດປະຕິບັດກົດລະບຽບຂອງຂໍ້ຕົກລົງຂອງພຣະອົງໄດ້. ພຣະເຈົ້າຈະບໍ່ທຳລາຍມະນຸດທີ່ພຣະອົງຊົງສ້າງ ແຕ່ພຣະເຈົ້າຈະມາເກີດເປັນມະນຸດ. ພຣະເຈົ້າຈະປະຕິບັດຕາມພຣະບັນຍັດຂອງພຣະອົງແລະພຣະອົງຈະຮັກສາກົດລະບຽບ.ຈາກນັ້ນຜູ້ເປັນທັງພຣະເຈົ້າແລະມະນຸດຄົນນີ້ຈະຮັບໂທດສຳລັບຄວາມລົ້ມເຫຼວຂອງຄົນທັງປວງ. ແຕ່ວ່າການແກ້ໄຂບັນຫາທີ່ເປັນໄປບໍ່ໄດ້ໃຫ້ສຳເລັດນັ້ນໝາຍຄວາມວ່າຈະຕ້ອງເກັບເປັນຄວາມລັບຈາກທຸກຄົນ. ລາຍລະອຽດຂອງແຜນການນີ້ບໍ່ສາມາດຮູ້ໄດ້ໂດຍບັນດາຜູ້ປົກຄອງວິນຍານກະບົດທີ່ສະຫຼາດ. ພວກເຂົາຈະພະຍາຍາມຢ່າງສຸດກຳລັງເພື່ອທຳລາຍແຜນການນີ້. ຖ້າພວກເຂົາຮູ້ລາຍລະອຽດພວກເຂົາອາດຈະຢຸດມັນໄດ້ສຳເລັດ. ແຜນຂອງພຣະເຈົ້າທີ່ຈະເປັນທັງພຣະເຈົ້າແລະມະນຸດບໍ່ໄດ້ເປັນເລື່ອງງ່າຍ.

# ບົດທີ 10

# ປິດບັງໄວ້ຕໍ່ໜ້າຕໍ່ຕາ

**ນັບ**ຕັ້ງແຕ່ຄວາມລົ້ມເຫຼວຂອງອາດາມແລະເອວາ, ພຣະເຈົ້າໄດ້ພະຍາຍາມເລີ່ມຕົ້ນເປົ້າໝາຍເດີມຂອງພຣະອົງສຳລັບສວນເອເດນ. ພຣະອົງຕ້ອງການຢູ່ກັບຄອບຄົວວິນຍານແລະຄອບຄົວມະນຸດຢູ່ເທິງໂລກ. ພຣະເຈົ້າໄດ້ບອກອາດາມແລະເອວາໃຫ້ມີລູກເຕົ້າເປັນຈຳນວນຫຼວງຫຼາຍແລະແຜ່ກະຈາຍໄປທົ່ວແຜ່ນດິນໂລກ. ດ້ວຍວິທີນີ້ພວກເຂົາຈະ"ເປັນພຣະລັກສະນະ" ພຣະເຈົ້າແລະເຜີຍແຜ່ການປົກຄອງທີ່ດີຂອງພຣະອົງທົ່ວແຜ່ນດິນໂລກ. ພຣະເຈົ້າຕ້ອງການໃຫ້ແຜ່ນດິນໂລກທັງໝົດເປັນບ່ອນທີ່ສະຫວັນແລະແຜ່ນດິນໂລກເຊື່ອມຕໍ່ກັນ. ພຣະອົງຕ້ອງການໃຫ້ແຜ່ນດິນໂລກທັງໝົດເປັນສະຖານທີ່ທີ່ມະນຸດສາມາດເພີດເພີນກັບທຳມະຊາດແລະຍັງເປັນບ່ອນທີ່ສິ່ງເໜືອທຳມະຊາດສາມາດເພີດເພີນກັບແຜ່ນດິນໂລກແລະມະນຸດ. ພວກເຮົາຮູ້ວ່າແຜນການນີ້ໄດ້ເຮັດໃຫ້ຊັກຊ້າເປັນເວລາດົນນານແລ້ວຍ້ອນສົງຄາມທີ່ເໜືອທຳມະຊາດ.

## ປະຫວັດຄວາມລົ້ມເຫຼວ

ມະນຸດໄດ້ເຮັດບາບແລະຖືກໄລ່ອອກຈາກທີ່ປະທັບຂອງພຣະເຈົ້າໃນສວນເອເດນ. ເອເດນຖືກປິດບໍ່ໃຫ້ມະນຸດເຂົ້າໄປ. ສັດຕູທີ່ເໜືອທຳມະຊາດແມ່ນງູ(ຊາຕານ)ໄດ້ຖືກໄລ່ອອກຈາກທີ່ປະທັບຂອງພຣະເຈົ້າແລະຖືກຖິ້ມລົງສູ່ແຜ່ນດິນໂລກ. ໂລກແມ່ນບ່ອນທີ່ກົດເກນແຫ່ງຄວາມຕາຍ. ຊີວິດຢູ່ເທິງໂລກບໍ່ໄດ້ຢູ່ຕະຫຼອດໄປ. ງູແມ່ນຊາຕານແລະມັນໄດ້ກາຍເປັນເຈົ້າແຫ່ງຄວາມຕາຍ. ມັນມີຂໍ້ອ້າງທີ່ຖືກຕ້ອງວ່າເປັນເຈົ້າຂອງມະນຸດທຸກຄົນ. ເພາະທຸກຄົນເຮັດບາບ, ແລະຄ່າຈ້າງຂອງບາບແມ່ນຄວາມຕາຍ (ຣມ.6:23).

ພາຍຫຼັງການພິພາກສານ້ຳຖ້ວມໂລກ, ພຣະເຈົ້າໄດ້ກ່າວເຖິງເປົ້າໝາຍຂອງສວນເອເດນຕໍ່ໂນອາແລະຄອບຄົວຂອງລາວ. ພຣະເຈົ້າໄດ້ບອກພວກເຂົາໃຫ້ມີລູກເຕົ້າແລະເພີ່ມທະວີຈຳນວນຫຼາຍຂຶ້ນຄືກັບທີ່ພຣະອົງໄດ້ບອກອາດາມແລະເອວາ. ແຕ່ມະນຸດບໍ່ເຊື່ອຟັງແລະກະບົດອີກເທື່ອໜຶ່ງ. ແທນທີ່ຈະເຊື່ອຟັງພຣະເຈົ້າແລະເຜີຍແຜ່ຄວາມຮູ້ແລະການປົກຄອງຂອງພຣະເຈົ້າຢູ່ທົ່ວທຸກແຫ່ງ, ພວກເຂົາພັດພາກັນຈະສ້າງວິຫານບ່ອນທີ່ພວກເຂົາຄາດຫວັງວ່າພຣະເຈົ້າຈະມາຫາພວກເຂົາ.

ຄວາມລົ້ມເຫຼວແລ້ວລົ້ມເຫຼວອີກ. ພຣະເຈົ້າຈະບໍ່ເຫັນດີກັບແຜນການຂອງມະນຸດ. ສະນັ້ນ,ພຣະເຈົ້າຈຶ່ງເຮັດໃຫ້ພາສາຂອງມະນຸດສັບສົນເປັນຫຼາຍໆພາສາ. ຫຼັງຈາກນັ້ນ, ພຣະເຈົ້າໄດ້ໃຫ້ມະນຸດຕົກຢູ່ໃຕ້ອຳນາດຂອງສະມາຊິກສະພາວິນຍານຂອງພຣະອົງ. ແລ້ວພຣະເຈົ້າກໍເລີ່ມຕົ້ນຄອບຄົວມະນຸດໃໝ່ຂອງພຣະອົງເອງ

ໂດຍຜ່ານອັບຣາຮາມແລະຊາຣາ. ແຜນການຂອງພຣະເຈົ້າແມ່ນນຳເອົາບັນດາປະຊາຊາດຕ່າງໆກັບຄືນມາໃນພາຍຫຼັງໂດຍໃຊ້ລູກຫຼານຂອງອັບຣາຮາມ (ປຖກ.12: 3).

ແຕ່ກ່ອນອື່ນພຣະເຈົ້າຈຳເປັນຕ້ອງນຳເອົາການປົກຄອງອານາຈັກຂອງພຣະອົງກັບຄືນສູ່ແຜ່ນດິນໂລກ. ອິດສະຣາເອນໄດ້ຖືກນຳອອກຈາກປະເທດເອຢິບ, ຈາກນັ້ນໄປທີ່ພູເຂົາຊີນາຍ, ແລະໃນທີ່ສຸດກໍໄປສູ່ແຜ່ນດິນແຫ່ງພຣະສັນຍາ. ແຕ່ອິດສະຣາເອນລົ້ມເຫຼວແລ້ວລົ້ມເຫຼວອີກທີ່ຈະປະຕິບັດຕາມແຜນຂອງພຣະເຈົ້າ. ໃນທີ່ສຸດພຣະເຈົ້າໃຫ້ດາວິດເປັນກະສັດອິດສະຣາເອນແລະຕໍ່ມາກໍຄືກະສັດໂຊໂລໂມນ. ແຕ່ພາຍຫຼັງໂຊໂລໂມນຕາຍໄປແລ້ວ, ຄົນອິດສະຣາເອນກໍໄດ້ຕິດຕາມພະອື່ນໆແລະຊົນຊາດອິດສະຣາເອນກໍ່ຕໍ່ສູ້ກັນເອງ. ໃນທີ່ສຸດພຣະເຈົ້າຕ້ອງຂັບໄລ່ພວກເຂົາອອກຈາກແຜ່ນດິນແຫ່ງພຣະສັນຍາແລ້ວໃຫ້ຖືກເນລະເທດໄປຢູ່ໃນດິນແດນອື່ນທີ່ຢູ່ພາຍໃຕ້ອຳນາດຂອງວິນຍານຊົ່ວຮ້າຍທີ່ປົກຄອງຢູ່ທີ່ບາບີໂລນ.

ປະຫວັດຂອງມະນຸດແມ່ນເລື່ອງຂອງຄວາມລົ້ມເຫຼວ. ນີ້ແມ່ນຍ້ອນວ່າມະນຸດຫຼົງທາງຕັ້ງແຕ່ພວກເຂົາຕົກຢູ່ໃນບາບໃນສວນເອເດນ. ທຸກຄົນລ້ວນແຕ່ເປັນຄົນທີ່ບໍ່ສົມບູນແບບແລະແຍກອອກຈາກພຣະເຈົ້າ. ບໍ່ມີມະນຸດຄົນໃດສາມາດວາງໃຈໄດ້ໃນການເລີ່ມຕົ້ນແລະເຮັດຕາມແຜນຂອງພຣະເຈົ້າ. ພວກເຂົາຈະຂັດຂືນຄວາມສັດຊື່ຕໍ່ພຣະເຈົ້າອົງດຽວ ພວກເຂົາຍັງສືບຕໍ່ໄປຕາມທາງຂອງຕົນເອງ. ມະນຸດຈະເຮັດບາບ, ລົ້ມເຫຼວແລະເຂົ້າຮ່ວມກັບເຈົ້າແຫ່ງຄວາມຕາຍ, ຊາຕານແມ່ນສັດຕູທີ່ມີອຳນາດຂອງພຣະເຈົ້າ. ແຕ່ແຜນການຂອງພຣະເຈົ້າສຳລັບການແບ່ງປັນການປົກຄອງທີ່ດີຂອງພຣະອົງໃນແຜ່ນດິນໂລກກັບມະນຸດບໍ່ສາມາດເກີດຂຶ້ນໄດ້ໂດຍບໍ່ມີມະນຸດ. ພຣະເຈົ້າຕ້ອງການໃຫ້ແຜ່ນດິນໂລກກາຍເປັນສວນເອເດນແຫ່ງໃໝ່ ເຊິ່ງເປັນບ່ອນທີ່ພຣະເຈົ້າແລະມະນຸດຢູ່ຮ່ວມກັນ, ແຕ່ວ່າໃນທຸກໆບາດກ້າວມີບັນຫາໃຫຍ່. ວິທີດຽວທີ່ມະນຸດສາມາດຈົງຮັກພັກດີຕໍ່ພຣະເຈົ້າແລະແຜນການຂອງພຣະອົງແມ່ນໃຫ້ພວກເຂົາເຈົ້າຖືກສ້າງໃໝ່ອີກຄັ້ງ. ຄຳສາບແຊ່ງຂອງການກະບົດແລະການລົ້ມລົງຂອງພວກເຂົາຕ້ອງຖືກຍົກເລີກ.

ແລະເພື່ອເຮັດໃຫ້ສິ່ງນັ້ນສຳເລັດ, ພຣະເຈົ້າຕ້ອງມີສ່ວນໃນແຜນຂອງພຣະອົງ.

# ວິທີແກ້ໄຂບັນຫາແລະບັນຫາ

ພຣະເຈົ້າຕ້ອງການຄົນໜຶ່ງເພື່ອມາເຮັດໃຫ້ແຜນການຂອງພຣະອົງສຳເລັດ.ແຕ່ມະນຸດທຸກຄົນລົ້ມເຫຼວແລ້ວລົ້ມເຫຼວອີກ. ພຣະເຈົ້າຕ້ອງມະນຸດຄົນໜຶ່ງທີ່ເປັນຫຼາຍກວ່າມະນຸດ. ພຣະເຈົ້າຕ້ອງການຜູ້ທີ່ສາມາດຕ້ານທານກັບການລໍ້ລວງ. ພຣະອົງຕ້ອງການຄົນໜຶ່ງທີ່ຈະເຊື່ອຟັງສະເໝີ. ພຣະອົງຕ້ອງການຊາຍຄົນໜຶ່ງທີ່ສາມາດເປັນກະສັດ. ພຣະເຈົ້າຕ້ອງການມະນຸດຜູ້ທີ່ສາມາດແກ້ໄຂຄຳສາບແຊ່ງແຫ່ງຄວາມຕາຍໂດຍການຕາຍແລະຈາກນັ້ນກໍເປັນຄືນມີຊີວິດໃໝ່ໂດຍອຳນາດຂອງຕົນເອງ. ມະນຸດຄົນໃດຈະເປັນແບບນັ້ນ ? ຂໍ້ກຳນົດທັງໝົດນີ້ສາມາດເກີດຂຶ້ນໄດ້ໃນທາງດຽວເທົ່ານັ້ນຄື ພຣະເຈົ້າຈະຕ້ອງມາເປັນມະນຸດ. ພຣະເຈົ້າຈະ

ປະຕິບັດແຜນການຂອງຕົນເອງໃຫ້ສຳເລັດໃນຂະນະທີ່ເປັນມະນຸດ ເພື່ອມະນຸດທຸກຄົນ ພຣະເຈົ້າຕ້ອງການມະນຸດທີ່ສົມບູນແບບເພື່ອຟື້ນຟູສວນເອເດນ. ບໍ່ມີມະນຸດຄົນໃດທີ່ສົມບູນແບບ, ສະນັ້ນພຣະເຈົ້າຕ້ອງມາເປັນມະນຸດທີ່ສົມບູນແບບ.

ແຕ່ໃນແຜນການກໍມີຈຸດອ່ອນນຳ. ຖ້າຫາກພຣະເຈົ້າຜູ້ເປັນມະນຸດຢູ່ທີ່ນີ້ເພື່ອຈະຕາຍແລະເປັນຄືນຈາກຕາຍອີກ, ລາຍລະອຽດເຫຼົ່ານັ້ນຕ້ອງເປັນຄວາມລັບ. ຖ້າມະນຸດທີ່ສົມບູນແບບນີ້ສາມາດເຮັດຕາມແຜນຂອງພຣະເຈົ້າ, ວິນຍານແຫ່ງຄວາມມືດຈະບໍ່ເຂົ້າໃຈວ່າມັນຈະເກີດຂຶ້ນໄດ້ແນວໃດ. ຖ້າພວກເຂົາຮູ້ລາຍລະອຽດ, ພວກເຂົາຈະທຳລາຍແຜນການ.

ນີ້ແມ່ນສິ່ງທີ່ໂປໂລໄດ້ກ່າວໃນຈົດໝາຍເຖິງຄຣິສຕະຈັກເມືອງໂກຣິນໂທ:

> ປັນຍາທີ່ເຮົາປະກາດນັ້ນ ແມ່ນຄວາມເລິກລັບແຫ່ງປັນຍາຂອງພຣະເຈົ້າ ທີ່ຖືກເຊື່ອງໄວ້ຈາກມະນຸດກ່ອນສ້າງໂລກ ຊຶ່ງພຣະເຈົ້າຊົງກຳນົດໄວ້ແລ້ວ ເພື່ອເປັນສະຫງ່າຣາສີແກ່ພວກເຮົາ. ບໍ່ມີຜູ້ປົກຄອງຄົນໃດໃນໂລກນີ້ ໄດ້ຮູ້ຈັກປັນຍານີ້, ຖ້າເຂົາຮູ້ຈັກ ເຂົາຄົງບໍ່ເອົາອົງພຣະຜູ້ເປັນເຈົ້າ ຜູ້ຊົງສະຫງ່າຣາສີຄຶງໄວ້ທີ່ໄມ້ກາງແຂນ. (1ກຣທ.2.7-8)

ໂປໂລພວມເວົ້າເຖິງໃຜ? ຄຳວ່າ“ ຜູ້ປົກຄອງ” ສາມາດໝາຍເຖິງອຳນາດການປົກຄອງຂອງມະນຸດກໍໄດ້ເຊັ່ນ: ປົນອີໂອປີລາດແລະພວກຜູ້ນຳຊາວຢິວ, ແຕ່ໂປໂລຍັງໝາຍເຖິງອຳນາດວິນຍານທີ່ກະບົດພ້ອມ (ອຟຊ.2: 2). ພຣະເຈົ້າມີສັດຕູທັງມະນຸດແລະວິນຍານ. ທັງສອງກຸ່ມຕ້ອງຖືກປິດບັງໄວ້ໂດຍບໍ່ຮູ້ລາຍລະອຽດຂອງແຜນຂອງພຣະເຈົ້າ. ແຜນການທັງໝົດແມ່ນຂຶ້ນກັບຄວາມຕາຍແລະການຟື້ນຄືນຊີວິດຂອງພຣະເຈົ້າຜູ້ເປັນມະນຸດ.

ແຕ່ພຣະເຈົ້າຈະຮັກສາລາຍລະອຽດທັງໝົດເປັນຄວາມລັບແນວໃດ?

# ພຣະເມຊີອາທີ່ປິດບັງໄວ້

ພຣະເຢຊູເຈົ້າໄທນາຊາເຣັດແມ່ນພຣະເຈົ້າຜູ້ເປັນມະນຸດແລະແຜນການທັງໝົດຂຶ້ນຢູ່ກັບພຣະອົງ. ພຣະເຢຊູເຈົ້າເປັນພຣະເມຊີອາຜູ້ທີ່ຈະຟື້ນຟູສວນເອເດນ.ແຕ່ຈະເຮັດໃຫ້ທ່ານຕົກຕະລຶງທີ່ຂ້າພະເຈົ້າຂຽນວ່າແຜນການດັ່ງກ່າວເປັນຄວາມລັບບໍ? ພຣະສັນຍາເດີມບໍ່ມີແຜນທັງໝົດຂຽນຢູ່ໃນນັ້ນບໍ ? ບໍ່,ມັນເປັນໄປບໍ່ໄດ້.

ບໍ່ມີຂໍ້ໃດໃນພຣະສັນຍາເດີມທີ່ໃຊ້ຄຳວ່າພຣະເມຊີອາໃນມະນຸດຄົນໜຶ່ງ ຜູ້ທີ່ເປັນພຣະເຈົ້າແທ້ໆແລະຜູ້ທີ່ຈະຕາຍແທນບາບຂອງຄົນເຮົາ. ບໍ່ແມ່ນແຕ່ໃນ ເອຊາຢາ 53:11 ເຊິ່ງພັນລະນາເຖິງ“ ຜູ້ຮັບໃຊ້ທີ່ທົນ

ທຸກທໍລະມານ” ຂອງພຣະເຈົ້າມີລາຍລະອຽດເຫຼົ່ານີ້.ຄໍາວ່າພຣະເມຊີອາຈະບໍ່ປາກົດໃນບົດນັ້ນ. ໃນບ່ອນອື່ນໆໃນເອຊາຢາ,“ ຜູ້ຮັບໃຊ້” ໝາຍ ເຖິງຊາດອິດສະຣາເອນຢ່າງຈະແຈ້ງ, ບໍ່ແມ່ນບຸກຄົນຜູ້ທີ່ເປັນຜູ້ຊ່ວຍໃຫ້ພົ້ນ (ອຊຢ. 41: 8; 44:1–2, 21; 45: 4; 48:20; 49: 3) . ຄໍາວ່າພຣະເມຊີອາມີຄວາມໝາຍວ່າຜູ້ "ຖືກເຈີມຕັ້ງ". ຕາມປົກກະຕິແລ້ວສິ່ງນີ້ໝາຍເຖິງພຽງແຕ່ດາວິດຫຼືເຊື້ອສາຍຂອງເພິ່ນຜູ້ທີ່ຂຶ້ນເປັນກະສັດປົກຄອງອິດສະຣາເອນ.

ຂ້າພະເຈົ້າເວົ້າວ່າແຜນການສໍາລັບພຣະເຈົ້າຜູ້ເປັນມະນຸດຫຼືພຣະເມຊີອາທີ່ຈະຕາຍແລະເປັນຄືນມາອີກ, ແມ່ນຍາກທີ່ຈະພົບເຫັນໃນພຣະສັນຍາເດີມ. ນີ້ແມ່ນສິ່ງທີ່ພຣະສັນຍາໃໝ່ກ່າວໄວ້.

ລອງຄິດເບິ່ງວ່າພວກສາວົກໄດ້ຕອບສະໜອງຕໍ່ພຣະເຢຊູເຈົ້າແນວໃດເມື່ອພຣະອົງບອກພວກເຂົາວ່າພຣະອົງຈະໄປນະຄອນເຢຣູຊາເລັມເພື່ອຕາຍ. ສິ່ງນີ້ສັບສົນແລະຫຍຸ້ງຍາກກັບພວກເຂົາເຈົ້າ (ມທ. 17: 22-23; ມຣກ. 9:30-32). ພວກເຂົາບໍ່ໄດ້ຕອບໂດຍກ່າວວ່າ, "ແມ່ນແລ້ວ, ພວກຂ້ານ້ອຍໄດ້ອ່ານກ່ຽວກັບເລື່ອງນັ້ນໃນພຣະຄໍາພີແລ້ວ." ເປໂຕຍັງໄດ້ຕິຕຽນພຣະເຢຊູເຈົ້າທີ່ໄດ້ກ່າວແບບນີ້ (ມທ.16: 21–23).

ພວກສາວົກບໍ່ເຂົ້າໃຈວ່ານີ້ແມ່ນແຜນການຂອງພຣະເຈົ້າ. ພວກເຂົາຄິດວ່າພຣະເຢຊູເຈົ້າເປັນບຸດຂອງດາວິດແລະເປັນຜູ້ສືບທອດບັນລັງຂອງເພິ່ນ. ພຣະເຢຊູເຈົ້າໄດ້ເຮັດການອັດສະຈັນຄືກັບທີ່ບັນດາຜູ້ທໍານວາຍໄດ້ເຮັດໃນພຣະສັນຍາເດີມ.

ເຖິງແມ່ນວ່າໃນເວລາຕໍ່ມາເມື່ອພຣະເຢຊູເຈົ້າເປັນຄືນມາຈາກຕາຍແລ້ວ, ພວກສາວົກຈໍາເປັນຕ້ອງໃຫ້ຈິດໃຈຂອງພວກເຂົາຖືກເປີດໂດຍພຣະວິນຍານຂອງພຣະເຈົ້າເພື່ອພວກເຂົາຈະເຂົ້າໃຈວ່າພຣະເມຊີອາຕ້ອງທົນທຸກທໍລະມານແລະຕາຍ.ຫຼັງຈາກພຣະເຢຊູໄດ້ເປັນຄືນມາຈາກຕາຍ, ພຣະອົງໄດ້ມາປະກົດແກ່ພວກເຂົາແລະກ່າວວ່າ:

“ນີ້ແຫຼະ ແມ່ນສິ່ງທີ່ເຮົາໄດ້ບອກພວກເຈົ້າແລ້ວ ເມື່ອເຮົາຍັງຢູ່ກັບພວກເຈົ້າ ຄືທຸກສິ່ງທີ່ໄດ້ມີຂຽນໄວ້ເຖິງເຮົາໃນໜັງສືກົດບັນຍັດຂອງໂມເຊ, ໃນໜັງສືຂອງພວກຜູ້ທໍານວາຍ ແລະໃນໜັງສືເພງສັນລະເສີນຈໍາເປັນຕ້ອງສໍາເລັດເປັນຈິງຕາມນັ້ນ.”

ແລ້ວພຣະອົງກໍໄດ້ຊົງບັນດານເປີດຈິດໃຈຂອງພວກເພິ່ນໃຫ້ເຂົ້າໃຈພຣະຄໍາພີ

ແຜນຂອງພຣະເຈົ້າແມ່ນການມາເປັນມະນຸດ, ເພື່ອຈະຕາຍ, ແລະເປັນຄືນຈາກຕາຍ. ໂດຍການເຮັດສິ່ງນີ້ຍົກເລີກຄໍາສາບແຊ່ງຂອງການລົ້ມເຫຼວໃນເອເດນ. ແຕ່ນີ້ບໍ່ຈະແຈ້ງປານໃດໃນພຣະສັນຍາເດີມ. ແຕ່ຮ່ອງຮອຍຂໍ້ມູນໄດ້ຖືກກະແຈກກະຈາຍຢູ່ທົ່ວພຣະສັນຍາເດີມໃນຫຼາຍໆບ່ອນ. ທຸກຢ່າງບໍ່ເຄີຍຖືກເປີດເຜີຍ

ໃນບ່ອນດຽວ. ສິ່ງທີ່ພຣະເມຊີອາຈະເຮັດແມ່ນຈະແຈ້ງໂດຍການເບິ່ງຄືນສູ່ພຣະສັນຍາເດີມຫຼັງຈາກທີ່ພວກເຮົາຮູ້ວ່າມີຫຍັງເກີດຂຶ້ນ ແລະເຖິງແມ່ນວ່າໃນເວລານັ້ນກໍມີພຽງແຕ່ບາງຄົນທີ່ຮູ້ລາຍລະອຽດດີເທົ່ານັ້ນຈະສາມາດເບິ່ງແຜນການບາງຢ່າງຢູ່ທີ່ນັ້ນ.

ແນ່ນອນສິ່ງມີຊີວິດທີ່ຊົ່ວຮ້າຍເໜືອທຳມະຊາດ, ຮູ້ວ່າພຣະເຢຊູເຈົ້າເປັນບຸດຂອງດາວິດທີ່ໄດ້ສັນຍາໄວ້ (ມທ. 8: 28–29; ລກ. 4: 31–35). ພວກເຂົາສາມາດເຂົ້າໃຈໄດ້ຫຼາຍຈາກພຣະສັນຍາເດີມ. ແຕ່ສິ່ງທີ່ພວກຜີຮ້າຍເວົ້ານັ້ນສະແດງໃຫ້ເຫັນວ່າພວກເຂົາບໍ່ເຂົ້າໃຈວ່າພຣະເຢຊູເຈົ້າໄດ້ມາແຜ່ນດິນໂລກເພື່ອຈະຕາຍແລະເປັນຄືນມາຈາກຕາຍ. ພວກເຂົາບໍ່ເຂົ້າໃຈວ່ານີ້ແມ່ນການວາງແຜນທີ່ຈະຍົກເລີກຄຳສາບແຊ່ງ.

ໂປໂລກ່າວວ່າ, ຖ້າຜູ້ປົກຄອງວິນຍານທີ່ກະບົດເຂົ້າໃຈເລື່ອງນີ້, ພວກເຂົາຈະບໍ່ໄດ້ກະຕຸ້ນຄົນຄືຢູດາທໍລະຍົດພຣະເຢຊູເຈົ້າມອບໃຫ້ຜູ້ນຳຄົນຢິວທີ່ຕ້ອງການໃຫ້ພຣະເຢຊູເຈົ້າຕາຍ. ຊາຕານແລະຜູ້ທີ່ຢູ່ໃນທີມພວກເຂົາບໍ່ໂງ່. ພວກເຂົາຖືກຫຼອກລວງໃຫ້ຂ້າພຣະເຢຊູເຈົ້າ. ນີ້ແມ່ນແຜນການຂອງພຣະເຈົ້າ. ພວກລູກຊາຍທີ່ກະບົດຂອງພຣະເຈົ້າໄດ້ກະທຳໃນວິທີທີ່ທຳລາຍຕົວເອງ. ພຣະເຈົ້າໄດ້ໃຊ້ການກະທຳທີ່ຊົ່ວຮ້າຍຂອງພວກວິນຍານກະບົດເພື່ອເຮັດໃຫ້ແຜນການທີ່ດີຂອງພຣະອົງສຳເລັດ.

## ພາກສ່ວນຕ່າງຂອງໂຄງຮ່າງ/ປະຫວັດ

ດຽວນີ້ພວກເຮົາສາມາດເຂົ້າໃຈລາຍລະອຽດທັງໝົດຂອງແຜນການພຣະເມຊີອາໄດ້ດີກວ່າພວກສາວົກ. ບໍ່ມີຂໍ້ໃດທີ່ບອກກ່ຽວກັບພຣະເຈົ້າທີ່ເປັນມະນຸດຜູ້ທີ່ເປັນບຸດຂອງດາວິດຜູ້ທີ່ຕາຍແລະເປັນຄືນຈາກຕາຍແລະປົ່ງນຄຳສາບແຊ່ງ. ລາຍລະອຽດເຫຼົ່ານັ້ນໄດ້ແຜ່ກະຈາຍຢູ່ທົ່ວພຣະສັນຍາເດີມຄືກັບເສັ້ນໄໝທີ່ສານຢູ່ໃນຜ້າແພແຜ່ນໜຶ່ງ. ຖ້າທ່ານເບິ່ງເສັ້ນດຽວ, ທ່ານກໍບໍ່ສາມາດເຫັນລວດລາຍໄດ້. ແຕ່ຖ້າທ່ານຖອຍຫຼັງຈັກໜ້ອຍໜຶ່ງທ່ານຈະເຫັນການອອກແບບທັງໝົດ. ຫຼັງຈາກທ່ານໄດ້ອ່ານເລື່ອງລາວຂອງພຣະເຢຊູເຈົ້າໃນພຣະສັນຍາໃໝ່, ທ່ານສາມາດຄົ້ນພົບແລະຕິດຕາມລາຍລະອຽດຕ່າງໆໄດ້ໃນພຣະສັນຍາເດີມ. ນີ້ແມ່ນຄ້າຍຄືການຊອກຫາໄໝເສັ້ນໜຶ່ງໃນຜ້າແພແຜ່ນໜຶ່ງແລະຕິດຕາມເພື່ອເບິ່ງວ່າມັນມີສ່ວນໃດແດ່ໃນການອອກແບບໂດຍລວມ.

ຍົກຕົວຢ່າງ “ໃຜເປັນບຸດຂອງພຣະເຈົ້າ ? ” ໃນພຣະສັນຍາເດີມຄຳຕອບບໍ່ແມ່ນ "ພຣະເຢຊູເຈົ້າ". ບຸດຊາຍຂອງພຣະເຈົ້າແມ່ນອາດາມເປັນມະນຸດຄົນທຳອິດ. ຊົນຊາດອິດສະຣາເອນຍັງຖືກເອີ້ນວ່າບຸດຂອງພຣະເຈົ້າ (ອພຍ.4:23; ຮສອ.11:1). ກະສັດແຫ່ງອິດສະຣາເອນຍັງຖືກເອີ້ນວ່າ ບຸດຂອງພຣະເຈົ້າ (ພສສ.2:7). ໃນພຣະສັນຍາໃໝ່, ພຣະເຢຊູເຈົ້າຖືກເອີ້ນວ່າ “ອາດາມຜູ້ທີສອງ” ແລະ “ພຣະບຸດຂອງພຣະເຈົ້າ” (ຣມ 1: 4; 1ກຣທ.15:45; 2 ກຣທ.1:19; ຮຣ. 4: 4).

ໃນພຣະສັນຍາເດີມ, "ໃຜເປັນຜູ້ຮັບໃຊ້ຂອງພຣະເຈົ້າ?" ອາດາມໄດ້ຮັບໃຊ້ພຣະເຈົ້າ (ປະຖົມມະການ 2:15). ອິດສະຣາເອນຖືກເອີ້ນວ່າຜູ້ຮັບໃຊ້ຂອງພຣະເຈົ້າ (ອຊຢ. 41: 8; 44: 1– 2, 21; 45: 4; 48:20; 49: 3). ດາວິດແລະກະສັດອິດສະຣາເອນຄົນອື່ນໆໃນຄອບຄົວຂອງເພິ່ນຖືກເອີ້ນວ່າຜູ້ຮັບໃຊ້ຂອງພຣະເຈົ້າ (2 ຊມອ.3:18; ພສສ.89: 3; 1ກສ.3:7; 2 ຂຄ.32.16) ໃນພຣະສັນຍາໃໝ່ພຣະເຢຊູເຈົ້າຍັງເປັນຜູ້ຮັບໃຊ້ອີກດ້ວຍ (ກຈ.3: 13; 4:30; ຟລປ. 2: 1-8).

"ລູກຂອງພຣະເຈົ້າ"ແລະ"ຜູ້ຮັບໃຊ້ຂອງພຣະເຈົ້າ" ຄົນເຫຼົ່ານີ້ຕ້ອງທົນທຸກທໍລະມານຫຼືບໍ? ພວກເຂົາເຈົ້າທັງ ໝົດໄດ້ເສຍຊີວິດໃນເວລາໃດໜຶ່ງບໍ? ພວກເຂົາທັງໝົດໄດ້ເປັນຄືນມາຈາກຕາຍບໍ? ພວກເຂົາມີອະນາຄົດໃນສວນເອເດນໃໝ່ບໍ? ຄຳຕອບສຳລັບຄຳຖາມທັງໝົດຄືແມ່ນແລ້ວ, ອາດາມ,ຄົນອິດສະຣາເອນ, ແລະບັນດາກະສັດໃນເຊື້ອສາຍຂອງດາວິດໄດ້ຖືກຂັບໄລ່ອອກຈາກທີ່ປະທັບຂອງພຣະເຈົ້າ. ສະຖານທີ່ປະທັບຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກແມ່ນສວນເອເດນແລະຕໍ່ມາແຜ່ນດິນແຫ່ງພຣະສັນຍາ. ເຖິງຢ່າງໃດກໍ່ຕາມ, ອາດາມ, ຄົນອິດສະຣາເອນແລະເຊື້ອສາຍຂອງດາວິດຈະຢູ່ໃນສວນເອເດນໃໝ່ ເພື່ອອາໄສຢູ່ຮ່ວມກັບພຣະເຈົ້າແລະພຣະເຢຊູເຈົ້າທີ່ໄດ້ເປັນຄືນມາຈາກຕາຍ.

ຈຸດສຳຄັນກໍຄືບຸກຄົນໃນພຣະສັນຍາເດີມທັງໝົດນີ້ຊີ້ໄປຫາພຣະເຢຊູໃນທາງໃດທາງໜຶ່ງ. ພຣະເຢຊູເຈົ້າໄດ້ເຮັດຕາມແບບທີ່ເລີ່ມຕົ້ນໃນພຣະສັນຍາເດີມໃຫ້ສຳເລັດ. ພຣະເຢຊູເຈົ້າແມ່ນພາບທີ່ສົມບູນທີ່ພວກເຮົາເຫັນເມື່ອຊິ້ນສ່ວນທັງໝົດຖືກລວມເຂົ້າກັນ. ລາຍລະອຽດທັງໝົດແມ່ນຢູ່ໃນພຣະສັນຍາເດີມ, ແຕ່ພວກເຮົາບໍ່ສາມາດເຂົ້າໃຈການອອກແບບ. ພວກເຮົາສາມາດເບິ່ງເສັ້ນສາຍໄດ້, ແຕ່ພວກເຮົາບໍ່ສາມາດເຫັນຮູບແບບລວດລາຍ. ຫຼັງຈາກພວກເຮົາເຫັນສິ່ງທີ່ພຣະເຢຊູເຈົ້າໄດ້ກະທຳແລ້ວ, ແລ້ວພວກເຮົາກໍ່ຈະເຫັນແຜນການຂອງພຣະເຈົ້າ. ພວກເຮົາຕ້ອງການລາຍລະອຽດກ່ຽວກັບພຣະສັນຍາໃໝ່ ເພື່ອຈະເຫັນແຜນການທັງໝົດຂອງພຣະເຈົ້າກັບມາຢູ່ໃນພຣະສັນຍາເດີມ.

# ສາເຫດທີ່ເລື່ອງນີ້ສຳຄັນ

ຄວາມຊົ່ວຮ້າຍທີ່ສະຫຼາດຫຼັກແຫຼມຄືຊາຕານ, ຜີມານຮ້າຍຕ່າງໆ, ແລະສະມາຊິກສະພາທີ່ກະບົດທີ່ປົກຄອງປະເທດຕ່າງໆນັ້ນແມ່ນສະຫຼາດແລະຊົ່ວຮ້າຍ, ແຕ່ພວກເຂົາບໍ່ຮູ້ທຸກຢ່າງ. ພວກເຂົາບໍ່ມີຈິດໃຈຂອງພຣະເຈົ້າ. ພວກເຂົາບໍ່ສາມາດເຂົ້າໃຈພຣະເຈົ້າໄດ້. ພວກເຮົາຄິດວ່າເພາະພວກເຂົາເປັນຜູ້ມະຫັດສະຈັນເໜືອທຳມະຊາດ, ພວກເຂົາກໍຮູ້ທຸກຢ່າງ. ນັ້ນບໍ່ແມ່ນຄວາມຈິງ. ມີພຽງຜູ້ດຽວທີ່ຮູ້ຈັກທັງໝົດນັ້ນຄືພຣະເຈົ້າແລະພວກເຮົາກໍຢູ່ຝ່າຍພຣະອົງ.

ເນື່ອງຈາກການກະບົດໃນສວນເອເດນຊາຕານຈຶ່ງມີສິດອຳນາດຢ່າງຖືກຕ້ອງເໜືອຄົນທັງປວງ. ຂ້າພະເຈົ້າໝາຍຄວາມວ່າແນວໃດ? ຍ້ອນບາບຂອງອາດາມ"ຄວາມຕາຍຈຶ່ງໄດ້ລາມໄປເຖິງມະນຸດທຸກຄົນ"

(ธม 5:12). ງູໄດ້ຖືກສາບແຊ່ງ ຖືກໂຍນລົງມາເພື່ອປົກຄອງໂລກແຫ່ງຄວາມຕາຍ. ຍ້ອນການກະບົດໃນສວນເອເດນຄົນທັງປວງຈະຕ້ອງຕາຍແລະໄປຢູ່ໃນດິນແດນແຫ່ງຄວາມຕາຍຄືບ່ອນທີ່ພະຍາມານປົກຄອງ.

ທັງໝົດນັ້ນໄດ້ປ່ຽນແປງເມື່ອພຣະເຢຊູເຈົ້າສະເດັດມາແລະເຮັດໃຫ້ແຜນການແຫ່ງຄວາມພົ້ນຂອງພຣະເຈົ້າສຳເລັດໂດຍການຕາຍເທິງໄມ້ກາງແຂນແລະເປັນຄືນມາຈາກຄວາມຕາຍ. ຂັ້ນຕອນທຳອິດໃນການຟື້ນຟູສວນເອເດນແມ່ນການເປີດທົນທາງໃຫ້ມະນຸດຫຼຸດພົ້ນຈາກຄຳສາບແຊ່ງແຫ່ງຄວາມຕາຍ. ທຸກຄົນທີ່ເຊື່ອພຣະເຢຊູເຈົ້າກໍ່ຖືກສ້າງໃຫ້ເປັນສະມາຊິກໃນຄອບຄົວແລະອານາຈັກຂອງພຣະເຈົ້າ. ພວກເຂົາເຈົ້າບໍ່ໄດ້ເປັນທາດຂອງຄຳສາບແຊ່ງແຫ່ງຄວາມຕາຍແລະເຈົ້າແຫ່ງຄວາມຕາຍອີກຕໍ່ໄປ. ພຣະເຢຊູເຈົ້າໄດ້ເລີ່ມຕົ້ນການຮັບໃຊ້ຂອງພຣະອົງໂດຍການສອນກ່ຽວກັບການນຳເອົາອານາຈັກຂອງພຣະເຈົ້າມາສູ່ໂລກແຫ່ງຄວາມຕາຍ (ລກ.10:1–9). ພຣະເຢຊູໄດ້ກ່າວວ່າ:“ ເຮົາໄດ້ເຫັນມານຊາຕານຕົກລົງຈາກຟ້າ ດັ່ງຟ້າແມບ.” (ລກ. 10:18). ພຣະເຢຊູເຈົ້າຮູ້ວ່າຄວາມຕາຍແລະການຄືນມາຈາກຕາຍຂອງພຣະອົງຈະຈ່າຍໜີ້ຂອງຄົນບາບ. ສິ່ງນີ້ຈະເຮັດໃຫ້ຊາຕານບໍ່ມີຂໍ້ອ້າງທີ່ຖືກຕ້ອງຕໍ່ຈິດວິນຍານຂອງພວກເຮົາ. ການທີ່ອານາຈັກຂອງພຣະເຈົ້າສະເດັດມາເປັນຈຸດເລີ່ມຕົ້ນຂອງການທຳລາຍເຈົ້າແຫ່ງຄວາມຕາຍ.

ພວກເຮົາຕ້ອງຈື່ວ່າພວກເຮົາແມ່ນໃຜ. ພວກເຮົາຕ້ອງຈື່ໄວ້ວ່າພວກເຮົາມາຈາກໃສ. ຜູ້ທີ່ເຊື່ອ, ເປັນກຸ່ມຄົນທີ່ຖືກເອີ້ນວ່າຮ່າງກາຍຂອງພຣະຄຣິດແລະພຣະສົບຂອງພຣະເຢຊູເຈົ້າກໍໄດ້ເປັນຄືນມາຈາກຕາຍ. ພວກເຮົາຈະເປັນຄືນມາຈາກຕາຍເພາະວ່າພຣະອົງໄດ້ເປັນຄືນມາແລ້ວ (1 ກຣທ.15: 20–23). ພຣະອົງເປັນລູກກົກຂອງຄົນຕາຍ. ພວກເຮົາແມ່ນ "ທີ່ຊຸມນຸມກັນຂອງບັນດາລູກກົກ ຜູ້ທີ່ມີຄວາມຊົມຊື່ນຍິນດີ ຊຶ່ງຊື່ຂອງພວກເຂົາໄດ້ບັນທຶກໄວ້ໃນສະຫວັນແລ້ວ" (ຮຣ.12: 22–24). ໂຢຮັນກ່າວວ່າ,“ ແຕ່ສ່ວນບັນດາຜູ້ທີ່ຕ້ອນຮັບພຣະອົງ ຄືຜູ້ທີ່ເຊື່ອໃນພຣະນາມຂອງພຣະອົງ ພຣະອົງກໍຊົງປະທານສິດໃຫ້ກາຍເປັນບຸດຂອງພຣະເຈົ້າ” (ຢຮ.1:12). ຊາຕານບໍ່ມີຂໍ້ອ້າງສິດໃດໆຕໍ່ລູກຂອງພຣະເຈົ້າເພາະວ່າພວກເຂົາເຈົ້າຈະເປັນຄືນມາຈາກຄວາມຕາຍ. ບໍ່ມີເຫດຜົນຫຍັງທີ່ຈະຊອກຫາຜູ້ທີ່ມີຊີວິດຢູ່ໃນອານາຈັກແຫ່ງຄວາມຕາຍ.

ໃນພຣະສັນຍາເດີມພຣະເຈົ້າຈະບໍ່ເປີດເຜີຍແຜນການຂອງພຣະອົງບໍ່ວ່າຕໍ່ມະນຸດຫຼືບັນດາວິນຍານ, ບໍ່ວ່າຜູ້ຈົງຮັກພັກດີຫຼືພວກສັດຕູ. ລາຍລະອຽດຂອງວິທີການທີ່ພຣະເມຊີອາຈະເຮັດໃຫ້ແຜນການຂອງພຣະເຈົ້າສຳ ເລັດຕ້ອງຖືກປິດບັງໄວ້. ແຕ່ພຣະເຈົ້າຈະເປີດເຜີຍທັງໝົດຢ່າງຈະແຈ້ງເມື່ອພຣະເມຊີອາໄດ້ມາປະກົດຕົວ. ພຣະເມຊີອາຈະເປັນພຣະເຈົ້າໃນເນື້ອກາຍຂອງມະນຸດ. ແຜນການຂອງພຣະອົງແມ່ນເພື່ອຟື້ນຟູອານາຈັກຂອງພຣະອົງໃນສວນເອເດນ. ຂ້າພະເຈົ້າຈະຂຽນເພີ່ມເຕີມກ່ຽວກັບເລື່ອງນີ້ໃນສອງບົດຕໍ່ໄປ. ຄວາມເຂົ້າໃຈສິ່ງທີ່ພຣະເຢຊູເຈົ້າໄດ້ເຮັດແມ່ນຂໍ້ມູນພຽງພໍທີ່ຈະກະຕຸ້ນມະນຸດໃຫ້ມີໃຈເຊື່ອ. ນອກຈາກນີ້ຍັງພຽງພໍທີ່ຈະກະຕຸ້ນອຳນາດແຫ່ງຄວາມມືດເຂົ້າໄປສູ່ການກະທຳອື່ນໆເຊິ່ງຈະນຳໄປເຖິງການທຳລາຍຂອງພວກມັນເອງ.

# ບົດທີ 11

# ຈຸດປະສົງທີ່ເໜືອທຳມະຊາດ

**ໃນ**ບົດທີ່ຜ່ານມາຂ້າພະເຈົ້າໄດ້ຂຽນວິທີທີ່ພຣະສັນຍາເດີມແນະນຳພຣະເມຊີອາພ້ອມດ້ວຍລາຍລະອຽດທີ່ກະແຈກກະຈາຍໄປທົ່ວຫຼາຍໆບ່ອນໃນນັ້ນແນວໃດ. ລາຍລະອຽດບໍ່ສາມາດຊອກເຫັນໄດ້ໃນພຣະທຳໜຶ່ງເຫຼັ້ມ ຫຼືໜຶ່ງບົດ. ແຜນຂອງພຣະເຈົ້າທີ່ຈະຟື້ນຟູສວນເອເດນແລະໄຖ່ມະນຸດນັ້ນໝາຍຄວາມວ່າພຣະເຢຊູຜູ້ເປັນພຣະເມຊີອາຕ້ອງຕາຍເທິງໄມ້ກາງແຂນແລ້ວກໍ່ເປັນຄືນມາຈາກຕາຍ.

ພຣະເຈົ້າຕ້ອງມາເປັນມະນຸດເພື່ອຮັບປະກັນວ່າເຊື້ອສາຍຂອງດາວິດຈະກາຍເປັນກະສັດປົກຄອງປະຊາຊົນຂອງພຣະເຈົ້າ. ກະສັດອົງນີ້ຕ້ອງເປັນຄົນທີ່ສົມບູນແບບໂດຍບໍ່ມີບາບແລະຜູ້ທີ່ຈະເຮັດຕາມແຜນການຂອງພຣະເຈົ້າຢ່າງສົມບູນ. ຖ້າກະສັດທີ່ສົມບູນແບບຜູ້ນັ້ນໄດ້ເສຍຊີວິດແທນປະຊາຊົນຂອງພຣະອົງທີ່ເຮັດບາບແລະມີ ອຳນາດທີ່ຈະເປັນຄືນຈາກຄວາມຕາຍ, ພຣະເຈົ້າກໍສາມາດຕັດສິນຄວາມຜິດບາບຢ່າງຖືກຕ້ອງແລະໃຫ້ຄວາມພົ້ນແກ່ມະນຸດໄດ້. ພຽງແຕ່ການຕາຍແລະການເປັນຄືນມາຈາກຕາຍຂອງພຣະເມຊີອາຈະເຮັດໃຫ້ຄົນທີ່ມີບາບໄດ້ຮັບການປ່ຽນໃໝ່ເພື່ອພວກເຂົາຈະມີຖານະໃນຄອບຄົວຂອງພຣະເຈົ້າແລະໃນສະພາຂອງພຣະອົງ. ພຣະເຈົ້າຍັງຕ້ອງການໃຫ້ມະນຸດຢູ່ຮ່ວມກັບພຣະອົງໃນອານາຈັກຂອງພຣະອົງແລະປົກຄອງຮ່ວມກັບພຣະອົງໃນສວນເອເດນທີ່ສ້າງໃໝ່. ນີ້ແມ່ນແຜນການຂອງພຣະເຈົ້າສະເໝີມາ.

ແຕ່ນີ້ແມ່ນແຜນການທີ່ຫຍຸ້ງຍາກໂດຍສະເພາະກັບສັດຕູທີ່ເຂັ້ມແຂງທີ່ຕໍ່ສູ້ເພື່ອຢຸດແຜນການ. ພຣະເຢຊູເຈົ້າຕ້ອງກວດກາໃຫ້ແນ່ໃຈວ່າອຳນາດແຫ່ງຄວາມມືດເໜືອທຳມະຊາດຈະກະຕຸ້ນມະນຸດໃຫ້ຂ້າພຣະອົງ. ແຕ່ຜູ້ປົກຄອງວິນຍານຊົ່ວຕ້ອງຖືກປິດບັງບໍ່ໃຫ້ເຂົ້າໃຈວ່າແຜນການຂອງພຣະເຈົ້າແມ່ນເພື່ອໃຫ້ພຣະເຢຊູເຈົ້າຕາຍ. ດັ່ງທີ່ໂປໂລຂຽນເຖິງຊາວໂກຣິນໂທ (1 ກຣທ.2: 6–8) ຖ້າສັດຕູທາງວິນຍານຮູ້ແທ້ໆວ່າຜົນມັນຈະເປັນແນວໃດ, ພວກມັນຈະບໍ່ໄດ້ຄຶງອົງພຣະຜູ້ເປັນເຈົ້າທີ່ໄມ້ກາງແຂນ.

ສິ່ງທີ່ພຣະເຢຊູເຈົ້າເຮັດແລະກ່າວນັ້ນມີຄວາມໝາຍຫຼາຍຂຶ້ນເມື່ອພວກເຮົາເຂົ້າໃຈພາບລວມຂອງພຣະບັນຍັດສອງບົດທີ 32. ຈົ່ງຈື່ໄວ້ວ່ານັ້ນໝາຍເຖິງພວກລູກຊາຍຂອງພຣະເຈົ້າຜູ້ທີ່ໄດ້ຮັບສິດອຳນາດເໜືອປະຊາຊາດຕ່າງໆຕໍ່ມາໄດ້ກະບົດແລະເລີ່ມຕໍ່ຕ້ານແຜນການຂອງພຣະເຈົ້າສຳລັບມະນຸດແລະແຜ່ນດິນໂລກ. ຖ້າບໍ່ມີທັດສະນະນີ້, ລາຍລະອຽດຂອງສິ່ງທີ່ພຣະເຢຊູເຈົ້າໄດ້ເຮັດ ຊຶ່ງສົ່ງຜົນໃຫ້ພຣະອົງຖືກຄຶງເທິງໄມ້ກາງແຂນເບິ່ງຄືວ່າບໍ່ມີຈຸດປະສົງທີ່ຈະແຈ້ງ. ເລື່ອງລາວຂອງພຣະເຢຊູເຈົ້າໃນພຣະທຳຂ່າວປະເສີດທັງ 4 ເຫຼັ້ມ

ບໍ່ໄດ້ລວມເອົາເຫດການດຽວກັນສະເໝີ. ຍົກຕົວຢ່າງ, ການກຳເນີດຂອງພຣະເຢຊູເຈົ້າພົບຢູ່ໃນພຣະທຳມັດທາຍແລະລູກາເທົ່ານັ້ນ. ມີພຽງແຕ່ພຣະທຳມັດທາຍໄດ້ກ່າວເຖິງບັນດານັກປາດໄດ້ນຳເອົາຂອງຂວັນມາມອບໃຫ້ພຣະເຢຊູເຈົ້າ (ມທ. 2). ບາງຄັ້ງພຣະທຳຂ່າວປະເສີດແຕ່ລະເຫຼັ້ມກໍໄດ້ວາງເຫດການດຽວກັນໃນລຳດັບທີ່ແຕກຕ່າງກັນ. ພຣະທຳຂ່າວປະເສີດແຕ່ລະເຫຼັ້ມຂຽນກ່ຽວກັບພຣະເຢຊູເຈົ້າປິ່ນປົວຄົນເຈັບປ່ວຍ, ປະກາດເລື່ອງລາຊະອານາຈັກຂອງພຣະເຈົ້າ, ໃຫ້ອະໄພຄົນບາບຂອງພວກເຂົາ, ຕໍ່ຕ້ານຄວາມໜ້າຊື່ໃຈຄົດແລະອື່ນໆ. ແຕ່ການກະທຳທີ່ດີຂອງພຣະເຢຊູເຈົ້າບາງຢ່າງກໍ່ສົ່ງຜົນໃຫ້ພຣະອົງຖືກຄຶງເທິງໄມ້ກາງແຂນ. ພຣະເຢຊູເຈົ້າບໍ່ແມ່ນນັກປາດທີ່ເດີນທາງເຊິ່ງບາງຄັ້ງກໍ່ເຮັດການອັດສະຈັນແລະສອນຄວາມຈິງແບບບັງເອີນ. ມີຫຼາຍສິ່ງຫຼາຍຢ່າງທີ່ຜູ້ຂຽນພຣະທຳຂ່າວປະເສີດກຳລັງພະຍາຍາມສອນພວກເຮົາຫຼາຍກວ່າທີ່ພວກເຮົາຈະເຂົ້າໃຈເມື່ອພວກເຮົາອ່ານເທື່ອທຳອິດ. ມີການເຊື່ອມຕໍ່ທີ່ສຳຄັນລະຫວ່າງທຸກໆສິ່ງທີ່ພຣະເຢຊູເຈົ້າເຮັດຢູ່ນັ້ນ, ແຕ່ຜູ້ຂຽນບໍ່ໄດ້ລະບຸໄວ້ຢ່າງຊັດເຈນ.

## ການເອົາຊະນະຄວາມຊົ່ວຮ້າຍ

ເຫດການທີ່ເລີ່ມຕົ້ນການຮັບໃຊ້ຂອງພຣະເຢຊູເຈົ້າແມ່ນການຮັບບັບຕິສະມາຂອງພຣະອົງ. ໃນການຮັບບັບຕິສະມາ, ພຣະເຈົ້າໄດ້ກ່າວຈາກສະຫວັນຢ່າງເປີດເຜີຍແລະກ່າວວ່າພຣະເຢຊູເປັນພຣະບຸດຂອງພຣະອົງ (ມກ.1:11). ໂຢຮັນຜູ້ໃຫ້ບັບຕິດສະມາໄດ້ກ່າວວ່າພຣະເຢຊູເຈົ້າແມ່ນຜູ້ໜຶ່ງທີ່ "ຮັບເອົາບາບກຳຂອງມະນຸດໂລກໄປເສຍ" (ຢຮ.1:29). ເມື່ອພວກເຮົາອ່ານສິ່ງທີ່ໂຢຮັນເວົ້າ, ຕອນນີ້ພວກເຮົາເຊື່ອມຕໍ່ເລື່ອງນັ້ນກັບພຣະເຢຊູເຈົ້າທີ່ຖືກຄຶງເທິງໄມ້ກາງແຂນ. ແຕ່ພຣະເຢຊູເຈົ້າຍັງບໍ່ໄດ້ຖືກຄຶງຈົນກວ່າຈະເຖິງສາມປີຕໍ່ມາ. ບັນດາສາວົກຂອງໂຢຮັນບັບຜູ້ທີ່ຢູ່ຕອນພຣະເຢຊູຮັບບັບຕິສະມາກໍບໍ່ໄດ້ຄິດເຖິງເລື່ອງທີ່ພຣະເຢຊູຖືກຄຶງເລີຍ. ທີ່ຈິງບໍ່ມີໃຜຢູ່ທີ່ນັ້ນຄິດວ່າສິ່ງນີ້ຈະເກີດຂຶ້ນ. ສາມປີຫຼັງຈາກຮັບບັບຕິສະມາເປັນຊ່ວງທີ່ພຣະເຢຊູເຈົ້າເລີ່ມກ່າວເຖິງການຕາຍຂອງພຣະອົງ. ເມື່ອສາວົກຂອງພຣະເຢຊູເຈົ້າໄດ້ຍິນພຣະອົງກ່າວກ່ຽວກັບຄວາມຕາຍຂອງພຣະອົງ, ພວກສາວົກໄດ້ປະຕິເສດຄວາມຄິດນີ້ (ມທ.17:22-23; ມກ.9:30-32). ສິ່ງສຸດທ້າຍທີ່ພວກສາວົກໄດ້ຍິນຈາກພຣະເມຊີອາຂອງພວກເຂົາກໍ່ຄືພຣະອົງຈະຕາຍໃນໄວໆນີ້. ພວກເຂົາຄິດວ່າພຣະອົງເວົ້າຫຼິ້ນຊື່ໆ. ພວກເຂົາບໍ່ເຂົ້າໃຈວ່າແຜນການຂອງພຣະເຈົ້ານັ້ນແມ່ນໃຫ້ພຣະເຢຊູ ຕາຍເທິງໄມ້ກາງແຂນ. ເປັນຫຍັງພວກສາວົກຈຶ່ງບໍ່ເຂົ້າໃຈເລື່ອງນີ້? ເພາະວ່າ ດັ່ງທີ່ພວກເຮົາໄດ້ສົນທະນາໃນບົດທີ່ຜ່ານມາ, ແຜນການບໍ່ໄດ້ຖືກຂຽນໄວ້ຢ່າງຈະແຈ້ງໃນພຣະສັນຍາເດີມ ເຊິ່ງຂໍ້ມູນອັນໜຶ່ງໄດ້ກ່າວໄວ້ບ່ອນນີ້ແລະອີກຂໍ້ມູນອື່ນຢູ່ບ່ອນນັ້ນ. ບໍ່ເປັນໄປໄດ້ທີ່ຈະເຫັນຮູບແບບຂອງແຜນການທັງໝົດ, ເພາະວ່າພຣະເຈົ້າຕ້ອງການປິດບັງໄວ້ຈາກພວກຜູ້ປົກຄອງວິນຍານທີ່ກະບົດ.

ຫຼັງຈາກການບັບຕິສະມາຂອງພຣະເຢຊູເຈົ້າ, ພຣະວິນຍານຂອງພຣະເຈົ້າໄດ້ນຳເຂົ້າໄປໃນຖິ່ນແຫ້ງແລ້ງກັນດານເພື່ອປະເຊີນໜ້າກັບຊາຕານ (ມທ. 4:1; ມກ. 1:12; ລກ 4:1–13). ພະຍາມານເຊິ່ງເອີ້ນ

ວ່າຊາຕານກໍ່ຮູ້ວ່າພຣະເຢຊູເຈົ້າແມ່ນໃຜ. ຊາຕານມາລໍ້ລວງພຣະເຢຊູເຈົາ ເພາະລາວຮູ້ວ່າພຣະອົງເປັນພຣະເມຊີອາ. ຊາຕານຮູ້ວ່າພຣະເມຊີອາຕ້ອງການທີ່ຈະສ້າງສວນເອເດນແລະທີ່ປະທັບຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກ. ເປັນທີ່ຈະແຈ້ງໃນພຣະສັນຍາເດີມວ່າພຣະເມຊີອາຈະເປັນກະສັດແລະເປັນເຊື້ອສາຍຂອງດາວິດ. ຊາຕານເປັນ "ຜູ້ປົກຄອງໂລກນີ້" (ຢຮ.12:31). ຊາຕານຮູ້ວ່າພຣະເຢຊູເຈົ້າຈະພະຍາຍາມທຳລາຍອານາຈັກຂອງມັນ. ພຣະເຢຊູເຈົ້າຜູ້ເປັນພຣະເມຊີອາຈະພະຍາຍາມກອບກູ້ປະເທດຕ່າງໆທີ່ພຣະເຈົ້າປະຕິເສດຢູ່ທີ່ວິຫານຫໍບາເບນ (ພບຍ. 4:19–20; 32:8-9).

ຂ້າພະເຈົ້າຄິດວ່າທ່ານຮູ້ເລື່ອງຂອງຊາຕານທີ່ລໍ້ລວງພຣະເຢຊູເຈົ້າແລ້ວ. ຊາຕານໄດ້ລໍ້ລວງພຣະເຢຊູເຈົ້າສາມຄັ້ງ (ມທ. 4:3–11). ກົນອຸບາຍທີສາມຂອງຊາຕານທີ່ຈະເຮັດໃຫ້ພຣະເຢຊູລະເມີດຄວາມສຳພັນຂອງພຣະອົງກັບພຣະເຈົ້າກໍຄືການສະເໜີປະຊາຊາດຕ່າງໆໃນໂລກໃຫ້ແກ່ພຣະເຢຊູເຈົ້າ (ມທ. 4: 8-9). ບັນດາປະຊາຊາດແມ່ນສິ່ງທີ່ຊາຕານຄິດວ່າພຣະເຢຊູເຈົ້າມາເພື່ອຍຶດຄືນ:

> ອີກເທື່ອໜຶ່ງ ມານຮ້າຍກໍພາພຣະເຢຊູເຈົ້າຂຶ້ນໄປເທິງຍອດພູທີ່ສູງສຸດແຫ່ງໜຶ່ງ ແລະສຳແດງບັນດາອານາຈັກແຫ່ງໂລກນີ້ກັບຄວາມຍິ່ງໃຫຍ່ທັງໝົດໃຫ້ພຣະອົງເຫັນ. ແລ້ວມັນເວົ້າວ່າ, "ຖ້າທ່ານກົ້ມຂາບນະມັດສະການເຮົາ, ເຮົາຈະມອບສິ່ງທັງໝົດນີ້ໃຫ້ທ່ານ." (ມທ.4:8-9)

ຂໍ້ສະເໜີຂອງຊາຕານແມ່ນວິທີທີ່ສະຫຼາດທີ່ຈະປຸ້ນແຜນຂອງພຣະເຈົ້າ. ຊາຕານຈະມອບປະຊາຊາດຕ່າງໆແລະມະນຸດທຸກຄົນທີ່ຖືກປະຕິເສດໃຫ້ແກ່ພຣະເຢຊູເຈົ້າ ນີ້ແມ່ນສິ່ງທີ່ພຣະເຈົ້າຕ້ອງການແນ່ນອນ. ແລະພາລະກິດຂອງພຣະເຢຊູເຈົ້າກໍຈະສຳເລັດທັນທີ ແຕ່ສິ່ງທີ່ພຣະເຢຊູເຈົ້າຕ້ອງເຮັດແມ່ນໃຫ້ນະມັດສະການຊາຕານແທນພຣະເຈົ້າ.

ຂໍ້ສະເໜີຂອງຊາຕານສະແດງໃຫ້ເຫັນວ່າມັນຍັງບໍ່ເຂົ້າໃຈວ່າແຜນການຂອງພຣະເຈົ້າແມ່ນຕ້ອງການໃຫ້ພຣະເຢຊູເຈົ້າຕາຍ. ພຣະເຢຊູເຈົ້າບໍ່ໄດ້ຊ່ວຍຊາຕານເຂົ້າໃຈແຜນການດັ່ງກ່າວນຳອີກ. ພຣະເຢຊູເຈົ້າບໍ່ໄດ້ອະທິບາຍວ່າເປັນຫຍັງພຣະອົງຈຶ່ງປະຕິເສດ. ພຣະອົງພຽງແຕ່ບອກຊາຕານໃຫ້ອອກໄປ. ພຣະເຈົ້າຈະເອົາສິ່ງທີ່ເປັນຂອງພຣະອົງກັບຄືນມາເມື່ອເຖິງເວລາທີ່ເໝາະສົມແລະໃນວິທີທີ່ຖືກຕ້ອງ. ພາລະກິດຂອງພຣະເຢຊູເຈົ້າບໍ່ພຽງແຕ່ກ່ຽວກັບການປົກຄອງທຸກປະຊາຊາດເທົ່ານັ້ນ. ແຕ່ກ່ຽວກັບການສ້າງຄອບຄົວຂຶ້ນມາໃໝ່. ລວມທັງຄົນຈາກທຸກປະເທດເຂົ້າໃນຄອບຄົວນັ້ນ, ບໍ່ພຽງແຕ່ຊົນຊາດອິດສະຣາເອນເທົ່ານັ້ນ. ນີ້ໝາຍຄວາມວ່າບາບຂອງມະນຸດຕ້ອງໄດ້ຊົດໃຊ້ແທນ. ແຜນຂອງພຣະເຈົ້າແມ່ນຄອບຄອງຮ່ວມກັບລູກຂອງພຣະອົງຕະຫຼອດໄປ. ການຕາຍເທິງໄມ້ກາງແຂນແລະການເປັນຄືນມາຈາກຕາຍແມ່ນສິ່ງທີ່ຈຳເປັນທີ່ຈະໄຖ່ມະນຸດ. ສະນັ້ນ,ວິທີດຽວທີ່ເຮັດໃຫ້ເປົ້າໝາຍຂອງພຣະເຈົ້າສຳເລັດແມ່ນການລວມເຂົ້າໃນແຜນການຂອງພຣະອົງທີ່ໃຫ້ພຣະເມຊີອາຕາຍຢູ່ເທິງໄມ້ກາງແຂນ. ພຣະເຢຊູບໍ່ໄດ້ຖືກຫຼອກລວງໃຫ້ເຂົ້າໄປໃນແຜນອື່ນ. ແຕ່ພະຍາມານຈະບໍ່ເຂົ້າໃຈແຜນທີ່ແທ້ຈິງຈົນວ່າມັນຈະຊ້າເກີນໄປທີ່ຈະຢຸດແຜນການນັ້ນ.

# ລົດຊາດຂອງສວນເອເດນ

ທັນໃດນັ້ນຫຼັງຈາກການລໍ້ລວງໃນຖິ່ນແຫ້ງແລ້ງກັນດານ, ພຣະເຢຊູເຈົ້າໄດ້ເຮັດສອງຢ່າງຄື: ທໍາອິດພຣະອົງໄດ້ເອີ້ນເປໂຕ, ອັນເດອາ, ຢາໂກໂບ,ແລະໂຢຮັນໃຫ້ຕິດຕາມພຣະອົງ ແລະສິ່ງທີສອງພຣະເຢຊູເຈົ້າໄດ້ປິ່ນປົວຊາຍທີ່ມີຜີຮ້າຍເຂົ້າສິງ (ມກ.1:16– 28; ລກ. 4: 31-5:11).ຫຼັງຈາກນັ້ນພຣະເຢຊູເຈົ້າໄດ້ເອີ້ນສາວົກໃຫ້ຕິດຕາມພຣະອົງຫຼາຍຂຶ້ນ ແລະພຣະເຢຊູເຈົ້າໄດ້ປິ່ນປົວປະຊາຊົນຫຼາຍຂຶ້ນ. ສິ່ງນີ້ໄດ້ສ້າງແບບແຜນ. ພຣະເຢຊູເຈົ້າໄດ້ເອີ້ນພວກສາວົກຫຼາຍຂຶ້ນອີກແລະຈາກນັ້ນພຣະອົງໄດ້ມອບສິດອໍານາດໃຫ້ແກ່ພວກເຂົາເຈົ້າເໜືອຜີຮ້າຍແລະຍັງມີອໍານາດໃນການປິ່ນປົວຮັກສາຄົນທີ່ເປັນພະຍາດຕ່າງໆ, ຄົນພິການ, ແລະຄວາມເຈັບປ່ວຍ (ລກ. 9:1-5).

ຄັ້ງທໍາອິດພຣະເຢຊູເຈົ້າພຽງແຕ່ເອີ້ນສາວົກສິບສອງຄົນເທົ່ານັ້ນ. ຕົວເລກບໍ່ແມ່ນເລື່ອງບັງເອີນ. ມັນກົງກັບສິບສອງເຜົ່າຂອງອິດສະຣາເອນ. ພຣະເຢຊູເຈົ້າເລີ່ມຕົ້ນຕາມແຜນການຂອງພຣະເຈົ້າແລະນັ້ນໝາຍຄວາມວ່າອິດສະຣາເອນຈະເປັນຊົນຊາດທໍາອິດທີ່ໄດ້ຍິນກ່ຽວກັບແຜນການຂອງພຣະເຈົ້າ. ນີ້ໝາຍຄວາມວ່າພວກເຂົາເປັນປະຊາຊົນພິເສດຂອງພຣະເຈົ້າ (ພບຍ.32:8–9). ໂປໂລໄດ້ຂຽນກ່ຽວກັບວິທີທີ່ແຜນການຂອງພຣະເຈົ້າໃນການປະກາດຂ່າວປະເສີດກໍຄືກັນ. ພຣະເຈົ້າຈະເລີ່ມຕົ້ນກັບຄົນຢິວແລະຫຼັງຈາກນັ້ນໄປຫາຄົນຕ່າງຊາດ (ໝົດທຸກໆຊາດ) (ຣມ 1: 16-17).

ພຣະເຢຊູເຈົ້າບໍ່ໄດ້ຢຸດຢູ່ກັບສິບສອງຄົນ. ໃນລູກາບົດທີ 10 ພຣະອົງໄດ້ມອບໝາຍໃຫ້ອີກເຈັດສິບຄົນໃຫ້ຮັກສາແລະຂັບໄລ່ພວກຜີຮ້າຍອອກ (ລກ.10: 1, 9, 17). ຈໍານວນດັ່ງກ່າວກໍບໍ່ແມ່ນເລື່ອງບັງເອີນ. ມັນແມ່ນຈໍານວນປະເທດທີ່ໄດ້ລະບຸໄວ້ຢູ່ໃນປະຖົມມະການບົດທີ 10 ນີ້ແມ່ນບັນດາປະເທດທີ່ພຣະເຈົ້າໄດ້ປະຖິ້ມຕອນທີ່ວິຫານບາເບນແລະວາງໃຫ້ຢູ່ໃຕ້ການຄອບຄອງຂອງເທບພະເຈົ້າຕ່າງໆ (ພບຍ. 4:19–20; 32:8–9). ໃນຂໍ້ພຣະຄໍາພີເຫຼົ່ານີ້ການແປພຣະຄໍາພີບາງສະບັບມີເຈັດສິບສອງແທນຈໍານວນເຈັດສິບ. ນັ້ນແມ່ນຍ້ອນວ່າຕົ້ນສະບັບເກົ່າແກ່ຂອງພຣະທໍາປະຖົມມະການບົດທີ 10 ແປຊື່ຂອງປະຊາຊາດແຕກຕ່າງກັນແລະຜົນອອກມາເປັນເຈັດສິບສອງ. ຢ່າງໃດກໍ່ຕາມທັງສອງວິທີຄວາມໝາຍກໍຄືກັນ . ພຣະເຢຊູເຈົ້າໄດ້ສົ່ງຄົນເຫຼົ່ານີ້ອອກໄປແລະຈໍານວນຂອງພວກເຂົາເຈົ້າແມ່ນກົງກັບຈໍານວນປະຊາຊາດໃນປະຖົມມະການບົດ10. ຄືກັບການເອີ້ນເອົາສາວົກສິບສອງຄົນເປັນສັນຍານວ່າອານາຈັກຂອງພຣະເຈົ້າໄດ້ມາເຖິງຊົນຊາດອິດສະຣາເອນແລ້ວ, ດັ່ງນັ້ນການສົ່ງສາວົກເຈັດສິບຄົນນີ້ເປັນສັນຍານວ່າອານາຈັກຂອງພຣະອົງຈະຍຶດເອົາເຈັດສິບປະເທດກັບຄືນມາ.

ເມື່ອສາວົກເຈັດສິບຄົນກັບມາ (ລກ.10:17) ພຣະເຢຊູເຈົ້າຕອບວ່າ:“ ເຮົາໄດ້ເຫັນມານຊາຕານຕົກລົງຈາກຟ້າ ດັ່ງຟ້າແມບ.” (ລກ.10:18) ນີ້ແມ່ນຂໍ້ຄວາມທີ່ໜັກແໜ້ນຈາກພຣະເຢຊູເຈົ້າ. ການປ່ຽນແປງທີ່ມະຫັດສະຈັນທີ່ຍິ່ງໃຫຍ່ກໍາລັງດໍາເນີນຢູ່. ຊາຕານຈະບໍ່ມີຂໍ້ອ້າງສິດໃດໆເໜືອມະນຸດອີກຕໍ່ໄປຖ້າຫາກພວກ

ເຂົາເປັນຂອງພຣະເຢຊູເຈົ້າ. ຄັ້ງໜຶ່ງຊາຕານສາມາດເຂົ້າຫາພຣະເຈົ້າເພື່ອ "ກ່າວໂທດຜູ້ທີ່ເຊື່ອ" (ພນມ. 12:10) ແຕ່ວ່າເວລານັ້ນໄດ້ສິ້ນສຸດລົງແລ້ວ. ຊາຕານເຄີຍເປັນໂອຍະການແລະກ່າວໂທດມະນຸດ, ແຕ່ດຽວນີ້ຊາຕານບໍ່ມີຄຳຮ້ອງຟ້ອງແລ້ວ.

## ຈົ່ງມາແລະຮັບເອົາເຮົາ

ພຣະເຢຊູເຈົ້າໃຊ້ເວລາປະມານສາມປີເພື່ອປະກາດກ່ຽວກັບອານາຈັກຂອງພຣະເຈົ້າທີ່ຈະມາເຖິງ. ພຣະເຢຊູເຈົ້າສະແດງຄວາມຮັກຂອງພຣະເຈົ້າຕໍ່ປະຊາຊົນ. ພຣະເຢຊູເຈົ້າສະແດງໃຫ້ມະນຸດເຫັນວິທີການດຳເນີນຊີວິດ. ພຣະເຢຊູເຈົ້າເວົ້າລົມກັບພຣະເຈົ້າຄືກັບວ່າພຣະອົງຢູ່ນຳກັນໃນສວນເອເດນ. ຈາກນັ້ນພຣະເຢຊູເຈົ້າເລີ່ມຕົ້ນກຽມຕົວສຳລັບຕອນທ້າຍ. ນີ້ແມ່ນຈຸດປະສົງທີ່ແທ້ຈິງຂອງພຣະອົງທີ່ມາເທິງແຜ່ນດິນໂລກໃນຖານະເປັນມະນຸດ.

ພຣະເຢຊູເຈົ້າໄດ້ເດີນທາງໄປກັບພວກສາວົກຂອງພຣະອົງໄປທາງພາກເໜືອຂອງອິດສະຣາເອນ. ນີ້ແມ່ນການເດີນທາງກ່ອນພຣະເຢຊູເຈົ້າຈະກັບມາທາງທິດໃຕ້ແລະນຳພາພວກເຂົາໄປນະຄອນເຢຣູຊາເລັມເປັນຄັ້ງສຸດທ້າຍ. ພຣະເຢຊູເຈົ້າໄດ້ເດີນທາງໄປທາງເໜືອເພາະວ່າພຣະອົງຕ້ອງການໃຫ້ແນ່ໃຈວ່າພຣະອົງຈະຖືກຈັບແລະຖືກຄຶງໄວ້ທີ່ໄມ້ກາງແຂນເມື່ອພຣະອົງເດີນທາງກັບໄປເຢຣູຊາເລັມ. ພຣະເຢຊູເຈົ້າໄດ້ນຳພາສາວົກຂອງພຣະອົງໄປສູ່ສະຖານທີ່ທີ່ສົມບູນແບບເຊິ່ງພຣະອົງໄດ້ວາງແຜນທີ່ຈະທ້າທາຍຜູ້ປົກຄອງຊົ່ວຮ້າຍເໜືອທຳມະຊາດທີ່ກຳລັງມີສົງຄາມກັບພຣະເຈົ້າ. ພຣະເຢຊູເຈົ້າຕ້ອງການໃຫ້ແນ່ໃຈວ່າພວກລູກຊາຍກະບົດຂອງພຣະເຈົ້າເຫຼົ່ານີ້ຈະຕັດສິນໃຈວ່າເຖິງເວລາທີ່ເໝາະສົມແລ້ວໃນການຂ້າພຣະເມຊີອາຂອງພຣະເຈົ້າແລະພະຍາຍາມທີ່ຈະຢຸດແຜນການຂອງພຣະເຈົ້າ.

ພຣະເຢຊູເຈົ້າໄດ້ນຳເອົາສາວົກໄປໃນຂົງເຂດທີ່ເອີ້ນວ່າກາຍຊາເຣຍແຫ່ງຟີລິບປອຍ.ແຕ່ນັ້ນແມ່ນຊື່ຂອງຄົນໂຣມັນໃໝ່. ໃນສະໄໝພຣະຄຳພີເດີມພື້ນທີ່ນີ້ເອີ້ນວ່າບາຊານ. ຂ້າພະເຈົ້າໄດ້ຂຽນກ່ຽວກັບຂົງເຂດນີ້ແລ້ວໃນບົດທີ 9. ນີ້ແມ່ນບ່ອນທີ່ອິດສະຣາເອນໄດ້ເອົາຊະນະກອງທັບຂອງກະສັດຍັກໃຫຍ່ທີ່ຊົ່ວຮ້າຍຄືເຈົ້າໂອກແລະເຈົ້າສີໂຫນ. ນີ້ແມ່ນທີ່ຕັ້ງຂອງສອງເມືອງທີ່ຖືວ່າເປັນປະຕູສູ່ອານາຈັກແຫ່ງຄວາມຕາຍ. ພວກເຂົາເອີ້ນບ່ອນນັ້ນວ່າ "ປະຕູນະລົກ". ເມືອງກາຍຊາເຣຍແຫ່ງຟີລິບປອຍແມ່ນເມືອງໜຶ່ງທີ່ຕັ້ງຢູ່ຕີນພູເຂົາເຮີໂມນ. ພູເຂົາເຮີໂມນແມ່ນສະຖານທີ່ທີ່ຄົນບູຮານຄິດວ່າລູກຊາຍຂອງພຣະເຈົ້າບາງຄົນໄດ້ມາສູ່ແຜ່ນດິນໂລກໃນການກະບົດທີ່ໄດ້ບອກໄວ້ໃນປະຖົມມະການ 6: 1-4. ໃນສະໄໝພຣະສັນຍາເດີມ, ບາຊານແລະເຮີໂມນໄດ້ຖືວ່າເປັນສຳນັກງານໃຫຍ່ຂອງຜູ້ປົກຄອງເໜືອທຳມະຊາດທີ່ຊົ່ວຮ້າຍ.

ບາຊານຍັງເປັນສະຖານທີ່ທີ່ພຣະເຢຊູຖາມພວກສາວົກວ່າ,“ ພວກເຈົ້າເວົ້າວ່າເຮົາເປັນຜູ້ໃດ?” (ມທ. 16:15). ເປໂຕໄດ້ຕອບວ່າ, “ພຣະອົງເປັນພຣະຄຣິດ ພຣະບຸດຂອງພຣະເຈົ້າອົງຊົງພຣະຊົນຢູ່.” (ຂໍ້ທີ 16). ພຣະເຢຊູເຈົ້າຊົມເຊີຍລາວແລະກ່າວຕື່ມວ່າ:

> “ຊີໂມນບາຣະໂຢນາເອີຍ ເຈົ້າກໍເປັນສຸກ ເພາະວ່າບໍ່ແມ່ນມະນຸດທີ່ເປີດເຜີຍຄວາມຈິງນີ້ໃຫ້ເຈົ້າຮູ້ ແຕ່ແມ່ນພຣະບິດາເຈົ້າຂອງເຮົາຜູ້ຊົງສະຖິດຢູ່ໃນສະຫວັນ. ຝ່າຍເຮົາຈຶ່ງບອກວ່າ ເຈົ້າຄືເປໂຕ ເທິງສີລາກ້ອນນີ້ເຮົາຈະສ້າງຄຣິສຕະຈັກຂອງເຮົາຂຶ້ນ ແລະປະຕູແຫ່ງແດນມໍຣະນາຈະເອົາຊະນະຄຣິສຕະຈັກນີ້ບໍ່ໄດ້. (ຂໍ້ທີ 17–18)

ຄວາມໝາຍຂອງຄຳວ່າ“ສີລາ” ຫຼືຫີນ ທີ່ພຣະເຢຊູກ່າວເຖິງໄດ້ຖືກປຶກສາຫາລືອະທິບາຍກັນມາເປັນເວລາຫຼາຍສັດຕະວັດແລ້ວ. ຂ້າພະເຈົ້າຄິດວ່າວິທີການທີ່ຖືກຕ້ອງທີ່ຈະເຂົ້າໃຈສິ່ງທີ່ພຣະເຢຊູໝາຍເຖິງແມ່ນກ່ຽວຂ້ອງກັບສະຖານທີ່ຕຳແໜ່ງທີ່ພຣະເຢຊູຢູ່ນັ້ນ. ເມືອງກາຍຊາເຣຍແຫ່ງຟີລິບປອຍແມ່ນຢູ່ໃນເຂດພາກເໜືອຂອງເມືອງບາຊານ. ໃນສະໄໝພຣະສັນຍາເດີມ, ພື້ນທີ່ນີ້ຖືກຄິດວ່າມີປະຕູສູ່ອານາຈັກແຫ່ງຄວາມຕາຍຫຼືແດນມໍຣະນາ. ເມືອງກາຍຊາເຣຍແຫ່ງຟີລິບປອຍຕັ້ງຢູ່ຕີນພູ. ຄຳວ່າ”ສີລາ” ຫຼື“ ຫີນ” ທີ່ພຣະເຢຊູກຳລັງກ່າວເຖິງແມ່ນພູເຂົາໜ່ວຍນັ້ນ. “ປະຕູນະລົກ” ແມ່ນສະຖານທີ່ດຽວກັນທີ່ພຣະເຢຊູແລະສາວົກຢືນຢູ່ແລະພຣະເຢຊູເຈົ້າກ່າວວ່າຄຣິສຕະຈັກຂອງພຣະອົງຈະຕັ້ງຢູ່ເທິງດິນແດນທີ່ບໍ່ບໍລິສຸດນີ້.

ພຣະເຢຊູເຈົ້າກຳລັງກ່າວຄຳທ້າທາຍຕໍ່ຜູ້ປົກຄອງຂອງອານາຈັກແຫ່ງຄວາມມືດ. ໃນການກະບົດໃນສວນເອເດນ, ມະນຸດໄດ້ສູນເສຍຊີວິດນິລັນດອນກັບພຣະເຈົ້າແລະໄດ້ເລືອກເອົາຄວາມຕາຍແລະການແຍກຈາກພຣະເຈົ້າແທນ. ເຈົ້າແຫ່ງຄວາມຕາຍທີ່ເອີ້ນວ່າງູ,ຊາຕານແລະພະຍາມານ, ເວລານີ້ມີຂໍ້ອ້າງສິດທີ່ຖືກຕ້ອງຕໍ່ມະນຸດທຸກຄົນ. ທຸກໆຄົນຈະຕາຍແລະເຂົ້າຮ່ວມກັບມັນໃນໂລກແຫ່ງຄວາມຕາຍ. ແຕ່ພຣະເຈົ້າຊົງມີແຜນການອື່ນ. ແຜນການທີ່ລຶກລັບທີ່ຈະສົ່ງພຣະເຢຊູເຈົ້າເພື່ອຈ່າຍຄ່າແທນຄວາມບາບຂອງມະນຸດ, ຈະເປັນການໂຈມຕີໂດຍກົງຕໍ່ປະຕູນະລົກ. ເຈົ້າແຫ່ງຄວາມຕາຍແລະກອງກຳລັງຊົ່ວຮ້າຍຂອງມັນຈະບໍ່ສາມາດຕ້ານທານກັບອານາຈັກຂອງພຣະເຈົ້າໄດ້. ໃນມັດທາຍບົດທີ 16, ມັນຄ້າຍຄືກັບວ່າພຣະເຢຊູໄປປະຕູທາງດ້ານໜ້າຂອງຜີມານຮ້າຍແລະທ້າທາຍຕໍ່ການຮຽກຮ້ອງຂອງມັນທີ່ຈະໃຫ້ມະນຸດເປັນທາດຢູ່ໃນໂລກແຫ່ງຄວາມຕາຍ. ພຣະເຢຊູຕ້ອງການຍົວະໃຫ້ຊາຕານທຳຮ້າຍພຣະອົງ. ຍ້ອນຫຍັງ? ເພາະວ່າເຖິງເວລາແລ້ວທີ່ພຣະເຢຊູຈະຕ້ອງຕາຍ. ແຜນການຂອງພຣະເຈົ້າແມ່ນການໃຊ້ການໂຕ້ຕອບຂອງຊາຕານຕໍ່ການທ້າທາຍຂອງພຣະເຢຊູເພື່ອເຮັດໃຫ້ແຜນຂອງພຣະອົງສຳເລັດ.

ຖ້າການທ້າທາຍຂອງພຣະເຢຊູໃນການກໍ່ສ້າງຄຣິສຕະຈັກຂອງພຣະອົງທີ່ສຳນັກງານໃຫຍ່ຂອງພວກຜູ້ປົກຄອງຊົ່ວຮ້າຍບໍ່ພຽງພໍທີ່ຈະກະຕຸ້ນພວກມັນໃຫ້ທຳຮ້າຍພຣະເຢຊູແຕ່ກໍ່ຍັງມີຫຼາຍກວ່ານັ້ນ. ໃນພຣະທຳມັດທາຍ, ມາຣະໂກແລະລູກາ ໄດ້ລາຍງານວ່າສິ່ງຕໍ່ໄປທີ່ພຣະເຢຊູຈະເຮັດແມ່ນການຂຶ້ນໄປເທິງຍອດພູ

ເຂົາສູງແລະເປີດເຜີຍວ່າພຣະອົງເປັນພຣະບຸດຂອງພຣະເຈົ້າທີ່ເປັນເອກະລັກໃນເນື້ອກາຍຂອງມະນຸດ.
ມາຣະໂກ 9:2–8 ອ່ານ

ຫົກວັນຕໍ່ມາ ພຣະເຢຊູເຈົ້າໄດ້ພາເປໂຕ, ຢາໂກໂບ ແລະ ໂຢຮັນຂຶ້ນໄປເທິງພູເຂົາສູງໜ່ວຍໜຶ່ງ ແລະຢູ່ໃນທີ່ນັ້ນສະເພາະແຕ່ສາວົກກັບພຣະອົງ, ພວກເພິ່ນເຫັນຮ່າງກາຍຂອງພຣະເຢຊູເຈົ້າປ່ຽນແປງໄປຕໍ່ໜ້າພວກເພິ່ນ ແລະ ເຄື່ອງນຸ່ງຂອງພຣະອົງກໍເກີດຮຸ່ງເຮືອງຂາວເຫຼື້ອມໃສ ຈົນບໍ່ມີຜູ້ໃດໃນໂລກນີ້ຊັກໃຫ້ຂາວເຊັ່ນນັ້ນໄດ້. ແລ້ວເອລີຢາ ແລະ ໂມເຊກໍປາກົດແກ່ສາວົກພວກນັ້ນ ກຳລັງເວົ້າກັນຢູ່ກັບພຣະເຢຊູເຈົ້າ. ດັ່ງນັ້ນ ເປໂຕຈຶ່ງເວົ້າກັບພຣະເຢຊູເຈົ້າວ່າ, “ພຣະອາຈານເອີຍ ຊ່າງເປັນການດີແທ້ໆທີ່ພວກຂ້ານ້ອຍຢູ່ບ່ອນນີ້, ໂຜດໃຫ້ພວກຂ້ານ້ອຍປຸກຕູບສາມຫລັງຂຶ້ນ ຫລັງໜຶ່ງສຳລັບທ່ານ, ຫລັງໜຶ່ງສຳລັບໂມເຊ ແລະຫລັງໜຶ່ງສຳລັບເອລີຢາ.” ເປໂຕກັບສາວົກຄົນອື່ນໆຢ້ານຈົນຕົວສັ່ນ ທີ່ລາວເວົ້າເຊັ່ນນັ້ນ ເພາະບໍ່ຮູ້ວ່າຈະເວົ້າຢ່າງໃດ. ແລ້ວກໍມີກ້ອນເມກລອຍມາເປັນເງົາປົກຫຸ້ມພວກເພິ່ນໄວ້ ແລະມີສຽງໜຶ່ງດັງອອກມາຈາກກ້ອນເມກນັ້ນວ່າ, “ທ່ານຜູ້ນີ້ແຫຼະ, ເປັນບຸດທີ່ຮັກຂອງເຮົາ ພວກເຈົ້າຈົ່ງເຊື່ອຟັງເພິ່ນ.” ໃນທັນໃດນັ້ນ ພໍພວກສາວົກຫລຽວເບິ່ງຮອບໆຕົວກໍບໍ່ເຫັນຜູ້ໃດ ນອກຈາກພຣະເຢຊູເຈົ້າເທົ່ານັ້ນທີ່ຢູ່ກັບພວກເພິ່ນ.

ການປ່ຽນແປງຮ່າງກາຍນີ້ເກີດຂຶ້ນຢູ່ເທິງພູເຂົາເຮີໂມນ. ພຣະເຢຊູເຈົ້າເລືອກຈຸດນີ້ເພື່ອເປີດເຜີຍຕໍ່ເປໂຕ, ຢາໂກໂບແລະໂຢຮັນວ່າພຣະອົງແມ່ນໃຜ, ສະຫງ່າລາສີຂອງພຣະເຈົ້າຢູ່ໃນຮ່າງກາຍຂອງມະນຸດ. ພຣະເຢຊູໄດ້ທ້າທາຍຊາຕານແລະອຳນາດແຫ່ງຄວາມມືດອີກຄັ້ງໜຶ່ງ ໃນສະຖານທີ່ທີ່ພວກວິນຍານກະບົດລົງມາແຜ່ນດິນໂລກໃນການກະບົດ.ໂດຍການກະທຳຂອງພຣະເຢຊູນັ້ນພຣະອົງກຳລັງກ່າວວ່າ: “ເຮົາໄດ້ມາສູ່ໂລກເພື່ອເອົາສິ່ງທີ່ເປັນຂອງເຮົາກັບຄືນມາ. ອານາຈັກຂອງພຣະເຈົ້າໄດ້ມາເຖິງແລ້ວ."ເຮົາຢູ່ທີ່ນີ້ແລ້ວ, ເຈົ້າຈະເຮັດຫຍັງ?”

ຫຼັງຈາກເຫດການເຫຼົ່ານີ້, ພຣະເຢຊູກໍຫັນໄປທາງທິດໃຕ້ແລະເລີ່ມເດີນທາງໄປນະຄອນເຢຣູຊາເລັມທັນທີ. ພຣະອົງເລີ່ມຕົ້ນບອກພວກສາວົກວ່າພຣະອົງຈະຕາຍຢູ່ທີ່ນະຄອນເຢຣູຊາເລັມ.ພວກສາວົກບໍ່ໄດ້ຄິດວ່າສິ່ງນີ້ຈະເປັນໄປໄດ້ແລະບໍ່ເຊື່ອ. ແຕ່ພຣະເຢຊູໄດ້ທ້າທາຍຊາຕານແລະອຳນາດຊົ່ວຮ້າຍຕ່າງໆໃຫ້ເຂົ້າມາໂຈມຕີພຣະອົງ.ຕອນນີ້ອຳນາດຊົ່ວຮ້າຍຮູ້ສຶກວ່າມັນເປັນເລື່ອງຮີບດ່ວນທີ່ຈະຂ້າພຣະອົງໃນໄວໆນີ້.ແລະນັ້ນແມ່ນສິ່ງທີ່ພຣະເຢຊູຕ້ອງການ. ການຕາຍຂອງພຣະອົງແມ່ນກຸນແຈສຳລັບທຸກຢ່າງໃນແຜນຂອງພຣະເຈົ້າ.

# ສາເຫດທີ່ເລື່ອງນີ້ສຳຄັນ

ວຽກງານຮັບໃຊ້ຂອງພຣະເຢຊູເຈົ້າ ແລະທຸກສິ່ງທີ່ພຣະອົງເຮັດມີການວາງແຜນຢ່າງຮອບຄອບ. ພຣະເຢຊູມີຄວາມເຂົ້າໃຈຈະແຈ້ງກ່ຽວກັບບົດບາດຂອງພຣະອົງໃນແຜນຂອງພຣະເຈົ້າທີ່ຈະຟື້ນຟູອານາຈັກ

ຂອງພຣະເຈົ້າຢູ່ແຜ່ນດິນໂລກ. ພຣະເຢຊູເລີ່ມຕົ້ນບາງສິ່ງທີ່ຈະເຕີບໃຫຍ່ແລະເຕີບໃຫຍ່ຂຶ້ນຈົນເຖິງມື້ທີ່ພຣະອົງຈະກັບມາອີກ. ເມື່ອພຣະອົງສະເດັດກັບມາ, ພຣະອົງຈະສ້າງໂລກໃໝ່ໃຫ້ເປັນສວນເອເດນ.

ຊີວິດຂອງພວກເຮົາບໍ່ໄດ້ມີບົດບາດອັນໃຫຍ່ຫຼວງໃນແຜນຂອງພຣະເຈົ້າຄືກັບພຣະເຢຊູ. ແຕ່ພວກເຮົາແຕ່ລະຄົນ, ຖ້າຫາກພວກເຮົາຕິດຕາມພຣະເຢຊູກໍຈະມີສ່ວນທີ່ຈະເຮັດໃຫ້ແຜນຂອງພຣະເຈົ້າສຳເລັດໄດ້. ພວກເຮົາຕ້ອງດຳເນີນຊີວິດແລະປະຕິບັດຄືກັບທີ່ພວກເຮົາເຊື່ອວ່ານັ້ນເປັນຄວາມຈິງ. ຄົນທີ່ເຊື່ອກໍໄດ້ເຂົ້າມາໃນຄອບຄົວຂອງພຣະເຈົ້າແລະມື້ໜຶ່ງຈະເປັນສະມາຊິກຂອງສະພາຂອງພຣະອົງ. ພຣະເຈົ້າຕ້ອງການໃຫ້ພວກເຮົາເຮັດຫຼາຍກວ່າການເຝົ້າເບິ່ງແຜນຂອງພຣະອົງເທົ່ານັ້ນ. ພຣະອົງຢາກໃຫ້ພວກເຮົາມີສ່ວນຮ່ວມໃນແຜນຂອງພຣະອົງ (ກລຊ. 1:13).

ພຣະເຢຊູເຈົ້າສະແດງໃຫ້ມະນຸດຮູ້ວ່າຄວາມສຳພັນກັບພຣະເຈົ້າໃນສວນເອເດນເປັນແນວໃດ, ພຣະອົງໄດ້ສະແດງໃຫ້ເຫັນວ່າຊີວິດໃນພຣະເຈົ້າຈະເປັນແນວໃດ. ໃນຄອບຄົວຂອງພຣະເຈົ້າແລະໃນອານາຈັກຂອງ ພຣະເຈົ້າ, ຈະບໍ່ມີພະຍາດແລະບໍ່ມີຄວາມບົກຜ່ອງທາງຮ່າງກາຍ. ຈະບໍ່ມີອຳນາດຂອງສັດຕູອີກ. ອານາຈັກທີ່ສົມບູນແບບຂອງພຣະເຈົ້າຈະໃຫຍ່ກວ່າສວນແຫ່ງດຽວ. ມັນໃຫຍ່ກວ່າແຜ່ນດິນອິດສະຣາເອນ. ອານາຈັກຈະມີທົ່ວໂລກ. ມັນຈະລວມເອົາຄົນຈາກທຸກຊາດແລະມັນຈະເປັນທຸກສິ່ງທີ່ເອເດນເຄີຍເປັນ ເຊິ່ງຈະເປັນສະຫວັນເທິງແຜ່ນດິນໂລກ.

ວຽກງານຂອງພວກເຮົາດຽວນີ້ແມ່ນເພື່ອຮຽນແບບວິທີທີ່ພຣະເຢຊູດຳເນີນຊີວິດແນວໃດ. ເຊັ່ນດຽວກັບພຣະເຢຊູ, ພວກເຮົາສາມາດເບິ່ງແຍງທັງຮ່າງກາຍແລະຈິດວິນຍານຂອງເພື່ອນທີ່ເປັນ "ແບບລັກສະນະພຣະເຈົ້າ"ນັ້ນຄືເພື່ອນມະນຸດທຸກຄົນ. ພວກເຮົາສາມາດຊີ້ບອກພວກເຂົາໄປສູ່ຄວາມເຊື່ອໃນພຣະເຈົ້າ ຜູ້ເປັນກະສັດຂອງພວກເຮົາ. ພວກເຮົາສາມາດຊຸກຍູ້ເຂົາເຈົ້າໃຫ້ເຂັ້ມແຂງຂຶ້ນການຕັດສິນໃຈຂອງເຂົາທີ່ຈະຈົງຮັກພັກດີຕໍ່ພຣະອົງ. ພວກເຮົາສາມາດເປັນເໝືອນດັ່ງພຣະເຢຊູແລະ"ປິ່ນປົວຄົນລະທົມໃຈແລະຊອກຊໍ້າແລະ"ປະກາດການປົດປ່ອຍແກ່ຊະເລີຍເສິກ" (ອຊຢ.61:1) ເຫຼົ່ານີ້ແມ່ນການກະທຳທີ່ມະຫັດສະຈັນແລະມັນໄດ້ຮັບຜົນນິລັນດອນ. ການກະທຳເຫຼົ່ານີ້ຮຽກຮ້ອງໃຫ້ຕ້ານທານກັບການໂຈມຕີຂອງອຳນາດທາງວິນຍານທີ່ຊົ່ວຮ້າຍແລະບໍ່ຟັງຄຳແນະນຳຂອງພວກມັນ. ພຣະວິນຍານບໍລິສຸດເຈົ້າຈະໃຊ້ທຸກໆການກະທຳດ້ວຍຄວາມເມດຕາ ເພື່ອສົ່ງຜົນກະທົບຕໍ່ໃຈຂອງຜູ້ໃດຜູ້ໜຶ່ງທີ່ມີຕໍ່ພຣະເຈົ້າ. ທຸກໆການບອກເລົ່າຂ່າວປະເສີດຈະມີປະສິດຕິຜົນ ເຖິງແມ່ນວ່າຄົນທີ່ບອກຈະບໍ່ສາມາດເຫັນຜົນໄດ້ຮັບກໍ່ຕາມ. ຄວາມກະລຸນາຂອງພຣະເຢຊູກົງກັບຂ່າວປະເສີດຂອງພຣະອົງ. ຄວາມເມດຕາຂອງພຣະເຢຊູສະໜັບສະໜູນສິ່ງທີ່ພຣະອົງກຳລັງສອນ. ນີ້ແມ່ນແບບຢ່າງທີ່ຜູ້ທີ່ເຊື່ອສາມາດຮຽນແບບໄດ້. ວິຖີຊີວິດນີ້ແມ່ນລາຍລະອຽດວຽກງານສຳລັບປະຊາກອນແຫ່ງອານາຈັກຂອງພຣະເຈົ້າ.

ເນື້ອໃນໃນບົດນີ້ຍັງສອນໃຫ້ພວກເຮົາຮູ້ວ່າສິ່ງຊົ່ວຮ້າຍທີ່ສະຫຼາດກໍຍັງມີຂໍ້ຈຳກັດ. ຜູ້ປົກຄອງເໜືອທຳມະຊາດທີ່ກະບົດແມ່ນມີອຳນາດ, ແຕ່ພວກເຂົາຍັງມີຄວາມອ່ອນແອຕໍ່ຍຸດທະສາດຂອງພຣະເຈົ້າແລະຕໍ່ການກະທຳ ຂອງຜູ້ທີ່ຕິດຕາມພຣະເຢຊູ. ຕອນນີ້ພຣະເຢຊູເຈົ້ານັ່ງ“ ຢູ່ເບື້ອງຂວາພຣະຫັດຂອງພຣະເຈົ້າ ໂດຍມີຝູງເທວະດາແລະບັນດາຜູ້ມີອຳນາດ ແລະຣິດເດດຖືກຊົງມອບໄວ້ ໃຫ້ຢູ່ໃຕ້ອຳນາດຂອງພຣະອົງແລ້ວ.” (1 ປຕ.3:22). ພວກເຮົາເປັນຜູ້ປົກຄອງຮ່ວມກັບພຣະອົງ “ຮຽບຮ້ອຍແລ້ວ, ແຕ່ຍັງບໍ່ທັນສົມບູນ” (ກລຊ. 3: 1; 2 ຕຕ. 2:12; ພນມ. 2:26; 3:21). ປະຕູຮົ້ວຂອງນະລົກຈະບໍ່ສາມາດຢຸດຢັ້ງຄວາມກ້າວໜ້າແລະຄວາມສຳເລັດຂອງຄຣິສຕະຈັກຊຶ່ງເປັນອານາຈັກຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກ. ເຮົາຕັດສິນໃຈເລືອກທີ່ຈະເຂົ້າຮ່ວມກັບພຣະເຢຊູໃນການຊ່ວຍຂະຫຍາຍອານາຈັກເໜືອທຳມະຊາດຂອງພຣະອົງຫຼືບໍ່, ສິ່ງນີ້ແມ່ນຂຶ້ນກັບພວກເຮົາເອງ.

# ບົດທີ 12

# ຜູ້ທີ່ມາເທິງກ້ອນເມກ

ຂ້າພະເຈົ້າໄດ້ຂຽນໃນບົດທີ່ຜ່ານມາວ່າພຣະເຢຊູເລີ່ມເວົ້າກ່ຽວກັບການຕາຍຂອງພຣະອົງທັນທີຫຼັງຈາກໄດ້ກະຕຸ້ນໃຫ້ອຳນາດແຫ່ງຄວາມມືດເຂົ້າມາໂຈມຕີພຣະອົງແນວໃດ. ສິ່ງທ້າທາຍນີ້ໄດ້ເກີດຂຶ້ນຢູ່ບ່ອນທີ່ເອີ້ນວ່າ"ປະຕູນະລົກ" ແລະຢູ່ຍອດພູເຂົາເຮີໂມນ. ການທ້າທາຍຂອງພຣະເຢຊູໄດ້ກະຕຸ້ນອຳນາດແຫ່ງຄວາມມືດ ເລີ່ມຕົ້ນເຫດການຕ່າງໆທີ່ນຳໄປສູ່ການທົດລອງຂອງພຣະເຢຊູແລະຈາກນັ້ນການຕາຍຂອງພຣະອົງເທິງໄມ້ກາງແຂນ. ຄຣິສຕຽນໄດ້ອ່ານກ່ຽວກັບການທົດລອງຂອງພຣະເຢຊູຫຼາຍເທື່ອແລ້ວ. ແຕ່ມີສ່ວນທີ່ເໜືອທຳມະຊາດໜຶ່ງໃນການທົດລອງທີ່ບໍ່ຄ່ອຍເຫັນແລະບໍ່ເຂົ້າໃຈ.

ທາງການຢິວໄດ້ຕັດສິນໂທດປະຫານຊີວິດພຣະເຢຊູ. ຫຼັງຈາກນັ້ນ, ພວກເຂົາໄດ້ສົ່ງພຣະອົງໄປຫາຜູ້ປົກຄອງຊາວໂຣມັນ, ຊື່ປົນທີໂອປີລາດ ຜູ້ທີ່ຈະດຳເນີນການດັ່ງກ່າວ. ເພື່ອໃຫ້ເຂົ້າໃຈວ່າສາເຫດຫຍັງທີ່ເຮັດໃຫ້ຄົນຢິວຕັດສິນໂທດພຣະເຢຊູຈົນເຖິງຕາຍ, ພວກເຮົາຕ້ອງກັບໄປທີ່ພຣະທຳດານີເອນໃນພຣະສັນຍາເດີມ. ພຣະທຳເຫຼັ້ມນັ້ນມີເລື່ອງກ່ຽວກັບການປະຊຸມທີ່ພຣະເຈົ້າມີກັບບັນດາບຸດທີ່ສັດຊື່ຂອງພຣະເຈົ້າຢູ່ໃນສະພາແຫ່ງສະຫວັນຂອງພຣະອົງ.

## ຜູ້ມີຊີວິດຢູ່ຕະຫຼອດໄປແລະສະພາຂອງພຣະອົງ

ດານີເອນບົດທີ 7 ເລີ່ມຕົ້ນດ້ວຍນິມິດທີ່ແປກປະຫຼາດ. ດານີເອນເຫັນສັດຮ້າຍສີ່ໂຕອອກມາຈາກທະເລ (ດນອ.7:1-8). ພວກມັນບໍ່ແມ່ນສັດທຳມະດາເລີຍ, ແຕ່ສັດໂຕທີສີ່ແມ່ນຊົ່ວຮ້າຍຫຼາຍ. ພຣະສັນຍາເດີມໄດ້ບອກພວກເຮົາກ່ຽວກັບຄົນທີ່ມີຄວາມຝັນແລະພາບນິມິດແລະຕໍ່ມາຮູ້ຄວາມໝາຍຂອງເລື່ອງນັ້ນ. ສິ່ງທີ່ຢູ່ໃນຄວາມຝັນຫຼືໃນນິມິດແມ່ນເປັນຕົວແທນຂອງບາງສິ່ງບາງຢ່າງສະເໝີແລະໃນນິມິດຂອງດານີເອນສັດແປກປະຫຼາດສີ່ໂຕເປັນຕົວແທນໃຫ້ 4 ຊາດ ພວກເຮົາຮູ້ເລື່ອງນີ້ເພາະວ່ານິມິດຂອງເພິ່ນກົງກັບຄວາມຝັນຂອງເນບູກາດເນັດຊາໃນດານີເອນບົດທີ 2. ດານີເອນໄດ້ອະທິບາຍວ່າຄວາມຝັນນັ້ນແມ່ນກ່ຽວກັບບາບີໂລນແລະສາມຊາດອື່ນໆທີ່ຈະມາພາຍຫຼັງ. ແຕ່ໃນດານີເອນບົດທີ 7 ເພິ່ນເວົ້າວ່າ:

> ໃນຂະນະທີ່ຂ້າພະເຈົ້າກຳລັງເບິ່ງຢູ່ນັ້ນ ກໍມີບັນລັງຫລາຍອັນໄດ້ຖືກນຳມາຕັ້ງໄວ້. ເພິ່ນຜູ້ມີຊີວິດຢູ່ຕະຫລອດໄປໄດ້ນັ່ງຢູ່ເທິງບັນລັງອັນໜຶ່ງໃນຈຳນວນບັນລັງເຫຼົ່ານີ້. ເຄື່ອງນຸ່ງຂອງເພິ່ນຂາວເໝືອນຫິມະ ຜົມຂອງເພິ່ນເໝືອນຂົນແກະບໍຣິສຸດຜຸດຜ່ອງ. ບັນລັງຂອງເພິ່ນທີ່ຢູ່ເທິງລໍ້ກໍເປັນໄຟລຸກໄໝ້ຢູ່ ແລະມີ

ແປວໄຟພົ່ງອອກຈາກທີ່ນັ້ນ. ມີຫລາຍພັນຄົນບົວລະບັດຮັບໃຊ້ເພິ່ນຢູ່ທີ່ນັ້ນ ແລະມີຫລາຍລ້ານຄົນຢືນຢູ່ຊ້ອງໜ້າເພິ່ນ. ສານເລີ່ມການພິພາກສາ ແລະໜັງສືຕ່າງໆກໍຖືກເປີດອອກ.

ພວກເຮົາຮູ້ວ່າຜູ້ມີຊີວິດຢູ່ຕະຫຼອດໄປແມ່ນພຣະເຈົ້າຂອງອິດສະຣາເອນ. ສິ່ງນີ້ແມ່ນຈະແຈ້ງແລະຄຳອະທິບາຍກ່ຽວກັບບັນລັງຂອງພຣະເຈົ້າແມ່ນຄືກັນກັບໃນນິມິດຂອງເອເຊກຽນເລື່ອງບັນລັງຂອງພຣະເຈົ້າ (ອຊກ. 1). ໄຟ, ກົງລໍ້, ແລະຮູບຮ່າງເໝືອນມະນຸດກຳລັງນັ່ງເທິງບັນລັງໃນນິມິດນັ້ນແມ່ນຄືກັນກັບໃນນິມິດຂອງດານີເອນ.

ແຕ່ທ່ານໄດ້ສັງເກດເຫັນບໍວ່າບໍ່ໄດ້ມີບັນລັງດຽວເທົ່ານັ້ນ? ໃນນິມິດຂອງດານີເອນມີຫຼາຍບັນລັງ (ດນອ. 7: 9). ມີບັນລັງພຽງພໍສຳລັບສະມາຊິກທັງໝົດໃນສະພາເໜືອທຳມະຊາດ, ເຊິ່ງແມ່ນສະພາວິນຍານຂອງພຣະເຈົ້າ (ດນອ.:10)

ສະພາແຫ່ງສະຫວັນປະຊຸມກັນເພື່ອຕັດສິນສິ່ງທີ່ຄວນເຮັດກ່ຽວກັບ 4 ຊາດ, ເຊິ່ງເປັນສັນຍາລັກຂອງສັດຮ້າຍທັງສີ່ຊະນິດ. ເຊິ່ງໄດ້ມີການຕັດສິນວ່າສັດທີສີ່ຕ້ອງຖືກຂ້າ, ໝາຍຄວາມວ່າປະເທດຊາດທີສີ່ຈະຖືກທຳ ລາຍ. ສາມຊາດອື່ນໆຈະສືບຕໍ່ມີຢູ່, ແຕ່ຈະຖືກຍຶດເອົາອຳນາດໄປ (ດນອ. 7:11–12). ພວກເຂົາຈະຖືກຈັດຢູ່ໃຕ້ອຳນາດຂອງກະສັດອົງໃໝ່ແລະອານາຈັກຂອງເພິ່ນ. ຕອນນີ້ເປັນຊ່ວງເວລາທີ່ນິມິດໜ້າສົນໃຈຫຼາຍຍິ່ງຂຶ້ນ.

## ບຸດມະນຸດທີ່ມາເທິງເມກ

ດານີເອນຍັງເລົ່າເຖິງນິມິດຂອງເພິ່ນຕໍ່ໄປ:

> ໃນເວລາກາງຄືນລະຫວ່າງເກີດນິມິດນີ້ ຂ້າພະເຈົ້າໄດ້ເຫັນຜູ້ໜຶ່ງມີຮູບຮ່າງເໝືອນບຸດມະນຸດ. ເພິ່ນຫຍັບເຂົ້າມາໃກ້ຂ້າພະເຈົ້າ ເພິ່ນມາເທິງເມກໃນສະຫວັນ ແລະເພິ່ນໄດ້ໄປຫາຜູ້ມີຊີວິດຢູ່ຕະຫລອດໄປ ແລະເຂົ້າເຝົ້າເພິ່ນ. ເພິ່ນໄດ້ຮັບສິດອຳນາດ, ກຽດຕິຍົດ ແລະອຳນາດແຫ່ງການເປັນໃຫຍ່ ຈົນວ່າທຸກຊົນຊາດ, ທຸກເຊື້ອຊາດ ແລະທຸກພາສາໄດ້ຮັບໃຊ້ເພິ່ນ. ສິດອຳນາດຂອງເພິ່ນຈະດຳລົງຢູ່ຕະຫລອດໄປ ແລະອານາຈັກຂອງເພິ່ນກໍຈະບໍ່ສິ້ນສຸດເປັນຈັກເທື່ອ. (ດນອ. 7:13–14)

ຄຳວ່າ“ບຸດມະນຸດ” ແມ່ນປະໂຫຍກໜຶ່ງທີ່ໃຊ້ຫຼາຍຄັ້ງໃນພຣະສັນຍາເດີມ. ບໍ່ຄວນແປກໃຈເລີຍທີ່ມັນພັນລະນາເຖິງມະນຸດ. ຄວາມແປກໃຈກໍຄືມະນຸດຄົນນີ້ຍັງຖືກກ່າວວ່າກຳລັງຈະມາຢູ່ເທິງເມກໄປຫາຜູ້ມີຊີວິດຢູ່ຕະຫຼອດໄປ (ດນອ. 7: 13).

ເປັນຫຍັງສິ່ງນັ້ນສຳຄັນ? ເພາະວ່າຢູ່ທຸກໆບ່ອນທີ່ມີພັນລະນາເຖິງຜູ້ທີ່ມາເທິງເມກນີ້ເກີດຂຶ້ນໃນພຣະສັນຍາເດີມເຊິ່ງເປັນການອ້າງເຖິງພຣະເຈົ້າເທົ່ານັ້ນ (ອຊຢ. 19:1; ພບຢ.33:26; ພສສ. 68:32–33; ພສສ. 104:1-4). ແຕ່ໃນດານີເອນບົດທີ 7, ພຣະເຈົ້າຢູ່ເທິງບັນລັງຂອງພຣະອົງແລ້ວແລະເອີ້ນວ່າຜູ້ມີຊີວິດຢູ່ຕະຫຼອດໄປ. ດານີເອນເຫັນຄົນຜູ້ໜຶ່ງພວມມາເທິງເມກຜູ້ທີ່ໄດ້ຮັບນາມມະຍົດວ່າເປັນພຣະເຈົ້າ. ນີ້ໝາຍຄວາມວ່າມີ "ພຣະເຈົ້າພຣະພາກທີສອງ" ໃນນິມິດ. ນີ້ແມ່ນຄຳອະທິບາຍຄືກັບວິທີທີ່ຄຣິສຕຽນເຊື່ອໃນພຣະເຈົ້າສາມພຣະພາກ.ພຣະເຈົ້າມີພຽງແຕ່ອົງດຽວເທົ່ານັ້ນແຕ່ມີສາມພຣະພາກ.

ນັ້ນເປັນເລື່ອງທີ່ຖືກຕ້ອງແລ້ວ.

ຕອນທີ່ພຣະເຢຊູໄດ້ຢືນຢູ່ໃນການໄຕ່ສວນຄະດີຂອງພຣະອົງຕໍ່ໜ້າມະຫາປະໂຣຫິດກາຢະຟາ, (ມັດທາຍ 26) ຊີວິດຂອງພຣະອົງແມ່ນຂຶ້ນກັບສິ່ງທີ່ຜູ້ນຳຄົນຢິວຕັດສິນໃຈ. ພຣະເຢຊູໄດ້ກ່າວບາງສິ່ງບາງຢ່າງທີ່ເຮັດໃຫ້ພວກເຂົາທຸກຄົນໃຈຮ້າຍຫຼາຍເມື່ອພຣະອົງກ່າວເຖິງນິມິດຂອງດານີເອນ:

> ບັນດາຫົວໜ້າປະໂຣຫິດ ແລະບັນດາສະມາຊິກສະພາ ຫາພະຍານຫຼັກຖານບໍ່ຈິງຂຶ້ນມາຕໍ່ສູ້ພຣະອົງເພື່ອໃຫ້ພຣະອົງຖືກໂທດປະຫານ, ແຕ່ພວກເຂົາຫາຫຼັກຖານບໍ່ໄດ້ ເຖິງແມ່ນວ່າ ມີຫຼາຍຄົນອອກມາກ່າວຫາພຣະອົງ ໂດຍບໍ່ມີມູນຄວາມຈິງກໍຕາມ ໃນທີ່ສຸດ ກໍມີສອງຄົນອອກມາ ແລະກ່າວຫາວ່າ, "ຄົນນີ້ແຫຼະໄດ້ເວົ້າວ່າ'ເຮົາສາມາດທຳລາຍວິຫານຂອງພຣະເຈົ້າລົງແລະສ້າງຂຶ້ນໃໝ່ໄດ້ພາຍໃນສາມວັນ.'"
>
> ມະຫາປະໂຣຫິດຢືນຂຶ້ນ ແລະເວົ້າຕໍ່ພຣະເຢຊູເຈົ້າວ່າ, "ເຈົ້າບໍ່ຕອບຫຍັງບໍ? ຂໍ້ກ່າວຫາຕໍ່ສູ້ເຈົ້າເຫຼົ່ານີ້ເປັນແນວໃດ?" ແຕ່ພຣະເຢຊູເຈົ້າມິດງຽບຢູ່ ແລ້ວມະຫາປະໂຣຫິດໄດ້ເວົ້າຕໍ່ພຣະອົງອີກວ່າ, "ໃນນາມຂອງພຣະເຈົ້າອົງຊົງຊີວິດຢູ່ ໃຫ້ເຈົ້າສາບານວ່າ, 'ເຈົ້າເປັນພຣະຄຣິດພຣະບຸດຂອງພຣະເຈົ້າ.'"
>
> ພຣະເຢຊູເຈົ້າຊົງຕອບວ່າ, "ດັ່ງທີ່ເຈົ້າເວົ້ານັ້ນແລ້ວ, ແຕ່ຫຼາຍກວ່ານັ້ນອີກ ເຮົາບອກພວກເຈົ້າວ່າ ໃນເວລາຕໍ່ໄປ ພວກເຈົ້າຈະເຫັນບຸດມະນຸດນັ່ງຢູ່ເບື້ອງຂວາຂອງອົງຊົງຣິດອຳນາດຍິ່ງໃຫຍ່ ແລະກຳລັງສະເດັດມາເທິງເມກໃນສະຫວັນ." ເມື່ອໄດ້ຍິນດັ່ງນັ້ນ ມະຫາປະໂຣຫິດກໍຈີກເສື້ອຂອງຕົນ ແລ້ວເວົ້າຂຶ້ນວ່າ, "ມັນໄດ້ເວົ້າໝິ່ນປະໝາດພຣະເຈົ້າແລ້ວ ພວກເຮົາຍັງຈະຕ້ອງການພະຍານຫຍັງຕື່ມອີກ? ນີ້ແຫຼະ ພວກເຈົ້າໄດ້ຍິນຄຳເວົ້າໝິ່ນປະໝາດພຣະເຈົ້າແລ້ວ ພວກເຈົ້າຄິດເຫັນຢ່າງໃດ?" ພວກເຂົາຕອບວ່າ, "ມັນຜິດແລະສົມຄວນຕາຍ."

ຄຳຕອບຂອງພຣະເຢຊູເບິ່ງຄືບໍ່ກ່ຽວຂ້ອງກັບຄຳຖາມທີ່ຊັດເຈນຂອງກາຢະຟາ. ພຣະເຢຊູໄດ້ກ່າວເຖິງດານີເອນ 7:13 ເມື່ອກາຢະຟາຖາມວ່າພຣະອົງເປັນ" ພຣະເມຊີອາຜູ້ເປັນພຣະບຸດຂອງພຣະເຈົ້າບໍ?" ຄຳຕອບຂອງພຣະເຢຊູໝາຍຄວາມວ່າ, ເຈົ້າຢາກຮູ້ວ່າເຮົາແມ່ນໃຜແທ້ໆບໍກາຢະຟາ ? ຟັງດີໆ. ກາຢະຟາເຂົ້າໃຈທັນທີແລະຮ້ອງຂຶ້ນວ່າເວົ້າໝິ່ນປະໝາດ ! ກາຢະຟາເຂົ້າໃຈວ່າພຣະເຢຊູອ້າງວ່າຕົນ

ເປັນພຣະເຈົ້າພຣະພາກທີ່ສອງໃນດານີເອນ 7:13. ພຣະເຢຊູອ້າງວ່າເປັນຄົນຜູ້ທີ່ມາເທິງເມກໃນສະຫວັນ. ໃນພຣະສັນຍາເດີມຄຳນີ້ໄດ້ຖືກໃຊ້ເພື່ອອະທິບາຍກ່ຽວກັບພຣະເຈົ້າເທົ່ານັ້ນ. ພຣະເຢຊູເຈົ້າໄດ້ອ້າງວ່າເປັນພຣະເຈົ້າໃນເນື້ອກາຍຂອງມະນຸດ. ສຳລັບຜູ້ນຳຄົນຢິວທີ່ບໍ່ເຊື່ອວ່າພຣະເຢຊູເປັນພຣະເມຊີອາ, ນີ້ແມ່ນການໝິ່ນປະໝາດ ແລະອາດຈະໝາຍເຖິງຄຳຕັດສິນປະຫານຊີວິດເທົ່ານັ້ນ.

ແຕ່ພຣະເຢຊູຮູ້ເລື່ອງນີ້ແລະເຂົ້າໃຈຢ່າງຊັດເຈນສິ່ງທີ່ພຣະອົງກຳລັງເຮັດຢູ່. ພຣະເຢຊູບໍ່ສົນໃຈທີ່ຈະປົກປ້ອງຕົນເອງຈາກຄວາມຕາຍ. ພຣະເຢຊູຮູ້ວ່າພຣະອົງຕ້ອງຕາຍເພື່ອເຮັດໃຫ້ອານາຈັກຂອງພຣະເຈົ້າຟື້ນຟູ. ພຣະອົງຮູ້ວ່າການຕາຍຂອງພຣະອົງຈະນຳເອົາຜູ້ທີ່ເຊື່ອເຂົ້າມາໃນຄອບຄົວຂອງພຣະເຈົ້າ. ພຣະເຢຊູຮູ້ວ່າການສິ້ນພຣະຊົນຂອງພຣະອົງຈະເປັນຫົນທາງໃຫ້ປະຊາຊາດໄດ້ຮັບການປົດປ່ອຍຈາກສິດອຳນາດຂອງຜູ້ປົກຄອງແລະອຳນາດເໜືອທຳມະຊາດທີ່ຊົ່ວຮ້າຍ. ປະເທດຕ່າງໆໄດ້ຖືກຄວບຄຸມໂດຍພວກຜູ້ປົກຄອງເຫຼົ່ານີ້ນັບຕັ້ງແຕ່ພວກເຂົາໄດ້ປະຕິເສດພຣະເຈົ້າທີ່ວິຫານຫໍບາເບນ.

ແລະແລ້ວພຣະເຢຊູກໍຕາຍ. ເພງສັນລະເສີນບົດທີ 22 ແມ່ນເປັນທີ່ຮູ້ຈັກກັນດີວ່າເປັນການພັນລະນາເຖິງຜົນກະທົບທາງຮ່າງກາຍຂອງການຖືກຄຶງແນວໃດ. ຖືກຂຽນໂດຍດາວິດ, ແຕ່ບອກພວກເຮົາວ່າມີຫຍັງເກີດຂຶ້ນຢູ່ໃນໂລກເໜືອທຳມະຊາດໃນເວລາທີ່ພຣະເຢຊູເຈົ້າຖືກຄຶງກຳລັງຈະຕາຍຢູ່ເທິງໄມ້ກາງແຂນ. ດາວິດໂສກເສົ້າເສຍໃຈ:

ທຸກຄົນທີ່ເຫັນຂ້ານ້ອຍຕ່າງກໍຫົວຂວັນ

ແລບລີ້ນແລະແກວ່ງຫົວໃສ່ຂ້ານ້ອຍ.

ພວກເຂົາເວົ້າວ່າ, “ເຈົ້າຜູ້ເພິ່ງພຣະເຈົ້າຢາເວເອີຍເປັນຫຍັງພຣະອົງບໍ່ມາຊ່ວຍກູ້ເອົາເຈົ້າ?

ຖ້າພຣະອົງພໍໃຈໃນຕົວເຈົ້າແທ້ນັ້ນ

ເປັນຫຍັງພຣະອົງບໍ່ມາຊ່ວຍເຫຼືອເອົາເຈົ້າໄວ້?”…

ສັດຕູດັ່ງຝູງງົວປ່າອ້ອມຂ້ານ້ອຍໄວ້ທຸກແຈ

ດັ່ງງົວປ່າຮ້າຍແຕ່ເຂດບາຊານທີ່ປິດລ້ອມໄວ້.

ພວກເຂົາອ້າປາກໃສ່ເໝືອນດັ່ງຝູງໂຕສິງ

ທີ່ກຳລັງຮ້ອງແຜດສຽງແລະຈະກັດກິນເນື້ອ.

ເຫື່ອແຮງຂອງຂ້ານ້ອຍກໍໄດ້ສູນເສຍໄປ

ດັ່ງນ້ຳທີ່ໄຫລຊະໄປຕາມພື້ນດິນນັ້ນ.

ກະດູກຂອງຂ້ານ້ອຍທຸກຊີກກໍບໍ່ຕິດຕໍ່ກັນ (ພສສ.22.7-14)

ພາກສ່ວນໜຶ່ງທີ່ພັນລະນາເຖິງຄວາມໜ້າຢ້ານກົວທີ່ເໜືອທຳມະຊາດເຊິ່ງພຣະເຢຊູໄດ້ອົດທົນຄື "ງົວປ່າຮ້າຍແຕ່ເຂດບາຊານ." ຈົ່ງຈື່ໄວ້ວ່າບາຊານຖືເປັນສຳນັກງານໃຫຍ່ຂອງຜູ້ປົກຄອງຊົ່ວຮ້າຍທີ່ເໜືອທຳມະຊາດແລະເປັນທາງເຂົ້າສູ່ອານາຈັກແຫ່ງຄວາມຕາຍ. ບາຊານມີວິຫານຫຼາຍແຫ່ງສຳລັບການນະມັດສະການພະບາອານເຊິ່ງເປັນສັນຍາລັກຂອງງົວ "ງົວປ່າຮ້າຍແຕ່ເຂດບາຊານ." ກ່າວເຖິງອຳນາດແຫ່ງຄວາມມືດ. ໃນສະໄໝຂອງພວກເຮົາເຫດການທີ່ໜ້າຢ້ານນີ້ໄດ້ຖືກອະທິບາຍເປັນຢ່າງດີໃນປຶ້ມທີ່ຂຽນໂດຍຊີເອສ ເລວິສ ເຊັ່ນ: ໂຕສິງ,ແມ່ມົດແລະຕູ້ເສື້ອຜ້າ (C. S. Lewis in *The Lion, the Witch, and the Wardrobe.*) ຖ້າທ່ານໄດ້ອ່ານປຶ້ມຫຼືໄດ້ເບິ່ງຮູບເງົາແລ້ວ, ທ່ານຈະຈື່ຈຳສິງໂຕ, ທີ່ເອີ້ນວ່າອັດສະລານ Aslan, ຍອມສະລະຊີວິດຂອງຕົນໃຫ້ກັບສັດຮ້າຍແລະຖືກຂ້າໂດຍແມ່ມົດຂາວ (Witch White) ຢູ່ເທິງໂຕະຫີນ. ແຕ່ອັດສະລານ Aslan ກຳລັງໃຊ້ການກະທຳທີ່ບໍ່ດີຂອງແມ່ມົດຂາວ (White Witch) ເພື່ອເຮັດບາງສິ່ງທີ່ນາງບໍ່ຮູ້ໃຫ້ສຳເລັດ.

ໃນລັກສະນະດຽວກັນພຣະເຢຊູເຈົ້າໄດ້ເອົາຊະນະຊາຕານຢ່າງສົມບູນ. ຊາຕານຄິດວ່າມັນໄດ້ຮັບໄຊຊະນະແລ້ວ, ແຕ່ມັນພັດໄດ້ທຳລາຍມັນເອງ. ສິ່ງມີຊີວິດທີ່ຊົ່ວຮ້າຍຄິດວ່າເປັນໄຊຊະນະເຕັມທີ່ຂອງພວກມັນແຕ່ພັດກາຍເປັນຄວາມພ່າຍແພ້ທີ່ບໍ່ສາມາດຍ້ອນກັບໄດ້ຂອງພວກມັນເອງ.

## ທ່ານເປັນພຣະເຈົ້າ,ແຕ່ທ່ານຈະຕາຍຄືກັນກັບມະນຸດ

ຊາຕານສູນເສຍຂໍ້ຮຽກຮ້ອງຂອງມັນເໜືອລູກຫຼານທັງໝົດຂອງອາດາມ, ແຕ່ນັ້ນບໍ່ແມ່ນທັງໝົດທີ່ມັນສູນເສຍໄປ. ທີ່ໄມ້ກາງແຂນ, ຊາຕານແລະອຳນາດກະບົດອື່ນໆຂອງຄວາມມືດຈະເລີ່ມຮູ້ວ່າອານາຈັກຂອງພວກເຂົາເລີ່ມນ້ອຍລົງເລື້ອຍໆ.

ສະມາຊິກວິນຍານແຫ່ງສະພາຂອງພຣະເຈົ້າໄດ້ຖືກມອບໝາຍໃຫ້ເປັນຜູ້ມີອຳນາດເໜືອປະຊາຊາດຕ່າງໆໂດຍພຣະເຈົ້າອົງສູງສຸດຂອງອິດສະຣາເອນ (ພບຍ.4: 19–20; 32: 8–9). ພວກເຮົາບໍ່ໄດ້ຮັບການແຈ້ງວ່າພວກເຂົາກາຍເປັນສັດຕູຂອງພຣະເຈົ້າເມື່ອໃດ, ແຕ່ເຫັນຈະແຈ້ງວ່າພວກເຂົາໄດ້ກະບົດ. ພວກເຂົາຍັງຫັນປະຊາຊົນຂອງພຣະເຈົ້າຄືຄົນອິດສະຣາເອນອອກຈາກການນະມັດສະການພຣະອົງມາຖວາຍເຄື່ອງບູຊາພວກເຂົາແທນ (ພບຍ.17: 1-3; 29: 26 29 27; 32:17). ຂ້າພະເຈົ້າໄດ້ຂຽນກ່ຽວກັບເພງສັນລະເສີນບົດທີ 82 ໃນບົດທີ 2 ເມື່ອຂ້າພະເຈົ້າໄດ້ແນະນຳສະພາທີ່ເໜືອທຳມະຊາດຂອງພຣະເຈົ້າ. ພຣະເຈົ້າໃນເພງສັນລະເສີນບົດທີ 82 ໄດ້ບອກພວກລູກຊາຍທີ່ກະບົດຂອງພວກພຣະອົງວ່າພວກເຂົາໄດ້ໃຊ້ອຳນາດຂອງພວກເຂົາໃນທາງທີ່ຜິດແລະໄດ້ຕອບແທນດ້ວຍຄວາມຊົ່ວຮ້າຍແທນ. ພວກເຂົາບໍ່ໄດ້ເຄົາລົບນັບຖືຕໍ່ກົດຂອງພຣະເຈົ້າຫຼືຄວາມຍຸດຕິທຳຂອງພຣະອົງຄື:

ພຣະເຈົ້າຊົງປົກຄອງໃນສະພາແຫ່ງສະຫວັນນັ້ນ

ພຣະອົງພິພາກສາໃນທ່າມກາງບັນດາພະທັງຫຼາຍວ່າ(ເອໂລຮີມ),

"ພວກທ່ານຕ້ອງຢຸດຕິການຕັດສິນອັນບໍ່ຍຸດຕິທຳ ແລະຕ້ອງເຊົາເປັນພັກພວກຂອງຄົນຊົ່ວຮ້າຍ

ຈົ່ງປ້ອງກັນສິດທິຄົນທຸກຈົນແລະລູກກຳພ້າທັງຫລາຍຈົ່ງສຸພາບແກ່ຄົນຂັດສົນແລະຂາດທີ່ເພິ່ງ.

ຈົ່ງຊ່ວຍກູ້ເອົາຄົນອ່ອນແຮງແລະຄົນຍາກຈົນໃຫ້ພົ້ນຈາກອຳນາດຂອງບັນດາຄົນຊົ່ວຮ້າຍ.

ພວກເຈົ້າໂງ່ຈ້າ ແລະບໍ່ຮູ້ຈັກຫຍັງ ທັງຍ່າງໄປມາໃນຄວາມມືດ

ແລະຄວາມຍຸດຕິທຳໄດ້ສູນເສຍໄປຈາກໂລກນີ້.(ພສສ.82:1-5)

ສ່ວນທີ່ເຫຼືອຂອງເພງສັນລະເສີນກ່າວວ່າພຣະເຈົ້າໄດ້ເອີ້ນການປະຊຸມໃນສະພາແຫ່ງສະຫວັນນີ້ເພື່ອບອກບັນດາເທບພະເຈົ້າກະບົດວ່າອະນາຄົດຂອງພວກເຂົາແມ່ນຄວາມຕາຍ. ການປົກຄອງຂອງພວກເຂົາດ້ວຍຄວາມຢ້ານກົວຕໍ່ປະເທດຕ່າງໆຈະສິ້ນສຸດລົງເມື່ອພຣະເຈົ້າຕັດສິນໃຈທີ່ຈະຍຶດປະຊາຊາດຄືນມາ:

> ເຮົາກ່າວວ່າ, 'ພວກເຈົ້າຄືບັນດາພະທັງຫຼາຍ
> ເປັນພວກລູກຊາຍອົງສູງສຸດທັງໝົດ.'
> ແຕ່ພວກເຈົ້າພັດເປັນດັ່ງມະນຸດທຳມະດາ
> ແລະຈະສິ້ນຊີວາລົງດັ່ງເຈົ້າຊາຍຄົນໜຶ່ງ."
> ຂ້າແດ່ພຣະເຈົ້າ ຂໍຈົ່ງສະເດັດມາປົກຄອງໂລກນີ້
> ເພາະຊົນຊາດທັງໝົດເປັນຂອງພຣະອົງ (ພສສ.82:6-8)

ພຣະເຈົ້າຈະຕັດສິນໃຈທີ່ຈະຍຶດປະເທດຕ່າງໆຄືນເມື່ອໃດ? ພວກເຮົາອ່ານຄຳຕອບຢູ່ໃນດນອ. 7:14ຄື:

> ເພິ່ນໄດ້ຮັບສິດອຳນາດ, ກຽດຕິຍົດ ແລະອຳນາດແຫ່ງການເປັນໃຫຍ່ ຈົນວ່າທຸກຊົນຊາດ,ທຸກເຊື້ອຊາດ ແລະທຸກພາສາໄດ້ຮັບໃຊ້ເພິ່ນ. ສິດອຳນາດຂອງເພິ່ນຈະດຳລົງຢູ່ຕະຫຼອດໄປ ແລະອານາຈັກຂອງເພິ່ນກໍຈະບໍ່ສິ້ນສຸດເປັນຈັກເທື່ອ.

ຄວາມໝາຍຂອງດານີເອນ7: 13–14 ແມ່ນຈະແຈ້ງ ເມື່ອບຸດມະນຸດໄດ້ຮັບລາຊະອານາຈັກກໍຈະເລີ່ມຕົ້ນການທຳລາຍອຳນາດເໜືອທຳມະຊາດແຫ່ງຄວາມມືດ. ພຣະເຢຊູເຈົ້າໄດ້ຮັບລາຊະອານາຈັກເມື່ອພຣະອົງເປັນຄືນມາຈາກຕາຍ. ພຣະເຈົ້າ "ຊົງບັນດານໃຫ້ພຣະອົງຄືນພຣະຊົນ ແລະຊົງໃຫ້ປະທັບເບື້ອງຂວາພຣະຫັດຂອງພຣະເຈົ້າໃນສະຫວັນສະຖານ. ສູງກວ່າບັນດາວິນຍານທີ່ຄອບຄອງ, ຜູ້ມີອຳນາດ, ຜູ້ມີຣິດເດດ, ຜູ້ມີອານຸພາບ ແລະເໜືອກວ່ານາມຊື່ທັງປວງທີ່ເຂົາເອີ່ຍຂຶ້ນ ບໍ່ແມ່ນໃນສະໄໝນີ້ເທົ່ານັ້ນ ແຕ່ວ່າໃນສະໄໝທີ່ຈະມາເຖິງດ້ວຍ." (ອຟຊ. 1: 20–21).

## ສາເຫດທີ່ເລື່ອງນີ້ສຳຄັນ

ກ່ອນພຣະເຢຊູຖືກຄຶງທີ່ໄມ້ກາງແຂນ, ຊາຕານເຄີຍມີສິດຮຽກຮ້ອງຕໍ່ມະນຸດທຸກຄົນຕະຫຼອດໄປ. ມະນຸດທຸກຄົນຕາຍແລະໄປສູ່ໂລກແຫ່ງຄວາມຕາຍ. ໂລກແຫ່ງຄວາມຕາຍແມ່ນອານາຈັກຂອງຊາຕານ. ແລະໃນອານາຈັກຂອງມັນ, ພວກເຮົາຈະຢູ່ຕະຫຼອດໄປ, ຖ້າບໍ່ແມ່ນຍ້ອນການເສຍສະລະຂອງພຣະເຢຊູແລະການເປັນຄືນມາຈາກຕາຍຂອງພຣະອົງ. ຜ່ານຄວາມເຊື່ອໃນວຽກງານຂອງພຣະອົງເທິງໄມ້ກາງແຂນ, ພວກເຮົາກໍໄດ້ຖືກເຮັດໃຫ້ເປັນຄືນມາສູ່ຊີວິດໃໝ່ກັບພຣະເຢຊູ. ໃນບົດກ່ອນໜ້ານີ້ຂ້າພະເຈົ້າໄດ້ຂຽນກ່ຽວກັບຊາຕານຖືກໄລ່ອອກຈາກທີ່ປະທັບຂອງພຣະເຈົ້າເມື່ອອານາຈັກຂອງພຣະເຈົ້າເລີ່ມຕົ້ນຢູ່ເທິງແຜ່ນດິນໂລກ (ລກ. 10:18). ພຣະເຈົ້າຈະບໍ່ຍອມຮັບຂໍ້ກ່າວໂທດຂອງຊາຕານຕໍ່ຜູ້ທີ່ເຊື່ອ. ຊາຕານບໍ່ມີຂໍ້ອ້າງສິດຕໍ່ຈິດວິນຍານຂອງພວກເຮົາອີກຕໍ່ໄປ.

ເປັນຫຍັງພວກເຮົາດຳເນີນຊີວິດຄືກັບວ່າຊາຕານຍັງມີຂໍ້ອ້າງສິດຕໍ່ພວກເຮົາຢູ່?

ຄວາມພົ້ນບໍ່ໄດ້ມາຈາກຄວາມພະຍາຍາມຂອງພວກເຮົາເພື່ອຄວາມສົມບູນແບບທາງສິນທຳ. ຄວາມພົ້ນມາຈາກອານາຈັກແຫ່ງຄວາມຕາຍແມ່ນຂອງປະທານທີ່ມາຈາກພຣະຄຸນຂອງພຣະເຈົ້າ, ໂດຍຜ່ານຄວາມເຊື່ອ (ອຟຊ. 2: 8–9). ນັ້ນໝາຍຄວາມວ່າຄວາມພົ້ນບໍ່ສາມາດສູນເສຍໄປໂດຍຄວາມບໍ່ສົມບູນແບບທາງສິນ ທຳຂອງພວກເຮົາ. ສິ່ງທີ່ບໍ່ໄດ້ມາຈາກການສ້າງຄຸນງາມຄວາມດີ, ຈະບໍ່ສາມາດສູນເສຍໄປດ້ວຍຜົນງານທີ່ບໍ່ດີ. ຄວາມລອດພົ້ນແມ່ນເລື່ອງກ່ຽວກັບຄວາມເຊື່ອທີ່ສັດຊື່. ພວກເຮົາໄວ້ວາງໃຈໃນສິ່ງທີ່ພຣະເຢຊູໄດ້ເຮັດເພື່ອຕ້ານການກ່າວໂທດຂອງຊາຕານ. ພວກເຮົາຫັນໜີຈາກການຕິດຕາມພະອື່ນໆແລະລະບົບຂອງວິຫານຫຼືວັດວາອາຮາມ, ການຂາບໄຫວ້ບູຊາ, ແລະພິທີກຳຕ່າງໆ.

ນັ້ນແມ່ນຂ່າວສານເລື່ອງລາຊະອານາຈັກຂອງພຣະເຈົ້າທີ່ພວກເຮົາໄດ້ຮັບມອບໝາຍໃຫ້ໄປບອກກັບມະນຸດທຸກຄົນຈາກທຸກໆຊາດ (ມທ. 28:19–20). ແລະເມື່ອພວກເຮົາເຊື່ອຟັງແຜນຂອງພຣະເຈົ້າທີ່ຈະສ້າງສາວົກໃໝ່, ພຣະອົງກໍເລີ່ມປົດປ່ອຍມະນຸດອອກຈາກການເປັນຂ້າທາດຂອງຜູ້ປົກຄອງແລະອຳນາດວິນຍານເໜືອທຳມະຊາດທີ່ຊົ່ວຮ້າຍ. ໃນຂະນະທີ່ມີຄົນເຊື່ອແລະຖືກປົດປ່ອຍ, ອານາຈັກແຫ່ງຄວາມມືດຈະນ້ອຍລົງເລື້ອຍໆ. ໂລກແຫ່ງຄວາມຕາຍບໍ່ສາມາດຢຸດຢັ້ງພຣະເຢຊູຈາກການເປັນຄືນຈາກຕາຍໄດ້. ປະຕູຂອງນາລົກບໍ່ສາມາດກັກຂັງບຸກຄົນທີ່ພຣະເຢຊູໄດ້ຊ່ວຍປົດປ່ອຍແລ້ວ. ຊາຕານແລະນາລົກຈະບໍ່ຕ້ານທານຄວາມກ້າວໜ້າຂອງຂ່າວປະເສີດໄດ້.

ເມື່ອພຣະເຢຊູຖືກຄຶງທີ່ໄມ້ກາງແຂນ, ສິ່ງເຫຼົ່ານີ້ເບິ່ງຄືວ່າບໍ່ເປັນຄວາມຈິງສຳລັບພວກສາວົກ. ແຕ່ອີກບໍ່ດົນພວກເຂົາຈະເລີ່ມເຂົ້າໃຈຂ່າວຂໍ້ຄວາມດ້ວຍວິທີທີ່ມີພະລັງແລະບໍ່ສາມາດລືມໄດ້ເລີຍ.

# ບົດທີ 13

# ການປ່ຽນແປງຄັ້ງຍິ່ງໃຫຍ່

**ເລື່**ອງລາວກ່ຽວກັບພຣະເຢຊູໃນຂ່າວປະເສີດເຊັ່ນວ່າການເກີດ, ການຕາຍແລະການເທດສະໜາຂອງພຣະອົງເທິງໂນນພູແມ່ນເປັນທີ່ຮູ້ຈັກດີທີ່ສຸດ. ແຕ່ນອກຈາກນັ້ນເລື່ອງລາວທີ່ມີຊື່ສຽງຫຼາຍທີ່ສຸດໃນພຣະສັນຍາໃໝ່ແມ່ນມາຈາກພຣະທຳກິດຈະການບົດທີ 2 ນີ້ແມ່ນຕອນທີ່ພຣະວິນຍານບໍລິສຸດເຈົ້າໄດ້ກະຕຸ້ນໃຫ້ຜູ້ຕິດຕາມຂອງພຣະເຢຊູໃນຊ່ວງເທດສະການຂອງຄົນຢິວໃນວັນເພນເຕຄໍສະເຕ. ນີ້ແມ່ນການເລີ່ມຕົ້ນຂອງກຸ່ມຜູ້ທີ່ເຊື່ອໃນພຣະເຢຊູເຊິ່ງເອີ້ນວ່າຄຣິສຕະຈັກ. ນີ້ກໍ່ແມ່ນການເລີ່ມຕົ້ນຂອງຜູ້ຕິດຕາມພຣະເຢຊູທີ່ອອກໄປສູ່ປະເທດຕ່າງໆເພື່ອບອກຂ່າວປະເສີດແກ່ຜູ້ຄົນໃນນາມຂອງພຣະເຢຊູ.

ນີ້ອາດຈະແມ່ນເລື່ອງທີ່ຄຸ້ນເຄີຍ, ແຕ່ຂ້າພະເຈົ້າຄິດວ່າມີເລື່ອງທີ່ເກີດຂຶ້ນຫຼາຍໃນເລື່ອງທີ່ຄົນສ່ວນໃຫຍ່ເຂົ້າໃຈ. ກິດຈະການບົດທີ 2 ມີຈຸດປະສົງເພື່ອສອນພວກເຮົາວ່າການສູ້ຮົບໄດ້ເລີ່ມຕົ້ນທີ່ຈະຫັນປ່ຽນການຄອບຄອງແລະອຳນາດຂອງຜູ້ປົກຄອງທີ່ກະບົດທີ່ມີອຳນາດເໜືອທຳມະຊາດ ພວກມັນມີອຳນາດເໜືອປະເທດຕ່າງໆ. ຈົ່ງຈື່ໄວ້ວ່າຫຼັງຈາກການກະບົດທີ່ວິຫານບາເບນ ປະຊາຊາດຕ່າງໆໄດ້ຖືກຕົກຢູ່ພາຍໃຕ້ສິດອຳນາດຂອງສະມາຊິກຂອງສະພາທີ່ເໜືອທຳມະຊາດຂອງພຣະເຈົ້າ, ແຕ່ຕໍ່ມາພວກເຂົາໄດ້ກາຍເປັນສັດຕູຂອງພຣະເຈົ້າ. ສິ່ງທີ່ເກີດຂຶ້ນໃນວັນເພັນເຕຄໍສະເຕແມ່ນຍຸດທະສາດສົງຄາມຂອງພຣະເຈົ້າ ໃນການບຸກລຸກທາງວິນຍານຂອງປະເທດເຫຼົ່ານີ້ດ້ວຍຂ່າວປະເສີດຂອງພຣະເຢຊູ. ຂ່າວປະເສີດກໍຄືມະນຸດບໍ່ຈຳເປັນຕ້ອງຕົກເປັນທາດຂອງວິນຍານຊົ່ວຮ້າຍ.

## ວັນເພນເຕຄໍສະເຕ

ສິ່ງທີ່ເກີດຂຶ້ນໃນກິດຈະການບົດທີ 2 ໃນຊ່ວງເທດສະການວັນເພນເຕຄໍສະເຕແມ່ນຜິດປົກກະຕິຫຼາຍຄື:

> ເມື່ອເຖິງວັນເພັນເຕຄໍສະເຕ ບັນດາພີ່ນ້ອງຜູ້ທີ່ເຊື່ອທັງໝົດໃນທີ່ນັ້ນ ກໍມາເຕົ້າໂຮມກັນຢູ່ບ່ອນດຽວ. ໃນທັນໃດນັ້ນ ກໍເກີດມີສຽງໜຶ່ງດັງມາຈາກຟ້າ ເໝືອນສຽງລົມພະຍຸແຮງກ້າ ດັງກ້ອງສະໜັ່ນທົ່ວເຮືອນທີ່ພວກເພິ່ນນັ່ງຢູ່ນັ້ນ. ມີລີ້ນເປັນຮູບເໝືອນແປວໄຟໄດ້ປາກົດໃຫ້ພວກເພິ່ນເຫັນ ແລະລີ້ນນັ້ນໄດ້ແຕກກະຈາຍອອກໄປຢູ່ເທິງພວກເພິ່ນທຸກຄົນຜູ້ລະລີ້ນ. ທຸກຄົນໃນທີ່ນັ້ນ ຈຶ່ງເຕັມໄປດ້ວຍພຣະວິນຍານບໍຣິສຸດເຈົ້າ ແລະເລີ່ມເວົ້າພາສາຕ່າງໆ ຕາມທີ່ພຣະວິນຍານຊົງໂຜດໃຫ້ພວກເພິ່ນເວົ້າ.

ຂະນະນັ້ນ ນະຄອນເຢຣູຊາເລັມມີຊາວຢິວ ຈາກທຸກໆປະເທດໃນໂລກມາພັກອາໄສຢູ່ ແລະຊາວຢິວເຫຼົ່ານີ້ເປັນຄົນຢຳເກງພຣະເຈົ້າ. ເມື່ອພວກເຂົາໄດ້ຍິນສຽງນີ້ແລ້ວ ກໍມີປະຊາຊົນມາເຕົ້າໂຮມກັນຢ່າງໜາແໜ້ນ ພວກເຂົາທັງໝົດຕ່າງກໍຕື່ນເຕັ້ນປະຫຼາດໃຈ ເພາະໄດ້ຍິນບັນດາຄົນເຫຼົ່ານັ້ນ ເວົ້າພາສາທ້ອງຖິ່ນຂອງຕົນ. ດ້ວຍຄວາມງຶດປະຫລາດໃຈ ພວກເຂົາຈຶ່ງເວົ້າກັນວ່າ, "ຄົນທີ່ເວົ້າກັນຢູ່ນີ້ ເປັນຊາວຄາລີເລທັງໝົດບໍ່ແມ່ນບໍ? ແຕ່ເຫດໃດ ພວກເຮົາທຸກຄົນຈຶ່ງໄດ້ຍິນພວກເຂົາເວົ້າເປັນພາສາບ້ານເກີດເມືອງນອນຂອງພວກເຮົາ? (ກຈ.2:1-8)

ມີບາງລາຍລະອຽດໃນເລື່ອງນີ້ທີ່ເຊື່ອມຕໍ່ກັບພາບລວມຂອງພຣະບັນຍັດບົດທີ 32. ລາຍລະອຽດເຫຼົ່ານີ້ບໍ່ຄ່ອຍຈະແຈ້ງໃນການແປພຣະຄຳພີທີ່ບໍ່ໃຊ້ພາສາກຣີກເດີມ. ຄຳວ່າ"ລົມພະຍຸແຮງກ້າ" ເຊິ່ງອະທິບາຍເຖິງການສະເດັດມາຂອງພຣະວິນຍານບໍລິສຸດເຈົ້າເປັນຄຳອະທິບາຍທີ່ຄຸ້ນເຄີຍຂອງການຊົງສະຖິດຢູ່ຂອງພຣະເຈົ້າໃນພຣະສັນຍາເດີມ (2 ກສ. 2:1,11; ໂຢບ.38:1; 40:6). ຄຳວ່າ"ໄຟ" ຍັງຄຸ້ນເຄີຍໃນຄຳອະທິບາຍເຖິງພຣະເຈົ້າໃນພຣະສັນຍາເດີມ (ອຊກ.1:4; ອຊຢ.6:4,6; ດນອ.7:9; ອພຍ. 3:2;19:18;20:18).

ເປັນທີ່ຈະແຈ້ງແລ້ວວ່າເລື່ອງໃນກິດຈະການບົດທີ 2 ແມ່ນການສື່ສານວ່າພຣະເຈົ້າຊົງສະຖິດຢູ່ໃນເຫດການດັ່ງກ່າວແລະເປັນຜູ້ທີ່ເຮັດໃຫ້ເກີດເຫດການນີ້. ແຜນການຂອງພຣະເຈົ້າແມ່ນເພື່ອເລີ່ມຕົ້ນການຕໍ່ສູ້ທີ່ເໜືອທຳມະຊາດຂອງພຣະອົງເພື່ອຍຶດເອົາປະຊາຊາດຕ່າງໆກັບຄືນມາຈາກພວກລູກຊາຍທີ່ກະບົດຂອງພຣະເຈົ້າ ເຊິ່ງພຣະອົງໄດ້ມອບອຳນາດໃຫ້ປົກຄອງເໜືອປະຊາຊາດ (ພບຍ.19:20; 32:8-9) ຜູ້ປົກຄອງວິນຍານເຫຼົ່ານີ້ຕໍ່ມາໄດ້ກາຍເປັນສັດຕູຂອງພຣະເຈົ້າ (ພສສ. 82).

ແຜນຂອງພຣະເຈົ້າທີ່ຈະຍຶດເອົາປະຊາຊາດກັບຄືນມາແມ່ນໃຊ້ຖ້ອຍຄຳຂອງພວກສາວົກຂອງພຣະອົງ. ນີ້ແມ່ນເຫດຜົນທີ່ວ່າພຣະວິນຍານບໍລິສຸດເຈົ້າມາໃນຮູບແບບຂອງ"ລີ້ນ" ທີ່ເປັນໄຟ. ພຣະເຈົ້າໄດ້ມອບອຳນາດໃຫ້ຄົນຢິວທີ່ຕິດຕາມພຣະເຢຊູແລະອາໄສຢູ່ໃນນະຄອນເຢຣູຊາເລັມເພື່ອເວົ້າກັບຊາວຢິວທີ່ມາຢ້ຽມຢາມນະຄອນນີ້ເພື່ອຮ່ວມເທດສະການວັນເພນເຕຄໍສະເຕ. ຊາວຢິວທີ່ມາຢ້ຽມຢາມໄດ້ອາໄສຢູ່ນອກດິນແດນອິດສະຣາເອນໃນທຸກປະເທດທີ່ຢູ່ພາຍໃຕ້ການຄອບຄອງຂອງອຳນາດເໜືອທຳມະຊາດທີ່ຊົ່ວຮ້າຍ. ເມື່ອຊາວຢິວທີ່ມາຢ້ຽມຢາມໄດ້ຍິນຂ່າວປະເສີດຫຼາຍຄົນກໍເຊື່ອ. ຫຼັງຈາກເທດສະການນັ້ນພວກເຂົາຈະກັບໄປບ້ານເຮືອນຂອງພວກເຂົາໃນປະເທດອື່ນໆແລະຢູ່ທີ່ນັ້ນພວກເຂົາຈະເລີ່ມເລົ່າເລື່ອງພຣະເຢຊູໃຫ້ຄົນອື່ນຟັງ.

## ວັນເພນເຕຄໍສະເຕແລະວິຫານຫໍບາເບນ

ຢູ່ທີ່ວິຫານບາເບນບ່ອນທີ່ກະກະບົດ ພຣະເຈົ້າໄດ້ລົງໂທດມະນຸດໂດຍການປ່ຽນພາສາຂອງພວກເຂົາເຊິ່ງເຮັດໃຫ້ພວກເຂົາກະແຈກກະຈາຍໄປ. ແລະພຣະເຈົ້າຍັງໄດ້ກຳນົດໃຫ້ແຕ່ລະປະເທດຢູ່ພາຍໃຕ້ສິດ

ອຳນາດຂອງສະມາຊິກຂອງສະພາວິນຍານຂອງພຣະອົງ (ພບຍ. 4:19 ;20; 32:8–9). ເບິ່ງຄືວ່າບໍ່ມີການພົວພັນກັນລະຫວ່າງເຫດການນັ້ນແລະເຫດການທີ່ເກີດຂຶ້ນໃນກິດຈະການບົດທີ 2 ແຕ່ໃນພາສາກຣີກດັ້ງເດີມ, ມີການເຊື່ອມຕໍ່ກັນຢ່າງຈະແຈ້ງລະຫວ່າງເຫດການທັງສອງ.

ສອງຄຳສັບທີ່ສຳຄັນໃນກິດຈະການບົດທີ 2 ເຊື່ອມຕໍ່ມັນກັບວິຫານບາເບນ. ຄຳທຳອິດ, ລີ້ນເປັນຮູບເໝືອນແປວໄຟໄດ້ຖືກອະທິບາຍວ່າ "ແບ່ງອອກ". ຄຳທີສອງ, ຜູ້ທີ່ໄດ້ຍິນສຽງແມ່ນຊາວຢິວຈາກທຸກປະເທດແລະພວກເຂົາ "ສັບສົນ." ນັ້ນອາດເບິ່ງຄືວ່າບໍ່ໜ້າເຊື່ອຖືໃນການແປພາສາຂອງທ່ານ. ແຕ່ທ່ານລູກາກຳລັງຂຽນເປັນພາສາກຣີກ. ຄຳສັບພາສາກຣີກທີ່ເພິ່ນໃຊ້ແປເປັນ "ແບ່ງແຍກ" ແລະ" ສັບສົນ" ແມ່ນມາຈາກປະຖົມມະການ 11:7 ແລະພຣະບັນຍັດສອງ32:8. ທັງສອງຂໍ້ພຣະສັນຍາເດີມເຫຼົ່ານີ້ພັນລະນາເຖິງພາສາທີ່ຖືກແບ່ງອອກແລະມະນຸດກໍເລີ່ມ "ສັບສົນ".

ລູກາ, ຜູ້ຂຽນພຣະທຳກິດຈະການເປັນຄົນຕ່າງຊາດ. ເພິ່ນສາມາດອ່ານແຕ່ພາສາກຣີກເທົ່ານັ້ນ. ເມື່ອລູກາອ່ານພຣະສັນຍາເດີມ, ເພິ່ນໄດ້ໃຊ້ສະບັບແປເປັນພາສາກຣີກ. ພຣະສັນຍາເດີມໄດ້ແປເປັນພາສາກຣີກຖືກຕັ້ງຊື່ວ່າ ເຊັບຕົວຈິ້ນ "The Septuagint". ເຊັບຕົວຈິ້ນ ແມ່ນພຣະຄຳພີໃຊ້ໂດຍຄຣິສຕຽນຍຸກທຳອິດເພາະວ່າສ່ວນຫຼາຍອ່ານພາສາເຮັບເຣີບໍ່ໄດ້. ລູກາກຳລັງຄິດເຖິງການກະບົດທີ່ວິຫານບາເບນແນ່ນອນເມື່ອເພິ່ນຂຽນພຣະທຳກິດຈະການບົດທີ 2.

ແຕ່ເປັນຫຍັງເພິ່ນຈຶ່ງຢາກສ້າງການເຊື່ອມຕໍ່ນີ້? ລອງຄິດກ່ຽວກັບສິ່ງທີ່ເກີດຂຶ້ນໃນວັນເພນເຕຄໍສະເຕ. ພຣະວິນຍານໄດ້ມາໃນລັກສະນະດຽວກັນກັບທີ່ພຣະເຈົ້າມັກຈະສະເດັດມາໃນພຣະສັນຍາເດີມ. ພຣະເຈົ້າໄດ້ມາພ້ອມດ້ວຍລົມແຮງແລະໄຟລຸກ. ຄວາມສັບສົນລະຫວ່າງປະເທດຕ່າງໆທີ່ເກີດຈາກພາສາແຕກຕ່າງກັນຖືກລຶບອອກໄປເມື່ອພວກສາວົກໄດ້ຮັບລີ້ນເປັນຮູບເໝືອນແປວໄຟ. ພວກສາວົກໄດ້ຮັບການຊ່ວຍເຫຼືອໃນການເວົ້າພາສາຂອງຄົນຈາກທຸກປະຊາຊາດທີ່ມາເຕົ້າໂຮມກັນໃນນະຄອນເຢຣູຊາເລັມໃນພາສາຕ່າງໆໃນທັນທີ. ສາມພັນຄົນໄດ້ເຊື່ອຂ່າວປະເສີດຂອງພຣະເຢຊູໃນມື້ນັ້ນ (ກຈ. 2:41).

ຜູ້ທີ່ເຊື່ອໃໝ່ເຫຼົ່ານີ້, ເຊິ່ງຕອນນີ້ເຊື່ອວ່າພຣະເຢຊູເປັນພຣະເມຊີອາ, ຈະນຳເອົາຂ່າວສານນັ້ນກັບໄປທີ່ບ້ານເກີດເມືອງນອນຂອງພວກເຂົາ. ບ້ານເຮືອນຂອງພວກເຂົາຢູ່ໃນບັນດາປະເທດຕ່າງໆທີ່ໄດ້ກະແຈກກະຈາຍຕອນວິຫານບາເບນ. ໃນການກະບົດຢູ່ທີ່ວິຫານບາເບນ (ປຖກ.11), ພຣະເຈົ້າໄດ້ປະຖິ້ມປະຊາຊາດຕ່າງໆ. ແຕ່ສິ່ງຕໍ່ມາທີ່ພຣະເຈົ້າໄດ້ເຮັດ (ປຖກ.12) ແມ່ນການເອີ້ນອັບຣາຮາມໃຫ້ເປັນບິດາຂອງຊົນຊາດໃໝ່ຂອງພຣະເຈົ້ານັ້ນຄືຊົນຊາດອິດສະຣາເອນ. ໃນວັນເພນເຕຄໍສະເຕພຣະເຈົ້າໄດ້ເລີ່ມຕົ້ນເຕົ້າໂຮມຜູ້ຄົນໂດຍກົງຈາກປະຊາຊາດຕ່າງໆເຫຼົ່ານັ້ນແລະນຳພວກເຂົາກັບມາຢູ່ໃນຄອບຄົວຂອງພຣະອົງ. ຄົນຕ່າງຊາດຜູ້ໃດທີ່ເຊື່ອສາມາດເຂົ້າຮ່ວມກັບຜູ້ທີ່ເຊື່ອຊາວຢິວຜູ້ທີ່ສືບເຊື້ອສາຍຊີວະພາບຈາກອັບຣາຮາມ. ໃນເວ

ລາຕໍ່ມາ, ລາຊະອານາຈັກຂອງພຣະເຈົ້າຈະແຜ່ຂະຫຍາຍໄປສູ່ປະຊາຊາດທັງໝົດທີ່ຢູ່ພາຍໃຕ້ການປົກຄອງຂອງພວກສັດຕູທີ່ເໜືອທຳມະຊາດ.

ການເຊື່ອມຕໍ່ທີ່ໜ້າອັດສະຈັນອີກອັນໜຶ່ງແມ່ນບັນຊີລາຍຊື່ຂອງປະເທດຕ່າງໆໃນກິດຈະການບົດທີ 2 ແລະ ລຳດັບທີ່ຖືກກ່າວໄວ້. ຖ້າທ່ານເບິ່ງແຜນທີ່, ທ່ານຈະເຫັນລຳດັບເລີ່ມຕົ້ນຈາກປະເທດຕ່າງໆໃນພາກຕາເວັນອອກ. ນີ້ແມ່ນສະຖານທີ່ທີ່ຊາວຢິວໄດ້ຖືກສົ່ງໄປເປັນຊະເລີຍໃນຕອນທ້າຍຂອງພຣະສັນຍາເດີມ. ປະເທດຕ່າງໆຢູ່ທີ່ນັ້ນເອີ້ນວ່າບາບີໂລນແລະຕໍ່ມາແມ່ນເປີເຊຍ. ຈາກລຳດັບຂອງບັນດາປະເທດໃນບັນຊີລາຍຊື່ແລ້ວເລື່ອນໄປທາງທິດຕາເວັນຕົກໃນແຜນທີ່ໄປສູ່ປະເທດທີ່ໄກທີ່ສຸດທີ່ຮູ້ກັນໃນເວລານັ້ນ. ປະເທດທີ່ມີລາຍຊື່ໃນກິດຈະການບົດທີ 2 ກວມເອົາສະຖານທີ່ດຽວກັນໃນແຜນທີ່ຄືກັບປະເທດຕ່າງໆທີ່ລະບຸໄວ້ໃນປະຖົມມະການບົດທີ 10. ປະເທດເຫຼົ່ານີ້ແມ່ນປະເທດດຽວກັນທີ່ພຣະເຈົ້າໄດ້ກຳນົດໄວ້ພາຍໃຕ້ສະມາຊິກສະພາເໜືອທຳມະຊາດຂອງພຣະອົງເຊິ່ງຕໍ່ມາໄດ້ກະບົດ.

# ພວກເຮົາບໍ່ໄດ້ຕໍ່ສູ້ກັບເນື້ອໜັງແລະເລືອດ

ພຣະທຳກິດຈະການສ່ວນໃຫຍ່ແມ່ນກ່ຽວກັບການເດີນທາງໄປເຜີຍແຜ່ຂອງໂປໂລ. ໂປໂລເປັນອັກຄະສາວົກສຳລັບຄົນຕ່າງຊາດ. “ອັກຄະສາວົກ” ໝາຍເຖິງຜູ້ທີ່ຖືກສົ່ງໄປເພື່ອຈຸດປະສົງເປົ້າໝາຍ. ພຣະເຈົ້າໄດ້ສົ່ງໂປໂລໄປບອກຂ່າວປະເສີດແກ່ຜູ້ຄົນໃນປະເທດຕ່າງໆຢູ່ນອກອິດສະຣາເອນ. ການເດີນທາງຂອງໂປໂລແລະສິ່ງທີ່ເກີດຂຶ້ນກັບເພິ່ນມັກພາເພິ່ນໄປໄກຂຶ້ນແລະໄກອອກໄປທາງທິດຕາເວັນຕົກ. ຕົວຢ່າງໜຶ່ງແມ່ນຕອນທີ່ເພິ່ນຖືກຊາວໂຣມັນຈັບໂຕແລະຖືກສົ່ງຈາກເຢຣູຊາເລັມໄປທິດຕາເວັນຕົກຄືປະເທດອີຕາລີ.

ໂປໂລໄດ້ຂຽນຈົດໝາຍບາງສະບັບເຖິງຄຣິສະຕຽນແລະໄດ້ກາຍມາເປັນສ່ວນໜຶ່ງຂອງພຣະສັນຍາໃໝ່. ໂປໂລເວົ້າເລື້ອຍໆກ່ຽວກັບຜູ້ປົກຄອງສັດຕູຝ່າຍວິນຍານທີ່ຕໍ່ຕ້ານວຽກງານຂອງເພິ່ນແລະການເຜີຍແຜ່ຂ່າວປະເສີດ. ໂປໂລໄດ້ໃຊ້ຂໍ້ກຳນົດສະເພາະເຈາະຈົງເພື່ອອະທິບາຍເຖິງບັນດາຜູ້ປົກຄອງເໜືອທຳມະຊາດທີ່ຊົ່ວຮ້າຍເຊິ່ງມີປະເທດຕ່າງໆທີ່ໂປໂລກຳລັງເຂົ້າໄປ. ໂປໂລເຂົ້າໃຈວ່າເພິ່ນກຳລັງເຮັດອັນຕະລາຍຕໍ່ອານາຈັກຊົ່ວຮ້າຍເຫຼົ່ານີ້, ແຕ່ສິ່ງທີ່ພຣະເຈົ້າໄດ້ກະທຳໃນວັນເພນເຕຄໍສະເຕໄດ້ເລີ່ມຕົ້ນພາລະກິດເພື່ອຍຶດເອົາປະເທດເຫຼົ່ານີ້ຄືນມາ. ທ່ານສັງເກດເຫັນຄວາມໝາຍທົ່ວໄປຂອງຄຳສັບທັງໝົດທີ່ໂປໂລໃຊ້ສຳລັບກຳລັງຂອງຄວາມມືດທີ່ເບິ່ງບໍ່ເຫັນບໍ?

- ບັນດາຜູ້ປົກຄອງ /ບັນດາວິນຍານທີ່ຄອບຄອງ (ອຟຊ. 1: 20–21; 6:12; ກລຊ.2:15)
- ຜູ້ມີອຳນາດ (ອຟຊ. 1: 20–21; 3:10; 6:12; ກລຊ. 2:15; 1ກຣທ 2: 6)
- ຜູ້ມີຣິດເດດ (ອຟຊ.1:20–21; 3:10)
- ບັນດາຜູ້ຄອບຄອງ (ກລຊ. 1:16)

- ເທບພະເຈົ້າ (ອຟຊ.1:20–21; 1ກລຊ.8:5)
- ພຣະທີ່ນັ່ງ (ກລຊ.1:16)

ຄໍາສັບທັງໝົດເຫຼົ່ານີ້ໝາຍຄວາມວ່າ: ມີສິດອໍານາດເໜືອດິນແດນໜຶ່ງສ່ວນ. ຄໍາສັບດຽວກັນນີ້ຖືກນໍາໃຊ້ໃນພຣະສັນຍາໃໝ່ ແລະວັນນະຄະດີອື່ນໆຂອງກຣີກກ່ຽວກັບຜູ້ປົກຄອງທາງການເມືອງຂອງມະນຸດ. ພາສາຂອງໂປໂລແມ່ນກ່ຽວກັບສິດອໍານາດໃນຂົງເຂດໃດໜຶ່ງ. ການຂຽນຂອງໂປໂລມີທັດສະນະທີ່ເໜືອທໍາມະຊາດຄືກັນກັບພຣະສັນຍາເດີມ. ທັງໂປໂລແລະພຣະສັນຍາເດີມໄດ້ພັນລະນາວ່າອານາຈັກເໜືອທໍາມະຊາດກ່ຽວຂ້ອງກັບໂລກມະນຸດແນວໃດ. ບັນດາປະເທດທີ່ພຣະເຈົ້າລົງໂທດແມ່ນຢູ່ພາຍໃຕ້ສິດອໍານາດຂອງວິນຍານທີ່ເປັນສັດຕູຕໍ່ພຣະເຈົ້າແລະຕໍ່ຜູ້ທີ່ຕິດຕາມພຣະເຈົ້າ.

## " ຂ້ອຍຈະໄປປະເທດສະເປນ"

ພຣະທໍາກິດຈະການຈົບລົງດ້ວຍການເດີນທາງຂອງໂປໂລໄປກຸງໂຣມ. ໂປໂລເຄີຍເປັນນັກໂທດ, ແລະເພິ່ນຖືກນໍາຕົວໄປກຸງໂຣມດ້ວຍເຫດຜົນສອງຢ່າງຄື: ໜຶ່ງເພື່ອຍື່ນອຸທອນຄະດີສານຂອງເພິ່ນສານຕໍ່ຈັກກະພັດຊີຊາແລະສອງເພື່ອເຜີຍແຜ່ຂ່າວປະເສີດ. ໂປໂລຮູ້ວ່າການທີ່ຈະກອບກູ້ປະເທດຕ່າງໆທີ່ຢູ່ພາຍໃຕ້ວິນຍານຂອງສັດຕູຄືນມາ, ເພິ່ນຕ້ອງໄດ້ເຜີຍແຜ່ຂ່າວປະເສີດອອກສູ່ພາກຕາເວັນຕົກສຽງເໜືອຂອງໂລກ. ໃນສະໄໝພຣະສັນຍາເດີມ, ສະຖານທີ່ດັ່ງກ່າວໄດ້ຖືກເອີ້ນວ່າ ຕາກຊິດ. ແຕ່ໃນສະໄໝຂອງໂປໂລຖືກເອີ້ນວ່າສະເປນຄືກັບສະໄໝນີ້. ໂປໂລຢາກໄປປະເທດສະເປນເພື່ອເຮັດພັນທະກິດຂອງເພິ່ນໃຫ້ສໍາເລັດ. ໂປໂລຂຽນຈົດໝາຍເຖິງຜູ້ທີ່ເຊື່ອໃນກຸງໂຣມກ່ອນທີ່ເພິ່ນຈະຖືກຂັງ. ເພິ່ນກ່າວວ່າເພິ່ນມີຈຸດປະສົງຈະໄປປະເທດສະເປນ. ເພິ່ນກໍາລັງຈະໄປທາງທິດຕາເວັນຕົກໄກທີ່ສຸດເທົ່າທີ່ເພິ່ນຄິດວ່າແຜ່ນດິນໂລກຈະໄປເຖິງ. ໂປໂລຕ້ອງການທີ່ຈະກອບກູ້ທຸກໆຊາດໃຫ້ແກ່ພຣະເຢຊູເຈົ້າ:

> ເຮົາຈຶ່ງຫວັງທີ່ຈະໄດ້ມາຢ້ຽມຢາມພວກເຈົ້າ ໃນຂະນະທີ່ເຮົາເດີນທາງໄປປະເທດສະເປນນັ້ນ ຫລັງຈາກຢູ່ຢ້ຽມຢາມຖາມຂ່າວພວກເຈົ້າຢ່າງສົດຊື່ນເບີກບານໃຈຊົ່ວຄາວແລ້ວ …ດັ່ງນັ້ນ ເມື່ອເຮົາສໍາເລັດການມອບການຖວາຍນີ້ໃຫ້ແກ່ພວກເຂົາແລ້ວ ເຮົາກໍຈະໄປປະເທດສະເປນ ໂດຍຜ່ານເຂດທີ່ພວກເຈົ້າຢູ່ນັ້ນ. (ຣມ.15.24,28)

ໂປໂລໄດ້ຮັບການກະຕຸ້ນເພາະວ່າເພິ່ນເຂົ້າໃຈວ່າແຜນການຂອງພຣະເຈົ້າທີ່ຈະຟື້ນຟູອານາຈັກຂອງພຣະອົງຢູ່ທົ່ວທຸກແຫ່ງໄດ້ເລີ່ມຕົ້ນໃນຊ່ວງຊີວິດຂອງໂປໂລ. ໂປໂລເຊື່ອວ່າເມື່ອ" ຄົນຕ່າງຊາດຈະມາຄົບຈໍານວນໃນການກັບຄືນມາຫາພຣະເຈົ້າ." ແລ້ວ "ພວກອິດສະຣາເອນທັງໝົດ ກໍຈະຖືກຊ່ວຍໃຫ້ພົ້ນ " (ຣມ11:25–26). ໂປໂລຄິດວ່າເພິ່ນມີຄວາມຕັ້ງໃຈຈະເຮັດສິ່ງທີ່ວັນເພນເຕຄໍສະເຕໄດ້ເລີ່ມຕົ້ນໃຫ້ສໍາເລັດ.

## ສາເຫດທີ່ເລື່ອງນີ້ສຳຄັນ

ໂປໂລມີທັດສະນະທີ່ເໜືອທຳມະຊາດກ່ຽວກັບຊີວິດຂອງເພິ່ນເອງ. ເພິ່ນເຫັນວ່າຕົວເອງເປັນເຄື່ອງມືທີ່ພຣະເຈົ້າໃຊ້ ແລະເພິ່ນກໍ່ເປັນແທ້. ແຕ່ກ່ອນໜ້າໂປໂລ, ບັນດາຜູ້ທີ່ເຊື່ອໃໝ່ທຸກຄົນຕັ້ງແຕ່ຊ່ວງເວລາວັນເພນເຕຄໍສະເຕກໍ່ເຊັ່ນກັນ. ພວກເຂົາທັງໝົດໄດ້ອອກຈາກເຢຣູຊາເລັມກັບເມືອບ້ານເກີດເມືອງນອນ ເພື່ອບຸກໂຈມຕີບັນດາອານາຈັກຊົ່ວຮ້າຍເໜືອທຳມະຊາດໂດຍຂ່າວປະເສີດຂອງພຣະເຈົ້າ.

ແລະພວກເຮົາຄວນຈະເປັນຄົນປະເພດດຽວກັນ.

ຖ້າຫາກພວກເຮົາເປັນເຄື່ອງມືໃຫ້ພຣະເຈົ້າທີ່ຈະໃຊ້ໃນແບບດຽວກັບໂປໂລ, ເປັນຫຍັງໂປໂລຈຶ່ງມີປະສິດຕິພາບສູງແລະມີອິດທິພົນຫຼາຍກວ່າພວກເຮົາ? ຄວາມແຕກຕ່າງຢ່າງໜຶ່ງຄືໂປໂລເຂົ້າໃຈວ່າຊີວິດຂອງເພິ່ນແມ່ນກ່ຽວກັບຫຍັງ. ເພິ່ນເຊື່ອວ່າອຳນາດຊົ່ວຮ້າຍທີ່ມີອຳນາດເໜືອແຜ່ນດິນໂລກແມ່ນມີແທ້ຈິງ. ແຕ່ເພິ່ນຍັງຮູ້ອີກວ່າອຳນາດທີ່ສະໜັບສະໜູນເພິ່ນແລະພາຍໃນຕົວເພິ່ນແມ່ນໃຫຍ່ກວ່າ.

ທ່ານເຊື່ອວ່າສິ່ງເຫຼົ່ານັ້ນແມ່ນຄວາມຈິງຂອງທ່ານບໍ? ພຣະຄຳພີຖືວ່ານີ້ແມ່ນຄວາມຈິງສຳລັບທ່ານ. ແລະນັ້ນແມ່ນວິທີທີ່ໂປໂລເຂົ້າໃຈພວກເຂົາໃນຊີວິດຂອງເພິ່ນເອງ.

ໂປໂລບໍ່ຮູ້ວ່າໂລກກວ້າງໃຫຍ່ປານໃດ. ເພິ່ນບໍ່ຮູ້ກ່ຽວກັບອາເມລິກາເໜືອ, ອາເມລິກາໃຕ້, ຈີນ, ອິນເດຍ, ນໍເວ, ອົດສະຕາລີ, ໄອສແລນ, ແລະອີກຫຼາຍໆສະຖານທີ່. ແຕ່ພຣະເຈົ້າຊົງຮູ້ແລ້ວ. ພຣະເຈົ້າຮູ້ວ່າວຽກງານຂອງການປະກາດເຜີຍແຜ່ຂ່າວປະເສີດໄປທົ່ວໂລກຈະຍິ່ງໃຫຍ່ກວ່າທີ່ໂປໂລສາມາດເຮັດໄດ້ສຳເລັດ. ພຣະເຈົ້າຮູ້ວ່າຄົນອື່ນຈະຕ້ອງປະຕິບັດຕາມເປົ້າໝາຍດຽວກັນກັບໂປໂລຖ້າຫາກວ່າຂ່າວປະເສີດຈະໄປທົ່ວທຸກສ່ວນຂອງແຜ່ນດິນໂລກ. ຖ້າພວກເຮົາບໍ່ໄດ້ພະຍາຍາມຢ່າງຈິງຈັງເພື່ອເຮັດວຽກນີ້ໃຫ້ສຳເລັດນັ້ນກໍສະແດງວ່າພວກເຮົາກໍ່ບໍ່ໄດ້ເຮັດຕາມແຜນຂອງພຣະເຈົ້າສຳລັບພວກເຮົາ. ຖ້າພວກເຮົາຕ້ອງການພຣະເຈົ້າເພື່ອໃຫ້ພຣະອົງຈະຕອບສະໜອງຄວາມຕ້ອງການຂອງຕົນເທົ່ານັ້ນ, ພວກເຮົາກໍ່ເປັນຄືກັບຄົນທີ່ຢູ່ວິຫານບາເບນຫຼາຍກວ່າທີ່ພວກເຮົາຈະເປັນຄືກັບພຣະເຢຊູເຈົ້າ, ສາວົກສິບສອງ, ແລະໂປໂລ.

ສິ່ງທີ່ຂ້າພະເຈົ້າຂຽນໃນບົດນີ້ກໍໝາຍເຖິງພຣະຄຳພີສອນພວກເຮົາວ່າຜູ້ປົກຄອງເໜືອທຳມະຊາດທີ່ຊົ່ວຮ້າຍຄວບຄຸມຫຼາຍໆພື້ນທີ່ໃນໂລກນີ້. ພວກເຮົາບໍ່ຮູ້ວ່າສະຖານທີ່ເຫຼົ່ານັ້ນຢູ່ໃສແລະບ່ອນທີ່ເຂດແດນຂອງພວກເຂົາຢຸດຢູ່ບ່ອນໃດ. ພວກເຮົາບໍ່ໄດ້ຮູ້ວ່າວິນຍານຊົ່ວໂຕໃດມີອຳນາດຫຼາຍທີ່ສຸດແລະຜູ້ໃດທີ່ມີອຳນາດຕໍ່າລົງມາ. ສິ່ງທີ່ພວກເຮົາຮູ້ແມ່ນອຳນາດຊົ່ວຮ້າຍທີ່ເບິ່ງບໍ່ເຫັນເຊື່ອວ່າແຜ່ນດິນໂລກແມ່ນອານາຈັກຂອງພວກເຂົາ. ພວກເຮົາໄດ້ຮັບແຈ້ງວ່າອຳນາດເຫຼົ່ານັ້ນຕໍ່ສູ້ກັບອານາຈັກຂອງພຣະເຈົ້າແລະບໍ່ຕ້ອງການໃຫ້ມະນຸດທີ່ຕົກຢູ່ໃຕ້ອຳນາດຂອງພວກເຂົາ ກາຍເປັນສ່ວນໜຶ່ງຂອງແຜນການຂອງພຣະເຈົ້າທີ່ຈະເຜີຍແຜ່

ອານາຈັກທີ່ດີຂອງພຣະອົງຢູ່ທົ່ວທຸກແຫ່ງ. ນັ້ນໝາຍຄວາມວ່າພວກເຮົາຄວນຖືວ່າເປັນການຕໍ່ຕ້ານທີ່ພວກເຮົາບໍ່ສາມາດອະທິບາຍດ້ວຍເຫດຜົນຫຼືຄວາມຈິງຝ່າຍວັດຖຸໄດ້. ພວກເຮົາບໍ່ສາມາດເອົາຊະນະພວກວິນຍານຊົ່ວຮ້າຍດ້ວຍຕົນເອງ. ພຣະເຈົ້າໄດ້ປະທານພຣະວິນຍານບໍລິສຸດເຈົ້າໃຫ້ແກ່ພວກເຮົາແລະວິນຍານທີ່ສັດຊື່ອື່ນໆເພື່ອຊ່ວຍໃຫ້ພວກເຮົາຕາມແຜນການຂອງພຣະອົງສຳເລັດ (1 ກຣທ.3:16; 6:19; ຮຮ. 1:13; 1ຢຮ.4:4).

ຄຳຖາມທີ່ສຳຄັນທີ່ສຸດທີ່ຕ້ອງຖາມຕົວເອງແມ່ນສິ່ງນີ້: ຊີວິດຂອງພວກເຮົາຈະເປັນແນວໃດຖ້າພວກເຮົາຕື່ນຂຶ້ນໃນແຕ່ລະມື້ດ້ວຍທັດສະນະຕໍ່ໂລກແລະອິດທິພົນເໜືອທຳມະຊາດທີ່ຄ້າຍຄືກັບຂອງໂປໂລ? ຈະເປັນແນວໃດຖ້າໃນແຕ່ລະມື້, ຊີວິດຂອງພວກເຮົາໄດ້ຖືກຈັດລະບຽບສະຖານະພາບຂອງພວກເຮົາໃນຖານະເປັນສະມາຊິກໃນຄອບຄົວຂອງພຣະເຈົ້າ? ຈະເປັນແນວໃດຖ້າໃນແຕ່ລະມື້ທີ່ພວກເຮົາຈື່ຈຳວ່າວຽກຂອງພວກເຮົາແມ່ນເພື່ອບອກຄົນອື່ນວ່າພວກເຂົາສາມາດຮັບການປົດປ່ອຍຈາກການເປັນຂ້າທາດຂອງອຳນາດມືດໄດ້ແນວໃດ?

ຈະເປັນແນວໃດຖ້າວ່າພວກເຮົາດຳເນີນຊີວິດດ້ວຍຄວາມຕັ້ງໃຈ, ໂດຍຮູ້ວ່າແຕ່ລະການຕັດສິນໃຈຂອງພວກເຮົາແລະແຕ່ລະຄຳເວົ້າທີ່ພວກເຮົາເວົ້າສາມາດມີຈຸດປະສົງເປົ້າໝາຍທີ່ເໜືອທຳມະຊາດໄດ້ ? ຈະເປັນແນວໃດ ຖ້າພວກເຮົາເຊື່ອວ່າບັນດາສິ່ງມີຊີວິດທີ່ເຮົາເບິ່ງບໍ່ເຫັນຢູ່ອ້ອມຕົວເຮົາໃຊ້ການຕັດສິນໃຈ, ການກະທຳ,ແລະຄຳເວົ້າຂອງເຮົາເພື່ອຊັກຈູງຄົນອື່ນໃຫ້ດີຫຼືຊົ່ວໄດ້. ສິ່ງນີ້ເກີດຂຶ້ນບໍ່ວ່າພວກເຮົາຈະເຫັນພວກເຂົາຫຼືບໍ່ ຫຼືພວກເຮົາຮູ້ເລື່ອງນີ້ຫຼືບໍ່. ອາຊີບ,ລາຍໄດ້, ພອນສະຫວັນຂອງພວກເຮົາ, ແມ່ນແຕ່ບັນຫາຂອງພວກເຮົາກໍບໍ່ສຳຄັນຖ້າພວກເຮົາຮູ້ວ່າພວກເຮົາເປັນຄອບຄົວຂອງພຣະເຈົ້າແທ້ໆ. ສິ່ງອື່ນໆເຫຼົ່ານັ້ນບໍ່ສຳຄັນຖ້າພວກເຮົາເຂົ້າໃຈວ່າ ພຣະເຈົ້າກຳລັງປ່ຽນພວກເຮົາໄປສູ່ສິ່ງທີ່ດີກວ່າ. ສິ່ງເຫຼົ່ານັ້ນບໍ່ສຳຄັນເມື່ອພວກເຮົາເຂົ້າໃຈວ່າເປັນຫຍັງພວກເຮົາຈຶ່ງມາຢູ່ເທິງໂລກນີ້. ພວກເຮົາບໍ່ສາມາດເບິ່ງເຫັນອານາຈັກເໜືອທຳມະຊາດໄດ້. ຄືກັນກັບພວກເຮົາບໍ່ສາມາດເຫັນອານາຈັກຂອງເຊື້ອພະຍາດຫຼືໄວຣັດໄດ້ຫາກບໍ່ໃຊ້ກ້ອງຈຸລະທັດ. ແຕ່ມັນທັງສອງມີຜົນກະທົບຕໍ່ພວກເຮົາແລະພວກເຮົາບໍ່ສາມາດຕັດຂາດຈາກພວກມັນໄດ້.

ບັນດາຜູ້ທີ່ເຊື່ອໃນຍຸກທຳອິດໄດ້ເຂົ້າໃຈເຖິງຄວາມສຳພັນຂອງພວກເຂົາກັບອານາຈັກເໜືອທຳມະຊາດ. ດັ່ງທີ່ພວກເຮົາຈະເຫັນໃນບົດຕໍ່ໄປ, ພວກເຂົາເຊື່ອວ່າໂລກທີ່ຢູ່ອ້ອມຮອບພວກເຂົາຕົກເປັນທາດຂອງຄວາມມືດເຊິ່ງມື້ໜຶ່ງຈະຖືກທຳລາຍ. ເຖິງແມ່ນວ່າພວກເຂົາເຈົ້າຢູ່ໃນການສູ້ຮົບທີ່ເໜືອທຳມະຊາດກັບປະຊາຊົນທີ່ເປັນສັດຕູຜູ້ທີ່ເປັນທາດຂອງອຳນາດຊົ່ວຮ້າຍເໜືອທຳມະຊາດ, ພວກເຂົາກໍໄດ້ເຜີຍແຜ່ຂ່າວປະເສີດໄປທົ່ວໂລກຢ່າງງຽບໆ. ດຽວນີ້ມີຜູ້ຄົນທີ່ຕິດຕາມພຣະເຢຊູເຈົ້າ, ຮັກພຣະເຈົ້າແລະເຮັດວຽກກັບທີມງານວິນຍານທີ່ຊື່ສັດຂອງພຣະອົງ. ພວກເຂົາເຊື່ອວ່າສົງຄາມຝ່າຍວິນຍານແມ່ນເລື່ອງຈິງແລະໃນທີ່ສຸດພວກເຂົາກໍ່ບໍ່ສາມາດພ່າຍແພ້ໄດ້. ພວກເຮົາກຳລັງພິສູດວ່າພວກເຂົາເຈົ້າບໍ່ໄດ້ພ່າຍແພ້ການສູ້ຮົບ.

# ບົດທີ 14

# ບໍ່ແມ່ນຂອງໂລກນີ້

**ກ່**ອນທີ່ພຣະເຢຊູຈະຖືກຈັບພຣະອົງຢູ່ໃນສວນເຄັດເຊມາເນແລະກຳລັງອະທິຖານ. ໃນຄຳອະທິຖານຂອງພຣະອົງ, ພຣະອົງໄດ້ກ່າວກ່ຽວກັບສາວົກພຣະອົງ,“ ພວກເຂົາບໍ່ເປັນຂອງໂລກ ເໝືອນດັ່ງຂ້ານ້ອຍບໍ່ເປັນຂອງໂລກ” (ຢຮ.17:16). ບັນດາຜູ້ທີ່ເຊື່ອຢູ່ໃນໂລກແນ່ນອນ, ແລະພຣະເຈົ້າຊົງມອບໝາຍໜ້າທີ່ພິເສດໃຫ້ແກ່ພວກເຂົານັ້ນຄືໃຫ້ພວກເຂົານຳຂ່າວປະເສີດໄປສູ່ທຸກໆຊົນຊາດ (ມທ. 28:19–20). ແຕ່ພຣະເຢຊູໄດ້ກ່າວວ່າພວກເຂົາບໍ່ແມ່ນຂອງໂລກ. ແນວຄວາມຄິດຂອງການຢູ່ໃນໂລກນີ້ແຕ່ບໍ່ເປັນຂອງໂລກນີ້ ໄດ້ຮັບການຖ່າຍທອດໄປສູ່ຄຣິສຕຽນຍຸກທຳອິດດ້ວຍວິທີທີ່ໜ້າຈື່ຈຳຫຼາຍຢ່າງ.

## ສະຖານທີ່ສັກສິດ,ພື້ນທີ່ບໍລິສຸດ,ແລະການສະຖິດຢູ່ຂອງພຣະເຈົ້າ

ໃນບົດທີ 8, ຂ້າພະເຈົ້າໄດ້ຂຽນກ່ຽວກັບແນວຄວາມຄິດຂອງສະຖານທີ່ສັກສິດ. ສຳລັບຄົນອິດສະຣາເອນໃນພຣະສັນຍາເດີມ, ພຣະເຈົ້າຊົງເປັນເອກະລັກພິເສດບໍ່ຄືໃຜ. ສະຖານທີ່ທີ່ພຣະອົງສະຖິດຢູ່ນັ້ນຖືກສ້າງຂຶ້ນມາເປັນເອກະລັກພິເສດຈາກສະຖານທີ່ອື່ນໆ. ນັ້ນບໍ່ໄດ້ໝາຍຄວາມວ່າພຣະເຈົ້າຊົງຢູ່ບ່ອນດຽວ. ພຣະເຈົ້າຢູ່ໃນທຸກສະຖານທີ່ຕະຫຼອດເວລາ. ແຕ່ພຣະເຈົ້າໄດ້ເລືອກສະຖານທີ່ໜຶ່ງເພື່ອພຣະອົງຈະພົບກັບປະຊາຊົນຂອງພຣະອົງແລະດັ່ງນັ້ນສະຖານທີ່ດັ່ງກ່າວຈຶ່ງພິເສດກວ່າບ່ອນອື່ນໆ. ການກຳນົດສະຖານທີ່ທີ່ພິເສດທີ່ຈະພົບກັບພຣະເຈົ້າແມ່ນໜຶ່ງໃນຈຸດປະສົງສຳລັບການກໍ່ສ້າງຫໍເຕັນທີ່ເຄື່ອນຍ້າຍໄດ້ ແລະຕໍ່ມາກໍ່ສ້າງເປັນພຣະວິຫານ. ແນວຄິດພື້ນທີ່ອັນສັກສິດນີ້ແມ່ນເຫດຜົນໜຶ່ງສຳລັບກົດບັນຍັດແລະພິທີກຳຕ່າງໆຂອງຊາດອິດສະຣາເອນ, ແຕ່ມັນຍັງໄດ້ສອນແນວຄິດທີ່ວ່າບັນດາຜູ້ປົກຄອງເໜືອທຳມະຊາດມີສິດອຳນາດເໜືອຜືນແຜ່ນດິນຂອງທຸກໆປະເທດ. ແຜ່ນດິນອິດສະຣາເອນແມ່ນຢູ່ພາຍໃຕ້ອຳນາດຂອງພຣະເຈົ້າອົງສູງສຸດ, ແລະປະເທດອື່ນໆທັງໝົດມີບັນດາຜູ້ປົກຄອງເໜືອທຳມະຊາດທີ່ມີສິດອຳນາດເໜືອພວກເຂົາ.

ໃນສະຖານທີ່ທີ່ຜູ້ເຊື່ອມາເຕົ້າໂຮມກັນກໍ່ຄືກັນ ໃນຈົດໝາຍເຖິງຜູ້ທີ່ເຊື່ອໃນເມືອງໂກຣິນໂທ, ໂປໂລໄດ້ບອກກຸ່ມນັ້ນວ່າ,“ ພວກເຈົ້າເປັນວິຫານຂອງພຣະເຈົ້າ” (1 ກຣທ. 3:16). ເພິ່ນບອກຜູ້ທີ່ເຊື່ອໃນເມືອງເອເຟໂຊວ່າພວກເຂົາເຈົ້າເປັນ“ ສະມາຊິກໃນຄອບຄົວຂອງພຣະເຈົ້າ…ເປັນວິຫານທີ່ສັກສິດໃນອົງພຣະຜູ້

ເປັນເຈົ້າ. ໃນພຣະອົງນັ້ນ ພວກເຈົ້າກຳລັງຖືກກໍ່ຂຶ້ນໃຫ້ເປັນທີ່ສະຖິດຂອງພຣະເຈົ້າ ໂດຍພຣະວິນຍານເໝືອນກັນ." (ອຟຊ. 2:19, 21–22).

ຄວາມໝາຍແມ່ນເປັນຕາຕົກໃຈແທ້. ທ່ານອາດຈະຈື່ໄດ້ວ່າພຣະເຢຊູໄດ້ກ່າວວ່າ," ດ້ວຍວ່າ, ມີສອງຫລືສາມຄົນມາຮ່ວມປະຊຸມກັນໃນນາມຂອງເຮົາຢູ່ບ່ອນໃດ ເຮົາກໍຢູ່ທ່າມກາງພວກເຂົາໃນບ່ອນນັ້ນແຫຼະ." (ມທ.18:20). ໃນເວລາທີ່ພວກເຮົາຮວມຄຳສອນໃນພຣະສັນຍາໃໝ່ກັບຄຳສອນຂອງພຣະສັນຍາເດີມກ່ຽວກັບພື້ນທີ່ອັນສັກສິດ, ນັ້ນໝາຍເຖິງສະຖານທີ່ທີ່ຜູ້ເຊື່ອມາເຕົ້າໂຮມກັນກາຍເປັນບ່ອນທີ່ສັກສິດໃນໂລກຝ່າຍວິນຍານ. ດັ່ງນັ້ນເຖິງແມ່ນວ່າຜູ້ທີ່ເຊື່ອຈະມາເຕົ້າໂຮມຢູ່ໃຈກາງຂອງປະເທດໜຶ່ງ ທີ່ຢູ່ພາຍໃຕ້ສິດອຳນາດຂອງຜູ້ປົກຄອງວິນຍານທີ່ກະບົດແຫ່ງຄວາມມືດ, ພຣະເຢຊູກໍ່ຢູ່ກັບພວກເຂົາໃນພື້ນທີ່ບໍລິສຸດສັກສິດນັ້ນ.

ການຕັດສິນໃຈຂອງພຣະເຈົ້າໃນສະໄໝພຣະສັນຍາເດີມ ແມ່ນການເລືອກຢູ່ຮ່ວມກັບອິດສະຣາເອນໃນແຜ່ນດິນຂອງພວກເຂົາ. ພຣະອົງຄອບຄອງພຣະວິຫານໃນນະຄອນເຢຣູຊາເລັມ. ອິດສະຣາເອນໄດ້ກາຍເປັນພື້ນທີ່ສັກສິດເພາະວ່ານັ້ນແມ່ນບ່ອນທີ່ພຣະເຈົ້າໄດ້ເລືອກທີ່ຈະສະຖິດຢູ່ເພື່ອໃຫ້ປະຊາຊົນໄດ້ພົບກັບພຣະອົງ. ແຕ່ພື້ນທີ່ສັກສິດນັ້ນໄດ້ຖືກນາບຂູ່ຢູ່ເລື້ອຍໆວ່າຈະຖືກບຸກໂຈມຕີຈາກປະເທດສັດຕູອື່ນໆແລະບັນດາຜູ້ປົກຄອງເໜືອທຳມະຊາດທີ່ເປັນສັດຕູຂອງພວກເຂົາ. ໃນລັກສະນະດຽວກັນນີ້ໃນປະຈຸບັນ, ຜູ້ທີ່ເຊື່ອແມ່ນຢູ່ໃນສົງຄາມທີ່ເໜືອທຳມະຊາດ. ແຕ່ດຽວນີ້ພຣະວິຫານຂອງພຣະເຈົ້າແມ່ນຜູ້ທີ່ເຊື່ອ. ຜູ້ທີ່ເຊື່ອແມ່ນສະຖານທີ່ພິເສດທີ່ພຣະວິນຍານຂອງພຣະເຈົ້າສະຖິດຢູ່. ຜູ້ທີ່ເຊື່ອແມ່ນຈຸດພິເສດເໜືອທຳມະຊາດຂອງຄວາມສະຫວ່າງແຫ່ງການຊົງສະຖິດຢູ່ຂອງພຣະເຈົ້າ. ຜູ້ທີ່ເຊື່ອແມ່ນຄອບຄົວຂອງພຣະເຈົ້າທີ່ອາໄສຢູ່ໃນບັນດາປະຊາຊາດຂອງໂລກທີ່ເຕັມໄປດ້ວຍທາດຂອງອຳນາດແຫ່ງຄວາມມືດ.

# ສົ່ງມອບໃຫ້ຊາຕານ

ແນວຄິດນີ້ສະແດງໃຫ້ເຫັນໂດຍການສອນຂອງໂປໂລວ່າກຸ່ມຄຣິສຕະຈັກທ້ອງຖິ່ນແມ່ນສະຖານທີ່ພິເສດທີ່ເໜືອທຳມະຊາດ. ຜູ້ເຊື່ອທຸກໆກຸ່ມເປັນສະຖານທີ່ສັກສິດແລະນັ້ນບໍ່ແມ່ນສະຖານທີ່ສຳລັບຜູ້ເຊື່ອທີ່ບໍ່ກັບໃຈຈາກບາບ.

ໃນບົດທີ 8, ຂ້າພະເຈົ້າໄດ້ຂຽນວິທີການທີ່ຄ້າຍຂອງອິດສະຣາເອນຈັດການກັບຄວາມບາບເພື່ອຮັກສາຄ້າຍຂອງອິດສະຣາເອນ. ຄ້າຍອິດສະຣາເອນເປັນບ່ອນທີ່ສັກສິດ. ຂ້າພະເຈົ້າໄດ້ຂຽນກ່ຽວກັບວັນແຫ່ງການລຶບລ້າງຄວາມຜິດບາບ (ລລວ.16). ນີ້ແມ່ນພິທີກຳທີ່ບາບຂອງຊາດໄດ້ຖືກໂອນໄປທີ່ໂຕແບ້ໃນທາງເປັນສັນຍາລັກ. ຫຼັງຈາກນັ້ນແບ້"ສຳລັບອາຊາເຊນ" ຖືກສົ່ງໄປໃນຖິ່ນແຫ້ງແລ້ງກັນດານ (ລລວ.16:8, 10). ອາຊາເຊນແມ່ນເປັນສິ່ງທີ່ຊົ່ວຮ້າຍເໜືອທຳມະຊາດ ທີ່ພວກເຂົາເຊື່ອວ່າມີສິດອຳນາດເໜືອດິນແດນຖິ່ນ

ແຫ້ງແລ້ງກັນດານ. ພິທີການທີ່ເປັນສັນຍາລັກນີ້ໄດ້ສົ່ງບາບຂອງປະຊາຊົນອອກໄປໃນຖິ່ນແຫ້ງແລ້ງກັນດານເຂົ້າໄປໃນສະຖານທີ່ແຫ່ງຄວາມມືດທາງວິນຍານ.

ໂປໂລໃຫ້ຜູ້ທີ່ເຊື່ອຊາວໂກຣິນໂທຈັດການກັບຄວາມບາບໃນແບບດຽວກັນ. ເພິ່ນໄດ້ບອກພວກເຂົາໃຫ້ສົ່ງບາບທີ່ມີອອກໄປຈາກກຸ່ມເສຍ. ໃນ 1 ໂກຣິນໂທ 5, ໂປໂລໄດ້ຂຽນວ່າຜູ້ຊາຍທີ່ດໍາເນີນຊີວິດຢູ່ໃນການຜິດສິນທໍາທາງເພດຈໍາເປັນຕ້ອງສໍານຶກຜິດ, ແຕ່ລາວບໍ່ໄດ້ສໍານຶກ. ສະນັ້ນໂປໂລໄດ້ສັ່ງວ່າ,“ ຈົ່ງມອບຊາຍຄົນນີ້ໄວ້ໃຫ້ມານຊາຕານ” (1ກຣທ.5: 5). ຄວາມໝາຍຂອງໂປໂລແມ່ນຊັດເຈນ. ບາບທີ່ບໍ່ກັບໃຈບໍ່ມີບ່ອນຢູ່ໃນພື້ນທີ່ອັນສັກສິດ.ຜູ້ເຊື່ອຕ້ອງໄດ້ກໍາຈັດຜູ້ເຊື່ອທີ່ບໍ່ສໍານຶກຜິດອອກຈາກກຸ່ມຂອງພວກເຂົາ (1ກຣທ. 5: 9–13). ການຖືກໄລ່ອອກຈາກຄຣິສຕະຈັກແມ່ນຈະຖືກສົ່ງກັບອອກໄປສູ່ອານາຈັກຂອງຊາຕານ.

ໂປໂລຫວັງວ່າຜູ້ຊາຍທີ່ບໍ່ສໍານຶກຜິດຈະປະສົບກັບ "ມານຊາຕານທໍາລາຍເນື້ອກາຍ ເພື່ອໃຫ້ຈິດວິນຍານຂອງລາວໄດ້ພົ້ນ ໃນວັນຂອງອົງພຣະຜູ້ເປັນເຈົ້າ." (1ກຣທ.5:5). ໂປໂລບໍ່ໄດ້ກ່າວເຖິງຄວາມຕາຍທາງຮ່າງກາຍຂອງຊາຍຄົນນັ້ນ, ແຕ່ໝາຍເຖິງຄວາມຕາຍຂອງຕັນຫາເນື້ອກາຍທີ່ຂັງຊາຍຄົນນີ້ໃຫ້ເຮັດບາບຕໍ່ໄປ [ຄລຕ. 5:24; 1ກຣທ.11:32– 33]).

## ການຮັບບັບຕິສະມາແມ່ນສົງຄາມຝ່າຍວິນຍານ

ເປໂຕໄດ້ສອນຄືກັນກັບໂປໂລ. ຜູ້ທີ່ເຊື່ອໄດ້ຢູ່ໃນສົງຄາມຕໍ່ຕ້ານອໍານາດແຫ່ງຄວາມມືດ. ຍຸດທະສາດການເຮັດສົງຄາມຂອງເປໂຕແມ່ນພົບເຫັນຢູ່ໃນຂໍ້ທີ່ແປກໃໝ່ ໃນພຣະສັນຍາໃໝ່ຄື 1 ເປໂຕ 3:14–22:

> ແຕ່ຖ້າພວກເຈົ້າຕ້ອງທົນທຸກຍ້ອນເຮັດສິ່ງທີ່ຖືກຕ້ອງ ພວກເຈົ້າກໍເປັນສຸກ. ຢ່າຢ້ານກົວຕໍ່ຜູ້ທີ່ເຮັດໃຫ້ເຈົ້າສະດຸ້ງຕົກໃຈ ແລະຢ່າວິຕົກກັງວົນໃຈເລີຍ. ແຕ່ໃນໃຈຂອງເຈົ້າທັງຫລາຍ ຈົ່ງເຄົາຣົບນັບຖືພຣະຄຣິດວ່າ ເປັນອົງພຣະຜູ້ເປັນເຈົ້າ ຈົ່ງມີໃຈພ້ອມຢູ່ສະເໝີ ເພື່ອພວກເຈົ້າຈະສາມາດຕອບແກ້ຕົວໄດ້ຕໍ່ທຸກຄົນທີ່ຖາມພວກເຈົ້າວ່າ, ເຈົ້າມີເຫດຜົນປະການໃດຈຶ່ງມີຄວາມຫວັງຢ່າງນີ້. ແຕ່ຈົ່ງຕອບດ້ວຍໃຈສຸພາບແລະຢໍາເກງ ແລະໃຫ້ມີໃຈສໍານຶກຜິດແລະຊອບອັນເສາະໃສ ເພື່ອວ່າເມື່ອພວກເຈົ້າຖືກປະໝາດນິນທາ ຄົນທີ່ກ່າວຫຍາບຊ້າ ຕໍ່ທໍານຽມຄຣິສຕຽນອັນດີຂອງພວກເຈົ້ານັ້ນ ກໍຈະໄດ້ຮັບຄວາມອັບອາຍ. ເພາະວ່າຖ້ານໍ້າພຣະໄທຂອງພຣະເຈົ້າຊົງເຫັນດີໃຫ້ພວກເຈົ້າທົນທຸກຍ້ອນເຮັດການດີ ກໍດີກວ່າຕ້ອງທົນທຸກຍ້ອນເຮັດການຊົ່ວ. ດ້ວຍວ່າ, ພຣະຄຣິດກໍເໝືອນກັນ ໄດ້ສິ້ນພຣະຊົນເທື່ອດຽວເປັນການສິ້ນສຸດ ເພື່ອແທນຄວາມຜິດບາບ ຄືພຣະອົງຜູ້ຊອບທໍາ ແທນຜູ້ບໍ່ຊອບທໍາ ເພື່ອຈະໄດ້ນໍາເຮົາທັງຫຼາຍໄປເຖິງພຣະເຈົ້າ ຝ່າຍກາຍພຣະອົງຊົງຖືກປະຫານເສຍ ແຕ່ຝ່າຍວິນຍານ ພຣະອົງຖືກຊົງບັນດານໃຫ້ຄືນພຣະຊົນ. 19ແລະໂດຍທາງວິນຍານນັ້ນ ພຣະອົງໄດ້ສະເດັດໄປປະກາດແກ່ບັນດາວິນຍານທີ່ຖືກຄຸກຢູ່. ຊຶ່ງເມື່ອກ່ອນນັ້ນບໍ່ໄດ້ຍອມເຊື່ອຟັງພຣະເຈົ້າ ຄືເມື່ອພຣະເຈົ້າຊົງສໍາແດງຄວາມ

ອົດທົນດົນນານ. ໃນສະໄໝຂອງໂນອາ ຂະນະທີ່ເພິ່ນກຳລັງສ້າງເຮືອຢູ່ ໃນເຮືອມີຄົນຈຳນວນໜ້ອຍ ຄືແປດຄົນທີ່ໄດ້ຜ່ານພົ້ນນ້ຳຖ້ວມນັ້ນ. ນ້ຳນັ້ນໝາຍເຖິງພິທີຮັບບັບຕິສະມາ ທີ່ໃຫ້ພວກເຈົ້າລອດພົ້ນ ດຽວນີ້ ບັບຕິສະມານີ້ ບໍ່ແມ່ນການຊຳລະສິ່ງເປື້ອນເປິທາງຮ່າງກາຍ ແຕ່ເປັນການຮຽນຂໍຕໍ່ພຣະເຈົ້າ ດ້ວຍໃຈສຳນຶກຜິດແລະຊອບອັນເສາະໃສ. ບັບຕິສະມານີ້ໃຫ້ເຖິງທີ່ພົ້ນ ເພາະດ້ວຍການທີ່ພຣະເຢຊູ ຄຣິດເຈົ້າ ຊົງເປັນຄືນມາຈາກຕາຍ ຜູ້ໄດ້ສະເດັດເຂົ້າໃນສະຫວັນ ແລະຊົງສະຖິດຢູ່ເບື້ອງຂວາພຣະຫັດ ຂອງພຣະເຈົ້າ ໂດຍມີຝູງເທວະດາແລະບັນດາຜູ້ມີອຳນາດ ແລະຣິດເດດຖືກຊົງມອບໄວ້ ໃຫ້ຢູ່ໃຕ້ ອຳນາດຂອງພຣະອົງແລ້ວ.

ຂ້າພະເຈົ້າແນ່ໃຈວ່າທ່ານໄດ້ສັງເກດເຫັນຄຳເຫັນທີ່ແປກໆຂອງເປໂຕໃນຂໍ້ຄວາມນີ້. ເຮືອໂນອາແລະ ວິນຍານທີ່ຖືກຂັງຄຸກກ່ຽວຂ້ອງຫຍັງກັບການຮັບບັບຕິສະມາ? ແລະຂໍ້ພຣະຄຳພີເຫຼົ່ານີ້ເວົ້າແທ້ໆບໍ ວ່າການບັບຕິສະມາຊ່ວຍພວກເຮົາໃຫ້ພົ້ນ?

ສິ່ງທີ່ເປໂຕກຳລັງເຮັດຢູ່ນີ້ແມ່ນຄ້າຍຄືກັບສິ່ງທີ່ໂປໂລໄດ້ເຮັດໃນພຣະທຳໂຣມບົດທີ 5. ໂປໂລໄດ້ເວົ້າ ກ່ຽວກັບພຣະເຢຊູໃນຂໍ້ຄວາມນັ້ນ, ແຕ່ລວມເອົາອາດາມເພື່ອໃຫ້ເພິ່ນສາມາດອະທິບາຍໄດ້ດີກວ່າສິ່ງທີ່ເພິ່ນ ກຳ ລັງສອນກ່ຽວກັບພຣະເຢຊູ. ໂປໂລກ່າວວ່າພຣະເຢຊູກົງກັນຂ້າມກັບອາດາມໃນບາງທາງ. ບາງຄັ້ງ ພວກເຮົາສາມາດເຂົ້າໃຈຄວາມຄິດໂດຍການເຂົ້າໃຈແບບກົງກັນຂ້າມ. ນັ້ນແມ່ນເຫດຜົນທີ່ໂປໂລກ່າວວ່າ" ໂດຍການບໍ່ເຊື່ອຟັງຂອງອາດາມມະນຸດທຸກຄົນຕົກເປັນຄົນມີບາບກຳ, ດັ່ງນັ້ນໂດຍການເຊື່ອຟັງຂອງ ພຣະເຢຊູຄົນຈຳນວນຫຼາຍກໍຈະໄດ້ຊົງຖືວ່າເປັນຄົນຊອບທຳ" (ຣມ.5:19) ໃນການສອນຂອງເປໂຕເພິ່ນກຳ ລັງໃຊ້ຕົວຢ່າງເອນົກເພື່ອມາອະທິບາຍທີ່ດີຂຶ້ນກ່ຽວກັບພຣະເຢຊູ (1 ປຕ 3). ແຕ່ເປໂຕໄດ້ໃຊ້ສິ່ງທີ່ເອນົກ ເຮັດໃນສິ່ງທີ່ຄ້າຍຄືກັບພຣະເຢຊູ. ຊາວຢິວໃນສະໄໝບູຮານເຊື່ອວ່າພຣະເຈົ້າໄດ້ໃຊ້ເອນົກເປັນຜູ້ປະກາດ ໃນລະຫວ່າງການກະບົດຂອງພວກລູກຊາຍຂອງພຣະເຈົ້າ (ປຖກ. 6:1- 4). ການກະທຳຂອງເອນົກນີ້ ຄ້າຍຄືກັບການກະທຳບາງຢ່າງຂອງພຣະເຢຊູ. ເປໂຕຢາກຊ່ວຍອະທິບາຍສິ່ງທີ່ພຣະເຢຊູໄດ້ເຮັດແລະເພິ່ນ ຈຶ່ງເຕືອນປະຊາຊົນກ່ຽວກັບສິ່ງທີ່ເອນົກໄດ້ເຮັດ.

ທ່ານອາດຈະສົງໃສວ່າ, "ເອນົກທີ່ຢູ່ໃນຄຳສອນຂອງເປໂຕຢູ່ໃສ?" ມີພຽງແຕ່ສອງສາມຂໍ້ກ່ຽວກັບເອນົກ ໃນພຣະສັນຍາເດີມ (ປຖກ.5: 18–24). ສິ່ງທີ່ພວກເຮົາຮຽນຮູ້ແມ່ນວ່າເອນົກມີຊີວິດຢູ່ກ່ອນນ້ຳຖ້ວມໃຫຍ່ ແລະ"ເອນົກໄດ້ດຳເນີນຊີວິດຢ່າງສັດຊື່ຕໍ່ພຣະເຈົ້າ. ຫຼັງຈາກນັ້ນເອນົກກໍ່ໄດ້ຫາຍຕົວໄປ, ເພາະວ່າພຣະເຈົ້າ ໄດ້ຮັບເອົາລາວໄປ" (ປຖກ.5:24). ຂໍ້ພຣະຄຳພີເຫຼົ່ານັ້ນບໍ່ໄດ້ກ່ຽວຂ້ອງຫຍັງກັບສິ່ງທີ່ເປໂຕເວົ້າກ່ຽວ ກັບພຣະເຢຊູ (1ປຕ.3).

ເພື່ອໃຫ້ເຂົ້າໃຈວ່າເປັນຫຍັງເອນົກຈຶ່ງເປັນຂໍ້ເຕືອນໃຈເປໂຕເຖິງເລື່ອງພຣະເຢຊູ, ພວກເຮົາຈຳເປັນຕ້ອງ ເຂົ້າໃຈວ່າເປໂຕກຳລັງອ່ານພຣະທຳເອນົກໃນປຶ້ມຂອງຊາວຢິວທີ່ຢູ່ນອກພຣະສັນຍາເດີມ. ເຫັນໄດ້ຊັດເຈນ

ວ່າເປໂຕໄດ້ອ່ານປຶ້ມຍິວບູຮານກ່ຽວກັບເອນົກ. ມີຊື່ວ່າພຣະທຳໜຶ່ງເອນົກ First Enoch. ປຶ້ມນັ້ນໄດ້ໃຫ້ລາຍລະອຽດຫຼາຍຢ່າງກ່ຽວກັບສິ່ງທີ່ເກີດຂຶ້ນໃນສະໄໝນ້ຳຖ້ວມໂລກ, ໂດຍສະເພາະເລື່ອງໃນປະຖົມມະການ 6: 1– 4. ໃນເຫດການນີ້ພວກລູກຊາຍຂອງພຣະເຈົ້າໄດ້ກະບົດຈາກພຣະເຈົ້າ, ອອກຈາກສະຫວັນ, ມາສູ່ແຜ່ນດິນໂລກແລະໄດ້ເກີດລູກກັບແມ່ຍິງທີ່ເປັນມະນຸດ. ເອນົກເອີ້ນພວກລູກຊາຍທີ່ກະບົດຂອງພຣະເຈົ້າວ່າບັນດາຜູ້ອາລັກຂາ. ລູກຫຼານທີ່ພວກເຂົາເກີດອອກມາເປັນຄົນຍັກໃຫຍ່ທີ່ຊົ່ວຮ້າຍທີ່ເອີ້ນວ່າຄົນເນຟີມ. ທັງເປໂຕແລະຢູດາໄດ້ຂຽນກ່ຽວກັບສິ່ງມີຊີວິດເໜືອທຳມະຊາດທີ່ໄດ້ເຮັດບາບໃນສະໄໝຂອງໂນອາ (2ປຕ.2: 4–5; ຢດ. 6). ເປໂຕແລະຢູດາໄດ້ຂຽນໃນພຣະສັນຍາໃໝ່ກ່ຽວກັບແນວຄວາມຄິດທີ່ມີຢູ່ໃນພຣະທຳໜຶ່ງເອນົກອີກດ້ວຍ. ພຣະສັນຍາເດີມມີພຽງ 4 ຂໍ້ກ່ຽວກັບເຫດການນີ້ແລະມີລາຍລະອຽດໜ້ອຍທີ່ສຸດ. ເລື່ອງນ້ຳຖ້ວມໂລກໃນພຣະທຳປະຖົມມະການ ບໍ່ເຄີຍບອກພວກເຮົາວ່າພວກລູກຊາຍຂອງພຣະເຈົ້າທີ່ກະບົດຕໍ່ມາໄດ້ຖືກຂັງຄຸກຕາມຄຳສັ່ງຂອງພຣະເຈົ້າ, ແຕ່ພຣະທຳເອນົກບອກເລື່ອງນີ້. ເຊິ່ງບອກວ່າຄຸກແມ່ນຢູ່ໃນໃຕ້ໂລກໃນດິນແດນແຫ່ງຄວາມຕາຍ(ແດນມໍຣະນາ)ບ່ອນທີ່ວິນຍານກະບົດທີ່ຊົ່ວຮ້າຍໄດ້ຖືກກັກຂັງໄວ້ຈົນເຖິງວັນສິ້ນຍຸກ. ລາຍລະອຽດເຫຼົ່ານີ້ມີຢູ່ໃນພຣະທຳໜຶ່ງເອນົກ, ບົດ 6:1-4; 7:1–6; 10:4, 11–13.

ໃນພຣະທຳເອນົກມີຂໍ້ຄວາມລະຫວ່າງພຣະເຈົ້າແລະ "ວິນຍານຢູ່ໃນຄຸກ"ເຫຼົ່ານີ້. ສິ່ງນີ້ເຮັດໃຫ້ເປໂຕມີຄວາມເຂົ້າໃຈໃນການອະທິບາຍສິ່ງທີ່ພຣະເຢຊູໄດ້ເຮັດ. ໃນປຶ້ມພຣະທຳໜຶ່ງເອນົກກ່າວວ່າ ເອນົກມີຄວາມຝັນທີ່ວິນຍານໃນຄຸກຮ້ອງຂໍໃຫ້ລາວອ້ອນວອນຕໍ່ພຣະເຈົ້າສຳລັບພວກເຂົາຫຼັງຈາກພວກເຂົາກະບົດ. ເອນົກໄດ້ດຳເນີນໄປກັບພຣະເຈົ້າ. ເອນົກຈະເປັນທາງເລືອກທີ່ດີທີ່ສຸດທີ່ຈະຂໍໃຫ້ພຣະເຈົ້າຍົກໂທດການກະບົດຂອງພວກເຂົາແລະປົດປ່ອຍພວກເຂົາ. ໃນຄວາມຝັນ, ເອນົກໄດ້ເຮັດສິ່ງນີ້. ແຕ່ຄຳຮ້ອງຂໍຂອງວິນຍານເຫຼົ່ານັ້ນຖືກປະຕິເສດ. ພຣະເຈົ້າຕອບດ້ວຍຄຳວ່າ" ບໍ່! " ຢ່າງເດັດຂາດ. ຫຼັງຈາກນັ້ນເອນົກໄດ້ເດີນທາງກັບໄປທີ່ຄຸກໃນຄວາມຝັນຂອງລາວເພື່ອແຈ້ງຄຳຕອບນັ້ນ. ເອນົກໄດ້ລົງໄປສູ່ດິນແດນແຫ່ງຄວາມຕາຍບ່ອນທີ່ວິນຍານຂັງຢູ່ໃນຄຸກ. ລາວບອກພວກເຂົາວ່າພຣະເຈົ້າຈະບໍ່ປ່ອຍພວກເຂົາແລະພວກເຂົາຈະຖືກຄຸມຂັງຈົນກວ່າມັນເຖິງເວລາສຳລັບການພິພາກສາຂອງພວກເຂົາ.

ເປໂຕໄດ້ໃຊ້ເລື່ອງດັ່ງກ່າວເປັນວິທີການອະທິບາຍສິ່ງທີ່ພຣະເຢຊູໄດ້ເຮັດເພື່ອພວກເຮົາ. ຈຸດທີ່ເປໂຕຕ້ອງການສອນແມ່ນ ຕອນທີ່ພຣະເຢຊູຕາຍ, ພຣະອົງໄດ້ລົງໄປຢູ່ໃນດິນແດນມໍຣະນາແລະພຣະອົງມີຂ່າວສານສຳລັບພວກວິນຍານທີ່ຢູ່ໃນຄຸກ. ເມື່ອພວກເຂົາເຫັນພຣະເຢຊູເຂົ້າໄປໃນສະຖານທີ່ແຫ່ງຄວາມຕາຍ, ພວກວິນຍານຊົ່ວຮ້າຍອາດຈະຄິດວ່າພວກກະບົດຂອງພວກເຂົາໄດ້ຊະນະສົງຄາມກັບພຣະເຈົ້າ. ຖ້າພຣະເຢຊູຢູ່ໃນດິນແດນແຫ່ງຄວາມຕາຍແລ້ວພວກເຂົາກໍ່ຈະອອກຈາກຄຸກໃນໄວໆນີ້. ພຣະເຢຊູບອກພວກເຂົາວ່າພຣະອົງຈະຢູ່ໃນໂລກຄົນຕາຍໃນເວລາສັ້ນໆເທົ່ານັ້ນ. ພຣະອົງຈະເປັນຄືນມາຈາກຕາຍອີກ. ນີ້ແມ່ນສ່ວນໜຶ່ງຂອງແຜນການພຣະເຈົ້າ. ພວກວິນຍານກະບົດບໍ່ໄດ້ຊະນະສົງຄາມ. ພວກເຂົາຍັງຢູ່ພາຍ

ໃຕ້ການພິພາກສາແລະຈະໄດ້ຮັບການລົງໂທດຕະຫຼອດໄປ. ນັ້ນແມ່ນເຫດຜົນທີ່ເປໂຕຈົບດ້ວຍການສອນແບບນັ້ນ. ເພິ່ນລົງທ້າຍດ້ວຍພຣະເຢຊູເຈົ້າ "ສະເດັດກັບຄືນໄປສະຫວັນ" ແລະນັ່ງ "ຢູ່ເບື້ອງຂວາຂອງພຣະເຈົ້າໂດຍມີຝູງເທວະດາແລະບັນດາຜູ້ມີອຳນາດ ແລະຣິດເດດຖືກຊົງມອບໄວ້ ໃຫ້ຢູ່ໃຕ້ອຳນາດຂອງພຣະອົງແລ້ວ" (1ປຕ.3: 22).

ເປັນຫຍັງເປໂຕຈຶ່ງເຊື່ອມໂຍງທຸກໆຄຳສອນທີ່ແປກປະຫຼາດນີ້ກັບການຮັບບັບຕິສະມາ? ຄວາມຄິດຂອງເປໂຕແມ່ນຄວາມຕາຍແລະການເປັນຄືນຈາກຕາຍຂອງພຣະເຢຊູລວມເຖິງການປະກາດໄຊຊະນະຂອງພຣະອົງຕໍ່ສັດຕູທີ່ມີອຳນາດເໜືອທຳມະຊາດ. ໄຊຊະນະຂອງພຣະເຢຊູແມ່ນສັນຍາລັກໃນການຮັບບັບຕິສະມາ. ການຮັບບັບຕິສະມາເປັນສັນຍາລັກເຖິງຄວາມຕາຍ,ການຝັງແລະການຟື້ນສູ່ຄືນຊີວິດຂອງພຣະເຢຊູ (ຣມ 6: 1-11).

ເປໂຕກ່າວວ່າການຮັບບັບຕິສະມາແມ່ນ“ສອດຄ່ອງ” ກັບສິ່ງທັງໝົດນີ້ເພາະວ່າມັນເປັນ “ເປັນການຮຽນຂໍຕໍ່ພຣະເຈົ້າ ດ້ວຍໃຈສຳນຶກຜິດແລະຊອບອັນເສາະໃສ. ບັບຕິສະມານີ້ໃຫ້ເຖິງທີ່ພົ້ນ ເພາະດ້ວຍການທີ່ພຣະເຢຊູຄຣິດເຈົ້າ ຊົງເປັນຄືນມາຈາກຕາຍ” (1ປຕ.3:21). ຄຳພາສາກຣີກສຳລັບຄຳວ່າ“ການຮຽນຂໍ” ໝາຍເຖິງໃຫ້ຄຳປະຕິຍານ. ຄຳພາສາກຣີກສຳລັບຄຳວ່າ "ໃຈສຳນຶກຜິດແລະຊອບ" ມັກຈະໝາຍເຖິງຄວາມສາມາດທີ່ຈະບອກສິ່ງທີ່ຖືກສິ່ງທີ່ຜິດໄດ້. ແຕ່ນັ້ນບໍ່ແມ່ນຄວາມໝາຍຢູ່ນີ້. ການຮູ້ຄວາມແຕກຕ່າງລະຫວ່າງສິ່ງທີ່ຖືກແລະຜິດບໍ່ມີຄວາມສຳພັນໂດຍກົງຕໍ່ການຕາຍ,ການຝັງແລະການເປັນຄືນຈາກຕາຍຂອງພຣະເຢຊູ. ຄຳສັບພາສາກຣີກຍັງໝາຍເຖິງການໃຫ້ຄຳໝັ້ນສັນຍາ. ໝາຍຄວາມວ່າໃຫ້ຄຳໝັ້ນສັນຍາທີ່ດີ, ບໍ່ແມ່ນຄວາມໂງ່ຈ້າ. ນັ້ນແມ່ນສິ່ງທີ່ເປໂຕກຳລັງສອນຢູ່ໃນ 1ເປໂຕ 3. ການຮັບບັບຕິສະມາແມ່ນເປັນຄຳສັນຍາທີ່ຊື່ສັດແລະເປັນຂໍ້ຄວາມເຖິງວິນຍານເໜືອທຳມະຊາດທີ່ກະບົດທັງຫຼາຍ. ນອກຈາກນີ້ຍັງສື່ສານເລື່ອງນີ້ກັບທຸກຄົນທີ່ເຂົ້າຮ່ວມໃນການຮັບບັບຕິສະມາ. ການຮັບບັບຕິສະມາແມ່ນຄຳປະກາດວ່າທ່ານຢູ່ຂ້າງຜູ້ໃດໃນສົງຄາມເໜືອທຳມະຊາດ. ຄຣິດສະຕຽນໃນຍຸກທຳອິດເຂົ້າໃຈເລື່ອງນີ້ດີກ່ວາທີ່ພວກເຮົາເຮັດໃນປະຈຸບັນນີ້. ພິທີຮັບບັບຕິສະມາໃນຄຣິສຕະຈັກຍຸກທຳອິດແມ່ນລວມທັງການປະກາດປະຖິ້ມຊາຕານແລະສະໝຸນຂອງມັນເນື່ອງຈາກການສັ່ງສອນຂອງເປໂຕໃນຂໍ້ນີ້.

# ສາເຫດທີ່ເລື່ອງນີ້ສຳຄັນ

ຂໍ້ທີໜຶ່ງ, ຈົ່ງເຂົ້າໃຈວ່າຜູ້ທີ່ເຊື່ອແມ່ນພື້ນທີ່ສັກສິດຄືສະຖານທີ່ບໍລິສຸດ. ປະຈຸບັນຜູ້ທີ່ເຊື່ອເປັນທີ່ປະທັບຂອງພຣະເຈົ້າ. ພຣະວິຫານແມ່ນສະຖານທີ່ແຫ່ງສະຫງ່າຣາສີຂອງພຣະເຈົ້າໃນພຣະສັນຍາເດີມ. ດຽວນີ້ພວກເຮົາແມ່ນສະຖານທີ່ນັ້ນ. ພວກເຮົາດຳເນີນຊີວິດຄືວ່ານີ້ເປັນເລື່ອງຈິງຂອງພວກເຮົາບໍ? ຄົນອິດສະຣາເອນໃນພຣະສັນຍາເດີມແລະຜູ້ທີ່ເຊື່ອໃນສະໄໝຂອງພຣະເຢຊູຮູ້ສຶກວ່າຈຳເປັນຕ້ອງມີຄວາມແຕກຕ່າງຈາກຄົນທີ່ບໍ່ເຊື່ອສະເໝີ. ເປົ້າໝາຍບໍ່ແມ່ນເລື່ອງແປກດັ່ງນັ້ນຜູ້ທີ່ບໍ່ເຊື່ອຈະພະຍາຍາມຫຼີກລ້ຽງການຕິດຕໍ່ພົວພັນ

ກັບເຮົາ. ແຕ່ພຣະເຈົ້າຕ້ອງການໃຫ້ອິດສະຣາເອນເປັນ "ອານາຈັກແຫ່ງປະໂຣຫິດ" ແລະ "ຊົນຊາດບໍລິສຸດ" (ອພຍ.19:6). ການດຳເນີນຊີວິດຕາມທີ່ພຣະເຈົ້າຕ້ອງການໃຫ້ລູກໆພຣະອົງດຳເນີນຊີວິດຈະນຳໄປສູ່ຊີວິດທີ່ເກີດຜົນ, ມີປະສິດທິຜົນແລະມີຄວາມສຸກ. ຄົນອິດສະຣາເອນຄວນຈະດຶງດູດຜູ້ຄົນທີ່ຖືກກົດຂີ່ໂດຍພວກວິນຍານຊົ່ວທີ່ເປັນສັດຕູໃຫ້ກັບມາຫາພຣະເຈົ້າອົງທ່ຽງແທ້.

ເມື່ອໃດທີ່ທັດສະນະຂອງພວກເຮົາກົງກັບແຜນການຂອງພຣະເຈົ້າ, ພວກເຮົາກໍໃຊ້ຊີວິດຂອງເຮົາທີ່ຈະຊ່ວຍກູ້ຜູ້ຄົນຈາກທຸກໆຊາດແລະໃຫ້ພວກເຂົາເປັນສ່ວນໜຶ່ງຂອງຄອບຄົວຂອງພຣະເຈົ້າ. ພວກເຮົາຢູ່ໃນໂລກ, ແຕ່ບໍ່ແມ່ນຂອງໂລກນີ້. ການເປັນຂອງໂລກນີ້ໝາຍເຖິງການເອົາໃຈໃສ່ຄວາມກັງວົນຂອງໂລກ. ໝາຍເຖິງສຸມໃສ່ການດຳເນີນຊີວິດຕາມວິທີການຂອງໂລກ. ຜູ້ທີ່ບໍ່ເຊື່ອຄວນຈະເຫັນຈາກການເວົ້າ, ການປະພຶດ, ຈັນຍາບັນແລະທັດສະນະຄະຕິຂອງພວກເຮົາຕໍ່ຄົນອື່ນວ່າພວກເຮົາບໍ່ແມ່ນຄົນດູຖູກຄົນອື່ນ, ເຫັນແກ່ຕົວຫຼືໂຫດຮ້າຍ. ພວກເຂົາຄວນຈະຮູ້ວ່າເປົ້າໝາຍຂອງພວກເຮົາບໍ່ແມ່ນເພື່ອນຳໜ້າຫຼືຊະນະຄົນອື່ນຫຼືນຳໃຊ້ຄົນອື່ນພຽງເພື່ອຈະໄດ້ສິ່ງດີໆມາໃຫ້ຕົວເອງ. ພວກເຮົາບໍ່ຄວນດຳເນີນຊີວິດເພື່ອເຮັດໃຫ້ຕົນເອງພໍໃຈ. ພວກເຮົາຕ້ອງເປັນຝ່າຍກົງກັນຂ້າມກັບສິ່ງເຫຼົ່ານີ້. ພວກເຮົາຕ້ອງດຳເນີນຊີວິດຄືກັບທີ່ພຣະເຢຊູຜູ້ທີ່ມີຊີວິດຢູ່. ຜູ້ຄົນຢາກຢູ່ໃກ້ພຣະເຢຊູເພາະວ່າພຣະອົງບໍ່ໄດ້ເປັນຄືກັບຄົນໃນໂລກ.

ຂໍ້ທີສອງແມ່ນ ສິ່ງທີ່ພວກເຮົາເຮັດໃນກຸ່ມຄຣິສຕະຈັກຂອງພວກເຮົາຄວນຍົກຍ້ອງພຣະເຈົ້າ ແລະພຣະເຢຊູເຈົ້າ. ໃນສະໄໝພຣະຄຳພີ, ການທີ່ພຣະເຈົ້າມາຢ້ຽມຢາມຫໍເຕັນຫຼືພຣະວິຫານໄດ້ສອນຫຼັກການຂອງຄວາມສົມບູນຂອງພຣະເຈົ້າແລະພຣະອົງເປັນເອກະລັກສະເພາະ. ນັ້ນໄດ້ສອນວ່າພຣະອົງຊົງຮັກມະນຸດ. ພຣະເຈົ້າທີ່ສົມບູນແບບແລະຄວາມຮັກທີ່ມີຕໍ່ມະນຸດຍັງຊ່ວຍອະທິບາຍສິ່ງທີ່ພຣະອົງເຮັດອີກດ້ວຍ. ເປັນຫຍັງພຣະເຈົ້າຜູ້ທີ່ບໍ່ຕ້ອງການຫຍັງແລະຈຶ່ງຕ້ອງການຄອບຄົວມະນຸດເໜືອກວ່າທຸກສິ່ງທຸກຢ່າງ? ເປັນຫຍັງພຣະເຈົ້າຈຶ່ງຕ້ອງການສ້າງຄອບຄົວໃໝ່ ພາຍຫຼັງທີ່ໄດ້ປະຕິເສດທຸກຊາດທີ່ວິຫານບາເບນແລ້ວ? ເປັນຫຍັງພຣະອົງບໍ່ພຽງແຕ່ຫັນຫຼັງໜີໄປເລີຍ? ພຣະເຈົ້າຍັງຄົງເຮັດວຽກເພື່ອໃຫ້ແຜນການຂອງພຣະອົງສຳເລັດເພາະວ່າພຣະອົງຮັກພວກເຮົາ.

ພວກເຮົາຮູ້ວ່າພຣະເຈົ້າມີຣິດອຳນາດແລະສາມາດເຮັດຫຍັງກໍໄດ້ທີ່ພຣະອົງເລືອກ. ເພາະພຣະເຈົ້າບໍ່ໄດ້ປະຖິ້ມມະນຸດເຖິງແມ່ນວ່າພວກເຂົາຈະປະຕິເສດພຣະອົງເລື້ອຍໆ, ນັ້ນສະແດງໃຫ້ເຫັນວ່າຄວາມຮັກຂອງພຣະເຈົ້າທີ່ມີຕໍ່ມະນຸດແມ່ນອັດສະຈັນໃຈແທ້ໆ. ເມື່ອຜູ້ທີ່ເຊື່ອພຽງແຕ່ເວົ້າເຖິງຄວາມຮັກຂອງພຣະເຈົ້າເທົ່ານັ້ນແລະບໍ່ໄດ້ອະທິບາຍເຖິງເຫດຜົນຫຼາຍຢ່າງທີ່ພຣະເຈົ້າບໍ່ສາມາດຕັດສິນໃຈທີ່ຈະບໍ່ຮັກເຮົາ, ແຕ່ໃຫ້ຄວາມຄິດທີ່ຈຳກັດວ່າຄວາມຮັກຂອງພຣະເຈົ້າເປັນແນວໃດ. ພວກເຮົາຕ້ອງສື່ສານທັງສອງພາກສ່ວນເພື່ອໃຫ້ຜູ້ຄົນຈະເຫັນຄຸນຄ່າຄວາມຮັກຂອງພຣະເຈົ້າຫຼາຍຂຶ້ນ. ຄວາມຮັກຂອງພຣະເຈົ້າອາດຈະບໍ່ມີຄຸນຄ່າຖ້າຄົນທີ່ບໍ່ເຊື່ອບໍ່ເຂົ້າໃຈຄວາມບໍລິສຸດຂອງພຣະເຈົ້າ.

ຂໍ້ທີສາມ, ອຳນາດແຫ່ງຄວາມມືດຮູ້ວ່າພວກເຮົາຢູ່ຝ່າຍໃດໂດຍການປະພຶດຂອງພວກເຮົາ. ພວກເຂົາບໍ່ໄດ້ໂງ່. ພວກເຂົາສາມາດເຫັນຄວາມຈົງຮັກພັກດີຂອງພວກເຮົາຕໍ່ພຣະເຈົ້າ. ພວກເຂົາເຫັນເມື່ອພວກເຮົາຕັດສິນໃຈຕິດຕາມພຣະເຢຊູ. ພວກເຂົາເຫັນສິ່ງທີ່ພວກເຮົາເຮັດເຊັ່ນການຮັບບັບຕິສະມາແລະຕໍ່ຕ້ານກັບບາບ. ແຕ່ພວກເຂົາຍັງເຫັນຕອນທີ່ພວກເຮົາທີ່ບໍ່ສັດຊື່ຕໍ່ພຣະເຈົ້າອີກດ້ວຍ. ອຳນາດມືດເຂົ້າໃຈເມື່ອເຮົາບໍ່ສັດຊື່ຕໍ່ພຣະເຈົ້າ, ພວກເຮົາຈະກາຍເປັນຄົນທີ່ອ່ອນແອຫຼາຍ. ເຖິງວ່າຈະເຊື່ອຫຼືບໍ່ເຊື່ອກໍ່ຕາມ, ພວກເຮົາກຳລັງຖືກຕິດຕາມຢູ່. ທັງວິນຍານທີ່ສັດຊື່ຂອງພຣະເຈົ້າແລະພວກວິນຍານທີ່ກະບົດກຳລັງເຝົ້າເບິ່ງພວກເຮົາເພາະວ່າພວກເຮົາທຸກຄົນມີສ່ວນຮ່ວມໃນສົງຄາມເໜືອທຳມະຊາດ.

ສິ່ງເຫຼົ່ານີ້ເປັນຄວາມຈິງ, ແຕ່ເຂົ້າໃຈງ່າຍກວ່າການດຳເນີນຊີວິດແບບນັ້ນ. ເຖິງແມ່ນວ່າພວກເຮົາໄດ້ຮັບການໄຖ່ຈາກການເປັນຂ້າທາດຂອງຊາຕານ, ພວກເຮົາກໍຍັງເປັນຄົນບາບ. ໃນການດຳເນີນຊີວິດຕາມຄວາມຈິງເຫຼົ່ານີ້, ພວກເຮົາຕ້ອງໃຊ້ຄວາມຄິດແລະຈິດໃຈຂອງພວກເຮົາສຸມໃສ່ເພື່ອເຂົ້າໃຈກ່ຽວກັບແຜນການຂອງພຣະເຈົ້າສຳລັບພວກເຮົາ. ພວກເຮົາກຳລັງດຳເນີນຊີວິດຄືກັບຄົນຕ່າງປະເທດທີ່ຢູ່ໃນຕ່າງແດນ.ຄືກັນກັບພຣະເຢຊູ, ພວກເຮົາຢູ່ໃນໂລກນີ້,ແຕ່ພວກເຮົາບໍ່ໄດ້ເປັນຂອງໂລກນີ້ (ຢຮ.8:23;1ຢຮ4:4). ມັນມີຄວາມແຕກຕ່າງກັນຫຼາຍລະຫວ່າງ “ໃນໂລກ” ແລະ“ຂອງໂລກ”. ຄວາມແຕກຕ່າງນັ້ນຈະໃຫຍ່ຍິ່ງຂຶ້ນເມື່ອເຮົາຮຽນຮູ້ເພີ່ມເຕີມກ່ຽວກັບຄວາມໝາຍຂອງການເປັນລູກຂອງພຣະເຈົ້າ.

# ບົດທີ 15

# ຜູ້ທີ່ໄດ້ຮັບສ່ວນໃນສະພາບຂອງພຣະເຈົ້າ

## ທ່ານຮູ້ບໍວ່າທ່ານແມ່ນໃຜ?

ຂ້າພະເຈົ້າໄດ້ຖາມຄໍາຖາມນີ້ຕັ້ງແຕ່ທໍາອິດ, ແຕ່ເຖິງເວລາແລ້ວທີ່ຈະຖາມອີກ. ແມ່ນແລ້ວ, ພວກເຮົາຢູ່ໃນໂລກ, ແຕ່ພວກເຮົາບໍ່ແມ່ນຂອງໂລກ. ພວກເຮົາໄດ້ຮັບຄວາມພົ້ນໂດຍພຣະຄຸນ, ຜ່ານທາງຄວາມເຊື່ອໃນສິ່ງທີ່ພຣະເຢຊູໄດ້ເຮັດຢູ່ເທິງໄມ້ກາງແຂນ (ອຟຊ.2:8–9). ແຕ່ນັ້ນເປັນພຽງແຕ່ຈຸດເລີ່ມຕົ້ນຂອງການເຂົ້າໃຈແຜນຂອງພຣະເຈົ້າ.

ແຜນການຂອງພຣະເຈົ້າ, ເຊິ່ງເລີ່ມຕົ້ນໃນສວນເອເດນ, ແມ່ນການໂຮມເອົາຄອບຄົວມະນຸດຂອງພຣະອົງກັບຄອບຄົວວິນຍານຂອງພຣະອົງ. ຈົ່ງຈື່ໄວ້ວ່າພວກລູກຊາຍຂອງພຣະເຈົ້າໃນສະຫວັນໄດ້ຖືກສ້າງຂຶ້ນໂດຍພຣະເຈົ້າກ່ອນທີ່ພຣະເຈົ້າໄດ້ສ້າງໂລກວັດຖຸ (ໂຢບ.38: 7 .8). ພຣະເຈົ້າບໍ່ໄດ້ປະຖິ້ມແຜນດັ່ງກ່າວຫຼັງຈາກການກະບົດໃນສວນເອເດນ. ຜູ້ທີ່ເຊື່ອທຸກຄົນຈະປ່ຽນໄປມີພຣະລັກສະນະດຽວກັນກັບພຣະເຈົ້າ. ຜູ້ທີ່ເຊື່ອຈະເປັນຄືກັນກັບບຸດວິນຍານໃນສະຫວັນຄົນໜຶ່ງຂອງພຣະເຈົ້າ. ພວກເຮົາຈະເປັນຄືກັບພຣະເຢຊູເຈົ້າ (1ຢຮ.3:1–3).

ນັກສາດສະໜາສາດມີຫຼາຍຊື່ສໍາລັບຄວາມຄິດນີ້. ສິ່ງທີ່ພົບຫຼາຍທີ່ສຸດແມ່ນການສັນລະເສີນ. ເປໂຕໄດ້ກ່າວເຖິງສິ່ງນີ້ວ່າ "ໄດ້ຮັບສ່ວນໃນສະພາບຂອງພຣະອົງ" (2 ປຕ.1: 4). ໂຢຮັນໄດ້ກ່າວດັ່ງນີ້:" ບົ່ງແມ! ພຣະບິດາເຈົ້າຊົງໂຜດປະທານຄວາມຮັກແກ່ເຮົາທັງຫລາຍ ເປັນຢ່າງໃດທີ່ພຣະເຈົ້າຊົງເອີ້ນພວກເຮົາວ່າບຸດຂອງພຣະອົງ ແລະພວກເຮົາກໍເປັນຢ່າງນັ້ນ" (1ຢຮ.3:1). ໃນບົດນີ້ຂ້າພະເຈົ້າຈະຊີ້ໃຫ້ເຫັນວ່າພຣະຄໍາພີສອນແນວໃດກ່ຽວກັບຂໍ້ຄວາມນັ້ນ.

## ບຸດຂອງພຣະເຈົ້າ, ເຊື້ອສາຍຂອງອັບຣາຮາມ

ໃນເວລາທີ່ພຣະເຈົ້າໄດ້ມອບປະຊາຊາດຕ່າງໆໃຫ້ຢູ່ພາຍໃຕ້ສິດອໍານາດຂອງສະມາຊິກສະພາວິນຍານຂອງພຣະອົງທີ່ວິຫານບາເບນ, ພຣະເຈົ້າຮູ້ວ່າພວກເຂົາຈະກະບົດແລະພຣະອົງຈະເລີ່ມຕົ້ນຄອບຄົວມະນຸດໃໝ່ຂອງພຣະອົງ. ພຣະເຈົ້າໄດ້ເອີ້ນອັບຣາຮາມ (ປຖກ.12:1–8) ທັນທີຫຼັງຈາກເລື່ອງວິຫານບາເບນ (ປຖກ.11: 1–9). ໂດຍຜ່ານທາງອັບຣາຮາມແລະຊາຣາແລະລູກຫຼານຂອງພວກເພິ່ນ, ພຣະເຈົ້າຈະສືບຕໍ່ແຜນການທີ່ພຣະອົງໄດ້ເລີ່ມຕົ້ນໃນສວນເອເດນ.

ປະຊາຊົນຂອງພຣະເຈົ້າແມ່ນລູກຫຼານຂອງອັບຣາຮາມທີ່ເອີ້ນວ່າຊົນຊາດອິດສະຣາເອນ. ຄົນອິດສະຣາເອນບໍ່ປະຕິບັດຕາມແຜນການຂອງພຣະເຈົ້າ. ພວກເຂົາບໍ່ໄດ້ຟື້ນຟູການປົກຄອງທີ່ດີຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກ. ແຕ່ເຊື້ອສາຍຄົນໜຶ່ງຈາກອັບຣາຮາມຈະປະສົບຜົນສຳເລັດ. ພຣະເຈົ້າຈະມາເປັນມະນຸດ. ພຣະເຢຊູແມ່ນມະນຸດຄົນນັ້ນແລະພຣະອົງຊົງເປັນເຊື້ອສາຍຂອງດາວິດ, ອັບຣາຮາມ, ແລະອາດາມ. ໂດຍຜ່ານທາງພຣະເຢຊູເຈົ້າພຣະສັນຍາຂອງພຣະເຈົ້າທີ່ຈະອວຍພອນປະຊາຊາດ, ທີ່ໄດ້ຖືກລົງໂທດຢູ່ທີ່ວິຫານບາເບນ ໃນທີ່ສຸດກໍ່ສຳເລັດເປັນຈິງ. ໂປໂລໄດ້ຂຽນກ່ຽວກັບເລື່ອງນັ້ນໃນຫຼາຍບ່ອນຄື:

> ພຣະອົງໄດ້ເປີດເຜີຍແຜນການອັນເລິກລັບຂອງພຣະອົງ ໃຫ້ຂ້າພະເຈົ້າໄດ້ຮູ້ແຜນການນັ້ນ. (ຕາມທີ່ຂ້າພະເຈົ້າໄດ້ຂຽນໄວ້ແລ້ວ ຢ່າງຫຍໍ້ໆກ່ຽວກັບເລື່ອງນີ້ແລະເມື່ອພວກເຈົ້າຈະອ່ານເບິ່ງຖ້ອຍຄຳ ຊຶ່ງຂ້າພະເຈົ້າໄດ້ຂຽນນັ້ນ ກໍຈະຮູ້ເຖິງຄວາມເຂົ້າໃຈຂອງຂ້າພະເຈົ້າໄດ້ ໃນເລື່ອງຄວາມເລິກລັບຂອງພຣະຄຣິດ.) ຊຶ່ງໃນສະໄໝກ່ອນ ພຣະອົງບໍ່ໄດ້ໃຫ້ມະນຸດໂລກຮູ້ຄວາມເລິກລັບນີ້ ແຕ່ບັດນີ້ພຣະອົງໄດ້ເປີດເຜີຍເລື່ອງນັ້ນ ໃຫ້ແກ່ບັນດາອັກຄະສາວົກທີ່ບໍຣິສຸດຂອງພຣະອົງ ແລະພວກຜູ້ປະກາດພຣະທຳໂດຍທາງພຣະວິນຍານ.ວ່າຄົນຕ່າງຊາດນັ້ນໄດ້ເປັນຜູ້ຮັບມໍຣະດົກຮ່ວມກັນ ເປັນອະໄວຍະວະຂອງກາຍອັນດຽວກັນ ທັງມີສ່ວນໄດ້ຮັບພຣະສັນຍາໃນພຣະຄຣິດເຈົ້າເຢຊູ ໂດຍທາງຂ່າວປະເສີດ.(ອຟຊ.3.3-6)

> ເພາະວ່າເຈົ້າທັງຫລາຍກໍເປັນບຸດຂອງພຣະເຈົ້າຮ່ວມໃນພຣະຄຣິດເຈົ້າເຢຊູໂດຍທາງຄວາມເຊື່ອເພາະວ່າຄົນໃດໃນພວກເຈົ້າໄດ້ຮັບບັບຕິສະມາໃນພຣະຄຣິດແລ້ວ ຄົນນັ້ນກໍໄດ້ສວມຊີວິດຂອງພຣະອົງ. ດັ່ງນັ້ນຈຶ່ງບໍ່ມີຄວາມແຕກຕ່າງອັນໃດ ລະຫວ່າງຄົນຢິວແລະຄົນຕ່າງຊາດ ລະຫວ່າງທາດແລະອິດສະຫຼະລະຫວ່າງຊາຍແລະຍິງ ເພາະພວກເຈົ້າທຸກຄົນເປັນອັນໜຶ່ງອັນດຽວກັນໃນພຣະຄຣິດເຈົ້າເຢຊູ. ຖ້າພວກເຈົ້າເປັນຄົນຂອງພຣະຄຣິດແລ້ວ ພວກເຈົ້າກໍເປັນເຊື້ອສາຍຂອງອັບຣາຮາມ ຄືເປັນຜູ້ໄດ້ຮັບມໍຣະດົກຕາມພຣະສັນຍາ. (ຄລຕ.3:26-29)

ຂ້າພະເຈົ້າໄດ້ອະທິບາຍໃນບົດກ່ອນໜ້ານີ້ວ່າໃນສະໄໝພຣະສັນຍາເດີມຫຼາຍຄັ້ງແລ້ວວ່າປະຊາຊົນທີ່ບໍ່ແມ່ນຄົນອິດສະຣາເອນໄດ້ອາໄສຢູ່ໃນດິນແດນທີ່ຢູ່ພາຍໃຕ້ການຄອບຄອງຂອງຜູ້ປົກຄອງເໜືອທຳມະຊາດທີ່ກະບົດ. ສິ່ງນີ້ໄດ້ເກີດຂຶ້ນຕອນທີ່ພຣະເຈົ້າມອບບັນດາປະເທດເຫຼົ່ານັ້ນໃຫ້ຜູ້ປົກຄອງວິນຍານເຫຼົ່ານັ້ນທີ່ວິຫານບາເບນ. ທີ່ວິຫານບາເບນ, ປະເທດຕ່າງໆໄດ້ຖືກແຍກອອກຈາກຄວາມສຳພັນໂດຍກົງກັບພຣະເຈົ້າອົງທ່ຽງແທ້. ຈາກນັ້ນພຣະເຈົ້າໄດ້ສ້າງຊົນຊາດໃໝ່ທີ່ມີຊື່ວ່າຊົນຊາດອິດສະຣາເອນ. ບັດນີ້ມີພຽງແຕ່ອິດສະຣາເອນເທົ່ານັ້ນທີ່ເຊື່ອມຕໍ່ໂດຍກົງກັບພຣະເຈົ້າ (ພບຍ.32: 9). ຄົນອິດສະຣາເອນໄດ້ມີການເອີ້ນຊື່ປະເທດອື່ນໆຫຼາຍຊື່. ຂອງພວກເຂົາຈະຕັ້ງຊື່ໃຫ້ຕາມຄວາມໝາຍດ້ານພູມສາດຫຼືຊົນຊາດ. ຍົກຕົວຢ່າງ, ຊາວອີຢີບ, ຊາວໂມອາບ, ຊາວອາມາເຫຼັກ. ແຕ່ວ່າໃນພຣະສັນຍາໃໝ່ຊື່ສຳລັບກຸ່ມທັງໝົດຂອງບັນດາປະເທດທີ່ຖືກປະຖິ້ມນີ້ແມ່ນ"ຄົນຕ່າງຊາດ" (Gentile) .ຄຳວ່າຄົນຕ່າງຊາດເປັນຄຳສັບພາສາລາຕິນເຊິ່ງມີຄວາມໝາຍວ່າ "ປະຊາຊາດ" ຖ້າທ່ານບໍ່ແມ່ນຄົນອິດສະຣາເອນ, ທ່ານກໍເປັນຄົນຕ່າງຊາດ.

ເລື່ອງລາວໃນພຣະສັນຍາໃໝ່ແມ່ນວ່າເຊື້ອສາຍຂອງອັບຣາຮາມຊື່ວ່າພຣະເຢຊູໄດ້ຕາຍແລະເປັນຄືນມາຈາກຕາຍເພື່ອໄຖ່ຄົນອິດສະຣາເອນແລະຄົນຕ່າງຊາດດ້ວຍ.

ພາລະກິດຂອງພຣະເຢຊູແມ່ນເພື່ອໄຖ່ບໍ່ພຽງແຕ່ເຊື້ອສາຍຂອງອັບຣາຮາມເທົ່ານັ້ນ, ແຕ່ຍັງລວມເຖິງປະຊາຊົນທັງໝົດໃນປະເທດທີ່ໄດ້ຖືກປະຖິ້ມໂດຍພຣະເຈົ້າອົງທ່ຽງແທ້ອີກດ້ວຍ. ຂ້າພະເຈົ້າຫາກໍ່ອ້າງເຖິງບາງຂໍ້ຈາກຈົດໝາຍຂອງໂປໂລ. ໂປໂລໄດ້ກ່າວວ່າແຜນການຂອງພຣະເຈົ້າທີ່ຈະລວມເອົາຄົນຕ່າງຊາດເຂົ້າມາໃນຄອບຄົວຂອງພຣະອົງແມ່ນຄວາມລຶກລັບ. ສ້າງຄວາມປະຫຼາດໃຈໃຫ້ກັບໂປໂລຫຼາຍທີ່ປະຊາຊົນຈາກບັນດາປະເທດຂອງຄົນຕ່າງຊາດແລະເຊິ່ງຢູ່ພາຍໃຕ້ການຄວບຄຸມຂອງຜູ້ປົກຄອງເໜືອທຳມະຊາດທີ່ກະບົດສາມາດສືບທອດພຣະສັນຍາທີ່ໄດ້ໃຫ້ກັບອັບຣາຮາມ.

ທຸກຄົນທີ່ເຊື່ອຂ່າວປະເສີດຂອງໃນພຣະເຢຊູເຈົ້າຜູ້ເປັນພຣະເມຊີອາກໍຈະກາຍເປັນລູກຂອງພຣະເຈົ້າອົງທ່ຽງແທ້. ພຣະເຈົ້ານີ້ແມ່ນພຣະເຈົ້າຂອງອັບຣາຮາມ, ອີຊາກ, ແລະຢາໂຄບ (ຢຮ 1:12;ຄລຕ :26; ຣມ. 8:14). ນີ້ແມ່ນເຫດຜົນທີ່ພຣະສັນຍາໃໝ່ໃຊ້ຄຳທີ່ເອີ້ນວ່າຜູ້ທີ່ເຊື່ອວ່າ "ຄອບຄົວ". ຕົວຢ່າງ: ເປັນບຸດ,ເປັນລູກ, ແລະຜູ້ຮັບມໍຣະດົກ. ພຣະສັນຍາໃໝ່ຍັງກ່າວອີກວ່າພວກເຂົາໄດ້ຖືກ “ຮັບເປັນລູກ” ຂອງພຣະເຈົ້າ (ຣມ. 8:15,23; ອຟຊ.1: 5; ຄລຕ.4: 4). ຂໍ້ຄວາມດັ່ງກ່າວແມ່ນຈະແຈ້ງຫຼາຍທີ່ວ່າຜູ້ທີ່ເຊື່ອຢູ່ໃນຄອບຄົວຂອງພຣະເຈົ້າແລະຈະໄດ້ຮັບມໍລະດົກ. ເຊິ່ງບອກວ່າຜູ້ທີ່ເຊື່ອໄດ້ຖືກລວມເຂົ້າໃນຄອບຄົວໃໝ່ຝ່າຍວິນຍານແລະຄອບຄົວມະນຸດຂອງພຣະເຈົ້າ. ຈຸດໝາຍປາຍທາງຂອງຜູ້ທີ່ເຊື່ອຄືການເປັນຄືກັບອາດາມແລະເອວາຕອນທຳອິດທີ່ພຣະເຈົ້າສ້າງເຂົາເຈົ້າ. ພວກເຂົາຈະບໍ່ມີມື້ຕາຍ. ພວກເຂົາຕ້ອງເປັນຕົວແທນຂອງພຣະເຈົ້າ. ພວກເຂົາຕ້ອງມີຊີວິດຕະຫຼອດໄປໃນທີ່ປະທັບຂອງພຣະເຈົ້າ.

ແຕ່ເຖິງປານນັ້ນກໍບໍ່ໄດ້ສະແດງອອກຢ່າງສົມບູນວ່າພວກເຮົາແມ່ນໃຜ. ດ້ານທີ່ໜ້າງຶດງໍ້ທີ່ສຸດແມ່ນວິທີທີ່ພຣະເຢຊູເບິ່ງພວກເຮົາແນວໃດ.

## ການທ້ອນໂຮມຄອບຄົວ

ສອງບົດທຳອິດຂອງພຣະທຳເຮັບເຣີໃຫ້ພວກເຮົາເຫັນພາບປະທັບໃຈຂອງຄອບຄົວໃໝ່ຂອງພຣະເຈົ້າຄືຄອບຄົວວິນຍານແລະຄອບຄົວມະນຸດ. ຂໍ້ພຣະຄຳພີເຫຼົ່ານີ້ເຮັດໃຫ້ຂ້າພະເຈົ້າຮູ້ສຶກຕື່ນເຕັ້ນທີ່ສຸດໃນທຸກບ່ອນໃນພຣະຄຳພີ.

ໃນເຮັບເຣີບົດທີ 1 ສອນວ່າພຣະເຢຊູເຈົ້າຊົງເປັນ“ຜູ້ປະເສີດເລີດລ້ຳກວ່າເທວະດາ” (ຂໍ້ທີ 4). ບໍ່ມີວິນຍານໃດຢູ່ໃນສະພາວິນຍານຂອງພຣະເຈົ້າສູງກວ່າພຣະເຢຊູເຈົ້າ. ນີ້ມີຄວາມໝາຍເພາະວ່າພຣະເຢຊູເປັນພຣະເຈົ້າ. ຫຼັງຈາກນັ້ນຈຶ່ງສອນວ່າເນື່ອງຈາກວ່າບໍ່ມີເທວະດາໃດທີ່ເໝາະສົມທີ່ຈະມາເປັນມະນຸດແລະໄດ້

ຮັບອານາຈັກຂອງພຣະເຈົ້າເປັນມໍຣະດົກ ເຊິ່ງເທວະດາທັງໝົດຕ້ອງນະມັດສະການພຣະເຢຊູເຈົ້າ (ຂໍ້ທີ 5–6).

## ພຣະເຢຊູຊົງເປັນກະສັດ.

ແຕ່ພຣະຄໍາພີບອກວ່າເມື່ອທີ່ພຣະເຢຊູມາເປັນມະນຸດພຣະອົງກໍຕໍ່າກວ່າເທວະດາໃນໄລຍະສັ້ນໆ. ພຣະອົງໄດ້ມາເປັນມະນຸດຄືກັນກັບພວກເຮົາ. ມະນຸດແມ່ນຜູ້ທີ່ມີອໍານາດໜ້ອຍກວ່າວິນຍານ. ຜູ້ຂຽນພຣະທໍາເຮັບເຣີຈຶ່ງຖາມວ່າ:

> "ມະນຸດສໍາຄັນຫຍັງໜໍ ທີ່ພຣະອົງຈະຕ້ອງຄິດເຖິງເຂົາ ຫລືວ່າພຣະອົງຕ້ອງເປັນຫ່ວງເປັນໃຍ
>
> ມະນຸດທີ່ຕາຍເປັນບໍ? ພຣະອົງຊົງເຮັດໃຫ້ມະນຸດຕໍ່າກວ່າເທວະດາພຽງໜ້ອຍໜຶ່ງເທົ່ານັ້ນ
>
> ຊົງເອົາສະຫງ່າຣາສີແລະກຽດຕິຍົດເປັນມົງກຸດໃຫ້ ໄດ້ຊົງປາບສິ່ງທັງປວງ ໃຫ້ຢູ່ພາຍໃຕ້ຕີນຂອງເພິ່ນ."...

ແຕ່ພວກເຮົາກໍເຫັນພຣະເຢຊູເຈົ້າ ຜູ້ທີ່ຖືກເຮັດໃຫ້ຕໍ່າກວ່າເທວະດາພຽງຊົ່ວຄາວນັ້ນ ຊົງໄດ້ຮັບພຣະສະຫງ່າຣາສີ ແລະພຣະກຽດຕິຍົດເປັນມົງກຸດ ເພາະທີ່ພຣະອົງຊົງຍອມຕາຍດ້ວຍຄວາມທໍລະມານ ໂດຍພຣະຄຸນຂອງພຣະເຈົ້າ ພຣະອົງຈຶ່ງໄດ້ຊົງຊີມຣົດຄວາມຕາຍແທນມະນຸດທຸກຄົນ. (ຮຣ.2:6-9)

ຜົນຂອງການທີ່ພຣະເຢຊູໄດ້ເຮັດແມ່ນຫຍັງ? ພວກເຮົາອາດຈະເວົ້າວ່າຄວາມພົ້ນ. ນັ້ນກໍຈະຖືກຕ້ອງບາງສ່ວນ, ແຕ່ນັ້ນບໍ່ແມ່ນສິ່ງທີ່ຜູ້ຂຽນພຣະທໍາເຮັບເຣີຕ້ອງການໃຫ້ພວກເຮົາຮຽນຮູ້. ຜູ້ຂຽນຢາກໃຫ້ພວກເຮົາຮູ້ວ່າເພາະວ່າພຣະເຈົ້າໄດ້ມາເປັນມະນຸດໃນພຣະເຢຊູ, ຜູ້ທີ່ເຊື່ອວ່າພຣະອົງສາມາດເປັນລູກຂອງພຣະເຈົ້າໄດ້.

ຖ້າມະນຸດເຊື່ອໃນພຣະເຢຊູຜູ້ເປັນທັງພຣະເຈົ້າແລະມະນຸດ, ມື້ໜຶ່ງພຣະເຈົ້າຈະປ່ຽນຄົນເຫຼົ່ານັ້ນໃຫ້ເປັນພຣະລັກສະນະຂອງພຣະອົງ. ພວກເຮົາຈະເປັນສະມາຊິກໃນຄອບຄົວຂອງພຣະອົງ. ເຮົາຈະຕາຍບໍ່ມື້ໃດກໍມື້ໜຶ່ງ. ຫຼືເຮົາອາດຈະຍັງມີຊີວິດຢູ່ເມື່ອພຣະເຢຊູກັບມາແຜ່ນດິນໂລກ. ພຣະອົງກໍາລັງຈະກັບມາເຮັດຕາມແຜນການຂອງພຣະເຈົ້າທີ່ຈະເຮັດໃຫ້ແຜ່ນດິນໂລກທັງໝົດເປັນສວນເອເດນ. ໃນເວລານັ້ນພຣະເຢຊູຈະແນະນໍາພວກເຮົາຕໍ່ສະພາວິນຍານທີ່ເຫຼືອ ແລະແນະນໍາສະພາວິນຍານໃຫ້ແກ່ພວກເຮົາຮູ້. ພຣະເຢຊູຈະເປັນຄືກັບພວກເຮົາແລະພວກເຮົາກໍ່ຈະເປັນຄືກັບພຣະອົງ:

ດ້ວຍວ່າ, ໃນການທີ່ພຣະເຈົ້າຈະຊົງພາບຸດຫຼວງຫຼາຍໄປສູ່ສະຫງ່າຣາສີນັ້ນ ກໍເປັນການເໝາະສົມຢູ່ແລ້ວ ທີ່ພຣະເຈົ້າຜູ້ຊົງທຸກສິ່ງດຳລົງຢູ່ໂດຍພຣະອົງ ແລະເພື່ອພຣະອົງ ຈະຊົງໃຫ້ຜູ້ນຳທາງຄວາມລອດພົ້ນໃຫ້ເຂົາເຫຼົ່ານັ້ນ ໃຫ້ເຖິງທີ່ສຳເລັດໂດຍການທົນທຸກທໍລະມານ.

ເພາະວ່າພຣະອົງຜູ້ຊົງຊຳລະມະນຸດໃຫ້ບໍຣິສຸດຈາກບາບກຳຂອງພວກເຂົາ ແລະພວກທີ່ໄດ້ຖືກຊຳລະໃຫ້ບໍຣິສຸດນັ້ນ ກໍມີມາຈາກພຣະບິດາເຈົ້າອົງດຽວກັນ. ເພາະສະນັ້ນ ພຣະເຢຊູເຈົ້າຈຶ່ງບໍ່ລະອາຍທີ່ຈະເອີ້ນຄົນເຫຼົ່ານັ້ນວ່າ ເປັນອ້າຍເອື້ອຍນ້ອງຂອງພຣະອົງ. ໂດຍພຣະອົງຊົງກ່າວວ່າ, *"ເຮົາຈະປະກາດພຣະນາມຂອງພຣະອົງແກ່ອ້າຍເອື້ອຍນ້ອງຂອງເຮົາ ເຮົາຈະຮ້ອງເພງສັນລະເສີນພຣະອົງໃນທ່າມກາງຊຸມຊົນ."*...
"ຂ້ານ້ອຍຢູ່ທີ່ນີ້ພ້ອມກັບບຸດທັງຫລາຍ ທີ່ພຣະເຈົ້າຊົງມອບໃຫ້ຂ້ານ້ອຍ. (ຮຣ.2:10-13)

ພຣະເຢຊູຮູ້ສຶກຕື່ນເຕັ້ນທີ່ຈະນຳສະເໜີບັນດາລູກຂອງພຣະອົງທີ່ເປັນມະນຸດເຖິງແມ່ນວ່າພວກເຂົາມີອຳນາດໜ້ອຍກວ່າສະມາຊິກສະພາວິນຍານກໍຕາມ. ພຣະເຢຊູບໍ່ອາຍທີ່ຈະມາເປັນມະນຸດແລະຢູ່ຕ່ຳກ່ວາສິ່ງມີຊີວິດວິນຍານພຽງຊົ່ວຄາວ. ນີ້ແມ່ນສ່ວນໜຶ່ງຂອງແຜນຂອງພຣະເຈົ້າ.ພຣະເຢຊູຢືນຢູ່ໃນສະພາແລະພຣະອົງນຳສະເໜີພວກເຮົາ. ພຣະເຢຊູກ່າວວ່າ: ຂ້ານ້ອຍຢູ່ທີ່ນີ້ພ້ອມກັບບຸດທັງຫຼາຍ ທີ່ພຣະເຈົ້າຊົງມອບໃຫ້ຂ້ານ້ອຍ.. ດຽວນີ້ພວກເຮົາຢູ່ນຳກັນຕະຫຼອດໄປ. ແລະນັ້ນແມ່ນແຜນການຕັ້ງແຕ່ເລີ່ມຕົ້ນ.

ການເຂົ້າສູ່ຄອບຄົວໃນສະຫວັນແລະສະຫງ່າຣາສີຂອງພຣະເຈົ້າແມ່ນຈຸດໝາຍປາຍທາງຂອງພວກເຮົາ. ໂປໂລໄດ້ກ່າວໄວ້ຢ່າງຈົບງາມໃນໂຣມ 8:18-23ຄື:

> ເຮົາເຫັນວ່າຄວາມທຸກລຳບາກຂອງພວກເຮົາໃນເວລາປະຈຸບັນນີ້ ບໍ່ອາດທຽບໃສ່ກັບສະຫງ່າຣາສີ ທີ່ຈະຖືກເປີດເຜີຍແກ່ພວກເຮົາໃນພາຍໜ້າໄດ້. ດ້ວຍວ່າ, ສັບພະສິ່ງທີ່ຊົງສ້າງແລ້ວມີຄວາມພຽນຄອຍຖ້າປາຖະໜາໃຫ້ບຸດທັງຫຼາຍ(ມະນຸດ)ຂອງພຣະເຈົ້າປາກົດ...ແລະບໍ່ພຽງແຕ່ການເນຣະມິດສ້າງເທົ່ານັ້ນທີ່ໂອ່ຍຄາງ, ແຕ່ພວກເຮົາຜູ້ທີ່ໄດ້ຮັບພຣະວິນຍານເປັນຜົນທຳອິດ ຕົວເຮົາເອງກໍເໝືອນກັນຍັງໂອ່ຍຄາງຄອງຄອຍຖ້າໃນການທີ່ພຣະເຈົ້າຊົງຮັບເປັນບຸດ ຄືທີ່ຈະຊົງໃຫ້ເນື້ອກາຍຂອງພວກເຮົາພົ້ນຈາກຕາຍ

ໂປໂລໄດ້ໃຫ້ກຳລັງໃຈຜູ້ເຊື່ອດ້ວຍຂໍ້ຄວາມດຽວກັນ. ເພິ່ນໄດ້ບອກຜູ້ທີ່ເຊື່ອຊາວໂຣມັນວ່າພວກເຂົາເຈົ້າ" ຖືກກຳນົດໄວ້ກ່ອນ ເພື່ອໃຫ້ເປັນຕາມແບບລັກສະນະແຫ່ງພຣະບຸດຂອງພຣະອົງ ເພື່ອພຣະບຸດນັ້ນຈະໄດ້ເປັນບຸດກົກໃນທ່າມກາງພວກນ້ອງຫຼາຍຄົນ"(ຣມ8.:29) ໂປໂລໄດ້ກ່າວຕໍ່ຜູ້ເຊື່ອທີ່ເມືອງໂກຣິນໂທວ່າ "ເຮົາທັງຫຼາຍບໍ່ມີຜ້າປົກໜ້າແລ້ວ ຕົວພວກເຮົາຈຶ່ງສະທ້ອນແສງແຫ່ງພຣະສະຫງ່າຣາສີຂອງອົງພຣະຜູ້ເປັນເຈົ້າກໍຊົງເຮັດໃຫ້ເຮົາທັງຫລາຍປ່ຽນມີລັກສະນະເໝືອນພຣະອົງໂດຍມີສະຫງ່າຣາສີເປັນລຳດັບຂຶ້ນໄປ."
(2 ກຣທ. 3:18) ເພິ່ນກ່າວວ່າຄວາມເປັນມະນຸດຂອງພວກເຮົາຈະໄດ້ຮັບການປ່ຽນແປງ, "ດ້ວຍວ່າ, ສະພາບຊຶ່ງຕ້ອງເປື່ອຍເນົ່າຂອງພວກເຮົານີ້ ຕ້ອງຖືກປ່ຽນແປງສູ່ສະພາບທີ່ບໍ່ເປື່ອຍເນົ່າຈັກເທື່ອ ສິ່ງທີ່ຕາຍເປັນຕ້ອງຖືກປ່ຽນແປງສູ່ສິ່ງທີ່ຕາຍບໍ່ເປັນ." (1ກຣທ.15:53). ເປໂຕໄດ້ຂຽນກ່ຽວກັບການເຂົ້າຮ່ວມສະພາ

ຄອບຄົວຂອງພຣະເຈົ້າອີກດ້ວຍ. ເພິ່ນໄດ້ຂຽນວ່າມັນໝາຍເຖິງການກາຍເປັນ "ໄດ້ຮັບສ່ວນໃນສະພາບຂອງພຣະອົງ" (2ປຕ1:4). ໂຢຮັນຂຽນຢ່າງລຽບງ່າຍວ່າ:"ເຮົາທັງຫຼາຍຈະເປັນເໝືອນພຣະອົງ"(1ຢຮ3:2).

# ເຫດຜົນທີ່ເລື່ອງນີ້ສຳຄັນ

ໃນຖານະເປັນຄຣິສຕຽນ, ພວກເຮົາເຄີຍໄດ້ຍິນຫຼາຍໆຄັ້ງວ່າພວກເຮົາຕ້ອງຄືກັບພຣະເຢຊູ. ພວກເຮົາຢາກເປັນແນ່ນອນ. ແຕ່ເມື່ອໄດ້ຍິນແນວນັ້ນ,ພວກເຮົາກໍຄິດແຕ່ວ່າຕ້ອງໝາຍເຖິງການເປັນຄົນດີ, ຫຼືບາງທີກໍ່ເຮັດ"ຊົ່ວໜ້ອຍລົງ" ພວກເຮົາໄດ້ປ່ຽນສິ່ງທີ່ພຣະຄຳພີສອນ. ຄຳສອນນີ້ທີ່ວ່າໃນມື້ໜຶ່ງເຮົາຈະເປັນເໝືອນກັບພຣະເຢຊູເປັນຄວາມຄິດທີ່ບໍ່ສາມາດເຂົ້າໃຈໄດ້. ມັນບໍ່ແມ່ນຂໍ້ຜູກມັດວ່າເຮັດຕ້ອງປະຕິບັດແນວໃດ.

ແທນທີ່ພວກເຮົາຈະຮູ້ສຶກຜິດຫຼາຍວ່າພວກເຮົາບໍ່ຄືກັບພຣະເຢຊູຫຼາຍປານໃດ, ແລ້ວສັນຍາວ່າຈະ"ເຮັດດີຂຶ້ນ", ພວກເຮົາຕ້ອງຄິດແຕກຕ່າງອອກໄປ. ພວກເຮົາຄວນປ່ອຍໃຫ້ພຣະພອນຂອງສິ່ງທີ່ພຣະອົງໄດ້ເຮັດເພື່ອພວກເຮົາໃນອະດີດ, ແລະສິ່ງທີ່ພຣະອົງວາງແຜນຈະເຮັດໃນອະນາຄົດ ປ່ຽນແນວຄິດຂອງພວກເຮົາ. ບໍ່ດັ່ງນັ້ນພວກເຮົາອາດຈະເຮັດໃຫ້ການເປັນເໝືອນດັ່ງພຣະເຢຊູກາຍເປັນວຽກທີ່ເຮົາຕ້ອງເຮັດ. ພວກເຮົາອາດຄິດວ່າພວກເຮົາຈຳເປັນຕ້ອງເປັນຄົນດີແລະຕ້ອງສ້າງຄວາມດີ ບໍ່ດັ່ງນັ້ນພຣະເຈົ້າຈະໃຈໃຫ້ຮ້າຍພວກເຮົາ. ແຕ່ການຄິດວິທີນັ້ນເປັນສາສະໜາສາດທີ່ບໍ່ດີ. ວິທີການຄິດແບບນັ້ນແມ່ນປ່ຽນຂອງຂວັນຂອງພຣະເຈົ້າໄປເປັນໜ້າທີ່. ແທນທີ່ພວກເຮົາຄວນຮູ້ບຸນຄຸນຕໍ່ສິ່ງທີ່ພຣະເຈົ້າວາງແຜນທີ່ຈະເຮັດໃນພວກເຮົາໃນມື້ໜຶ່ງ. ພວກເຮົາຄວນຈື່ໄວ້ວ່າ ພຣະເຈົ້າມີຄວາມຕື່ນເຕັ້ນທີ່ຈະເຮັດໃຫ້ພວກເຮົາເປັນເໝືອນດັ່ງພຣະອົງ. ພຣະເຈົ້າໄດ້ຊົງກຳນົດໃຫ້ພວກເຮົາເປັນເໝືອນດັ່ງພຣະອົງ (ຣມ 8:29). ເມື່ອພວກເຮົາຄິດແບບນີ້ແລ້ວພວກເຮົາຈະຕ້ອງການດຳເນີນຊີວິດໃນແບບທີ່ຜູ້ຄົນທີ່ຕົກເປັນທາດຂອງອຳນາດມືດຈະຕ້ອງການເຂົ້າຮ່ວມກັບພວກເຮົາໃນຄອບຄົວຂອງພຣະເຈົ້າ. ວິທີຄິດແບບໜຶ່ງແມ່ນເບິ່ງພາຍໃນແລະກ່ຽວກັບຕົວຕົນພວກເຮົາ. ວິທີການຄິດອີກແບບໜຶ່ງແມ່ນເບິ່ງໄປທີ່ສະຫວັນແລະພຣະເຈົ້າ.

ວິທີທີ່ຜູ້ທີ່ເຊື່ອຄວນດຳເນີນຊີວິດໃນເວລານີ້ ບໍ່ແມ່ນກ່ຽວກັບຄວາມຢ້ານກົວວ່າພວກເຮົາຈະລົ້ມເຫຼວທີ່ຈະເຮັດໃຫ້ພຣະເຈົ້າພໍໃຈ. ພຣະເຈົ້າຮັກພວກເຮົາແມ່ນແຕ່ໃນຂະນະທີ່ພວກເຮົາຍັງເປັນທາດຂອງພວກຜູ້ປົກຄອງແຫ່ງຄວາມມືດ. ແນວທາງຊີວິດຄຣິສຕຽນແມ່ນການເຂົ້າໃຈສອງແນວຄິດຄື: ໜຶ່ງພວກເຮົາໄດ້ຮັບການຍອມຮັບເຂົ້າໃນຄອບຄົວຂອງພຣະເຈົ້າ, ຊຶ່ງໝາຍຄວາມວ່າພຣະເຢຊູແມ່ນອ້າຍຂອງພວກເຮົາ, ແລະພຣະເຈົ້າຮັກພວກເຮົາຄືກັບພຣະອົງຮັກພຣະເຢຊູ. ຈຸດປະສົງຂອງພວກເຮົາໃນແຜນຂອງພຣະເຈົ້າແມ່ນການຟື້ນຟູອານາຈັກຝ່າຍວິນຍານຂອງພຣະເຈົ້າຢູ່ເທິງແຜ່ນດິນໂລກ. ພວກເຮົາເປັນສະມາຊິກຂອງສະພາສະຫວັນແຫ່ງໃໝ່ຂອງພຣະເຈົ້າ. ພຣະເຈົ້າເປັນພຣະບິດາຂອງພວກເຮົາ. ພວກເຮົາເປັນລູກຂອງພຣະອົງ. ພວກເຮົາຖືກກຳນົດໃຫ້ອາໄສຢູ່ບ່ອນທີ່ພຣະເຈົ້າສະຖິດຢູ່ຕະຫຼອດໄປ. ພວກເຮົາແມ່ນພະນັກງານ

ຂອງພຣະອົງ. ພວກເຮົາໄດ້ຮັບໜ້າທີ່ໃນການຊ່ວຍໃຫ້ພຣະອົງປົດປ່ອຍຜູ້ຄົນທີ່ຍັງຄົງເປັນທາດຂອງເຈົ້າແຫ່ງຄວາມຕາຍແລະຖືກຄຸມຂັງໂດຍອຳນາດວິນຍານແຫ່ງຄວາມມືດທີ່ເບິ່ງບໍ່ເຫັນ.

ນັ້ນແມ່ນສິ່ງທີ່ພຣະຄຳພີເວົ້າເຖິງ, ຕັ້ງແຕ່ສວນເອເດນເກົ່າເຖິງສວນເອເດນໃໝ່. ນັ້ນແມ່ນຈຸດໝາຍປາຍ ທາງຂອງທ່ານ. ຊີວິດຂອງທ່ານດຽວນີ້ບໍ່ແມ່ນກ່ຽວກັບການເຮັດໃຫ້ໄດ້ຮັບຕຳແໜ່ງໃນຄອບຄົວຂອງພຣະເຈົ້າ. ຖານະຕຳແໜ່ງທີ່ໃນຄອບຄົວຂອງພຣະເຈົ້າບໍ່ສາມາດຫາໄດ້ເພາະການເປັນລູກຂອງພຣະເຈົ້າແມ່ນຂອງຂວັນ. ຊີວິດຂອງທ່ານຄວນກ່ຽວກັບການດຳເນີນຊີວິດໃນແບບທີ່ສະແດງຄວາມຂອບໃຈຂອງທ່ານ. ທ່ານຄວນດຳເນີນຊີວິດຄືກັບວ່າທ່ານຊື່ນຊົມກັບການຖືກຮັບເປັນລູກພຣະເຈົ້າແລ້ວ. ທ່ານຄວນດຳລົງຊີວິດຄືກັບທ່ານມີຄວາມສຸກກັບການຢູ່ໃນຄອບຄົວຂອງພຣະເຈົ້າ. ທ່ານຄວນຈະຊ່ວຍຄົນອື່ນໃຫ້ມາເຂົ້າຮ່ວມໃນຄອບຄົວຂອງພຣະເຈົ້ານຳກັນ.

# ບົດທີ 16

# ການປົກຄອງເໜືອເທວະດາ

**ມັ**ນມີຄວາມສຳຄັນຫຼາຍສຳລັບຄວາມເຊື່ອຂອງພວກເຮົາທີ່ເຂົ້າໃຈວ່າພວກເຮົາແມ່ນໃຜໃນຖານະຜູ້ທີ່ເຊື່ອໃນພຣະເຢຊູ. ພວກເຮົາເປັນລູກຂອງພຣະເຈົ້າ. ພວກເຮົາໄດ້ກາຍເປັນສະມາຊິກໃນສະພາແຫ່ງສະຫວັນຂອງພຣະເຈົ້າແລະພວກເຮົາໄດ້ເລີ່ມຕົ້ນເຂົ້າຮ່ວມໃນແຜນຂອງພຣະບິດາຂອງເຮົາສຳລັບອານາຈັກຂອງພຣະອົງແລ້ວ. ແຕ່ໃນອະນາຄົດແຕ່ມັນຈະມີຫຍັງອີກຫຼາຍກ່ວາທີ່ເປັນຢູ່ຕອນນີ້. ແມ່ນແລ້ວ, ພວກເຮົາເປັນສະມາຊິກໃນຄອບຄົວແລະສະພາຂອງພຣະເຈົ້າ, ແຕ່ເພື່ອຈຸດປະສົງຫຍັງ?

ພວກເຮົາໄດ້ຢູ່ໃນອານາຈັກຂອງພຣະເຈົ້າແລ້ວ (ກລຊ. 1:13), ແຕ່ອານາຈັກຂອງພຣະອົງຍັງບໍ່ທັນໄດ້ມາສູ່ໂລກຢ່າງສົມບູນເທື່ອ. ໂລກຍັງບໍ່ທັນກາຍເປັນຄືກັບສວນເອເດນເທື່ອ. ມີຫຼາຍສິ່ງທີ່ຖືກສອນໃນພຣະຄຣິສຕະທຳຄຳພີທີ່ເປັນຄວາມຈິງ, ແຕ່ຍັງເບິ່ງຄືວ່າຂັດແຍ່ງກັນ. ຕົວຢ່າງຂອງອານາຈັກຂອງພຣະເຈົ້າຢູ່ເທິງໂລກແມ່ນຕົວຢ່າງ. ອານາຈັກຂອງພຣະອົງໄດ້“ມາແລ້ວ, ແຕ່ຍັງບໍ່ທັນສົມບູນ”. . . . ດຽວນີ້ຍັງບໍ່ທັນສົມບູນເທື່ອ. ໃນບົດນີ້, ຂ້າພະເຈົ້າຢາກຂຽນກ່ຽວກັບພາກສ່ວນທີ່ "ຍັງບໍ່" ແລະມັນຈະຊ່ວຍຕອບຄຳຖາມທີ່ວ່າ "ຈຸດປະສົງຂອງພວກເຮົາແມ່ນຫຍັງ?"

## ການມີສ່ວນຮ່ວມຂອງອານາຈັກເວລານີ້

ການມີສ່ວນຮ່ວມຂອງພວກເຮົາໃນອານາຈັກຂອງພຣະເຈົ້າບໍ່ໄດ້ຖືກກຳນົດໄວ້ລ່ວງໜ້າ. ທາງເລືອກທີ່ພວກເຮົາຕັດສິນໃຈເລືອກມີຜົນກະທົບຕໍ່ການທີ່ພວກເຮົາເຂົ້າຮ່ວມ. ພວກເຮົາບໍ່ແມ່ນຫຸ່ນຍົນຂອງພຣະເຈົ້າທີ່ຖືກຕັ້ງໂປຣແກຣມໄວ້ໃຫ້ເຮັດໜ້າທີ່ບາງຢ່າງ. ນັ້ນຈະເປັນການລະເມີດແນວຄິດທັງໝົດຂອງການເປັນ “ພຣະລັກສະນະ” ຂອງພຣະເຈົ້າ,ເປັນຕົວແທນຂອງພຣະອົງ. ພຣະເຈົ້າໄດ້ສ້າງພວກເຮົາໃຫ້ເປັນຄືກັບພຣະອົງ. ພຣະອົງມີອິດສະຫຼະໃນການເລືອກ. ຖ້າພວກເຮົາບໍ່ມີອິດສະຫຼະພາບຢ່າງແທ້ຈິງ ພວກເຮົາກໍ່ບໍ່ສາມາດເປັນຄືກັບພຣະອົງ. ຖ້າພຣະເຈົ້າຕັ້ງໂປຣແກຣມໃຫ້ພວກເຮົາເຮັດບາງວິທີທາງ, ພວກເຮົາກໍ່ຈະບໍ່ເປັນຄືກັບພຣະອົງ. ພວກເຮົາມີອິດສະຫຼະພາບໃນການເຊື່ອຟັງແລະນະມັດສະການພຣະເຈົ້າ, ແລະພວກເຮົາມີອິດສະຫຼະພາບໃນການກະບົດແລະເຮັດຕາມໃຈຕົນເອງໄດ້. ແລະພວກເຮົາຈະເກັບກ່ຽວສິ່ງທີ່ພວກເຮົາຫວ່ານ. ສິ່ງທີ່ພວກເຮົາເລືອກທີ່ຈະຫວ່ານເອງບໍ່ແມ່ນການຕັດສິນໃຈຂອງພຣະເຈົ້າ.

ພຣະເຈົ້າມີຣິດອຳນາດຫຼາຍກວ່າພວກເຮົາ. ພຣະອົງມີແຜນການແລະພຣະອົງຈະເຮັດໃຫ້ສຳເລັດ. ແຜນຂອງພຣະເຈົ້າຈະປະສົບຜົນສຳເລັດແລະມັນບໍ່ໄດ້ຂຶ້ນຢູ່ກັບພວກເຮົາ. ພຣະເຈົ້າບໍ່ຈຳເປັນຕ້ອງປ່ຽນ

ແຜນຂອງພຣະອົງຍ້ອນອິດສະຫຼະຂອງມະນຸດ. ພວກເຮົາບໍ່ສາມາດເຮັດໃຫ້ແຜນການຂອງພຣະເຈົ້າລົ້ມເຫຼວບໍ່ວ່າພວກເຮົາຈະເລືອກເຮັດຫຍັງກໍ່ຕາມ. ບັນດາຜູ້ປົກຄອງເໜືອທຳມະຊາດບໍ່ສາມາດເຮັດໃຫ້ແຜນການຂອງພຣະເຈົ້າລົ້ມເຫຼວໂດຍການໃຊ້ອິດສະຫຼະພາບຂອງພວກເຂົາເຊັ່ນກັນ.

ລອງຄິດກ່ຽວກັບການປະຊຸມສະພາສະຫວັນທີ່ຂ້າພະເຈົ້າໄດ້ຂຽນໄວ້ໃນບົດທີ 1. ຂ້າພະເຈົ້າຖາມວ່າທ່ານເຊື່ອສິ່ງທີ່ພຣະຄຳພີກ່າວບໍ? ຫຼັງຈາກນັ້ນ, ຂ້າພະເຈົ້າໄດ້ຂຽນກ່ຽວກັບການປະຊຸມຂອງພຣະເຈົ້າແລະສະພາແຫ່ງສະຫວັນຂອງພຣະອົງໃນ 1 ກະສັດ 22. ພຣະເຈົ້າໄດ້ຕັດສິນໃຈວ່າມັນເຖິງເວລາແລ້ວທີ່ກະສັດອາຮາບຜູ້ຊົ່ວຮ້າຍຈະຕາຍແລະແນ່ນອນວ່າອາຮາບຈະຕາຍ.ແຕ່ພຣະເຈົ້າຍອມໃຫ້ສະມາຊິກວິນຍານຂອງສະພາຂອງພຣະອົງຕັດສິນໃຈວ່າການຕາຍຂອງກະສັດອາຮາບຈະເກີດຂຶ້ນແນວໃດ (1 ກສ.22:19-23).

ການກຳນົດຊີວິດ ແລະອິດສະຫຼະພາບທັງສອງມີຢູ່ໃນການປົກຄອງຂອງອານາຈັກຂອງພຣະເຈົ້າ. ຈຸດປະສົງຂອງພຣະອົງຈະບໍ່ຖືກໂຄ່ນລົ້ມຫຼືຢຸດສະງັກ. ຈຸດປະສົງຂອງພຣະອົງຖືກກຳນົດໄວ້ລ່ວງໜ້າ ບັນດາວິນຍານຫຼືມະນຸດທີ່ພຣະເຈົ້າໄດ້ສ້າງສາມາດເລືອກທີ່ຈະເຮັດບາບແລະກະບົດດ້ວຍອິດສະຫຼະພາບຂອງພວກເຂົາ, ແຕ່ແຜນການຂອງພຣະເຈົ້າຍັງຄົງສຳເລັດ.ຊີ.ເອສ.ເລວິສ C. S. Lewis ໄດ້ຂຽນລົງໃນປຶ້ມ Perontra ຂອງເພິ່ນກ່ຽວກັບພຣະເຈົ້າ. ເພິ່ນຂຽນວ່າ “ບໍ່ວ່າທ່ານຈະເຮັດຫຍັງກໍຕາມ, ພຣະອົງຈະເຮັດໃຫ້ມີສິ່ງດີ. ແຕ່ບໍ່ແມ່ນສິ່ງທີ່ດີທີ່ພຣະອົງກຽມໄວ້ໃຫ້ທ່ານຖ້າຫາກທ່ານໄດ້ເຊື່ອຟັງພຣະອົງ.”

ພຣະເຈົ້າອະນຸຍາດໃຫ້ທ່ານເລືອກສິ່ງທີ່ບໍ່ດີໄດ້, ແຕ່ແລ້ວທ່ານຈະພາດຜົນໄດ້ຮັບທີ່ດີທີ່ທ່ານຈະໄດ້ຮັບ. ແຕ່ຄົນອື່ນທີ່ຕິດຕາມພຣະເຈົ້າຈະໄດ້ຮັບສິ່ງທີ່ດີຕາມທີ່ໄດ້ວາງແຜນໄວ້. ໃນຂະນະທີ່ລູກໆຂອງພຣະເຈົ້າຍັງຢູ່ເທິງໂລກນີ້, ພວກເຮົາຈະເຂົ້າຮ່ວມສະພາຂອງພຣະເຈົ້າໄດ້ແນວໃດ? ພວກເຮົາມີສ່ວນຮ່ວມກັບພຣະເຈົ້າໂດຍການປົດປ່ອຍມະນຸດຈາກອຳນາດແຫ່ງຄວາມມືດ. ພວກເຮົາມີສ່ວນຮ່ວມໂດຍການສະແດງຜູ້ຄົນເຫັນວ່າພວກເຮົາມີຊີວິດຢູ່ໂດຍເລືອກທີ່ຈະເປັນຄົນສັດຊື່ແລະສະແດງຄວາມເມດຕາ. ພວກເຮົາເຂົ້າຮ່ວມໂດຍການຮຽນແບບລັກສະນະຂອງພຣະເຈົ້າ. ພວກເຮົາມີສ່ວນຮ່ວມໂດຍການປ້ອງກັນແລະເຜີຍແຜ່ຄວາມຈິງຂອງພຣະເຈົ້າອົງທ່ຽງແທ້ໃນໂລກທີ່ເປັນສັດຕູພາຍໃຕ້ການຄອບຄອງຂອງຜູ້ປົກຄອງເໜືອທຳມະຊາດທີ່ຊົ່ວຮ້າຍ. ພວກເຮົາມີສ່ວນຮ່ວມໂດຍມີຄວາມສຸກກັບຊີວິດໃນແບບທີ່ພຣະເຈົ້າປະສົງໃຫ້ພວກເຮົາດຳເນີນຊີວິດ.

ວິທີການດຳເນີນຊີວິດທັງໝົດເຫຼົ່ານີ້ເຮັດໃຫ້ພວກເຮົາໄດ້ຮັບການຝຶກອົບຮົມສຳລັບອານາຈັກອັນສົມບູນຂອງພຣະເຈົ້າໃນອະນາຄົດ.ໂປໂລໄດ້ຂຽນເຖິງຜູ້ທີ່ເຊື່ອຊາວໂກຣິນໂທ, ຜູ້ທີ່ໄດ້ພາກັນຢຸດເຊົາການດຳເນີນຊີວິດທີ່ຄິດເຖິງອະນາຄົດແຫ່ງສະຫວັນຂອງພວກເຂົາ ແຕ່ພວກເຂົາໄດ້ຕໍ່ສູ້ກັນແລະກັນກ່ຽວກັບສິ່ງຕ່າງໆໃນໂລກນີ້ແທນ. ເພິ່ນກ່າວວ່າ, "ທ່ານບໍ່ຮູ້ບໍວ່າພວກເຮົາຈະຕັດສິນບັນດາເທວະດາ?" (1ກຣທ 6:3).

ໂປໂລເພິ່ນເປັນຄົນຈິງຈັງ. ເພິ່ນພະຍາຍາມສັ່ງສອນບາງສິ່ງບາງຢ່າງທີ່ສະເພາະເຈາະຈົງໃນຄຳກ່າວນັ້ນ.

## ປົກຄອງບັນດາປະຊາຊາດຕ່າງໆ

ຮູບແບບສຸດທ້າຍຂອງອານາຈັກຂອງພຣະເຈົ້າຍັງບໍ່ທັນມາຮອດໂລກນີ້ເທື່ອ. ເມື່ອມັນມາຮອດ, ອຳນາດແຫ່ງຄວາມມືດຈະພ່າຍແພ້. ຜູ້ປົກຄອງເໜືອທຳມະຊາດທີ່ຊົ່ວຮ້າຍຈະສູນເສຍການຄອບຄອງຂອງພວກເຂົາເໜືອປະເທດຕ່າງໆຕະຫຼອດໄປ. ພວກເຂົາຈະຖືກແທນທີ່ໂດຍຄອບຄົວມະນຸດແລະສະພາທີ່ໄດ້ຟື້ນຟູ ໃໝ່ຂອງພຣະເຈົ້າ. ມາເບິ່ງສິ່ງທີ່ພຣະເຢຊູເຈົ້າກ່າວໃນພຣະທຳພຣະນິມິດ:

> ແຕ່ໃຫ້ພວກເຈົ້າຍຶດຖືສິ່ງທີ່ພວກເຈົ້າມີຢູ່ແລ້ວນັ້ນໄວ້ຈົນກວ່າເຮົາຈະມາ.' ຜູ້ທີ່ມີໄຊຊະນະແລະຖືຮັກສາກິດຈະການຂອງເຮົາໄວ້ຈົນເຖິງທີ່ສຸດ, ເຮົາຈະໃຫ້ຜູ້ນັ້ນມີອຳນາດປົກຄອງບັນດາປະຊາຊາດ ແລະຜູ້ນັ້ນຈະບັງຄັບບັນຊາພວກເຂົາດ້ວຍຄ້ອນເຫຼັກ ເໝືອນຢ່າງຊ່າງໝໍ້ທີ່ທຳລາຍໝໍ້ດິນໃຫ້ແຕກໝຸ່ນເສຍ ຕາມທີ່ເຮົານີ້ໄດ້ຮັບອຳນາດຈາກພຣະບິດາເຈົ້າຂອງເຮົາເໝືອນກັນ. ແລະເຮົາຈະປະທານດາວເພັກ (ຮຸ່ງອາຣຸນ) ໃຫ້ແກ່ຜູ້ນັ້ນ (ພນມ.2:25-27)

ເມື່ອພຣະເຢຊູກັບຄືນມາຄອບຄອງເທິງແຜ່ນດິນໂລກ ເຊິ່ງເປັນໂລກໃໝ່ຄືສວນເອເດນທົ່ວໂລກ ພຣະອົງຈະແບ່ງປັນໃຫ້ອ້າຍນ້ອງຂອງພຣະອົງ. ບັນດາຜູ້ປົກຄອງດິນແດນແລະອຳນາດທີ່ຊົ່ວຮ້າຍຈະຖືກໂຍນລົງຈາກບັນລັງຂອງພວກເຂົາ,ແລະພວກເຮົາຈະມາແທນທີ່ພວກເຂົາ. ການປົກຄອງຂອງພວກເຂົາຈະບໍ່ຖືກມອບໃຫ້ແກ່ບັນດາເທວະດາທີ່ສັດຊື່. ໃນເວລານັ້ນ, ພວກເຮົາຈະກາຍເປັນເໝືອນເທວະດາທີ່ມີອຳນາດໃນອານາ ຈັກສຸດທ້າຍຂອງພຣະເຈົ້າ. ພຣະເຢຊູຈະແຕ່ງຕັ້ງພີ່ນ້ອງທັງຍິງແລະຊາຍຂອງພຣະອົງທີ່ເປັນມະນຸດໃຫ້ຮັບຜິດຊອບ.

ທ່ານກຳລັງສັບສົນກັບຄຳເວົ້າສຸດທ້າຍໃນພຣະທຳພຣະນິມິດ 2:28 ບໍ? “ເຮົາຈະປະທານດາວເພັກ (ຮຸ່ງອາຣຸນ) ໃຫ້ແກ່ຜູ້ນັ້ນ” ? ຟັງຄືວ່າມັນແປກ, ແຕ່ມັນໝາຍຄວາມວ່າພວກເຮົາຈະປົກຄອງຮ່ວມກັບພຣະເຢຊູຕໍ່ປະຊາຊາດຫຼັງຈາກອຳນາດທີ່ຊົ່ວຮ້າຍຖືກທຳລາຍ. "ດາວຮຸ່ງອາຣຸນ" ອະທິບາຍເຖິງສິ່ງມີຊີວິດທີ່ດີແລະເໜືອທຳມະຊາດ (ໂຢບ 38: 7). ນອກຈາກນີ້ຍັງເປັນຄຳສັບທີ່ກ່າວເຖິງພຣະເມຊີອາ. ເນື່ອງຈາກວ່າຜູ້ເປັນພຣະເມຊີອາເປັນພຣະເຈົ້າຜູ້ມາເປັນມະນຸດ,“ ຄຳວ່າດາວ” ບາງເທື່ອໃຊ້ເພື່ອພັນລະນາເຖິງອານາຈັກຂອງພຣະອົງໃນອະນາຄົດ. ພຣະທຳຈົດບັນຊີ 24:17 ກ່າວວ່າ "ດວງດາວແຈ້ງຈະອອກມາຈາກຢາໂຄບ, ແລະ ກະສັດອົງໜຶ່ງຈະຂຶ້ນຈາກອິດສະຣາເອນ". ໃນພຣະທຳພຣະນິມິດ, ພຣະເຢຊູໄດ້ພັນລະນາເຖິງພຣະອົງເອງໃນວິທີການນີ້ວ່າ: "ເຮົານີ້ເປັນຮາກເຄົ້າແລະໜໍ່ເຊື້ອຂອງດາວິດ ເປັນດາວເພັກດວງໃສຮຸ່ງເຮືອງ. " (ພນມ. 22:16).

ຖ້ອຍຄຳໃນພຣະນິມິດ 2:25–28 ແມ່ນມີພະລັງຫຼາຍ. ພຣະເຢຊູບໍ່ພຽງແຕ່ບອກວ່າພຣະອົງເປັນດວງດາວຮຸ່ງອາຣຸນຂອງພຣະເມຊີອາເທົ່ານັ້ນ, ແຕ່ພຣະອົງຍັງໃຫ້ດວງດາວຮຸ່ງອາຣຸນແກ່ພວກເຮົາດ້ວຍ. ນີ້

ແມ່ນວິທີການທີ່ຈະເວົ້າວ່າພຣະອົງແບ່ງປັນການປົກຄອງຂອງພຣະອົງໃຫ້ກັບພວກເຮົາ. ໃນພຣະນິມິດ 3: 20–21 ເວົ້າຫຼາຍກວ່ານີ້ກ່ຽວກັບເລື່ອງນີ້, ເພື່ອໃຫ້ຜູ້ທີ່ເຊື່ອບໍ່ພາດຈຸດສຳຄັນດັ່ງນີ້:

> ເບິ່ງແມ! ເຮົາຢືນເຄາະຢູ່ທີ່ປະຕູ ຖ້າຜູ້ໃດໄດ້ຍິນສຽງຂອງເຮົາ ແລະໄຂປະຕູ ເຮົາຈະເຂົ້າໄປຫາຜູ້ນັ້ນ ແລະຈະຮ່ວມຮັບປະທານອາຫານກັບຜູ້ນັ້ນ ແລະຜູ້ນັ້ນຈະຮ່ວມຮັບປະທານອາຫານກັບເຮົາ. ຜູ້ທີ່ມີໄຊຊະນະ ເຮົາຈະໃຫ້ຜູ້ນັ້ນນັ່ງກັບເຮົາເທິງບັນລັງຂອງເຮົາ ເໝືອນກັບທີ່ເຮົາມີໄຊຊະນະແລ້ວ ແລະໄດ້ນັ່ງກັບພຣະບິດາເຈົ້າຂອງເຮົາເທິງລາຊະບັນລັງຂອງພຣະອົງ.. (ພນມ.3: 20–21)

ພຣະເຈົ້າມີຈຸດປະສົງຫຍັງເພື່ອໃຫ້ລູກໆຂອງພຣະອົງມີສ່ວນຮ່ວມໃນພຣະລັກສະນະຂອງພຣະອົງ? ເປັນຫຍັງພຣະເຢຊູຈຶ່ງແນະນຳພວກເຮົາໃນສະພາໃນຖານະທີ່ເປັນອ້າຍເອື້ອຍນ້ອງຂອງພຣະອົງ? ຄຳຕອບກໍ່ຄືວ່າພຣະເຈົ້າສາມາດໃຫ້ພວກເຮົາມີອຳນາດເໜືອແຜ່ນດິນໂລກຄືກັບທີ່ພຣະອົງຕ້ອງການມາແຕ່ຕອນຕົ້ນແລ້ວ. ສະຫວັນຈະກັບຄືນມາສູ່ໂລກໃໝ່ຄືເປັນສວນເອເດນທົ່ວໂລກ.

# ສວນເອເດນນິຣັນດອນ

ຈາກບົດທຳອິດຂອງພຣະທຳປະຖົມມະການ, ສວນເອເດນແມ່ນພາກສ່ວນໜຶ່ງທີ່ສຳຄັນໃນແຜນການຂອງພຣະເຈົ້າສຳລັບມະນຸດ, ສຳລັບບັນດາວິນຍານແລະ ສຳລັບອານາຈັກພຣະອົງ. ສະນັ້ນມັນບໍ່ແມ່ນເລື່ອງແປກທີ່ຫຼືເລື່ອງບັງເອີນທີ່ບົດສຸດທ້າຍຂອງພຣະທຳພຣະນິມິດພາພວກເຮົາກັບຄືນສູ່ສວນເອເດນ:

> ແລ້ວເທວະດາຕົນນັ້ນ ກໍໄດ້ຊີ້ໃຫ້ຂ້າພະເຈົ້າເຫັນແມ່ນໍ້າແຫ່ງຊີວິດ ທີ່ໃສເໝືອນແກ້ວ ໄຫຼອອກມາຈາກພຣະບັນລັງຂອງພຣະເຈົ້າ ແລະຈາກພຣະເມສານ້ອຍ. ນໍ້ານັ້ນໄຫຼລົງຜ່ານກາງຖະໜົນຂອງນະຄອນ ແຕ່ລະແຄມທັງສອງຟາກຂ້າງຂອງແມ່ນໍ້ານັ້ນ ມີຕົ້ນໄມ້ແຫ່ງຊີວິດ ຊຶ່ງເກີດຜົນສິບສອງຊະນິດ, ເກີດຜົນທຸກເດືອນ ແລະໃບຂອງຕົ້ນນັ້ນ ໃຊ້ສຳລັບປິ່ນປົວບັນດາປະຊາຊາດທັງຫລາຍໃຫ້ດີ. ຢູ່ໃນນະຄອນນັ້ນ ບໍ່ມີສິ່ງໃດທີ່ຕົກຢູ່ໃນຄຳສາບແຊ່ງຂອງພຣະເຈົ້າອີກຕໍ່ໄປ. ພຣະບັນລັງຂອງພຣະເຈົ້າ ແລະຂອງພຣະເມສານ້ອຍ ຈະຕັ້ງຢູ່ໃນນະຄອນນັ້ນ ແລະພວກຜູ້ຮັບໃຊ້ຂອງພຣະອົງຈະບົວລະບັດຮັບໃຊ້ພຣະອົງ. ພວກເຂົາຈະເຫັນພຣະເຈົ້າໜ້າຕໍ່ໜ້າ ແລະພຣະນາມຂອງພຣະອົງຈະຊົງປະທັບຕາໃສ່ໜ້າຜາກຂອງພວກເຂົາໄວ້. ກາງຄືນຈະບໍ່ມີອີກຕໍ່ໄປ ແລະພວກເຂົາຈະບໍ່ຕ້ອງການແສງໂຄມໄຟ ຫລືແສງຕາເວັນ, ເພາະວ່າອົງພຣະຜູ້ເປັນເຈົ້າ ພຣະເຈົ້າຈະເປັນແສງສະຫວ່າງຂອງພວກເຂົາ ແລະພວກເຂົາຈະປົກຄອງຢູ່ຕະຫລອດນິຣັນດອນ.(ພນມ.22:1-5)

ທ່ານໄດ້ສັງເກດເຫັນບໍ່ວ່າຕົ້ນໄມ້ແຫ່ງຊີວິດປິ່ນປົວບັນດາປະຊາຊາດທັງຫຼາຍໃຫ້ດີ ? ບັນດາປະຊາຊາດທັງຫຼາຍ, ເຊິ່ງເຄີຍຖືກຄອບງໍາໂດຍຜູ້ປົກຄອງແລະອໍານາດທີ່ຊົ່ວຮ້າຍ, ດຽວນີ້ຈະຖືກຄອບຄອງໂດຍບັນດາບຸດໃໝ່ຂອງພຣະເຈົ້າ ຄືທ່ານແລະຂ້າພະເຈົ້າ.

ນີ້ບໍ່ແມ່ນຄັ້ງທໍາອິດທີ່ຕົ້ນໄມ້ແຫ່ງຊີວິດຖືກຂຽນລົງໃນພຣະທໍາພຣະນິມິດ. ເມື່ອເວົ້າກັບຜູ້ທີ່ເຊື່ອທີ່ສັດຊື່ຈົນເຖິງທີ່ສຸດ, ພຣະເຢຊູໄດ້ກ່າວວ່າ (ພຣະນິມິດ 2:7,11), "ຜູ້ໃດທີ່ມີໄຊຊະນະ ເຮົາຈະໃຫ້ຜູ້ນັ້ນກິນຜົນຈາກຕົ້ນໄມ້ແຫ່ງຊີວິດ ຊຶ່ງຢູ່ໃນສວນຂອງພຣະເຈົ້າ... ພວກເຂົາຈະບໍ່ຖືກອັນຕະລາຍຈາກຄວາມຕາຍຄັ້ງທີສອງ" ການອ້າງອີງເຖິງຕົ້ນໄມ້ແຫ່ງຊີວິດແມ່ນເຊື່ອມໂຍງຢ່າງຊັດເຈນກັບສວນເອເດນ. " ຄວາມຕາຍຄັ້ງທໍາອິດ" ໝາຍເຖິງການຕາຍຂອງຮ່າງກາຍເຊິ່ງຜົນມາຈາກບາບຂອງອາດາມ ແລະຖືກຂັບໄລ່ອອກຈາກສວນເອເດນ. ມະນຸດທຸກຄົນ ທັງຜູ້ທີ່ເຊື່ອແລະບໍ່ເຊື່ອ ໄດ້ຖືກເຮັດໃຫ້ເປັນຄືນມາຈາກຕາຍເພື່ອປະເຊີນໜ້າກັບພຣະເຈົ້າສູ່ການພິພາກສາຄັ້ງສຸດທ້າຍ. "ຄວາມຕາຍຄັ້ງທີສອງ" ແມ່ນຜູ້ທີ່ບໍ່ເຊື່ອຈະໄດ້ປະສົບໃນການຕັດສິນຄັ້ງສຸດທ້າຍ (ພນມ. 21: 8), ຜູ້ທີ່ເຊື່ອໃນພຣະເຢຊູເຈົ້າສືບຕໍ່ຢູ່ຮ່ວມກັບພຣະເຈົ້າໃນສວນເອເດນໃໝ່ແລະບໍ່ຕ້ອງທົນທຸກກັບຄວາມຕາຍຄັ້ງທີສອງ

# ສາເຫດທີ່ເລື່ອງນີ້ສໍາຄັນ

ຄຣິດສະຕຽນຫຼາຍຄົນມີທັດສະນະທີ່ບໍ່ພຽງພໍກ່ຽວກັບຊີວິດຫຼັງຄວາມຕາຍ. ພຣະຄໍາພີບໍ່ໄດ້ບອກພວກເຮົາທຸກຢ່າງກ່ຽວກັບຊີວິດຫຼັງຄວາມຕາຍ, ແຕ່ມີບາງຢ່າງທີ່ໄດ້ຖືກອະທິບາຍໄວ້. ພວກເຮົາຈະບໍ່ຫຼິ້ນດົນຕີແລະຮ້ອງເພງນະມັດສະການບໍ່ຮູ້ຈົບສິ້ນໃນຂະນະທີ່ເຫາະຢູ່ເທິງກ້ອນເມກດອກ. ພວກເຮົາຈະບໍ່ພຽງແຕ່ນັ່ງຢູ່ໂຊຟາເທິງສະຫວັນລົມກັບຍາດພີ່ນ້ອງຫຼືໝູ່ເພື່ອນຂອງພວກເຮົາເທົ່ານັ້ນ.

ແຕ່ພວກເຮົາຈະດໍາເນີນຊີວິດຕາມແບບທີ່ຊີວິດທີ່ພຣະເຈົ້າໄດ້ວາງແຜນໄວ້ໃນສວນເອເດນ. ພວກເຮົາຈະຫຍຸ້ງຢູ່ກັບຄວາມສຸກແລະເບິ່ງແຍງສິ່ງທີ່ພຣະເຈົ້າຊົງສ້າງ. ພວກເຮົາຈະເຮັດວຽກຄຽງບ່າຄຽງໄຫຼ່ກັບພຣະເຈົ້າຮ່ວມກັບບັນດາວິນຍານທີ່ຍັງຈົງຮັກພັກດີຕໍ່ພຣະອົງ. ສະຫວັນແລະແຜ່ນດິນໂລກຈະບໍ່ເປັນບ່ອນແຍກຕ່າງຫາກອີກຕໍ່ໄປ.

ການຮູ້ຈັກຈຸດໝາຍປາຍທາງຂອງພວກເຮົາໃນຖານະຜູ້ທີ່ເຊື່ອຄວນປ່ຽນແນວຄິດຂອງພວກເຮົາກ່ຽວກັບວິທີທີ່ພວກເຮົາດໍາເນີນຊີວິດຢູ່ນີ້ແລະຕອນນີ້. ໂປໂລໄດ້ກ່າວວ່າ," *ສິ່ງທີ່ຕາບໍ່ເຫັນ ຫູບໍ່ໄດ້ຍິນ*

*ແລະສິ່ງທີ່ມະນຸດຄິດບໍ່ອອກແມ່ນສິ່ງນັ້ນແຫຼະ ທີ່ພຣະເຈົ້າໄດ້ຊົງຈັດຕຽມໄວ້ໃຫ້ແກ່ຄົນທັງຫລາຍທີ່ຮັກພຣະອົງ."* (1ກຣທ.2: 9). ການຮູ້ວ່າສິ່ງນີ້ແມ່ນອະນາຄົດທີ່ໜ້າປະທັບໃຈ ແລະຮຸ່ງເຮືອງຂອງພວກເຮົາຊ່ວຍຮັກສາສະຖານະການປະຈຸບັນຂອງພວກເຮົາຢູ່ໃນມຸມມອງທີ່ເໝາະສົມ. ຫຼັງຈາກໂປໂລຂຽນຖ້ອຍຄໍາເຫຼົ່ານັ້ນ, ເພິ່ນຍັງໄດ້ຂຽນວ່າ:

ຈົ່ງໃຫ້ພວກເຮົາຍ້ອງຍໍສັນລະເສີນພຣະເຈົ້າ ພຣະບິດາເຈົ້າຂອງອົງພຣະເຢຊູຄຣິດເຈົ້າຂອງພວກເຮົາ ພຣະບິດາເຈົ້າອົງຊົງເມດຕາ ຄືພຣະເຈົ້າອົງທີ່ໃຫ້ຄວາມເລົ້າໂລມໃຈທຸກຢ່າງ...ພີ່ນ້ອງທັງຫລາຍເອີຍ ເຮົາຢາກໃຫ້ພວກເຈົ້າຮູ້ເຖິງຄວາມທຸກລຳບາກ ທີ່ພວກເຮົາໄດ້ຮັບໃນແຂວງເອເຊຍ ເປັນຄວາມທຸກລຳບາກໜັກເຫຼືອກຳລັງ ຈົນພວກເຮົາສິ້ນຄວາມຫວັງໝົດ ແທບຈະເອົາຊີວິດບໍ່ລອດ. ຕາມທີ່ຈິງພວກເຮົາຄິດວ່າ ໂທດເຖິງຕາຍໄດ້ຕົກຖືກພວກເຮົາແລ້ວ ເຖິງປານນັ້ນກໍຕາມ ເຫດການນີ້ໄດ້ເກີດຂຶ້ນ ເພື່ອບໍ່ໃຫ້ພວກເຮົາເຊື່ອໝັ້ນໃນຕົວເອງ ແຕ່ໃຫ້ພວກເຮົາເຊື່ອໝັ້ນໃນພຣະເຈົ້າ ອົງທີ່ບັນດານໃຫ້ຄົນຕາຍເປັນຄືນມາສູ່ຊີວິດ. (2ກຣທ.1:3-9)

ພຣະເຈົ້າສາມາດປົກປັກຮັກສາພວກເຮົາໃນຊີວິດນີ້. ແຕ່ເຖິງແມ່ນວ່າພວກເຮົາຈະຕາຍ, ພວກເຮົາຈະຖືກເຮັດໃຫ້ເປັນຄືນມານັ່ງຢູ່ກັບພຣະເຢຊູຢູ່ເທິງບັນລັງຂອງພຣະອົງ (ພນມ.3:21).

ຕອນນີ້ພວກເຮົາສາມາດເລືອກຮູບແບບການດຳເນີນຊີວິດ ເພື່ອໃຫ້ກົງກັບຈຸດໝາຍປາຍທາງໃນອະນາຄົດຂອງພວກເຮົາໃນການຢູ່ຮ່ວມກັບພຣະເຈົ້າໃນສວນເອເດນ, ຫຼືພວກເຮົາສາມາດບໍ່ເຊື່ອຟັງກໍໄດ້. ການຮັບຮູ້ຂອງພວກເຮົາກ່ຽວກັບອະນາຄົດຂອງພວກເຮົາ ຄວນປ່ຽນການເລືອກທີ່ພວກເຮົາຕັດສິນໃຈໃນປະຈຸບັນແລະວິທີການດຳເນີນຊີວິດໃນຕອນນີ້. ຖ້າທ່ານຮູ້ວ່າມື້ໜຶ່ງທ່ານຈະໄດ້ຢູ່ຮ່ວມໃນຕຶກຫ້ອງແຖວຫຼືເຮັດວຽກຢູ່ໃນຫ້ອງການດຽວກັນກັບຄົນທີ່ທ່ານບໍ່ມັກ,ຄົນທີ່ວິພາກວິຈານແລະຄົນທີ່ບໍ່ສຳຄັນ, ຂ້າພະເຈົ້າຄິດວ່າທ່ານຄວນຈະພະຍາຍາມດຽວນີ້ເພື່ອເປັນຜູ້ສ້າງສັນຕິພາບ,ເປັນກຳລັງໃຈ,ແລະແມ່ນແຕ່ໝູ່ຂອງຄົນນັ້ນ. ເຮົາຈະປະຕິບັດຕໍ່ເພື່ອນຮ່ວມຄວາມເຊື່ອໄດ້ແນວໃດໃນເວລານີ້? ເຮັດແນວໃດພວກເຮົາຈຶ່ງບໍ່ສາມາດພະຍາຍາມຢ່າງເຕັມທີ່ເພື່ອຊຸກຍູ້ຜູ້ທີ່ບໍ່ເຊື່ອໃຫ້ມາເຖິງພຣະເຢຊູໄດ້? ແຕ່ພວກເຮົາມັກຈະພະຍາຍາມຢ່າງໜັກເພື່ອຕໍ່ສູ້ກັບພວກເຂົາຄືເປັນສັດຕູ. ພວກເຮົາເຫັນອະນາຄົດຂອງພວກເຮົາໃນສະຫວັນຫຼືບໍ່. ການກະທຳຂອງພວກເຮົາຕໍ່ຜູ້ຄົນສະແດງໃຫ້ເຫັນວ່າພວກເຮົາໃຫ້ຄວາມສຳຄັນຈຸດໃດ.

ພຣະເຢຊູຕ້ອງມີສິດອຳນາດໃນການປົກຄອງຫຼາຍປານໃດ ໃນການແບ່ງປັນກັບທ່ານເພື່ອໃຫ້ທ່ານມີຄວາມສຸກ? ຄຳຖາມນີ້ອາດເບິ່ງຄືວ່າເປັນເລື່ອງແປກ, ເພາະວ່າຂອງຂວັນໃດໆຈາກພຣະເຢຊູຈະເປັນສິ່ງທີ່ດີເລີດສະເໝີ. ສະນັ້ນ, ເປັນຫຍັງຕອນນີ້ພວກເຮົາຈຶ່ງຍາດແຍ່ງສະຖານະພາບກັບຜູ້ເຊື່ອຄົນອື່ນໆ? ເປັນຫຍັງພວກເຮົາຈຶ່ງຕໍ່ສູ້ກັນເພື່ອໃຫ້ໄດ້ປຽບ,ໄດ້ຄວາມສົນໃຈແລະຜົນປະໂຫຍດສ່ວນຕົວ? ພວກເຮົາບໍ່ດີກ່ວາຜູ້ທີ່ເຊື່ອຊາວໂກຣິນໂທ, ເຊິ່ງໂປໂລຕ້ອງໄດ້ເຕືອນກ່ຽວກັບຈຸດໝາຍປາຍທາງຂອງພວກເຂົາບໍ? ພວກເຮົາເພິ່ງພໍໃຈໃນການປົກຄອງແລະປົກຄອງຮ່ວມກັບພຣະເຢຊູບໍ, ຫຼືພວກເຮົາບໍ່ພໍໃຈ.

ຄຣິສຕຽນທັງຫຼາຍ ເຖິງເວລາທີ່ຈະໃຊ້ຊີວິດຂອງທ່ານຄືກັບວ່າທ່ານຮູ້ວ່າທ່ານເປັນໃຜແລະຮູ້ແຜນການທີ່ພຣະເຈົ້າມີສຳລັບທ່ານ.

# ບົດສະຫຼຸບ

ພວກເຮົາໄດ້ມາຮອດຈຸດສິ້ນສຸດຂອງການເດີນທາງຂອງພວກເຮົາແລ້ວ. ແຕ່ອາດຈະດີກວ່າຖ້າຈະເວົ້າວ່າພວກເຮົາຫາກໍ່ເລີ່ມຕົ້ນການເດີນທາງຂອງພວກເຮົາ. ພວກເຮົາໄດ້ພິຈາລະນາຄຳຖາມພື້ນຖານບາງຢ່າງຄື: ສິ່ງມີຊີວິດເໜືອທຳມະຊາດອື່ນໆມີຢູ່ແທ້ບໍ? ຖ້າມີແທ້ນັ້ນຈະສ້າງຄວາມແຕກຕ່າງຫຼາຍປານໃດທີ່ພວກເຮົາຈະເຂົ້າໃຈສິ່ງທີ່ພຣະຄຳພີສອນ? ນັ້ນໝາຍຄວາມວ່າແນວໃດສຳລັບຄວາມເຊື່ອຂອງພວກເຮົາຖ້າພວກເຮົາເຊື່ອວ່າອານາຈັກທີ່ເບິ່ງບໍ່ເຫັນໃນພຣະຄຳພີແມ່ນແທ້ໆ ? ຂ້າພະເຈົ້າຍັງລວມເຖິງພາກສ່ວນຕ່າງໆຂອງພຣະຄຳພີທີ່ຜິດປົກກະຕິແລະຄົນບໍ່ສົນໃຈ. ເມື່ອຂ້າພະເຈົ້າເລີ່ມເຂົ້າໃຈຄວາມໝາຍເໜືອທຳມະຊາດໂດຍຜ່ານ ພຣະຄຳພີຂ້າພະເຈົ້າຮູ້ວ່າຂ້າພະເຈົ້າຕ້ອງຄິດແຕກຕ່າງອອກໄປໃນຫຼາຍໆເລື່ອງ. ແຕ່ຂ້າພະເຈົ້າສາມາດສະຫຼຸບທຸກສິ່ງທຸກຢ່າງເປັນສອງຄຳຄື: ຕົວຕົນແລະຈຸດປະສົງ. ຂ້າພະເຈົ້າຫວັງວ່າທ່ານຈະຖືກທ້າທາຍໃຫ້ຄິດເຖິງ "ຕົວຕົນ" ແລະ "ຈຸດປະສົງ" ຂອງທ່ານທີ່ທ່ານໄດ້ອ່ານປຶ້ມຫົວນີ້.

## ຕົວຕົນຂອງພວກເຮົາແມ່ນເຮົາມີບ້ານຢູ່ໃນຄອບຄົວຂອງພຣະເຈົ້າ

ສິ່ງທີ່ຂ້າພະເຈົ້າຂຽນມີຄວາມໝາຍສຳຄັນສຳລັບສິ່ງທີ່ພວກເຮົາຄິດວ່າການເປັນຄຣິສຕຽນມີຄວາມໝາຍ. ພຣະສັນຍາໃໝ່ມັກເວົ້າວ່າການເປັນຜູ້ເຊື່ອໝາຍຄວາມວ່າການ “ຢູ່ໃນພຣະຄຣິດ”. ເມື່ອພວກເຮົາຮູ້ວ່າຜູ້ປົກຄອງເໜືອທຳມະຊາດທີ່ຊົ່ວຮ້າຍໃນພຣະສັນຍາເດີມມີຢູ່ແທ້, ດັ່ງນັ້ນພຣະບັນຍັດຂໍ້ທຳອິດຂອງພຣະເຈົ້າທີ່ສັ່ງວ່າ ຢ່າມີພະອື່ນໃດນອກຈາກພຣະເຈົ້າແຫ່ງອິດສະຣາເອນຈະເປັນທີ່ເຂົ້າໃຈໄດ້ຫຼາຍ. ຄຳສັ່ງບໍ່ແມ່ນກ່ຽວກັບການໃຫ້ຄວາມສຳຄັນກັບເງິນຫຼືເຮືອຫຼືລົດໃຫຍ່. ມັນແມ່ນກ່ຽວກັບຄວາມຮັກທີ່ຫວງແຫນຂອງພຣະເຈົ້າທີ່ມີຕໍ່ປະຊາຊົນຂອງພຣະອົງ ແລະປົກປ້ອງພວກເຂົາຈາກອຳນາດແຫ່ງຄວາມມືດ. ພຣະບັນຍັດໝາຍເຖິງຂໍ້ຄຳສັ່ງແທ້ໆ. ການໃຫ້ຄວາມພັກດີຕໍ່ວິນຍານອື່ນນອກເໜືອຈາກພຣະເຈົ້າອົງສູງສຸດເປັນເລື່ອງຜິດປົກກະຕິ.

ມະນຸດຕົກເປັນຂ້າທາດພາຍໃຕ້ອຳນາດທາງວິນຍານເໜືອທຳມະຊາດທີ່ຊົ່ວຮ້າຍ ເປັນຜົນສະທ້ອນທີ່ຮ້າຍແຮງຂອງການກະບົດຈາກພຣະເຈົ້າອົງທ່ຽງແທ້. ເມື່ອມະນຸດປະຕິເສດຫຼາຍຄັ້ງທີ່ຈະຕິດຕາມພຣະຜູ້ສ້າງຂອງພວກເຂົາ, ພຣະອົງໄດ້ລົງໂທດພວກວິນຍານທີ່ກະບົດແລະມະນຸດທີ່ຕິດຕາມພວກເຂົາ. ພວກເຮົາທຸກຄົນເຄີຍຖືກພຣະເຈົ້າປະຖິ້ມ ແລະຕົກເປັນທາດຂອງຄວາມເສື່ອມໂຊມແລະການຫາຜົນປະໂຫຍດຂອງ

ອຳນາດແຫ່ງຄວາມມືດທີ່ຊົ່ວຮ້າຍ. ໂປໂລກ່າວວ່າ, ພວກເຮົາຖືກຕັດຂາດຈາກພຣະເຈົ້າແລະຄົນພາຍນອກພັນທະສັນຍາແຫ່ງຄວາມຮັກຂອງພຣະອົງ (ອຟຊ. 2:12). ພວກເຮົາໄດ້ຫຼົງທາງໄປ. ພວກເຮົາເຄີຍເປັນນັກໂທດໃນອານາຈັກແຫ່ງຄວາມມືດ. ພວກເຮົາເປັນສັດຕູຂອງພຣະເຈົ້າອົງສູງສຸດ. ພວກເຮົາເປັນທາດທີ່ຢູ່ພາຍໃຕ້ຜູ້ປົກຄອງເໜືອທຳມະຊາດທີ່ຊົ່ວຮ້າຍ (ອຟຊ. 4:18; ກລຊ. 1:21).

ການເຂົ້າໃຈສະພາບການຂອງມະນຸດເຮົາ ເຮັດໃຫ້ຄຳສອນຂອງພຣະຄຳພີກ່ຽວກັບການຮັບເປັນລູກພຣະເຈົ້າແລະຮັບມໍລະດົກມີຄວາມໝາຍຫຼາຍຂຶ້ນ. ເຮັດໃຫ້ພວກເຮົາມີສະພາບການທີ່ຈະເຂົ້າໃຈຄວາມໝາຍຂອງສິ່ງເຫຼົ່ານັ້ນ. ພຣະເຈົ້າບໍ່ຕ້ອງການທີ່ຈະປ່ຽນແປງຫຼືຢຸດແຜນການດຳເນີນຊີວິດຢູ່ເທິງໂລກກັບຄອບຄົວຂອງພຣະອົງ.ພຣະອົງເນັ້ນໜັກທີ່ຈະເຮັດຕາມແຜນການຂອງພຣະອົງເພື່ອເພີດເພີນໄປກັບໂລກທີ່ພຣະອົງໄດ້ສ້າງຄຽງຄູ່ກັບລູກໆຂອງພຣະອົງ. ຢູ່ທີ່ວິຫານບາເບນພຣະອົງໄດ້ຫັນຫຼັງໃຫ້ກັບມະນຸດທີ່ກະບົດທັງໝົດ, ແຕ່ໃນເວລາຕໍ່ມາ, ພຣະອົງໄດ້ເອີ້ນອັບຣາຮາມເພື່ອກໍ່ຕັ້ງຄອບຄົວໃໝ່. ອັບຣາຮາມໄດ້ເປັນສ່ວນໜຶ່ງໃນແຜນຂອງພຣະອົງເຊິ່ງຈະເຮັດໃຫ້ບັນດາປະຊາຊາດເຫຼົ່ານັ້ນທີ່ຖືກປະຖິ້ມສາມາດກັບມາຫາພຣະອົງໄດ້ (ກຈ. 10: 26– 27).

ການເຊື່ອຄວາມເປັນຈິງຂອງໂລກວິນຍານທີ່ສອນໃນພຣະຄຳພີ ແມ່ນສິ່ງທີ່ຈຳເປັນສຳລັບການເຂົ້າໃຈພຣະຄຳພີຢ່າງຖືກຕ້ອງ. ພຣະຄຳພີອະທິບາຍວ່າເປັນຫຍັງບາບຂອງການບູຊາຮູບເຄົາລົບຕ່າງກັນກັບບາບອື່ນໆ. ການຂາບໄຫວ້ບູຊາຮູບເຄົາລົບເປັນຄວາມບາບທີ່ຖືກລະບຸໄວ້ໃນຈຸດທີ່ສຳຄັນທີ່ສຸດເພື່ອວ່າຄົນເຮົາບໍ່ຄວນພາດມັນ. ປະເທດອິດສະຣາເອນຖືກສ້າງຂຶ້ນໃຫ້ຈົງຮັກພັກດີຕໍ່ພຣະເຈົ້າ, ແຕ່ປະຊາຊົນຫັນໄປຕິດຕາມພະອື່ນໆແທນ.ຈາກນັ້ນອິດສະຣາເອນໄດ້ຖືກສົ່ງອອກຈາກແຜ່ນດິນໄປສູ່ການເປັນຊະເລີຍພຣະເຈົ້າໄດ້ຫັນຫຼັງໃຫ້ກັບອິດສະຣາເອນຄືກັບປະເທດອື່ນໆ. ນີ້ແມ່ນເຫດຜົນຫຼັກທີ່ເຮັດໃຫ້ຄວາມພົ້ນໃນພຣະຄຳພີຖືກອະທິບາຍໄວ້ສະເໝີວ່າເປັນຄວາມເຊື່ອ. ພຣະເຈົ້າບໍ່ໄດ້ຊອກຫາການປະພຶດທີ່ດີຂຶ້ນ ແລະ ຄຸນງາມຄວາມດີ. ພຣະອົງກຳລັງຊອກຫາຄວາມເຊື່ອ. ພຣະເຈົ້າຕ້ອງການຜູ້ເຊື່ອທີ່ຊື່ສັດ. ເມື່ອພວກເຮົາເລືອກທີ່ຈະເຮັດໃຫ້ຈິດໃຈຂອງພວກເຮົາສອດຄ່ອງກັບພຣະເຈົ້າອົງສູງສຸດ, ພຣະອົງຈະຊ່ວຍພວກເຮົາໃຫ້ພົ້ນຈາກອຳນາດແຫ່ງຄວາມມືດ. ເມື່ອພວກເຮົາເລືອກທີ່ຈະເຮັດຕາມວິນຍານອື່ນ, ພວກເຮົາກຳລັງຫວ່ານເມັດພັນທີ່ບໍ່ດີເຊິ່ງຕໍ່ມາມັນຈະໃຫ້ຜົນຜະລິດທີ່ບໍ່ດີທີ່ພວກເຮົາຕ້ອງໄດ້ເກັບກ່ຽວ.

ການເປັນຜູ້ເຊື່ອຖືທີ່ສັດຊື່ ໝາຍເຖິງການໄວ້ວາງໃຈໃນສິ່ງທີ່ພຣະເຢຊູໄດ້ເຮັດຢູ່ເທິງໄມ້ກາງແຂນນັ້ນເພື່ອປະໂຫຍດຂອງພວກເຮົາ. ພຣະອົງເປັນພຣະເຈົ້າໃນເນື້ອກາຍຂອງມະນຸດແລະບໍ່ມີໃຜສາມາດເຮັດໄດ້. ການດຳເນີນຊີວິດທີ່ເໝາະສົມແລະການເຮັດບຸນກຸສົນບໍ່ໄດ້ເຮັດໃຫ້ພຣະເຈົ້າຮັກແລະຊ່ວຍພວກເຮົາໃຫ້ລອດພົ້ນໄດ້. ພວກເຮົາປະຕິບັດຕາມຄຳສັ່ງຂອງພຣະອົງ ແລະດຳເນີນຊີວິດທີ່ເໝາະສົມເພາະພວກເຮົາຂອບໃຈໃນສິ່ງທີ່ພຣະອົງໄດ້ກະທຳເພື່ອພວກເຮົາ. ຄຳສັ່ງຂອງພຣະອົງສອນພວກເຮົາໃຫ້ມີວິທີການດຳເນີນຊີວິດທີ່ດີທີ່ສຸດແລະຈະນຳໄປສູ່ຄວາມສຸກແລະຄວາມເພິ່ງພໍໃຈ. ແນວທາງຊີວິດຂອງພຣະອົງຈະເຮັດໃຫ້ພວກເຮົາ

ຫ່າງໄກຈາກການຕັດສິນໃຈເຊິ່ງໃນທີ່ສຸດຈະທຳລາຍພວກເຮົາແລະຄົນອື່ນໆ. ການດຳເນີນຊີວິດຕາມແບບຢ່າງຂອງພຣະອົງຈະເຮັດໃຫ້ພວກເຮົາມີຄວາມສອດຄ່ອງກັບພຣະເຈົ້າ ແລະຄອບຄົວອື່ນໆຂອງພຣະອົງ. ຄອບຄົວຂອງພວກເຮົາດຽວນີ້ລວມທັງມະນຸດແລະວິນຍານທີ່ຈິງຮັກພັກດີຕໍ່ພຣະເຈົ້າອົງສູງສຸດ. ພວກເຮົາທຸກຄົນຈະຢູ່ຮ່ວມກັນໃນອານາຈັກຂອງພຣະອົງໃນສວນເອເດນໃໝ່.

# ຈຸດປະສົງຂອງພວກເຮົາແມ່ນພວກເຮົາທຸກຄົນມີສ່ວນຮ່ວມໃນແຜນຂອງພຣະເຈົ້າທີ່ຈະຟື້ນຟູສວນເອເດນ

ການເປັນສະມາຊິກໃນຄອບຄົວຂອງພຣະເຈົ້າ ມີເງື່ອນໄຂດຽວເທົ່ານັ້ນຄື: ເຊື່ອໃນພຣະເຈົ້າຜູ້ເໜືອພະທັງປວງ ພຣະເຈົ້າຜູ້ທີ່ມາຫາພວກເຮົາເປັນບຸກຄົນຄືພຣະເຢຊູຄຣິດ. ການເປັນສະມາຊິກໃນຄອບຄົວບໍ່ພຽງແຕ່ໃຫ້ສິດທິພິເສດທີ່ດີເລີດແກ່ພວກເຮົາເທົ່ານັ້ນ,ແຕ່ຍັງໃຫ້ພວກເຮົາມີຈຸດປະສົງທີ່ຈະແຈ້ງໃນຊີວິດນຳອີກ.

ສະມາຊິກໃນຄອບຄົວຂອງພຣະເຈົ້າຍັງມີພາລະກິດ. ພວກເຂົາເຈົ້າຕ້ອງເປັນຕົວແທນຂອງພຣະເຈົ້າໃນການເຜີຍແຜ່ການປົກຄອງທີ່ດີຂອງພຣະອົງໃນປະເທດຕ່າງໆໂດຍເຊື້ອເຊີນຜູ້ຄົນໃຫ້ເຂົ້າຮ່ວມໃນຄອບຄົວຂອງພຣະອົງ. ພວກເຮົາແມ່ນວິທີການຂອງພຣະເຈົ້າທີ່ຈະສືບຕໍ່ການປ່ຽນແປງທີ່ຍິ່ງໃຫຍ່ຂອງອານາຈັກຕ່າງໆທີ່ເລີ່ມຕົ້ນໃນພຣະທຳກິດຈະການບົດທີ 2. ເຫດການດັ່ງກ່າວສ້າງກຸ່ມຜູ້ທີ່ເຊື່ອເຊິ່ງເອີ້ນວ່າ "ຄຣິສຕະຈັກ" ແລະ "ຮ່າງກາຍຂອງພຣະຄຣິດ".ພວກເຮົາມີໜ້າທີ່ນີ້ຈົນເຖິງເວລາທີ່ພຣະເຢຊູຈະກັບມາ. ຄວາມຊົ່ວຮ້າຍໄດ້ແຜ່ລາມໄປຄືກັບໄວຣັດ ເຖິງມະນຸດທຸກຄົນພາຍຫຼັງຄວາມລົ້ມເຫຼວຂອງມະນຸດໃນສວນເອເດນທຳອິດ. ຂ່າວປະເສີດແມ່ນຢາແກ້ພິດ. ຜູ້ທີ່ໄດ້ຮັບການປິ່ນປົວໃຫ້ດີສາມາດແບ່ງປັນຢາແກ້ພິດກັບຜູ້ທີ່ຕິດເຊື້ອຄົນອື່ນໆໄດ້. ດຽວນີ້ພວກເຮົາເປັນຜູ້ນຳສົ່ງຂ່າວປະເສີດແຫ່ງຄວາມຈິງກ່ຽວກັບພຣະເຈົ້າອົງສູງສຸດ. ພວກເຮົາສາມາດເຜີຍແຜ່ຄວາມຮັກຂອງພຣະອົງຕໍ່ທຸກໆຊາດ. ພວກເຮົາສາມາດເຜີຍແຜ່ຂໍ້ມູນກ່ຽວກັບແຜນການຂອງພຣະອົງທີ່ຈະຢູ່ກັບຄອບຄົວຂອງພຣະອົງຢູ່ເທິງໂລກທີ່ພຣະອົງສ້າງ. ພວກເຮົາສາມາດບອກກ່ຽວກັບແຜນການຂອງພຣະອົງທີ່ຈະສ້າງສວນເອເດນໃໝ່.

ມັນແມ່ນຄວາມຈິງທາງວິທະຍາສາດທີ່ວ່າ ທະວີບຕ່າງໆຂອງໂລກຄ່ອຍໆເຄື່ອນຍ້າຍອອກຈາກກັນເປັນໄລຍະທາງເລັກນ້ອຍໃນແຕ່ລະປີ. ແຕ່ການເຄື່ອນຍ້າຍນີ້ແມ່ນບໍ່ສາມາດຄົ້ນພົບໄດ້ດ້ວຍຄວາມຮູ້ສຶກຂອງມະນຸດ. ພວກເຮົາພຽງແຕ່ຮູ້ເລື່ອງນີ້ເພາະວ່າຫຼັງຈາກມັນເກີດຂຶ້ນແລ້ວ, ພວກເຮົາຈຶ່ງສາມາດວັດແທກແລະກວດພົບການປ່ຽນແປງຢ່າງຮອບຄອບ. ການເຜີຍແຜ່ອານາຈັກຂອງພຣະເຈົ້າເກີດຂຶ້ນໃນແບບດຽວກັນ. ມັນມີການເໜັງຕີງແລະເຕີບໃຫຍ່ຕະຫຼອດເວລາ, ແຕ່ພວກເຮົາບໍ່ສາມາດເຫັນການເຕີບໃຫຍ່ຂອງມັນດ້ວຍຕາຂອງພວກເຮົາ. ໃນແຕ່ລະມື້ມີຜູ້ຄົນອອກຈາກການເປັນຂ້າທາດຂອງພວກຜູ້ປົກຄອງເໜືອທຳມະຊາດທີ່

ຊົ່ວຮ້າຍແລະອອກຈາກອານາຈັກແຫ່ງຄວາມມືດຂອງພວກມັນ. ຄົນເຫຼົ່ານີ້ເຂົ້າຮ່ວມໃນຄອບຄົວຂອງພຣະເຈົ້າແລະອານາຈັກຂອງພຣະອົງກໍແຜ່ລາມໄປຈາກຄົນໜຶ່ງຫາອີກຄົນໜຶ່ງ. ຣິດອຳນາດຂອງພຣະເຈົ້າໃນຂ່າວປະເສີດຈະປົດປ່ອຍມະນຸດແຕ່ລະຄົນຈາກຄຸກຂອງພວກເຂົາພາຍໃຕ້ເຈົ້າແຫ່ງຄວາມຕາຍ. ແຕ່ການເຕີບໂຕທີ່ບໍ່ສາມາດເຫັນໄດ້ນີ້ແມ່ນເກີດຂຶ້ນແທ້ໆ.

ພວກເຮົາສາມາດມີສ່ວນຮ່ວມໃນການປ່ຽນແປງຂອງອານາຈັກທີ່ຍິ່ງໃຫຍ່ນີ້ ຖ້າພວກເຮົາເຂົ້າໃຈແລະເຊື່ອວ່າພຣະເຈົ້າຍັງຄົງເຮັດໃຫ້ແຜນຂອງພຣະອົງສຳເລັດເຖິງແມ່ນວ່າພວກເຮົາບໍ່ສາມາດເບິ່ງເຫັນກໍ່ຕາມ. ຈະບໍ່ມີຄວາມໝາຍຫຍັງເລີຍ ຖ້າພວກເຮົາເຊື່ອໃນອານາຈັກເໜືອທຳມະຊາດທີ່ເບິ່ງບໍ່ເຫັນ, ແຕ່ບໍ່ເຊື່ອວ່າພຣະເຈົ້າມີບົດບາດໃນຊີວິດຂອງພວກເຮົາ ແລະໃນເຫດການໃຫຍ່ໆຂອງປະຊາດຊາດຕ່າງໆ. ພຣະເຈົ້າຕ້ອງການໃຫ້ພວກເຮົາດຳເນີນຊີວິດດ້ວຍຄວາມຕັ້ງໃຈ ! ພຣະອົງຕ້ອງການໃຫ້ພວກເຮົາເຊື່ອວ່າການກະທຳທີ່ເບິ່ງບໍ່ເຫັນຂອງພຣະອົງແລະບັນດາວິນຍານທີ່ສັດຊື່ຂອງພຣະອົງກຳລັງເຮັດວຽກເພື່ອໃຫ້ແຜນການຂອງພຣະອົງສຳເລັດ (ຮຣ.1:14). ພຣະເຈົ້າກຳລັງເຮັດວຽກໃນຊີວິດຂອງພວກເຮົາເຖິງແມ່ນວ່າພວກເຮົາຈະເບິ່ງບໍ່ເຫັນກໍ່ຕາມ ແລະພຣະອົງຕ້ອງການໃຫ້ພວກເຮົາເຂົ້າຮ່ວມກັບພຣະອົງ ເພື່ອທີ່ເປົ້າໝາຍຂອງພຣະເຈົ້າໃນສວນເອເດນທົ່ວໂລກກ້າວໄປຂ້າງໜ້າຢ່າງບໍ່ຢຸດຢັ້ງ.

ພຣະເຈົ້າຕ້ອງການໃຊ້ທ່ານເພື່ອຊ່ວຍຄົນອື່ນໃຫ້ພົ້ນຈາກການເປັນຂ້າທາດ ໂດຍຊີ້ທາງພວກເຂົາໄປສູ່ພຣະເຢຊູແລະອານາຈັກຂອງພຣະເຈົ້າ. ໃນແຕ່ລະມື້ພວກເຮົາເຂົ້າມາພົວພັນກັບຜູ້ຄົນທີ່ຢູ່ພາຍໃຕ້ການຄອບງຳ ຂອງຄວາມມືດ. ນີ້ແມ່ນໂອກາດທີ່ຈະສະແດງຄວາມເມດຕາແລະຄວາມຍຸດຕິທຳໃຫ້ພວກເຂົາໂດຍການກະ ທຳຂອງພວກເຮົາ. ນີ້ແມ່ນຈຸດປະສົງຂອງພຣະເຈົ້າສຳລັບພວກເຮົາໃນຂະນະທີ່ພວກເຮົາອາໄສຢູ່ໃນໂລກທີ່ຊົ່ວຮ້າຍແລະບໍ່ສົມບູນແບບ. ທຸກສິ່ງທຸກຢ່າງທີ່ພວກເຮົາເຮັດແລະເວົ້າສຳຄັນ. ພວກເຮົາອາດຈະບໍ່ເຄີຍເຫັນຜົນໄດ້ຮັບຫຼືຮູ້ເຫດຜົນທີ່ມັນສົ່ງຜົນກະທົບຕໍ່ຄົນອື່ນ. ວຽກຂອງພວກເຮົາບໍ່ແມ່ນເພື່ອເບິ່ງເຫັນຫຼືຮັບຮູ້. ວຽກຂອງພວກເຮົາແມ່ນລົງມືເຮັດ. ການດຳເນີນຊີວິດໂດຍຄວາມເຊື່ອບໍ່ແມ່ນສິ່ງທີ່ເກີດຂຶ້ນໂດຍອັດຕະໂນມັດ. ພວກເຮົາຕ້ອງເລືອກທີ່ຈະດຳເນີນຊີວິດຕາມແຜນຂອງພຣະເຈົ້າແລະຈຸດປະສົງຂອງພຣະອົງສຳລັບພວກເຮົາ.

# ຄຳອະທິຖານແຫ່ງການໃຫ້ອະໄພ

## ຄຳອະທິຖານແຫ່ງການໃຫ້ອະໄພ: ເປັນຂອງຂວັນທີ່ມີຄ່າ

ຄຳອະທິຖານແຫ່ງການໃຫ້ອະໄພເປັນສິ່ງທີ່ເຮົາທຸກຄົນສະແຫວງຫາໃນຈຸດໜຶ່ງຊີວິດ. ການໃຫ້ອະໄພແມ່ນຂອງຂວັນທີ່ລ້ຳຄ່າທີ່ຫາບໍ່ໄດ້ຢ່າງງ່າຍດາຍແລະບໍ່ໄດ້ຮັບຢ່າງງ່າຍດາຍ. ການໃຫ້ອະໄພແມ່ນສິ່ງທີ່ຈຳເປັນຕໍ່ຊີວິດ; ປົດປ່ອຍພວກເຮົາຈາກຄວາມຜິດທີ່ຜ່ານມາ ແລະເຮັດໃຫ້ພວກເຮົາມີຄວາມຫວັງຕໍ່ອະນາຄົດ. ເປັນການໃຫ້ອະໄພທີ່ພຣະເຢຊູຄຣິດໄດ້ສະເດັດມາສູ່ໂລກເພື່ອຕາຍແທນມະນຸດ.

## ຄຳອະທິຖານແຫ່ງການໃຫ້ອະໄພ: ເຮັດໃຫ້ເປັນໄປໄດ້ໂດຍພຣະເຢຊູຄຣິດ

ຄຳອະທິຖານແຫ່ງການໃຫ້ອະໄພ ແມ່ນຄຳອະທິຖານທີ່ຖວາຍແດ່ພຣະເຈົ້າ. ເຖິງແມ່ນວ່າພວກເຮົາອາດຈະທຳຮ້າຍເຊິ່ງກັນແລະກັນໂດຍກົງ,ແຕ່ວ່າການກະທຳຜິດທັງໝົດຂອງພວກເຮົາໃນທີ່ສຸດກໍ່ທຳຮ້າຍ ພຣະເຈົ້ານຳ. ທ່ານອາດຈະສົງໄສວ່າເປັນໄປໄດ້ແນວໃດ. ການກະທຳຜິດຂອງພວກເຮົາທຳຮ້າຍຜູ້ມີອຳນາດສ້າງຈັກກະວານໄດ້ແນວໃດ? ພຣະເຈົ້າສົນໃຈຊັ້ນບໍ? ໃນປະຖົມມະການບົດທີ 6; ພວກເຮົາເຫັນວ່າຄວາມຈິງແລ້ວພຣະເຈົ້າເອງມີຄວາມໂສກເສົ້າຕໍ່ຄວາມຜິດທັງໝົດທີ່ມະນຸດໄດ້ກະທຳໃຫ້ກັນແລະກັນ: "ເມື່ອພຣະເຈົ້າຢາເວເຫັນວ່າມະນຸດຊົ່ວຮ້າຍຫລາຍຂຶ້ນ ແລະຄວາມຄິດຊົ່ວກໍບັງຄັບຈິດໃຈພວກເຂົາຢູ່ທຸກເວລາ, ພຣະເຈົ້າຢາເວຈຶ່ງເສຍໃຈຫຼາຍທີ່ໄດ້ສ້າງພວກເຂົາ ແລະໃຫ້ພວກເຂົາຢູ່ເທິງແຜ່ນດິນໂລກ ພຣະອົງກິນແໜງໃຈຫຼາຍ "(ປຖກ. 6: 5-6)

ພຣະເຈົ້າຊົງຮູ້ຈັກທຸກຢ່າງ ພຣະອົງໂສກເສົ້າເສຍໃຈແມ່ນແຕ່ຄວາມຄິດເລື່ອງຊົ່ວຮ້າຍ. ສະນັ້ນການໃຫ້ອະໄພທີ່ສູງສຸດກໍ່ຕ້ອງມາຈາກພຣະເຈົ້າ. ເຖິງຢ່າງໃດກໍ່ຕາມ, ຍ້ອນຄວາມຍຸດຕິທຳຂອງພຣະອົງ, ການໃຫ້ອະໄພຈຶ່ງບໍ່ສາມາດໃຫ້ໄດ້ຢ່າງຟຣີໆ. ຄວາມຜິດທຸກຢ່າງຕ້ອງໄດ້ຮັບການຕັດສິນເພື່ອວ່າພຣະເຈົ້າຈະເປັນຜູ້ພິພາກສາທີ່ຍຸດຕິທຳ. ພຣະເຢຊູຄຣິດໄດ້ສິ້ນພຣະຊົນຢູ່ເທິງໄມ້ກາງແຂນທີ່ພູໂກລາໂກທາແທນພວກເຮົາເພື່ອວ່າບາບຂອງພວກເຮົາອາດຈະໄດ້ຮັບການໃຫ້ອະໄພ. ຄວາມທຸກທໍລະມານຂອງພຣະອົງໄດ້ຈ່າຍແທນການລະເມີດຂອງພວກເຮົາ. "ນີ້ແຫຼະ ແມ່ນເລືອດຂອງເຮົາ ຊຶ່ງເປັນເລືອດແຫ່ງພັນທະສັນຍາຂອງພຣະເຈົ້າ ທີ່ຫຼັ່ງໄຫຼອອກສຳລັບຄົນຈຳນວນຫຼາຍ ເພື່ອຄວາມຜິດບາບຈະໄດ້ຮັບການອະໄພ." (ມທ. 26:28).

ໃນຄວາມຮັກຂອງພຣະອົງ, ພຣະເຈົ້າຮູ້ວ່າຈິດສຳນຶກຂອງພວກເຮົາຕ້ອງໄດ້ຮັບການປົດປ່ອຍຈາກຄວາມຮູ້ສຶກຜິດແລະການກ່າວໂທດ. ພຣະອົງຮູ້ວ່າການໃຫ້ອະໄພບາບແມ່ນຄວາມຕ້ອງການທີ່ຍິ່ງໃຫຍ່ທີ່

ສຸດຂອງພວກເຮົາ. ໃນການສະແດງຄວາມຮັກຂັ້ນສູງສຸດ, ພຣະເຈົ້າບໍ່ພຽງແຕ່ຮັບຄວາມເຈັບປວດຈາກຄວາມຜິດຂອງພວກເຮົາເທົ່ານັ້ນ, ແຕ່ຍັງໄດ້ຈ່າຍຄ່າຜົນສະທ້ອນຂອງຄວາມຜິດເພື່ອພວກເຮົາຈະໄດ້ຮັບການໃຫ້ອະໄພໂທດເມື່ອພວກເຮົາເຮັດບາບ. ສິ່ງທີ່ພວກເຮົາຕ້ອງເຮັດຄືການຍອມຮັບເອົາຂອງປະທານແຫ່ງການໃຫ້ອະໄພໂດຍບໍ່ເສຍຄ່າຈາກພຣະອົງ.

## ຄຳອະທິຖານແຫ່ງການໃຫ້ອະໄພ: ຂໍການຍົກໂທດຈາກພຣະເຈົ້າ

ບາງທີທ່ານອາດສະດຸດໃນໜ້ານີ້ເພື່ອຄຳອະທິຖານແຫ່ງການໃຫ້ອະໄພ ເພື່ອປອບໂຍນຈິດວິນຍານທີ່ທໍລະມານ. ຫຼືບາງທີທ່ານກຳລັງປະສົບກັບຄວາມພະຍາຍາມທີ່ຈະໃຫ້ອະໄພຄົນອື່ນທີ່ເຮັດໃຫ້ທ່ານເຈັບປວດໃນໃຈເລິກໆ. ສຳລັບທຸກຄົນທີ່ຍອມຮັບເອົາພຣະເຢຊູຄຣິດເປັນພຣະເຈົ້າແລະເປັນພຣະຜູ້ຊ່ວຍໃຫ້ພົ້ນຂອງພວກເຂົາ, ການໃຫ້ອະໄພໄດ້ຖືກມອບໃຫ້ຢ່າງຟຣີ. ຖ້າພວກເຮົາຍອມຮັບຄວາມຜິດຂອງພວກເຮົາແລະຂໍການໃຫ້ອະໄພ, ພຣະເຈົ້າຈະໃຫ້ອະໄພພວກເຮົາໂດຍບໍ່ມີຄຳຖາມໃດໆຄື: "ຖ້າເຮົາທັງຫຼາຍສາລະພາບຜິດບາບທັງຫຼາຍຂອງພວກເຮົາ ພຣະອົງຊົງສັດຊື່ແລະທ່ຽງທຳ ຈະຊົງໂຜດຍົກບາບຂອງພວກເຮົາ ແລະຈະຊົງໂຜດຊຳລະລ້າງເຮົາທັງຫຼາຍຈາກການອະທຳໝົດສິ້ນ." (1 ຢຮ. 1: 9).

ຖ້າພວກເຮົາປະຕິເສດພຣະເຢຊູເຈົ້າ, ພວກເຮົາກໍປະຕິເສດຂອງຂວັນແຫ່ງການໃຫ້ອະໄພຂອງພຣະເຈົ້າ. ພວກເຮົາກຳລັງເວົ້າວ່າພວກເຮົາບໍ່ຕ້ອງການທີ່ຈະຄືນດີກັບພຣະເຈົ້າ (1 ຢຮ. 1:10). ເຖິງແມ່ນວ່າມັນເປັນອິດສະຫຼະພາບໃນການຕັດສິນໃຈເລືອກຂອງພວກເຮົາທີ່ຈະບໍ່ຍອມຮັບການໃຫ້ອະໄພຈາກພຣະເຈົ້າ, ແຕ່ແລ້ວພວກເຮົາຈະຕ້ອງຮັບຜິດຊອບຕໍ່ບາບທັງໝົດທີ່ພວກເຮົາໄດ້ເຮັດລົງໄປ. ເປັນຄວາມປາຖະ ໜາອັນເລິກເຊິ່ງຂອງພຣະເຈົ້າທີ່ຈະຄືນດີກັບທ່ານ. "ເພາະວ່າ ພຣະເຈົ້າຊົງຮັກໂລກຫຼາຍທີ່ສຸດ ຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕະຫຼອດໄປເປັນນິດ" (ຢຮ. 3:16). ຖ້າທ່ານປາຖະໜາທີ່ຈະໄດ້ຮັບການໃຫ້ອະໄພຢ່າງແທ້ຈິງ, ໃຫ້ພິຈາລະນາສິ່ງທີ່ພຣະເຢຊູກ່າວແລະຍອມຮັບຢ່າງຈິງໃຈວ່າພຣະອົງເປັນອົງພຣະຜູ້ເປັນເຈົ້າແລະເປັນພຣະຜູ້ຊ່ວຍໃຫ້ພົ້ນຂອງທ່ານ. ທ່ານຈະໄດ້ຮັບການໃຫ້ອະໄພແລະພຣະເຈົ້າຈະເລີ່ມເຮັດການປ່ຽນແປງໃນຊີວິດຂອງທ່ານ.

## ການອະທິຖານແຫ່ງການໃຫ້ອະໄພ: ຮັບຊີວິດໃໝ່

ຄຳອະທິຖານແຫ່ງການໃຫ້ອະໄພເຮັດໃຫ້ພວກເຮົາມີຄວາມຫວັງແລະການເລີ່ມຕົ້ນໃໝ່. ບາບທັງໝົດຂອງພວກເຮົາຖືກລຶບລ້າງໄປໂດຍພຣະເຈົ້າ. "ເພາະເຮົາຈະກະລຸນາຕໍ່ການອະທຳຂອງພວກເຂົາແລະການຜິດບາບຂອງພວກເຂົາເຮົາຈະບໍ່ຈົດຈຳຕໍ່ໄປ." (ຮຣ. 8: 12).

ຖ້າທ່ານເຂົ້າໃຈວ່າທ່ານເປັນຄົນບາບ, ແລະທ່ານເຊື່ອວ່າພຣະເຢຊູຄຣິດໄດ້ສະເດັດມາໃນຖານະພຣະຜູ້ໄຖ່ບາບກໍາພຽງຜູ້ດຽວ, ແລ້ວທ່ານຈະເຂົ້າໃຈຄໍາອະທິຖານແຫ່ງການໃຫ້ອະໄພ. ຄໍາຖາມແມ່ນ ທ່ານພ້ອມແລ້ວບໍທີ່ຈະເຮັດຕາມຄໍາອະທິຖານ, ໂດຍການຮັບເອົາຂອງຂວັນຈາກພຣະເຈົ້າຄືພຣະເຢຊູຄຣິດພຣະບຸດຂອງພຣະອົງ? ຖ້າເປັນດັ່ງນັ້ນ, ຈົ່ງເຊື່ອໃນພຣະຄຣິດ, ກັບໃຈຈາກບາບຂອງທ່ານແລະມອບຊີວິດຂອງທ່ານທີ່ເຫຼືອຢູ່ໃຫ້ກັບພຣະອົງໃນຖານະອົງພຣະຜູ້ເປັນເຈົ້າດັ່ງນີ້:

> **ພຣະບິດາເຈົ້າເອີຍ, ຂ້ານ້ອຍຮູ້ວ່າຂ້ານ້ອຍໄດ້ຝ່າຝືນພຣະບັນຍັດຂອງເຈົ້າ ແລະບາບຂອງຂ້ານ້ອຍໄດ້ແຍກຂ້ານ້ອຍອອກຈາກພຣະອົງ. ຂ້ານ້ອຍຂໍໂທດແທ້ໆ ແລະດຽວນີ້ຂ້ານ້ອຍຕ້ອງການຫັນໜີຈາກຊີວິດທີ່ຜິດບາບຂອງຂ້ານ້ອຍໃນອະດີດທີ່ຜິດຕໍ່ພຣະອົງ. ໂຜດຍົກໂທດໃຫ້ຂ້ານ້ອຍແລະຊ່ວຍຂ້ານ້ອຍໃຫ້ຫຼີກເວັ້ນການເຮັດບາບອີກ. ຂ້ານ້ອຍເຊື່ອວ່າພຣະບຸດຂອງພຣະອົງຄືພຣະເຢຊູຄຣິດໄດ້ຕາຍຍ້ອນບາບຂອງຂ້ານ້ອຍໄດ້ເປັນຄືນມາຈາກຄວາມຕາຍ ພຣະອົງມີຊີວິດຢູ່ແລະໄດ້ຍິນຄໍາອະທິຖານຂອງຂ້ານ້ອຍ. ຂ້ານ້ອຍຂໍເຊີນພຣະເຢຊູເຈົ້າມາເປັນພຣະເຈົ້າໃນຊີວິດຂອງຂ້ານ້ອຍ, ເພື່ອປົກຄອງແລະຄອບຄອງຢູ່ໃນຫົວໃຈຂອງ ຂ້ານ້ອຍນັບແຕ່ມື້ນີ້ເປັນຕົ້ນໄປ. ໂຜດປະທານພຣະວິນຍານບໍລິສຸດຂອງພຣະອົງມາຊ່ວຍຂ້ານ້ອຍໃຫ້ເຊື່ອຟັງພຣະອົງແລະເຮັດຕາມພຣະປະສົງຂອງພຣະອົງຕະຫຼອດຊີວິດ. ຂ້ານ້ອຍອະທິຖານໃນນາມຊື່ພຣະເຢຊູເຈົ້າ, ອາແມນ. "**

“ແຕ່ລະຄົນໃນພວກທ່ານ ຕ້ອງຖິ້ມໃຈເກົ່າເອົາໃຈໃໝ່ ແລະຮັບບັບຕິສະມາໃນນາມຂອງພຣະເຢຊູຄຣິດເຈົ້າ ເພື່ອວ່າບາບກໍາຂອງພວກທ່ານຈະໄດ້ຮັບການອະໄພ ແລະພວກທ່ານກໍຈະໄດ້ຮັບຂອງປະທານຈາກພຣະເຈົ້າ ຄືພຣະວິນຍານບໍຣິສຸດເຈົ້າ. (ກຈ.2: 38).

ຖ້າທ່ານໄດ້ຕັດສິນໃຈຮັບເອົາພຣະເຢຊູໃນມື້ນີ້ແລ້ວ, ຍິນດີຕ້ອນຮັບສູ່ຄອບຄົວຂອງພຣະເຈົ້າ. ນີ້ເປັນວິທີທີ່ຈະໃກ້ຊິດກັບພຣະອົງຫຼາຍຂຶ້ນ,ພຣະຄໍາພີບອກພວກເຮົາໃຫ້ປະຕິບັດຕາມຄໍາບັນຊາຂອງພຣະເຢຊູທີ່ຊົງສັ່ງໄວ້ຄື:

- ຮັບບັບຕິສະມາຕາມທີ່ພຣະຄຣິດໄດ້ບັນຊາ.
- ບອກຄົນອື່ນກ່ຽວກັບຄວາມເຊື່ອໃໝ່ຂອງທ່ານໃນພຣະຄຣິດ.
- ໃຊ້ເວລາກັບພຣະເຈົ້າໃນແຕ່ລະມື້. ບໍ່ຈໍາເປັນຕ້ອງເປັນໄລຍະເວລາດົນນານ. ພຽງແຕ່ພັດທະນານິໄສປະຈໍາວັນຂອງການອະທິຖານຫາພຣະອົງ ແລະອ່ານພຣະຄໍາຂອງພຣະອົງ. ຂໍໃຫ້ພຣະເຈົ້າເພີ່ມຄວາມເຊື່ອແລະຄວາມເຂົ້າໃຈຂອງທ່ານກ່ຽວກັບພຣະຄໍາພີ.
- ສະແຫວງຫາສາມັກຄີທໍາກັບເພື່ອນຜູ້ຕິດຕາມພຣະເຢຊູຄົນອື່ນໆ. ພັດທະນາກຸ່ມເພື່ອນທີ່ເຊື່ອເພື່ອຕອບ ຄໍາຖາມຂອງທ່ານແລະສະໜັບສະໜູນທ່ານ.
- ຊອກຫາການປະຊຸມຮ່ວມກັນໃນທ້ອງຖິ່ນບ່ອນທີ່ທ່ານສາມາດນະມັດສະການພຣະເຈົ້າໄດ້.

## ທ່ານຄິດວ່າແນວໃດ ?

ພວກເຮົາທຸກຄົນໄດ້ເຮັດບາບແລະສົມຄວນໄດ້ຮັບການພິພາກສາຂອງພຣະເຈົ້າ. ພຣະເຈົ້າ, ພຣະບິດາ, ໄດ້ສົ່ງພຣະບຸດອົງດຽວຂອງພຣະອົງ ເພື່ອຮັບຄຳຕັດສິນນັ້ນສຳລັບຜູ້ທີ່ເຊື່ອໃນພຣະອົງ. ພຣະເຢຊູເຈົ້າ ເປັນພຣະຜູ້ສ້າງແລະພຣະບຸດນິລັນດອນຂອງພຣະເຈົ້າ, ຜູ້ທີ່ດຳເນີນຊີວິດທີ່ບໍ່ມີບາບ, ຊົງຮັກພວກເຮົາຫຼາຍ ຈົນວ່າພຣະອົງໄດ້ຕາຍເພື່ອບາບຂອງພວກເຮົາ, ຮັບເອົາການລົງໂທດທີ່ພວກເຮົາສົມຄວນໄດ້ຮັບ, ຖືກຝັງໄວ້, ແລະໄດ້ເປັນຄືນຈາກຄວາມຕາຍຕາມທີ່ມີຂຽນໄວ້ໃນພຣະຄຳພີ. ຖ້າທ່ານເຊື່ອແລະໄວ້ວາງໃຈໃນສິ່ງນີ້ ຢ່າງແທ້ຈິງໃນຫົວໃຈຂອງທ່ານ, ໂດຍຮັບເອົາພຣະເຢຊູຜູ້ດຽວມາເປັນຜູ້ຊ່ວຍໃຫ້ພົ້ນຂອງທ່ານ, ປະກາດວ່າ "ພຣະເຢຊູເຈົ້າເປັນອົງພຣະຜູ້ເປັນເຈົ້າ," ທ່ານຈະລອດພົ້ນຈາກການພິພາກສາແລະຢູ່ກັບພຣະເຈົ້າໃນສະຫວັນຕະຫຼອດໄປ.

**ຄຳຕອບຂອງທ່ານແມ່ນຫຍັງ ?**

**ແມ່ນແລ້ວ, ມື້ນີ້ຂ້ອຍຕັດສິນໃຈຕິດຕາມພຣະເຢຊູເຈົ້າ**

**ແມ່ນແລ້ວ, ຂ້ອຍເປັນຜູ້ຕິດຕາມພຣະເຢຊູເຈົ້າແລ້ວ**

**ຂ້ອຍຍັງມີຄຳຖາມຢູ່**